# ບົດທີ 6

## ການເມືອງ ແລະ ການປົກຄອງລາວ

ປະເທດລາວໃນປັດຈຸບັນ ແມ່ນພາກສ່ວນໜຶ່ງຂອງອານາຈັກລາວລ້ານຊ້າງ ທີ່ກວ້າງໃຫຍ່ໄພສານ ໃນເມື່ອກ່ອນ ຊຶ່ງໄດ້ຜ່ານຫລາຍຮູບການປົກຄອງມາແລ້ວ. ນັບແຕ່ວັນທີ 2 ທັນວາ ປີ 1975 ເປັນຕົ້ນມາປະເທດລາວມີຊື່ວ່າປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ. ຂະບວນວິວັດຂອງການຈັດຕັ້ງປົກຄອງໃນແຕ່ລະໄລຍະປະຫວັດສາດຜ່ານມາໄດ້ເຮັດໃຫ້ເນື້ອທີ່, ຊາຍແດນ, ປະຊາກອນ, ເສດຖະກິດ ແລະ ສັງຄົມຂອງປະເທດລາວມີການຜັນປ່ຽນໄປໃນຫລາຍຮູບແບບ[63].

[63] ພູມສາດລາວ, 1989, ໜ້າ167.

- ເສນາບໍດີຝ່າຍຊ້າຍມີພະຍາ 10 ທ່ານຮັບຜິດຊອບວຽກງານການປົກຄອງ, ຮັກສາຄວາມສະຫງົບພາຍໃນພ້ອມທັງຮັບຜິດຊອບກົມເມືອງ ຊຶ່ງແມ່ນວຽກເຮັດສຳມະໂນຄົວ ແລະ ສຳຫລວດພົນລະເມືອງ ໃນທຸກໆ 3 ປີ. ສຳລັບວຽກກົມວັງ ແມ່ນຮັບຜິດຊອບທັງໝົດກິດຈະການພາຍໃນວັງ.

ຄະນະເສນາບໍດີທັງ 20 ທ່ານຍັງໄດ້ເປັນສະມາຊິກສະພາລາຊະກິດ ແລະ ສະພາປົກຄອງຂອງມະຫາກະສັດອີກດ້ວຍ.

\+ ອົງການທີ່ຮັບຜິດຊອບອຳນາດຕຸລາການ ແມ່ນເສນາບໍດີຝ່າຍກາງ ຊຶ່ງມີສານຍຸຕິທຳທີ່ເປັນ ເຄື່ອງມືຕົ້ນຕໍໃນການປະຕິບັດຄຳພິທຳມະລາດ ຊຶ່ງປັດຈຸບັນເອີ້ນວ່າກົດໝາຍ. ຄຳພິທຳມະລາດໄດ້ຮັບການສ້າງຂຶ້ນ ໃນປີ ຄສ 1660. ສານຍຸຕິທຳໄດ້ແບ່ງອອກເປັນ 2 ຂັ້ນຄື: ສານຍຸຕິທຳວັງຫລວງ ແລະ ສານຍຸຕິທຳລາຊະດອນ. ສານຍຸຕິທຳວັງຫລວງຮັບໃຊ້ສະເພາະການດຳເນີນຄະດີບັນດາຂຸນນາງໃນວັງເທົ່ານັ້ນ. ແຕ່ສານຍຸຕິທຳລາຊະດອນນັ້ນປະກອບດ້ວຍ 2 ຂັ້ນ ຄື: ສານຍຸຕິທຳສູງສຸດ ແລະ ສານຍຸຕິທຳທ້ອງຖິ່ນ ຫລື ສານປະຈຳເມືອງເອີ້ນວ່າ ສານເມືອງ. ນອກຈາກສານເມືອງຍັງມີສານຕາແສງ ແລະ ສານບ້ານຊຶ່ງທັງ 3 ຂັ້ນນີ້ບໍ່ມີເຈົ້າໜ້າທີ່ສະເພາະຢູ່ປະຈຳ, ເມື່ອມີເລື່ອງເກີດຂຶ້ນກໍມີການປະຊຸມເຈົ້າໜ້າທີ່ ແລະ ນາຍບ້ານເພື່ອຄົ້ນຄວ້າຖ້າພໍຕົກລົງກັນໄດ້ກໍຕົກລົງກັນໃນຂັ້ນນັ້ນໂລດ, ແຕ່ຖ້າຕົກລົງກັນບໍ່ໄດ້ກໍອຸທອນຂຶ້ນໄປຕາມລຳດັບຂັ້ນ ຊຶ່ງຕາມປົກກະຕິແລ້ວສານຈະຕັດສິນລົງໂທດຜູ້ກະທຳຜິດໃນ 4 ສະຖານ ຄື:

- ໂທດສະຖານໜັກເອີ້ນວ່າ ຂັບຄ່າຄໍ
- ໂທດສະຖານກາງເອີ້ນວ່າ ຂັບໄໝ
- ໂທດສະຖານເບົາເອີ້ນວ່າ ຂັບແປງ
- ໂທດສະຖານນ້ອຍເອີ້ນວ່າ ຂັບສົມມາ.

**ການແບ່ງຂັ້ນປົກຄອງຂັ້ນປົກຄອງມີຢູ່ 3 ຂັ້ນຄື:**

- ຂັ້ນຫົວເມືອງເອກ (ນະຄອນຫລວງ)
- ຂັ້ນຫົວເມືອງໃຫຍ່ (ເມືອງອຸປະຣາດທຽບເທົ່າແຂວງໃນປັດຈຸບັນ)
- ຂັ້ນເມືອງດ່ານໜ້າ (ເມືອງເຂດດ່ານທີ່ຕັ້ງຢູ່ຕາມຊາຍແດນ).

**ຂັ້ນຫົວເມືອງເອກ ຫລື ນະຄອນຫລວງ**

ຫົວເມືອງເອກ ຫລື ນະຄອນຫລວງຂອງອານາຈັກລາວລ້ານຊ້າງໃນສະໄໝນັ້ນ ແມ່ນເມືອງວຽງຈັນຊຶ່ງເປັນໃຈກາງການເມືອງການປົກຄອງທົ່ວປະເທດ. ຂອບເຂດຂອງເມືອງຫລວງນີ້ ກວມເອົາບັນດາເມືອງ ນ້ອຍຫລາຍຕົວເມືອງ ທີ່ເປັນປ້ອມດ່ານໜ້າຂອງຫົວເມືອງເອກ. ເມືອງນ້ອຍເຫລົ່ານີ້ຕັ້ງຢູ່ທັງ 2 ຝັ່ງ ຂອງແມ່ນ້ຳຂອງ ຄື:

- ຢູ່ຝັ່ງຊ້າຍມີເມືອງວຽງຄຳ, ເມືອງປາກງື່ມ, ເມືອງຊາຍຟອງ ແລະ ເມືອງນ້ຳຮຸ່ງ.
- ຢູ່ຝັ່ງຂວາມີເມືອງວຽງຄຸກ, ເມືອງວຽງພະໂຄ, ເມືອງວຽງພັນພ້າວ, ເມືອງປາກຫ້ວຍຫລວງ ແລະ ເມືອງອື່ນໆ.

**ຂັ້ນຫົວເມືອງໃຫຍ່ ຫລື ເມືອງອຸປະຣາດ**

ຫົວເມືອງໃຫຍ່ຫລືເມືອງອຸປະຣາດແມ່ນເມືອງທີ່ມີລະບົບການປົກຄອງແບບເປັນເຈົ້າຕົນເອງໂດຍມີເຈົ້າຄອງນະຄອນທີ່ມີຖານະເປັນເຈົ້າພົນໝື່ນ ຫລື ພະຍາຫົວເມືອງທຽບເທົ່າເສນາບໍດີ ຊຶ່ງແມ່ນສັກດີນາຂັ້ນ 1400 ເງິນເປັນຜູ້ບໍລິຫານສູງສຸດ. ຢູ່ຄຽງຂ້າງເຈົ້າຄອງນະຄອນນັ້ນ ມີອຸປະຣາດເປັນຜູ້ຊ່ວຍວຽກ ຫລື ບໍລິຫານແທນໃນກໍລະນີທີ່ເຈົ້າຄອງນະຄອນບໍ່ຢູ່. ຂຶ້ນກັບຫົວເມືອງໃຫຍ່ແມ່ນເມືອງນ້ອຍຕ່າງໆ ຊຶ່ງແຕ່ລະເມືອງນ້ອຍກໍມີເຈົ້າເມືອງເປັນຜູ້ປົກຄອງ.

## 6.1 ຄວາມເປັນມາດ້ານການປົກຄອງໃນລາວ

### 6.1.1 ການເມືອງ ແລະ ການປົກຄອງໃນສະໄໝອານາຈັກລາວລ້ານຊ້າງ

#### 1) ສະໄໝລ້ານຊ້າງຮຸ່ງເຮືອງ

**ກ. ດ້ານການເມືອງ**

ໃນສະໄໝທີ່ມີຊື່ວ່າ: ອານາຈັກລາວລ້ານຊ້າງ, ປະເທດລາວ ແມ່ນລັດເອກະລາດ ແລະ ເອກະພາບໜຶ່ງທີ່ເຂັ້ມແຂງ ແລະ ຮຸ່ງເຮືອງເຫລືອງເຫລື້ອມຢູ່ໃນພາກພື້ນອາຊີອາຄະເນ. ຄວາມຮຸ່ງເຮືອງເຫລືອງເຫລື້ອມອັນນີ້ໄດ້ແກ່ຍາວເປັນເວລາກວ່າ 300 ປີ (ແຕ່ກາງສະຕະວັດທີ XIV ເຖິງທ້າຍສະຕະວັດທີ XVII ແລະ ໄດ້ມີຊື່ສຽງໂດ່ງດັງໄປທົ່ວໂລກ (ພູມສາດລາວ, 1989, ໜ້າ167).

**ຂ. ດ້ານການປົກຄອງ**

ການປົກຄອງໃນລະບອບສັກດີນາພາຍໃຕ້ລັດຊະການຂອງພະເຈົ້າສຸລິຍະວົງສາແຕ່ປີ ຄສ 1638 ຫາ 1695 ແມ່ນການປົກຄອງທີ່ປະກອບດ້ວຍ 3 ອຳນາດຄື: ອຳນາດມະຫາກະສັດ, ອຳນາດເສນາບໍດີ ແລະ ອຳນາດຕຸລາການ. ອຳນາດທັງ 3 ນີ້ໄດ້ສຳພັນກັນ ແລະ ພ້ອມກັນປົກຄອງຕາມສາຍຂອງໃຜລາວແຕ່ຂັ້ນລາຊະວັງຈົນເຖິງຂັ້ນບ້ານ.

**ຄ. ນະໂຍບາຍການປົກຄອງ**

ທັງ 3 ອຳນາດໄດ້ວາງນະໂຍບາຍການປົກຄອງ ດັ່ງນີ້:

+ ອຳນາດຂອງມະຫາກະສັດ ແມ່ນອຳນາດການປົກຄອງສູງສຸດປະກອບດ້ວຍ ອຳນາດຂອງກະສັດ 4 ອົງ ຄື:

ເຈົ້າແຜ່ນດິນ ຊຶ່ງແມ່ນເຈົ້າຂອງຊີວິດ ແລະ ຊັບສົມບັດທັງໝົດຂອງປະເທດ, ມີສິດເດັດຂາດແຕ່ຜູ້ດຽວໃນການບໍລິຫານປະເທດບໍ່ວ່າດ້ານການເມືອງ, ດ້ານການທະຫານ ກໍຄືດ້ານເສດຖະກິດ ແລະ ສັງຄົມ. ການຄັດເລືອກບຸກຄົນຂຶ້ນເປັນເຈົ້າຊີວິດ ແມ່ນປະຕິບັດຕາມລະບຽບປະເພນີຂອງສັກດີນາ ຄື: ແບບລູກແທນພໍ່. ໃນກໍລະນີທີ່ລູກບໍ່ສາມາດປະຕິບັດພາລະກິດໄດ້ ແລະ ໃນກໍລະນີທີ່ເຈົ້າຊີວິດບໍ່ມີລູກຊາຍ, ຄົນອື່ນທີ່ຢູ່ໃນຕະກຸນກະສັດກໍມີສິດຮັບການແຕ່ງຕັ້ງໃຫ້ເປັນເຈົ້າຊີວິດໄດ້.

- ເຈົ້າມະຫາອຸປະຮາດມີໜ້າທີ່ເຮັດວຽກແທນເຈົ້າຊີວິດໃນທຸກວຽກ. ແຕ່ໜ້າທີ່ສະເພາະ ແມ່ນການປົກຄອງ, ເປັນປະທານສະພາລາຊະກິດ, ປະທານຄະນະເສນາບໍດີ, ອອກຄຳສັ່ງເກນທະຫານໃນເມື່ອມີສົງຄາມ ແລະ ຄັດເລືອກເອົາຜູ້ສືບທອດລາຊະສົມບັດໃນເມື່ອເຈົ້າຊີວິດບໍ່ຢູ່ ຫລື ສິ້ນພະຊົນ (ເສຍຊີວິດ). ຕາມປົກກະຕິ, ຜູ້ຄອງຕຳແໜ່ງນີ້ ແມ່ນນ້ອງຊາຍຂອງເຈົ້າຊີວິດ ຫລື ບຸກຄົນ ໃນຕະກຸນຂອງ ເຈົ້າຊີວິດ.
- ເຈົ້າລາຊະວົງ ແມ່ນຜູ້ຮອງເຈົ້າມະຫາອຸປະຮາດ ມີໜ້າທີ່ເບິ່ງແຍງວຽກງານສານຊ່ວຍເສນາບໍດີຝ່າຍກາງ, ມີໜ້າທີ່ຂຶ້ນແທນເຈົ້າມະຫາອຸປະຮາດ ໃນກໍລະນີທີ່ເຈົ້າມະຫາອຸປະຮາດສິ້ນພະຊົນ (ເສຍຊີວິດ) ຫລື ບໍ່ຢູ່.
- ເຈົ້າລາຊະບຸດ ຊຶ່ງຜູ້ມີສິດໄດ້ຮັບຕຳແໜ່ງນີ້ກໍແມ່ນລູກ-ຫລານຂອງເຈົ້າຊີວິດນັ້ນເອງ, ມີໜ້າທີ່ເບິ່ງຜົນປະໂຫຍດຂອງແຜ່ນດິນນາ.

+ ຄະນະເສນາບໍດີມີໜ້າທີ່ບໍລິຫານວຽກງານຕ່າງໆ ປະກອບດ້ວຍເສນາບໍດີຝ່າຍຂວາ ແລະ ຝ່າຍຊ້າຍຄືດັ່ງນີ້:

- ເສນາບໍດີຝ່າຍຂວາມີພະຍາ 10 ທ່ານມີໜ້າທີ່ເຮັດວຽກປ້ອງກັນຊາດ ແລະ ຮັບຜິດຊອບກົມຄັງ, ກົມນາແລະ ພຸດທະສາສະໜາ.

**ຂັ້ນເມືອງດ່ານໜ້າ ຫລື ເມືອງຂອບດ່ານ**

ເມືອງດ່ານໜ້າ ຫລື ເມືອງຂອບດ່ານ ແມ່ນເມືອງທີ່ລຽບຕາມຊາຍແດນຊຶ່ງແມ່ນພະຍາຂັ້ນ 1200 ເງິນເປັນຜູ້ບໍລິຫານ. ເມືອງເຫລົ່ານີ້ຂຶ້ນກັບເມືອງຫລວງໂດຍກົງ ແລະ ຮອບດ້ານ.

**2) ສະໄໝລ້ານຊ້າງຕົກເປັນເມືອງຂຶ້ນຂອງສະຫຍາມ**

**ກ. ດ້ານການເມືອງ**

ແຕ່ທ້າຍສະຕະວັດທີ XVII ເປັນຕົ້ນມາບັນດາສັກດີນາລາວລ້ານຊ້າງໄດ້ຜິດຖຽງກັນເພາະຍາດຊີງບັນລັງຂຶ້ນເປັນເຈົ້າຊີວິດຊຶ່ງເຮັດໃຫ້ອານາຈັກລາວລ້ານຊ້າງສູນເສຍຄວາມເປັນເອກະພາບ ແລະ ແຕກແຍກອອກເປັນ 3 ອານາຈັກຄື: ອານາຈັກລາວລ້ານຊ້າງຫລວງພະບາງ, ອານາຈັກລາວລ້ານຊ້າງວຽງຈັນ ແລະ ອານາຈັກລາວລ້ານຊ້າງຈຳປາສັກ. ການແຕກແຍກກັນນີ້ໄດ້ເຮັດໃຫ້ອານາຈັກລາວລ້ານຊ້າງ ທີ່ກວ້າງໃຫຍ່ໄພສານ ແລະ ເຂັ້ມແຂງ ໃນເມື່ອກ່ອນອ່ອນເພຍລົງ ແລະ ໃນທີ່ສຸດກໍຕົກເປັນເມືອງຂຶ້ນ ຂອງສັກດີນາສະຫຍາມໃນທ້າຍສະຕະວັດທີ XVIII.

**ຂ. ດ້ານການປົກຄອງ**

ອານາຈັກລາວລ້ານຊ້າງເມື່ອໄດ້ກາຍເປັນເມືອງຂຶ້ນ ຂອງສັກດີນາສະຫຍາມແລ້ວ, ສັກດີນາສະຫຍາມ ກໍໄດ້ຈັດເຂົ້າເປັນເມືອງຂຶ້ນຊັ້ນນອກ ແລະ ແບ່ງອານາຈັກລາວລ້ານຊ້າງອອກເປັນ 4 ກອງໃຫຍ່:

- ຫົວເມືອງລາວກ່າວ ແມ່ນເຂດພາກໃຕ້ຂອງລາວຕັ້ງແຕ່ສະຫວັນນະເຂດເຖິງຈຳປາສັກ,
- ຫົວເມືອງລາວກາງ ແມ່ນເຂດພາກກາງຂອງລາວ ທີ່ຕິດກັບແດນສະຫຍາມກວມເອົາອ້ອມແອ້ມນະຄອນລາຊະສີມາ ໃນປະເທດໄທປັດຈຸບັນ,
- ຫົວເມືອງລາວພວນ ແມ່ນເຂດພາກກາງເບື້ອງຕາເວັນອອກຂອງລາວຕັ້ງແຕ່ຂອນແກ່ນເຖິງຊຽງຂວາງ,
- ຫົວເມືອງລາວພຸງຂາວ ແມ່ນພາກເໜືອຕັ້ງແຕ່ຫລວງພະບາງຈົນເຖິງສິບສອງພັນນາລື້ຕິດກັບປະເທດຈີນ.

ຫົວເມືອງລາວທັງ 4 ກອງເຫລົ່ານີ້ແບ່ງອອກເປັນຫລາຍເມືອງເອກທີ່ຂຶ້ນກັບກຸງເທບໂດຍກົງ ແລະ ເມືອງນ້ອຍອີກຫລາຍເມືອງທີ່ຂຶ້ນກັບເມືອງເອກ. ໃນຂັ້ນນີ້ສັກດີນາສະຫຍາມໄດ້ໃຫ້ສັກດີນາລາວປົກຄອງກັນເອງ ໂດຍຢູ່ພາຍໃຕ້ການກວດກາຂອງຂ້າຫລວງໃຫຍ່ ແລະ ຜູ້ສຳເລັດລາຊະການຂອງເຈົ້າ ແຜ່ນດິນສະຫຍາມອີກຜູ້ໜຶ່ງເປັນຜູ້ກວດກາທັງໝົດທົ່ວປະເທດລາວ. ໃນຕົວຈິງໃນຂັ້ນເມືອງເອກ ແລະ ເມືອງນ້ອຍເຫລົ່ານີ້ ສິດອຳນາດຂອງສັກດີນາລາວໄດ້ຖືກບັ່ນທອນລົງຫລາຍ. ມີການຈັດຕັ້ງການປົກຄອງຂະໜາດ ນ້ອຍທີ່ສຸດຄືມີເຈົ້າອຸປະຮາດ ເປັນຜູ້ຮອງ, ມີເຈົ້າລາຊະວົງກຳກັບສະບຽງ ແລະ ອາວຸດ, ມີເຈົ້າລາຊະບຸດກຳກັບວຽກເລຂາ ແລະ ຂ້າລາຊະການຈຳນວນໜຶ່ງຊ່ວຍວຽກການປົກຄອງຊຶ່ງທັງໝົດນັ້ນລ້ວນແຕ່ມີໜ້າທີ່ເກັບສ່ວຍ, ສົ່ງສ່ວຍ, ສົ່ງເຄື່ອງບັນນາການ, ເກນແຮງງານ ແລະ ເກນທະຫານ ໃຫ້ກຸງເທບເປັນປະຈຳ. ຢູ່ຫລວງພະບາງ ແລະ ຈຳປາສັກການປົກຄອງໄດ້ແບ່ງອອກເປັນຫລາຍກົມກອງ ຄື: ກົມເລຂານຸການພະເຈົ້າແຜ່ນດິນ, ກົມສະບຽງອາຫານ ແລະ ອາວຸດ, ກົມຄັງເງິນ, ກົມສັກເລກຊາຍສະກັນ ແລະ ສຳມະໂນຄົວ, ກົມຍຸຕິທຳ ແລະ ຕຳຫລວດ, ກອງຊ້າງສູ້ລົບ, ກອງມ້າສູ້ລົບ, ກົມກະສິກຳ ແລະ ສາງເຂົ້າແຜ່ນດິນ, ກົມສາທາລະນະສຸກ, ກົມໂຫລາສາດ ແລະ ຫໍສະມຸດ, ກອງສີພາຍເຮືອພະທີ່ນັ່ງ, ສານ, ກົມມະຫາດເລັກ, ກົມນາດຕະສິນ ແລະ ດົນຕີ ແລະ ກົມອື່ນໆ. ບັນດາຂ້າລາຊະການເຈົ້າຕ່າງໆ ເຫລົ່ານີ້ ນັບທັງອາດຍາສິດປົກຄອງຂັ້ນເມືອງ, ຕາແສງ ແລະ ບ້ານລ້ວນແຕ່ໄດ້ຮັບສິດຍຶດຄອງ ແລະ ປົກຄອງພື້ນທີ່ນາຕາມຈຳນວນຫລາຍ-ໜ້ອຍແຕກຕ່າງກັນ.

ຄ. ນະໂຍບາຍການປົກຄອງຂອງສັກດີນາສະຫຍາມ

ສັກດີນາສະຫຍາມ ໄດ້ວາງນະໂຍບາຍການປົກຄອງລາວ ໂດຍບໍ່ໃຫ້ລາວມີໂອກາດຟື້ນຕົວລຸກຂຶ້ນຕໍ່ຕ້ານອີກ, ມີຄວາມຫວັງຢຶດຄອງດິນລາວທັງໝົດ ພ້ອມທັງຢາກລຶບລ້າງບໍ່ໃຫ້ມີຄຳວ່າ ອານາຈັກລາວລ້ານຊ້າງອີກ. ພວກເຂົາຢາກໃຫ້ລາວຕົກຢູ່ໃນຄວາມມືດມົນ ແລະ ເປັນແຮງງານຮັບໃຊ້ ຊຶ່ງພວກເຂົາໄດ້ກວາດຕ້ອນເອົາປະຊາຊົນລາວ ໄປເປັນຂ້ອຍຂ້າຮັບໃຊ້ສັກດີນາສະຫຍາມ ຈຳນວນບໍ່ໜ້ອຍ, ພ້ອມນັ້ນ ກໍຍັງເກັບເກນເອົາເສດຖະກິດຂອງຊາວລາວ ກໍຄືສະບຽງອາຫານ ແລະ ເງິນຄຳນັ້ນເອງ. ໃນການປະຕິບັດຕົວຈິງ, ສັກດີນາສະຫຍາມໄດ້ເລີ່ມຕົ້ນດ້ວຍການຈັດແບ່ງປະເທດລາວໃຫ້ເປັນຫລາຍຫົວໜ່ວຍການປົກຄອງ ທີ່ມີການຈັດຕັ້ງກວດກາ ຢ່າງສະຫລັບຊັບຊ້ອນ, ໄດ້ຈັດຕັ້ງກອງທະຫານປະຈຳການຢູ່ຕາມເມືອງຕ່າງໆ ແລະ ໄດ້ດຳເນີນການປາບປາມຄົນລາວທີ່ຮັກຊາດທີ່ ລຸກຂຶ້ນຕໍ່ຕ້ານ. ສັກດີນາສະຫຍາມ ໄດ້ມີຄວາມໂຫດຫ້ຽມອຳມະຫິດສັ່ງຈູດເຜົານະຄອນວຽງຈັນ ທີ່ຮຸ່ງເຮືອງເຫລືອງເຫລື້ອມເຄີຍເປັນສູນກາງການປົກຄອງ, ສູນກາງເສດຖະກິດ-ສັງຄົມ ແລະ ວັດທະນະທຳຂອງອານາຈັກລາວລ້ານຊ້າງອັນໄດ້ເຮັດໃຫ້ທົ່ວປະເທດຕົກຢູ່ໃນຄວາມໂສກເສົ້າເສຍໃຈຫາອັນປຽບບໍ່ໄດ້. ການສຶກສາ ຟື້ນຕົວຂຶ້ນບໍ່ໄດ້ ຍ້ອນສັກດີນາສະຫຍາມກີດກັ້ນບໍ່ໃຫ້ມີການສຶກສາຮໍ່າຮຽນ, ໄດ້ຈູດເຜົາວັດວາອາລາມ ແລະ ເອກະສານທີ່ເປັນໜັງສືຜູກໃບລານຖິ້ມໝົດ. ດ້ານເສດຖະກິດກໍຢູ່ໃນລະດັບຕໍ່າອາໄສແຕ່ການປູກເຂົ້າເປັນຕົ້ນຕໍ ໂດຍອີງໃສ່ທຳມະຊາດເປັນຫລັກ, ສະມັດຖະພາບການຜະລິດຕໍ່າ ແຕ່ຊ້ຳພັດຕ້ອງເສຍ ສ່ວຍໃຫ້ສັກດີນາ ເຖິງ 2 ຂັ້ນຄື: ເສຍສ່ວຍໃຫ້ສັກດີນາລາວຜູ້ເປັນເຈົ້າກຳມະສິດທີ່ດິນ ແລະ ເສຍສ່ວຍ ໃຫ້ສັກດີນາສະຫຍາມ ທີ່ເປັນຜູ້ປົກຄອງສູງສຸດ ເຮັດໃຫ້ປະຊາຊົນລາວຕົກຢູ່ໃນຄວາມທຸກຍາກ ແລະ ລຳບາກກາກກຳທີ່ສຸດ.

ສະພາບຄວາມທຸກຍາກຂອງປະຊາຊົນລາວ ຢູ່ໃຕ້ແອກປົກຄອງຂອງສັກດີນາສະຫຍາມໄດ້ເຮັດໃຫ້ທົ່ວສັງຄົມລາວອ່ອນເພຍເປ້ຍລ່ອຍ ມີຄວາມທຸກຍາກເຂັນໃຈເພາະຖືກຄອບງຳທາງຮ່າງກາຍແລະ ຈິດໃຈ, ບໍ່ມີຄວາມເປັນເຈົ້າຕົນເອງພໍໜ້ອຍເລີຍ. ດັ່ງນັ້ນ,ຈຶ່ງໄດ້ເກີດຂະບວນການຕໍ່ສູ້ຕ້ານສັກດີນາສະຫຍາມຂຶ້ນ.

### 6.1.2 ການເມືອງ ແລະ ການປົກຄອງລາວສະໄໝຕົກເປັນເມືອງຂຶ້ນຂອງຈັກກະພັດ

#### 1) ສະໄໝຕົກເປັນເມືອງຂຶ້ນຂອງຈັກກະພັດຝຣັ່ງ

#### ກ. ດ້ານການເມືອງ

ໃນ ຄສ 1893-1945, ພາຍຫລັງການຍຶດເອົາຫວຽດນາມ ແລະ ກຳປູເຈຍແລ້ວ, ຈັກກະພັດຝຣັ່ງໄດ້ ສົ່ງກຳລັງທະຫານເຂົ້າບຸກຍຶດເອົາປະເທດລາວ ແລະ ໄດ້ປະທະກັບກຳລັງຂອງສັກດີນາສະຫຍາມຢ່າງຮຸນແຮງ. ໃນທີ່ສຸດດ້ວຍການໄກ່ເກ່ຍຂອງຈັກກະພັດອັງກິດ, ສັກດີນາສະຫຍາມຈຶ່ງໄດ້ເຊັນສັນຍາ ຮັບຮູ້ອຳນາດຂອງຈັກກະພັດຝຣັ່ງ ເທິງດິນແດນຝັ່ງຊ້າຍແມ່ນ້ຳຂອງຂອງປະເທດລາວ ໃນວັນທີ 3 ຕຸລາ 1893. ສັນຍາດັ່ງກ່າວໄດ້ເຮັດໃຫ້ປະເທດລາວແບ່ງອອກເປັນ 2 ຕອນຄື: ຝັ່ງຂວາຂອງແມ່ນ້ຳຂອງ ຕົກເປັນດິນ ແດນຂອງສັກດີນາສະຫຍາມ ແລະ ຝັ່ງຊ້າຍຂອງແມ່ນ້ຳຂອງຕົກເປັນຫົວເມືອງຂຶ້ນຂອງຈັກກະພັດຝຣັ່ງ. ຈາກນັ້ນ, ຈັກກະພັດຝຣັ່ງໄດ້ຈັດປະເທດລາວເປັນແຄວ້ນໜຶ່ງຮ່ວມກັບອານາມ, ຕັງແກັງ, ໂກແຊັງຊິນ ແລະ ກຳປູເຈຍໂຮມກັນເປັນສະຫະພັນອິນດູຈີນຝຣັ່ງເສດ. ມາຮອດປີ ຄສ 1907 ຍ້ອນການ ຕໍ່ສູ້ທັກທ້ວງຂອງປະຊາຊົນລາວຜູ້ຮັກຊາດ, ຈັກກະພັດຝຣັ່ງຈຶ່ງໄດ້ບັງຄັບໃຫ້ສັກດີນາສະຫຍາມ ເຊັນສັນຍາສະບັບໃໝ່ ມອບດິນແດນແຂວງຈຳປາສັກ ແລະ ໄຊຍະບູລີ ມາຂຶ້ນກັບຕົນຕື່ມ ອັນໄດ້ກາຍ ມາເປັນດິນແດນຂອງປະເທດລາວປັດຈຸບັນ. ສຳລັບດິນແດນທີ່ເປັນເມືອງຂຶ້ນຂອງສັກດີນາສະຫຍາມກໍຖືກສະຫຍາມຍຶດເອົາເລີຍ ແລະ ໄດ້ກາຍເປັນດິນແດນ ຂອງປະເທດໄທຮອດປັດຈຸບັນນີ້ ພ້ອມດ້ວຍປະຊາກອນລາວຈຳນວນບໍ່ໜ້ອຍ ທີ່ສັກດີນາສະຫຍາມກວາດຕ້ອນເອົາໄປ

ຈາກແຂວງຊຽງຂວາງ ແລະ ນະຄອນວຽງຈັນໃນເມື່ອກ່ອນ. ນອກຈາກນັ້ນກໍແມ່ນພົນລະເມືອງລາວ ທີ່ຢູ່ເທິງດິນແດນຝັ່ງຂວາຂອງແມ່ນ້ຳຂອງຊຶ່ງປັດຈຸບັນເອີ້ນວ່າຊາວໄທອີສານນັ້ນເອງ. ມາຮອດໄລຍະທ້າຍຂອງສົງຄາມໂລກຄັ້ງທີສອງ, ສະພາບທາງດ້ານການເມືອງໄດ້ມີການຫັນປ່ຽນອັນເປັນຜົນດີໃຫ້ແກ່ການຕໍ່ສູ້ກູ້ຊາດຂອງ ປະຊາຊົນລາວ ອອກຈາກແອກປົກຄອງຂອງລ່າເມືອງຂຶ້ນຝຣັ່ງຄື: ຫລັງຈາກຟາດຊິດຍີ່ປຸ່ນໄດ້ປັດເຂ່ຍ ຈັກກະພັດຝຣັ່ງອອກຈາກລາວກໍຄືທົ່ວອິນດູຈີນໃນຕົ້ນເດືອນມີນາ ປີ 1945 ແລ້ວບໍ່ພໍເທົ່າໃດຍີ່ປຸ່ນກໍ ປະລາໄຊໃນສົງຄາມໂລກຄັ້ງທີ 2. ດ້ວຍເຫດນີ້ເອງທີ່ອຳນາດການປົກຄອງໃນລາວຕົກຢູ່ໃນສະພາບຫວ່າງເປົ່າ. ດັ່ງນັ້ນ,ອົງຄະນະພັກແຄວັນລາວຈຶ່ງກຳເອົາກາລະໂອກາດນີ້ ປຸກລະດົມຂົນຂວາຍປະຊາຊົນລາວເຕົ້າໂຮມເຂົ້າໃນຂະບວນລາວອິດສະຫລະ ແລະ ໄດ້ດຳເນີນການລຸກຮື້ຂຶ້ນຍຶດເອົາອຳນາດການປົກຄອງ, ຈັດຕັ້ງສະພາຜູ້ແທນລາຊະດອນ, ລັດຖະບານ ແລະ ປະກາດໃຊ້ລັດຖະທຳມະນູນສະບັບ ຊົ່ວຄາວເມື່ອວັນທີ 12 ຕຸລາ 1945 ໝາຍຄວາມວ່າໄດ້ປະກາດຄວາມເປັນເອກະລາດ ແລະ ເອກະພາບ ຂອງປະເທດລາວຕໍ່ໂລກຢ່າງສະຫງ່າຜ່າເຜີຍ. ແຕ່ຕົກມາຕົ້ນປີ 1946 ຈັກກະພັດຝຣັ່ງໃນຖານະທີ່ເປັນ ປະເທດພັນທະມິດທີ່ໄດ້ຮັບໄຊຊະນະໃນສົງຄາມໂລກມັນຈຶ່ງໄດ້ສົ່ງກຳລັງທະຫານເຂົ້າມາຕີຍຶດເອົາ ປະເທດລາວກັບຄືນເປັນຫົວເມືອງຂຶ້ນອີກຄັ້ງໃໝ່ ເມື່ອເປັນແນວນັ້ນ, ລັດຖະບານລາວຈຶ່ງໄດ້ອົບພະຍົບໄປປະເທດໄທເພື່ອຊອກຊ່ອງທາງດຳເນີນການຕໍ່ສູ້ຕໍ່ໄປ.

ຫລັງຈາກຍຶດເອົາປະເທດລາວຄືນໄດ້ແລ້ວ, ຈັກກະພັດຝຣັ່ງ ກໍໄດ້ໃຊ້ເລ່ຫລ່ຽມປະກາດໃຫ້ເອກະລາດ ແກ່ປະເທດລາວແຕ່ໃຫ້ຢູ່ພາຍໃຕ້ການອາລັກຂາຂອງຝຣັ່ງອີກຕໍ່ໄປ ໂດຍອ້າງວ່າປະເທດລາວຍັງບໍ່ທັນເຂັ້ມແຂງ ພໍທີ່ຈະປົກຄອງຕົນເອງໄດ້. ກົນອຸບາຍດັ່ງກ່າວໄດ້ເຮັດໃຫ້ບຸກຄົນຈຳນວນໜຶ່ງທີ່ຢູ່ໃນຂະບວນລາວອິດສະຫລະຫລົງເຫັນຜົນປະໂຫຍດທີ່ຕົນເອງຈະໄດ້ຮັບ ຈຶ່ງກັບຄືນເຂົ້າມາຍອມຈຳນົນ ຕໍ່ຈັກກະພັດຝຣັ່ງ ແລະ ອີກຈຳນວນໜຶ່ງ ແມ່ນບໍ່ຍອມຈຳນົນ ຈຶ່ງເດີນທາງໄປສົມທົບກັບຂະບວນການຕໍ່ຕ້ານຈັກກະພັດຝຣັ່ງ ທີ່ຢູ່ພາກຕາເວັນອອກສ່ຽງເໜືອຂອງປະເທດ ເພື່ອດຳເນີນການຕໍ່ສູ້ຕໍ່ໄປ.

ຫລັງຈາກນີ້, ປະເທດລາວຈຶ່ງໄດ້ມີສອງເຂດການປົກຄອງທີ່ແຕກຕ່າງກັນທາງດ້ານເນື້ອໃນ ແລະ ຮູບການ ຄື:ເຂດທີ່ຢູ່ພາຍໃຕ້ການປົກຄອງຂອງລັດຖະບານວຽງຈັນເອີ້ນວ່າເຂດວຽງຈັນ ແລະ ເຂດປົກຄອງໂດຍກຳລັງຮັກຊາດເອີ້ນວ່າເຂດປົດປ່ອຍ.

### ຂ. ດ້ານການປົກຄອງ

ຢູ່ອິນດູຈີນກໍຄືຢູ່ລາວ, ຈັກກະພັດຝຣັ່ງໄດ້ປະຕິບັດນະໂຍບາຍແບ່ງແຍກເພື່ອປົກຄອງ ຄື: ໄດ້ແບ່ງປະເທດລາວອອກເປັນ 2 ເຂດປົກຄອງຄື: ເຂດອາລັກຂາ ແລະ ເຂດເມືອງຂຶ້ນ.

- ເຂດອາລັກຂາ:

ເຂດອາລັກຂາ ແມ່ນແຂວງຫລວງພະບາງ ທີ່ຈັກກະພັດຝຣັ່ງໄດ້ຮັກສາຮູບການປົກຄອງ ແບບສັກດີນາລາວໄວ້ຄືມີເຈົ້າແຜ່ນດິນເປັນຜູ້ປົກຄອງສູງສຸດ, ມີສິດຮອບດ້ານ ແລະ ມີເຈົ້າອຸປະຣາດເປັນຜູ້ຮອງທັງເປັນຫົວໜ້າລັດຖະບານປະກອບມີ 4 ກະຊວງຄື: ກະຊວງມະຫາດໄທ, ກະຊວງໂຍທາ ແລະ ເສດຖະກິດ, ກະຊວງການຄັງ ແລະ ສຶກສາ, ກະຊວງທຳມະການ. ຢູ່ຄຽງຂ້າງຫໍສະໜາມຫລວງບ່ອນເຮັດວຽກຂອງລັດຖະບານຈັກກະພັດຝຣັ່ງໄດ້ແຕ່ງຕັ້ງກົງສູນ ແລະ ທີ່ປຶກສາທີ່ເປັນຄົນຝຣັ່ງຈຳນວນໜຶ່ງປະຈຳການ ຊຶ່ງເນື້ອແທ້ ແມ່ນເພື່ອຄວບຄຸມການບໍລິຫານງານຂອງເຈົ້າຊີວິດ ແລະ ລັດຖະບານ.

- ເຂດເມືອງຂຶ້ນ:

ເຂດເມືອງຂຶ້ນແບ່ງອອກເປັນ 8 ແຂວງ ແລະ 1 ເຂດທະຫານປົກຄອງ. ຈັກກະພັດຝຣັ່ງ ໄດ້ລົບລ້າງຮູບການປົກຄອງແບບສັກດີນາ ທີ່ມີມາແຕ່ກ່ອນ ແລ້ວຈັດຕັ້ງຮູບການປົກຄອງແບບລ່າເມືອງຂຶ້ນ

ໂດຍກົງຂຶ້ນຄື: ໄດ້ປ່ຽນແປງຖານະຂອງຜູ້ຄອບຄອງເມືອງຕ່າງໆ ມາເປັນພຽງເຈົ້າເມືອງທຳມະດາ ໂດຍມີຜູ້ຮອງ, ຜູ້ຊ່ວຍ ແລະ ສະໝຽນຈຳນວນໜຶ່ງເປັນຜູ້ຊ່ວຍວຽກປົກຄອງ. ໃນຂັ້ນແຂວງ ແມ່ນເຈົ້າໜ້າທີ່ຝຣັ່ງເປັນຫົວໜ້າ ແລະ ກຳທຸກຕຳແໜ່ງອົງການປົກຄອງຂອງແຂວງທັງເປັນຜູ້ບັນຊາໂດຍກົງຂັ້ນເມືອງ, ຕາແສງ ແລະ ຂັ້ນບ້ານ. ສະເພາະຢູ່ແຂວງຜົ້ງສາລີເອີ້ນວ່າ ເຂດທະຫານທີ 5 ແມ່ນທະຫານຝຣັ່ງປົກຄອງໂດຍກົງ.

ທັງ 2 ເຂດປົກຄອງຮວມເຂົ້າກັນເປັນເມືອງຂຶ້ນອັນດຽວ ໂດຍມີຜູ້ສຳເລັດລາຊະການໃຫຍ່ເປັນຫົວໜ້າລັດຖະບານລ່າເມືອງຂຶ້ນປະຈຳລາວ ຊຶ່ງມີທີ່ວ່າການຢູ່ນະຄອນວຽງຈັນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ຮອບດ້ານຕໍ່ໜ້າຜູ້ສຳເລັດລາຊະການສູງສຸດປະຈຳອິນດູຈີນ.

ອົງປະກອບຂອງການປົກຄອງແບບລ່າເມືອງຂຶ້ນຂອງຈັກກະພັດຝຣັ່ງ ທີ່ປະຕິບັດຕາມນະໂຍບາຍການປົກຄອງ ທີ່ກົດຂີ່ຂູດຮີດແບບຂ້າທາດຂອງເຂົາໄດ້ແບ່ງອອກເປັນ 2 ຢ່າງຄື: ລັດຖະບານ ແລະ ສານ. ລັດຖະບານລ່າເມືອງຂຶ້ນປະຈຳລາວ ຢູ່ນະຄອນວຽງຈັນ ບັນຊາອົງການທ້ອງຖິ່ນໃນເຂດເມືອງ ຕ່າງໆ ທົ່ວດິນລາວໂດຍກົງ. ລັດຖະບານນີ້ແບ່ງອອກເປັນຫລາຍພະແນກການບໍລິຫານ ເຊັ່ນ: ຫ້ອງການ ປົກຄອງທົ່ວໄປ, ພະແນກກວດກາ ແລະ ຕິດຕາມການເກັບພາສີ, ຄັງເງິນ, ພະແນກກະສິກຳ ແລະ ປ່າໄມ້, ພະແນກສຶກສາ, ພະແນກຕຳຫລວດ, ພະແນກສາທາລະນະສຸກ, ພະແນກສານພື້ນເມືອງ, ພະແນກລາຊະທັນ ແລະ ພະແນກແຜນທີ່. ບຸກຄົນທີ່ບໍລິຫານງານຂອງລັດຖະບານ ແລະ ພະແນກການ ທີ່ກ່າວມານັ້ນລ້ວນແລ້ວແຕ່ແມ່ນຄົນຝຣັ່ງ ໂດຍມີຊາວອານາມຕ່າງດ້າວເປັນຜູ້ຊ່ວຍວຽກ, ສ່ວນຄົນລາວ ທີ່ຊ່ວຍວຽກມີໜ້ອຍທີ່ສຸດ.

ລັດຖະບານລ່າເມືອງຂຶ້ນຝຣັ່ງໃນລາວ ມີງົບປະມານຂອງຕົນສະເພາະ ທີ່ສ້າງຂຶ້ນຈາກລາຍຮັບພາຍໃນ ເຊັ່ນ: ຈາກການເກັບພາສີການຜະລິດ ແລະ ການເສຍສ່ວຍຄ່າຫົວຄົນເປັນຕົ້ນຕໍ, ສ່ວນໜ້ອຍໜຶ່ງ ແມ່ນໄດ້ມາຈາກການແບ່ງປັນງົບປະມານລັດຖະບານສະຫະພັນອິນດູຈີນຝຣັ່ງ. ງົບປະມານນີ້ສ່ວນໃຫຍ່ໃຊ້ເຂົ້າໃນການສ້າງທາ ແລະ ການກວດກາການທະຫານ. ຈັກກະພັດຝຣັ່ງເອົາໃຈໃສ່ຊົນຊັ້ນສັກດີນາລາວ, ເຈົ້າທີ່ດິນ ແລະ ອາດຍາສິດທ້ອງຖິ່ນເພື່ອຍາດແຍ່ງການສະໜັບສະໜູນໂດຍການເຕົ້າໂຮມເອົາຊົນຊັ້ນດັ່ງກ່າວ ປະກອບເຂົ້າເປັນສະມາຊິກສະພາທີ່ປຶກສາລັດຖະບານ ໃນຂັ້ນສູນກາງ ແລະ ສະພາທີ່ປຶກສາຊາວພື້ນເມືອງໃນຂັ້ນແຂວງ ຊຶ່ງເນື້ອແທ້ຂອງໜ້າທີ່ສະພາກໍແມ່ນການປະກອບຄຳເຫັນໃຫ້ແກ່ຈັກກະພັດຝຣັ່ງໃນການຈັດຕັ້ງປະຕິບັດລະບຽບກົດໝາຍ ວ່າດ້ວຍການເກນແຮງງານສ້າງທາງ, ການເກັບພາສີ ແລະ ເສຍສ່ວຍຕ່າງໆລວມທັງການສຳປະທານການຂຸດຄົ້ນຊັບພະຍາກອນທຳມະຊາດຂອງລາວ ແລະ ການປາບປາມຂະບວນການຕໍ່ຕ້ານຈັກກະພັດຝຣັ່ງ. ເມື່ອແບ່ງເປັນສອງເຂດຄືທີ່ກ່າວມານັ້ນ, ການປົກຄອງແຕ່ລະເຂດຈຶ່ງແຕກຕ່າງກັນ ຄືດັ່ງນີ້:

**ເຂດວຽງຈັນ:**

ແມ່ນດຳເນີນການປົກຄອງໂດຍການປ່ຽນຮູບການປົກຄອງຈາກການລ່າເມືອງຂຶ້ນແບບເກົ່າມາເປັນຮູບແບບການປົກຄອງການລ່າເມືອງຂຶ້ນແບບໃໝ່. ຈັກກະພັດຝຣັ່ງໄດ້ໂຍະຍານທາງດ້ານການເມືອງສ່ວນໃດສ່ວນໜຶ່ງ ຄື: ໄດ້ອະນຸຍາດໃຫ້ປະເທດລາວມີການຈັດຕັ້ງປົກຄອງກັນເອງ ຕາມແບບແຜນການປົກຄອງຫົວເມືອງຂຶ້ນແບບໃໝ່ໂດຍໃຫ້ຝຣັ່ງມີສິດເຮັດໜ້າທີ່ອາລັກຂາປະເທດລາວ. ແຕ່ເຖິງຢ່າງໃດກໍຕາມ, ຂະບວນການຕໍ່ສູ້ຂັບໄລ່ຈັກກະພັດຝຣັ່ງຂອງປະຊາຊົນລາວກໍຍັງດຳເນີນຢູ່ ແລະ ໄດ້ຮັບໄຊຊະນະເລື້ອຍໆມາຈົນມາເຖິງປີ ຄສ 1954 ຍ້ອນເສຍໄຊໃນສົງຄາມອິນດູຈີນ, ຈັກກະພັດຝຣັ່ງ ຈຶ່ງໄດ້ເຊັນສັນຍາຮັບຮູ້ຄວາມເປັນເອກະລາດອັນສົມບູນຂອງປະເທດລາວ. ແຕ່ຈັກກະພັດອາເມລິກາ ໄດ້ສວມຮອຍເຂົ້າມາແທນຝຣັ່ງດຳເນີນການທຸກຮານລາວໂດຍທັນທີພາຍໃຕ້ຂໍ້ອ້າງວ່າ: ເພື່ອຊ່ວຍເຫລືອຕ້ານໄພຄຸກຄາມຂອງລັດທິຄອມມູນິດດ້ວຍການນຳໃຊ້ນະໂຍບາຍການຊ່ວຍເຫລືອ.

ການປົກຄອງໃນເຂດວຽງຈັນ ແມ່ນການປົກຄອງແບບເຄິ່ງຫົວເມືອງຂຶ້ນ, ເຄິ່ງສັກດີນາພາຍໃຕ້ຮູບການລາຊາທິປະໄຕມີລັດຖະທຳມະນູນ ແລະ ມີ 3 ສະຖາບັນອຳນາດລັດ ຄື: ອຳນາດນິຕິບັນຍັດ, ອຳນາດບໍລິຫານ ແລະ ອຳນາດຕຸລາການ.

**ເຂດປົດປ່ອຍ:**

ເຂດປົດປ່ອຍໄດ້ປະກົດຕົວອອກຢ່າງເປັນທາງການນັບແຕ່ເດືອນສິງຫາ ປີ ຄສ 1950 ເປັນຕົ້ນມາຄື ເລີ່ມແຕ່ມີການໄຂກອງປະຊຸມໃຫຍ່ແນວລາວຕໍ່ຕ້ານທົ່ວປະເທດ ທີ່ໄດ້ຕົກລົງສ້າງຕັ້ງແນວໂຮມເອກະພາບແຫ່ງຊາດ ຊື່ວ່າແນວລາວອິດສະຫລະ ແລະ ປະກາດສ້າງຕັ້ງລັດຖະບານຕໍ່ຕ້ານເພື່ອເຕົ້າໂຮມ ແລະ ນຳພາປະຊາຊົນດຳເນີນການປະຕິວັດຊາດ-ປະຊາທິປະໄຕ ແລະ ຄຸ້ມຄອງເຂດປົດປ່ອຍໃນຖານະເປັນລັດໜຶ່ງຢ່າງແທ້ຈິງ. ການປົກຄອງໃນເຂດນີ້ ແມ່ນປະຕິບັດຕາມຫລັກການປົກຄອງປະຊາທິປະໄຕ ປະຊາຊົນ ໂດຍມີພັກປະຊາຊົນປະຕິວັດລາວທີ່ໄດ້ຮັບການຈັດຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 22 ມີນາ 1955 ຕາມມະຕິຂອງກອງປະຊຸມໃຫຍ່ຄັ້ງທີ II ເປັນຜູ້ຈັດຕັ້ງນຳພາໂດຍກົງ ແລະ ຮອບດ້ານ. ມີການປົກຄອງຢູ່ສອງຂັ້ນ ຄື: ການປົກຄອງຂັ້ນສູນກາງ ແລະ ການປົກຄອງຂັ້ນທ້ອງຖິ່ນ.

ການປົກຄອງຂັ້ນສູນກາງ: ໃນເບື້ອງຕົ້ນຄືນັບແຕ່ ປີ ຄສ 1945-1954 ມີການປົກຄອງໂດຍແນວລາວອິດສະຫລະ ແລະ ລັດຖະບານລາວຕໍ່ຕ້ານທີ່ມີນາຍົກລັດຖະມົນຕີເປັນຫົວໜ້າ ແລະ ແບ່ງອອກເປັນ 4 ກະຊວງ ຄື: ກະຊວງປ້ອງກັນປະເທດ, ກະຊວງພາຍໃນ, ກະຊວງເສດຖະກິດ ແລະ ກະຊວງສຶກສາ. ມາຮອດປີຄສ 1956 ກອງປະຊຸມໃຫຍ່ແນວລາວອິດສະຫລະຕົກລົງປ່ຽນຊື່ແນວລາວອິດສະຫລະມາເປັນແນວລາວຮັກຊາດ ແລະ ຮອດ ປີ 1957 ໂດຍປະຕິບັດຕາມສັນຍາເຊີແນວ ແລະ ສັນຍາໂຮມລາວຈຶ່ງໄດ້ຍຸບເລີກລັດຖະບານຕໍ່ຕ້ານ ຄື: 4 ກະຊວງທີ່ກ່າວມາກໍໄດ້ຍຸບເລີກ ແລະ ໄດ້ສ້າງເປັນພະແນກການວິຊາສະເພາະເຊັ່ນ: ພະແນກສຶກສາ, ພະແນກກະສິກຳ, ພະແນກການຄ້າ, ພະແນກວັດທະນະທຳ ແລະ ອື່ນໆ.

ການປົກຄອງຂັ້ນທ້ອງຖິ່ນ: ໂດຍອີງຕາມຈຸດພິເສດຂອງທີ່ຕັ້ງຍຸດທະສາດໃນການດຳເນີນສົງຄາມປົດປ່ອຍຊາດ ແລະ ການບໍລິຫານຄຸ້ມຄອງເຂດປົດປ່ອຍຢ່າງຮອບດ້ານ, ທົ່ວປະເທດໄດ້ຖືກກຳນົດອອກເປັນ 19 ແຂວງ ຄື: ແຂວງຜົ້ງສາລີ ເໜືອ, ຜົ້ງສາລີໃຕ້, ຫລວງນ້ຳທາ, ໄຊຍະບູລີ, ອຸດົມໄຊ, ຫລວງພະບາງ, ວຽງຈັນຕາເວັນອອກ, ວຽງຈັນຕາເວັນຕົກ, ຫົວພັນ, ຊຽງຂວາງ, ບໍລິຄຳໄຊ, ຄຳມ່ວນ, ແຂວງຕາເວັນອອກ, ສະຫວັນນະເຂດ, ສາລະວັນ, ບູລະພາ, ຈຳປາສັກ, ອັດຕະປື ແລະ ສີພັນດອນ. ແຕ່ລະແຂວງຍັງ ຖືກແບ່ງອອກເປັນຫລາຍເມືອງ, ຫລາຍຕາແສງ ແລະ ຫລາຍບ້ານຕາມລຳດັບ. ການປົກຄອງແຕ່ລະຂັ້ນມີການຈັດຕັ້ງສະພາປະຊາຊົນ ເປັນຜູ້ຄັດເລືອກເອົາຄະນະປົກຄອງຕາມຂັ້ນຂອງຕົນ. ສະພາປະຊາຊົນບໍ່ເຮັດໜ້າທີ່ການປົກຄອງ ແຕ່ເຮັດໜ້າທີ່ຊ່ວຍວຽກ ແລະ ປະກອບຄຳເຫັນແກ່ຄະນະປົກຄອງທີ່ເຮັດໜ້າທີ່ຄຸ້ມຄອງບໍລິຫານຮອບດ້ານ ຮັບຜິດຊອບຕໍ່ຂັ້ນເທິງ ແລະ ສູນກາງແນວລາວຮັກຊາດ. ເຂດປົດປ່ອຍໄດ້ເປັນບ່ອນອີງອັນແໜ້ນແກ່ນຂອງການປະຕິວັດຕໍ່ສູ້ປົດປ່ອຍຊາດ ອອກຈາກສົງຄາມປ່າເຖື່ອນອັນຮ້າຍກາດຂອງຈັກກະພັດອາເມລິກາ ແລະ ລູກມື. ແຕ່ການຕໍ່ສູ້ກູ້ຊາດ ກໍໄດ້ຮັບໄຊຊະນະຢ່າງສົມບູນໃນທ້າຍ ປີ ຄສ 1975 ແລະ ສະຖາປະນາປະເທດລາວເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ ປີ ຄສ 1975.

**ຄ. ນະໂຍບາຍການປົກຄອງຂອງຈັກກະພັດຝຣັ່ງ**

ຈັກກະພັດຝຣັ່ງ ໄດ້ວາງນະໂຍບາຍປົກຄອງລາວ ດ້ວຍການກົດຂີ່ຂູດຮີດທາງດ້ານເສດຖະກິດຄື: ການເກັບພາສີ, ເກັບສ່ວຍຄືໃນປີຄສ 1907 ພວກມັນໄດ້ວາງກົດໝາຍວ່າດ້ວຍການເກັບສ່ວຍຄ່າຫົວຄົນອອກຄືດັ່ງນີ້: ຄົນລາວທີ່ມີອາຍຸແຕ່ 18 ປີ ຫາ 60 ປີ ຍົກເວັ້ນພະສົງ, ຂ້າລາຊະການ,

ຄົນລາວພິການ, ທະຫານປະຈຳການ ແລະ ບຸກຄົນທີ່ຮັບໃຊ້ໃນກອງທະຫານທ້ອງຖິ່ນກາຍ 4 ປີ ຂຶ້ນໄປໄດ້ກຳນົດໄວ້ວ່າ: ສຳລັບເຜົ່າລາວລຸ່ມຈະຕ້ອງຈ່າຍ 5 ຝຣັ່ງຕໍ່ປີ ຫລື ເປັນວັດຖຸທຽບເທົ່າ ແລະ ໄປເປັນກູລີ 20ມື້ສຳລັບພາກເໜືອ ແລະ 10 ມື້ ສຳລັບພາກໃຕ້ຊຶ່ງສາມາດທົດແທນດ້ວຍເງິນ 5 ຝຣັ່ງ. ສຳລັບເຜົ່າອື່ນໆ ຕ້ອງຈ່າຍ 2,5 ຝຣັ່ງ ແລະ ໄປເປັນກູລີ 10ມື້ ຊຶ່ງສາມາດທົດແທນດ້ວຍເງິນ 2,5 ຝຣັ່ງ. ຄົນ ຫວຽດນາມ ທີ່ເປັນຊາວຕ່າງດ້າວຕ້ອງຈ່າຍ 5 ຝຣັ່ງ ແລະ ຄົນອາຊີອື່ນໆ ທີ່ເປັນຊາວຕ່າງດ້າວຕ້ອງຈ່າຍ 12,5 ຝຣັ່ງ ໂດຍຍົກເວັ້ນການໄປເປັນກູລີ. ສຳລັບຄົນຝຣັ່ງມີສິດພິເສດຖືກຍົກເວັ້ນການເສຍພາສີທັງໝົດ. ນອກຈາກນີ້ ຈັກກະພັດຝຣັ່ງຍັງໄດ້ອອກກົດໝາຍວ່າດ້ວຍພາສີອາກອນໃບອະນຸຍາດຖືປືນ,ໜັງສືຜ່ານແດນ, ຜະລິດຕະພັນກະສິກຳ-ປ່າໄມ້ທີ່ສົ່ງອອກຂາຍຕ່າງປະເທດ. ອັນໜັກໜ່ວງກວ່ານີ້ ແມ່ນການເກັບພາສີສັດລ້ຽງ ເຊັ່ນ: ງົວ, ຄວາຍ, ຊ້າງ, ມ້າ, ເກັບພາສີພາຫະນະຂົນສົ່ງ ເຊັ່ນ: ກວຽນ, ເຮືອ, ເກັບພາສີທີ່ດິນ, ຝິ່ນ ແລະ ອື່ນໆ. ນະໂຍບາຍດັ່ງກ່າວໄດ້ສ້າງຄວາມບໍ່ພໍໃຈໃຫ້ແກ່ຊາວລາວເປັນຢ່າງຍິ່ງເຮັດໃຫ້ຄົນລາວ ທີ່ທຸກຈົນຢູ່ແລ້ວແທ່ງທຸກຈົນລົງອີກ. ມັນເປັນນະໂຍບາຍການປົກຄອງແບບລ່າເມືອງຂຶ້ນທີ່ກົດຂີ່ຂູດຮີດ ຂອງຈັກກະພັດຝຣັ່ງ ທີ່ໄດ້ກົດໜ່ວງຄວາມກ້າວໜ້າຂະຫຍາຍຕົວຮອບດ້ານຂອງປະເທດຊາດ ແລະ ປະຊາຊົນລາວ, ສັງຄົມລາວຕົກຢູ່ໃນຄວາມມືດມົນ. ດັ່ງນັ້ນ, ປະຊາຊົນລາວ ຈຶ່ງໄດ້ລຸກຂຶ້ນຕໍ່ສູ້ຕ້ານການຍຶດຄອງລາວຂອງຈັກກະພັດຝຣັ່ງ.

### 2) ສະໄໝຕົກເປັນທົ່ວເມືອງຂຶ້ນຂອງຈັກກະພັດອາເມລິກາ

#### ກ. ດ້ານການເມືອງ

ເມື່ອຈັກກະພັດຝຣັ່ງປະລາໄຊໃນສົງຄາມອິນດູຈີນໃນ ຄສ 1954 ແລະ ຈຳຕ້ອງເຊັນສັນຍາເຊີແນວ ເພື່ອມອບເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຂອງສາມຊາດໃນອິນດູຈີນ ຄື: ລາວ, ຫວຽດນາມ ແລະ ກຳປູເຈຍ (ທອງສາ ໄຊຍະວົງຄຳດີ ພ້ອມຄະນະ, ປີ ຄສ1989 ໜ້າ 152-167), ພວກມັນກໍໄດ້ຖອນຕົວອອກຈາກອິນດູຈີນ. ໃນຂະນະນັ້ນ, ຈັກກະພັດອາເມຣິກາກໍເຂົ້າມາແທນທີ່ ໂດຍມີເປົ້າໝາຍເອົາອິນດູຈີນເປັນທົ່ວເມືອງຂຶ້ນແບບໃໝ່ຂອງມັນ ໂດຍໄດ້ໃຊ້ວິທີເກັບກຳເອົາຜູ້ທີ່ນິຍົມອາເມຣິການາເປັນຜູ້ຮັບໃຊ້ວຽກງານຂອງຕົນ. ຮູບແບບການດຳເນີນຂອງມັນ ແມ່ນບີບຮັດໃຫ້ລັດຖະບານເປັນກາງ ຂອງເຈົ້າສຸວັນນະພູມາລາອອກແລ້ວສ້າງຕັ້ງລັດຖະບານໃໝ່ຂຶ້ນແທນໂດຍແມ່ນກະຕ່າຍ ໂດນສະໂສລິດເປັນນາຍົກ. ພ້ອມກັນນີ້, ຈັກກະພັດອາເມຣິກາຍັງໄດ້ນຳໃຊ້ປະເທດໄທ ໂດຍນຳໃຊ້ທະຫານໄທ, ວັດຖຸອຸປະກອນຕ່າງໆ ເພື່ອຮຸກຮານລາວທາງດ້ານການທະຫານ, ການເມືອງ, ເສດຖະກິດກໍຄືສັງຄົມ ແລະ ວັດທະນະທຳ.

#### ຂ. ດ້ານການປົກຄອງ

ໃນເມື່ອກະຕ່າຍ ໂດນສະໂສລິດ ຂຶ້ນເປັນນາຍົກລັດຖະມົນຕີ ແທນເຈົ້າສຸວັນນະພູມາທີ່ນິຍົມສັນຕິພາບ ແລະ ຄວາມເປັນກາງແລ້ວ, ກະຕ່າຍກໍໄດ້ສັບປ່ຽນເອົາບຸກຄົນທີ່ນິຍົມຈັກກະພັດອາເມຣິກາເຂົ້າເຮັດວຽກຢ່າງໄວວາ ໂດຍພ້ອມປະຕິບັດຕາມແຜນຂອງພວກມັນ.

#### ຄ. ນະໂຍບາຍການປົກຄອງ

ຈັກກະພັດອາເມຣິກາໄດ້ວາງນະໂຍບາຍປົກຄອງລາວ ໂດຍເອົາການຊ່ວຍເຫລືອລາວ ຢ່າງຮອບດ້ານ ເຊັ່ນ: ດ້ານງົບປະມານໃນການກໍ່ສ້າງກຳລັງການທະຫານ, ກຳລັງຕຳຫລວດ, ກຳລັງໃຕ້ດິນ. ນອກຈາກ ນັ້ນກໍໄດ້ກໍ່ສ້າງປົວແປງເສັ້ນທາງຍຸດທະສາດ, ເດີ່ນບິນ ເພື່ອກາຍເປັນພື້ນທີ່ຮັບໃຊ້ຍານພາຫະນະທາງບົກ ແລະ ຍົນລຳລຽງຂົນສົ່ງອາວຸດເພື່ອຖິ້ມລະເບີດ ແລະ ລຳລຽງສະບຽງອາຫານທາງອາກາດຂອງມັນ ທີ່ມີຢ່າງຫລວງຫລາຍ ເພື່ອກຽມພ້ອມສູ້ລົບເຮັດສົງຄາມຢ່າງເຕັມທີ່ຢູ່ໃນລາວ ໂດຍມີຄວາມມຸ້ງຫວັງ ເອົາລາວເປັນທົ່ວເມືອງຂຶ້ນແບບໃໝ່ນັ້ນເອງ. ແຕ່ສຸດທ້າຍນະໂຍບາຍ

ການປົກຄອງຂອງຈັກກະພັດ ອາເມຣິກາ ກໍປະລາໄຊລົງໃນວັນທີ 23 ສິງຫາ ປີຄສ 1975ໂດຍການຍຶດອຳນາດຂອງຝ່າຍແນວລາວ ຮັກຊາດ ແລະ ປວງຊົນລາວທີ່ຮັກຊາດທີ່ນະຄອນຫລວງວຽງຈັນ.

## 6.2 ການເມືອງ ແລະ ການປົກຄອງລາວໃນປັດຈຸບັນ

### 6.2.1 ການເມືອງ

ວັນທີ2ທັນວາປີຄສ 1975ໄດ້ມີການຜ່ານມະຕິກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດທີ່ໄຂຂຶ້ນຢູ່ນະຄອນວຽງຈັນ. ມະຕິກອງປະຊຸມໄດ້ຕົກລົງຍຸບເລີກລະບອບລາຊາທິປະໄຕ ແລະ ສ້າງຕັ້ງລະບອບໃໝ່ເອີ້ນວ່າ ລະບອບປະຊາທິປະໄຕຂຶ້ນແທນ, ລະບົບການປົກຄອງປະກອບດ້ວຍ 3 ອົງການທີ່ສຳຄັນ ຊຶ່ງມີໜ້າທີ່ດັ່ງນີ້: ອົງການພັກນຳພາໂດຍຜ່ານອົງຄະນະພັກຂັ້ນຕ່າງໆ, ອົງການລັດຄຸ້ມຄອງໂດຍຜ່ານລະບົບອຳນາດການປົກຄອງທຸກໆຂັ້ນ ແລະ ປະຊາຊົນເປັນເຈົ້າໂດຍຜ່ານອົງການຈັດຕັ້ງມະຫາຊົນ ແລະ ສະພາຜູ້ແທນປະຊາຊົນຂັ້ນຕ່າງໆ. ລະບົບການເມືອງໃນສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ (ມີຊື່ຫຍໍ້ວ່າ ສປປ.ລາວ) ແມ່ນລະບອບປະຊາທິປະໄຕປະຊາຊົນໂດຍແມ່ນ ພັກປະຊາຊົນປະຕິວັດລາວ ເປັນຜູ້ຈັດຕັ້ງ ແລະ ນຳພາ (ພູມສາດລາວ,1989, ໜ້າ 189).

### 6.2.2 ການປົກຄອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດເອກະພາບ ແລະ ເອກະລາດປະເທດໜຶ່ງທີ່ປົກຄອງດ້ວຍລະບອບ ປະຊາທິປະໄຕ ປະຊາຊົນ ໂດຍມີທ່ານປະທານປະເທດເປັນປະມຸກລັດ. ອຳນາດລັດຂັ້ນສູນກາງປະກອບດ້ວຍ 3 ສະຖາບັນ ຄື: ສະພາແຫ່ງຊາດ, ລັດຖະບານ ແລະ ສານປະຊາຊົນສູງສຸດຊຶ່ງສິດ ແລະ ໜ້າທີ່ຂອງແຕ່ລະສະຖາບັນໄດ້ກຳນົດໄວ້ຢູ່ໃນລັດຖະທຳມະນູນ. ສຳນັກງານສູນກາງຂອງທັງສາມສະຖາບັນເຫລົ່ານີ້ ຕັ້ງຢູ່ນະຄອນຫລວງວຽງຈັນ. ນອກຈາກນັ້ນ, ສປປ ລາວ ຍັງປົກຄອງດ້ວຍອຳນາດການປົກຄອງທ້ອງຖິ່ນຊຶ່ງມີທ່ານເຈົ້າແຂວງ, ທ່ານເຈົ້າເມືອງ ແລະ ນາຍບ້ານ ພ້ອມດ້ວຍຜູ້ຮອງປະກອບເປັນຄະນະນຳໃນແຕ່ລະແຂວງ, ແຕ່ລະເມືອງ ແລະ ແຕ່ລະບ້ານເປັນຜູ້ປົກຄອງຕາມແຕ່ລະພື້ນທີ່ຂອງຕົນ. ປັດຈຸບັນ ສປປ ລາວ ປະກອບດ້ວຍ 1 ນະຄອນຫລວງ ແລະ 17 ແຂວງ.

### 6.2.3 ນະໂຍບາຍການປົກຄອງ

#### 6.2.3.1 ອຳນາດການປົກຄອງຂັ້ນສູນກາງ

**ສະພາແຫ່ງຊາດ**

ສະພາແຫ່ງຊາດໄດ້ຮັບການແຕ່ງຕັ້ງຂຶ້ນໃນວັນທີ2ທັນວາປີຄສ1975 ຈາກກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ. ສະພາແຫ່ງຊາດ ແມ່ນອົງການອຳນາດລັດຂັ້ນສູງສຸດ ແລະ ແມ່ນອົງການທີ່ຕາງໜ້າປະຊາຊົນທັງໝົດ ໃນ ສປປ ລາວ ໃນການໃຊ້ສິດເປັນເຈົ້າຂອງຕົນເຂົ້າຮ່ວມຄຸ້ມຄອງລັດຄຸ້ມຄອງສັງຄົມ. ສະພາແຫ່ງຊາດ ແມ່ນອົງການນິຕິບັນຍັດອັນໜຶ່ງອັນດຽວຂອງປະເທດ, ເປັນຜູ້ເຮັດໜ້າທີ່ຄົ້ນຄວ້າກົດໝາຍ ແລະ ລັດຖະທຳມະນູນຂອງປະເທດ. ນອກຈາກນັ້ນ, ສະພາແຫ່ງຊາດຍັງມີໜ້າທີ່ຄົ້ນຄວ້າ ເພື່ອຜ່ານແຜນການເສດຖະກິດ ແລະ ງົບປະມານແຫ່ງຊາດ, ຄົ້ນຄວ້າ ປະກອບຄຳເຫັນຕໍ່ບັນຫາຕ່າງໆ ທີ່ກ່ຽວຂ້ອງກັບແນວທາງການເມືອງພາຍໃນ ແລະ ຕ່າງປະເທດ. ດັ່ງນັ້ນ, ເພື່ອເສີມຂະຫຍາຍບົດບາດທາງດ້ານນິຕິກຳ ແລະ ການກວດກາ, ສະພາແຫ່ງຊາດ ຈຶ່ງໄດ້ແຕ່ງຕັ້ງຄະນະປະຈຳສະພາ ທີ່ເຮັດໜ້າທີ່ປະຈຳການເພື່ອພົວພັນວຽກງານກັບລັດຖະບານ ແລະ ແຕ່ງຕັ້ງຄະນະກຳມາທິການຕ່າງໆ ເຊັ່ນ: ຄະນະກຳມາທິການລັດຖະທຳມະນູນ, ຄະນະກຳມາທິການລັດຖະບັນຍັດ ແລະ ກົດໝາຍເລືອກຕັ້ງ ແລະ ຄະນະກຳມາທິການແຜນການ ແລະ ງົບປະມານ. ສະພາແຫ່ງຊາດປະກອບດ້ວຍສະມາຊິກທີ່ເປັນຜູ້ແທນປະຊາຊົນ, ປະຊາຊົນລາວເປັນຜູ້ປ່ອນບັດເລືອກຕັ້ງເອົາຕົວແທນຂອງຕົນມານັ່ງໃນ ສະພາແຫ່ງຊາດນີ້.

### ລັດຖະບານ

ລັດຖະບານລາວປະກອບດ້ວຍກະຊວງຕ່າງໆ ເຊັ່ນ: ກະຊວງສຶກສາ ແລະ ກິລາ, ກະຊວງປ້ອງກັນປະເທດ, ກະຊວງພາຍໃນ, ກະຊວງການຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງການເງິນ, ກະຊວງຍຸຕິທຳ ແລະ ກະຊວງອື່ນໆ ຊຶ່ງທຸກກະຊວງກໍມີທ່ານລັດຖະມົນຕີ ເປັນຫົວໜ້າ ແລະ ມີບັນດາລັດຖະມົນຕີຊ່ວຍວ່າການເປັນຜູ້ຊ່ວຍບໍລິຫານ.ແຕ່ລະກະຊວງກໍແບ່ງອອກເປັນຫລາຍກົມ,ຫລາຍພະແນກການແລະຫລາຍໜ່ວຍງານຕ່າງໆ ຊຶ່ງມີທ່ານຫົວໜ້າກົມ, ຫົວໜ້າພະແນກ ແລະ ຫົວໜ້າໜ່ວຍງານເປັນຜູ້ຮັບຜິດຊອບ. ນອກຈາກນັ້ນລັດຖະບານຍັງປະກອບດ້ວຍຄະນະກຳມະການທຽບເທົ່າ ແລະ ຫ້ອງວ່າການຕ່າງໆ ຕາມຄວາມເໝາະສົມ ໃນການຄຸ້ມຄອງລັດຄຸ້ມຄອງສັງຄົມ ເຊັ່ນ: ຄະນະກຳມະການບັນດາເຜົ່າ, ຄະນະກຳມະການຂ່າວສານ ໜັງສືພິມ ແລະ ໂທລະພາບແຫ່ງຊາດ, ຫ້ອງວ່າການລັດຖະບານ, ຫ້ອງວ່າການສະພາແຫ່ງຊາດ.

ການຈັດຕັ້ງບໍລິຫານຂອງລັດຖະບານ ແມ່ນການຂະຫຍາຍຄວາມຮັບຜິດຊອບ, ຄວາມມີໄຫວພິບ ແລະ ຫົວຄິດປະດິດສ້າງຂອງນາຍົກລັດຖະມົນຕີທີ່ເປັນຫົວໜ້າລັດຖະບານ ແລະ ລັດຖະມົນຕີທີ່ເປັນຫົວໜ້າກະຊວງຕ່າງໆ ດ້ວຍຫົວໜ້າພະແນກການຕ່າງໆ ຂອງລັດຖະບານ ເຮັດໃຫ້ການບໍລິຫານງານ ຂອງລັດຖະບານໂລ່ງລ່ຽນ, ຮັບປະກັນການປະຕິບັດບັນດາແຜນນະໂຍບາຍ ຂອງລັດໃຫ້ປາກົດເປັນຈິງ. ການດຳເນີນງານຂອງລັດຖະບານກໍຄືບັນດາກະຊວງ, ຄະນະກຳມະການທຽບເທົ່າ ແລະ ຫ້ອງວ່າການຕ່າງໆ ຂອງລັດຖະບານ ຊຶ່ງນອກຈາກຈະຮັບຜິດຊອບຕໍ່ສະພາແຫ່ງຊາດແລ້ວຍັງຮັບຜິດຊອບ ຕໍ່ກັບຄະນະກຳມະການສູນກາງພັກນຳອີກ ໂດຍມີຄະນະກວດກາພັກ - ລັດເປັນອົງການເຮັດວຽກຕິດຕາມການປະຕິບັດແນວທາງແຜນນະໂຍບາຍຂອງພັກ ແລະ ລັດໃຫ້ປະກົດຜົນເປັນຈິງ.

### ສານປະຊາຊົນສູງສຸດ

ສານ ຫລື ອົງການຕຸລາການໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວຈັດຕັ້ງຂຶ້ນໂດຍສະພາແຫ່ງຊາດ, ມີໜ້າທີ່ພິທັກຮັກສາການປະຕິບັດກົດໝາຍແຫ່ງລັດ ແລະ ລົງໂທດບຸກຄົນທີ່ກະທຳຜິດຕໍ່ລະບຽບກົດໝາຍບ້ານເມືອງ.

### 6.2.3.2 ອຳນາດການປົກຄອງຂັ້ນທ້ອງຖິ່ນ

ຄືດັ່ງສະເໜີໃນເບື້ອງຕົ້ນວ່າອຳນາດການປົກຄອງຂັ້ນທ້ອງຖິ່ນຂອງ ສປປ ລາວ ປົກຄອງດ້ວຍທ່ານເຈົ້າແຂວງ, ທ່ານເຈົ້າເມືອງ ແລະ ນາຍບ້ານພ້ອມດ້ວຍຜູ້ຮອງປະກອບເປັນຄະນະນຳໃນແຕ່ລະແຂວງ, ແຕ່ລະເມືອງ ແລະ ແຕ່ລະບ້ານ ຊຶ່ງເປັນຜູ້ປົກຄອງຕາມແຕ່ລະພື້ນທີ່ຂອງຕົນ. ປັດຈຸບັນ ສປປ.ລາວ ປະກອບດ້ວຍ 1 ນະຄອນຫລວງ ແລະ 17 ແຂວງ ຄືດັ່ງນີ້: ນະຄອນຫລວງວຽງຈັນ, ແຂວງຜົ້ງສາລີ, ແຂວງຫລວງນ້ຳທາ, ແຂວງອຸດົມໄຊ, ແຂວງບໍ່ແກ້ວ, ແຂວງຫລວງພະບາງ, ແຂວງຫົວພັນ, ແຂວງໄຊຍະບູລີ, ແຂວງຊຽງຂວາງ, ແຂວງໄຊສົມບູນ, ແຂວງວຽງຈັນ, ແຂວງບໍລິຄຳໄຊ, ແຂວງຄຳມ່ວນ, ແຂວງສະຫວັນນະເຂດ, ແຂວງສາລະວັນ, ແຂວງເຊກອງ, ແຂວງຈຳປາສັກ ແລະ ແຂວງອັດຕະປື. ບັນດາແຂວງຕ່າງໆ ເຫລົ່ານີ້ແມ່ນອົງການບໍລິຫານຂັ້ນທ້ອງຖິ່ນ ທີ່ປະກອບດ້ວຍພະແນກການຕ່າງໆ ເຊັ່ນ: ພະແນກສຶກສາ ແລະ ກິລາ, ພະແນກກະສິກຳ, ພະແນກອຸດສາຫະກຳ, ພະແນກການທ່ອງທ່ຽວ, ພະແນກການຄ້າ ແລະ ອື່ນໆ ຄືກັບຢູ່ຂັ້ນສູນກາງ. ຢູ່ແຕ່ລະແຂວງມີທ່ານເຈົ້າແຂວງເປັນຜູ້ບໍລິຫານສູງສຸດ. ແຂວງໜຶ່ງໆ ແບ່ງອອກເປັນຫລາຍເມືອງ ຊຶ່ງແຕ່ລະເມືອງກໍມີລະບົບການຈັດຕັ້ງເຊັ່ນດຽວກັບແຂວງ ແລະ ມີທ່ານເຈົ້າເມືອງເປັນຜູ້ປົກຄອງ ແລະ ແຕ່ລະເມືອງກໍແບ່ງອອກເປັນຫລາຍບ້ານໂດຍມີນາຍບ້ານເປັນຜູ້ປົກຄອງ.

**ຄຳຖາມ:**

1. ການເມືອງ, ການປົກຄອງ ແລະ ນະໂຍບາຍການປົກຄອງສະໄໝລ້ານຊ້າງຮຸ່ງເຮືອງເປັນຄືແນວໃດ? ຈົ່ງອະທິບາຍ?
2. ການເມືອງ, ການປົກຄອງ ແລະ ນະໂຍບາຍການປົກຄອງສະໄໝລ້ານຊ້າງຕົກເປັນເມືອງຂຶ້ນຂອງສະຫຍາມເປັນຄືແນວໃດ? ຈົ່ງອະທິບາຍ?
3. ການເມືອງ, ການປົກຄອງ ແລະ ນະໂຍບາຍການປົກຄອງລາວສະໄໝຕົກເປັນເມືອງຂຶ້ນຂອງຈັກກະພັດຝຣັ່ງເປັນຄືແນວໃດ? ຈົ່ງອະທິບາຍ?
4. ການເມືອງ, ການປົກຄອງ ແລະ ນະໂຍບາຍການປົກຄອງລາວສະໄໝຕົກເປັນເມືອງຂຶ້ນຂອງຈັກກະພັດອາເມຣິກາເປັນຄືແນວໃດ? ຈົ່ງອະທິບາຍ?
5. ການເມືອງ, ການປົກຄອງ ແລະ ນະໂຍບາຍການປົກຄອງລາວໃນປັດຈຸບັນເປັນຄືແນວໃດ? ຈົ່ງອະທິບາຍ?

ບົດທີ

# 7

## ຄວາມເປັນມາຂອງເສດຖະກິດລາວ

## 7.1 ຄວາມເປັນມາຂອງເສດຖະກິດລາວ

### 7.1.1 ເສດຖະກິດລາວກ່ອນປີ 1975

ກ່ອນປີ 1975 ພື້ນຖານເສດຖະກິດຂອງລາວມີລັກສະນະອ່ອນນ້ອຍທັງ 2 ເຂດຄື: ເຂດລັດຖະບານວຽງຈັນ (ລາຊະອານາຈັກລາວ) ແລະ ເຂດປົດປ່ອຍ (ຝ່າຍປະເທດລາວ) ເຖິງວ່າຈະມີຄວາມແຕກຕ່າງດ້ານສັງຄົມ ແລະ ການຈັດຕັ້ງການປົກຄອງແຕ່ລັກສະນະລວມທາງດ້ານເສດຖະກິດຂອງປະເທດລາວໃນໄລຍະນັ້ນມີລັກສະນະ ດັ່ງນີ້ຄື:

**ກ. ເສດຖະກິດຂະຫຍາຍຕົວຊ້າ, ຂາດຄວາມດູນດ່ຽງ ລະຫວ່າງ ຂະແໜງການ**

**ດ້ານກະສິກຳ**

ການຜະລິດຕົ້ນຕໍ ແມ່ນການປູກຝັງ, ໃນນັ້ນສຳຄັນກວ່າໝູ່ ແມ່ນການປູກເຂົ້າ ແລະ ການປູກພືດອຸດສາຫະກຳບາງຊະນິດ ເວົ້າສະເພາະການປູກເຂົ້າ ແມ່ນໄດ້ກວມເອົາເຖິງ 75% ຂອງເນື້ອທີ່ການປູກຝັງທັງໝົດ ໃນປີ 1971 ແຕ່ບໍ່ສາມາດຕອບສະໜອງກັບຄວາມຕ້ອງການຂອງປະຊາກອນລາວ, ຕ້ອງໄດ້ສັ່ງຊື້ເຂົ້າມາຈາກຕ່າງປະເທດປະມານ 80.000-100.000 ໂຕນ. ການລ້ຽງສັດໃນຊຸມປີກ່ອນ ປີ 1960 ມີລັກສະນະຂະຫຍາຍຕົວ ຄື: ມີສັດຈໍ່ານ່າຍຫລາຍພໍສົມຄວນ ນັບແຕ່ ປີ 1960 ເປັນຕົ້ນມາ, ການລ້ຽງສັດມີລັກສະນະກຸ້ມຕົນເອງພໍໃຊ້ພໍລາວ. ສ່ວນການປູກພືດອຸດສາຫະກຳທີ່ເປັນສິນຄ້າສົ່ງອອກ ແມ່ນໄດ້ຮັບການເອົາໃຈໃສ່ເປັນຕົ້ນ ແມ່ນການປູກກາເຟ, ຢາສູບ....

**ດ້ານຫັດຖະກຳ**

ການຜະລິດໄລຍະນີ້ ແມ່ນເພື່ອກຸ້ມຕົນເອງ, ເຖິງຈະມີການສົ່ງເສີມສີໄມ້ລາຍມື ແລະ ຄວາມສາມາດໃນການຜະລິດຂອງນາຍຊ່າງຫັດຖະກຳກໍຕາມ, ແຕ່ຜົນຜະລິດກໍບໍ່ສາມາດຕອບສະໜອງກັບຄວາມຕ້ອງການຂອງທ້ອງຕະຫລາດ. ຍິ່ງໄປກວ່ານັ້ນ, ບາງຊະນິດຜະລິດຕະພັນຂອງຫັດຖະກຳບໍ່ໄດ້ເອົາໃຈໃສ່ເທົ່າທີ່ຄວນ. ນອກຈາກນັ້ນ, ຍັງມີຜະລິດຕະພັນທາງອຸດສາຫະກຳຕ່າງປະເທດ ເຊັ່ນ: ການຕໍ່າ ແຜ່ນແພ, ການປັ້ນໝໍ້ຫລໍ່ໄຫ ແລະ ອື່ນໆ.

**ດ້ານອຸດສາຫະກຳ**

ຂະແໜງນີ້ຫາກໍກຳເນີດຂຶ້ນ ແລະ ບໍ່ທັນມີບົດບາດສູງຢູ່ໃນສັງຄົມ ອຸດສາຫະກຳທີ່ຖືກສ້າງຂຶ້ນສ່ວນຫລາຍກໍ່ແມ່ນຂະແໜງຂຸດຄົ້ນ ແລະ ຂະແໜງການປຸງແຕ່ງຂະໜາດນ້ອຍ, ຂະໜາດກາງ. ອຸດສາຫະກຳສ່ວນຫລວງຫລາຍ ແມ່ນເຕົ້າໂຮມຢູ່ຕາມຕົວເມືອງໃຫຍ່ ຊຶ່ງເປັນບ່ອນສະດວກໃນການຂົນສົ່ງ ແລະ ບໍລິການ. ດ້ານໜຶ່ງ ການກໍ່ສ້າງໂຮງງານອຸດສາຫະກຳປຸງແຕ່ງ (ເບຍ, ນ້ຳຫວານ, ຢາສູບ, ນ້ຳປາ...) ນັ້ນກໍແມ່ນເພື່ອຫລີກລ່ຽງພາສີຂາເຂົ້າຕໍ່ກັບການຜະລິດອຸດສາຫະກຳ ທີ່ນຳເຂົ້າຈາກຕ່າງປະເທດ. ເຖິງແມ່ນວ່າໂຮງງານອຸດສາຫະກຳໄດ້ຖືກສ້າງຂຶ້ນຢູ່ຫລາຍແຫ່ງ (ນັບທັງໂຮງງານຢູ່ເຂດປົດປ່ອຍ) ກໍຕາມ. ດັ່ງນັ້ນ, ຈຶ່ງຕ້ອງໄດ້ສັ່ງຊື້ສິນຄ້າສຳເລັດຮູບຈາກຕ່າງປະເທດເປັນຈຳນວນຫລວງຫລາຍ.

**ດ້ານການຄົມມະນາຄົມ**

ຂະແໜງນີ້ຂະຫຍາຍຕົວຊ້າ, ບັນດາເສັ້ນທາງທີ່ໄດ້ຮັບການກໍ່ສ້າງຂຶ້ນຕົ້ນຕໍກໍແມ່ນຮັບໃຊ້ສົງຄາມ ແລະ ຂົນສົ່ງວັດຖຸດິບອອກຕ່າງປະເທດກໍຄືຂົນສົ່ງສິນຄ້າຈາກຕ່າງປະເທດເຂົ້າມາ. ເວົ້າລວມແລ້ວ, ຕາໜ່າງການຄົມມະນາຄົມໃນເວລານັ້ນບໍ່ທັນສາມາດຕິດຕໍ່ພົວພັນ ລະຫວ່າງ ທ້ອງຖິ່ນຕ່າງໆໄດ້ຢ່າງທົ່ວເຖິງ.

**ດ້ານການຄ້າ**

ຜະລິດຕະພັນສິນຄ້າທີ່ສົ່ງອອກຕົ້ນຕໍ ແມ່ນຊັບພະຍາກອນທຳມະຊາດ, ເປັນຕົ້ນແມ່ນວັດຖຸດິບຈາກອຸດສາຫະກຳຂຸດຄົ້ນ ເຊັ່ນ: ໄມ້ ແລະ ແຮ່ທາດບາງຊະນິດ ສ່ວນສິນຄ້າຂາເຂົ້າຕົ້ນຕໍ ແມ່ນເຄື່ອງບໍລິໂພກ ແລະ ອຸປະໂພກທີ່ເປັນປະເພດສຳເລັດຮູບ. ເຖິງຈະມີຄວາມຫຍຸ້ງຍາກໃນຫລາຍດ້ານແຕ່ໄລຍະນັ້ນ ປະເທດລາວ ກໍມີແຕ່ພົວພັນແລກປ່ຽນການຄ້າກັບບັນດາປະເທດເພື່ອນບ້ານໃກ້ຄຽງເປັນຕົ້ນຕໍ, ບໍ່ທັນໄດ້ເປີດກວ້າງການພົວພັນກັບສາກົນຢ່າງກວ້າງຂວາງເທື່ອ. ໃນໄລຍະກ່ອນ ປີ ຄສ 1954, ປະເທດລາວ ໄດ້ດູນການຄ້າ ແຕ່ວ່ານັບຕັ້ງແຕ່ 1960 ເປັນຕົ້ນມາປະເທດລາວໄດ້ຂາດດູນການຄ້າ ຊຶ່ງໝາຍເຖິງມູນຄ່າສິນຄ້າຂາອອກໜ້ອຍກວ່າສິນຄ້າຂາເຂົ້າຫລາຍເທົ່າຕົວ.

**ກິດຈະການທາງດ້ານເສດຖະກິດ**

ກິດຈະການທາງດ້ານເສດຖະກິດສ່ວນຫລາຍເປັນຂອງນາຍທຶນຕ່າງປະເທດ ແລະ ຂຶ້ນກັບຕ່າງປະເທດ, ກ່ອນປີ 1975 ທຸກໆ ຂະແໜງການເສດຖະກິດທີ່ສຳຄັນຂອງລາວ (ສະເພາະເຂດລັດຖະບານວຽງຈັນ) ແມ່ນຂຶ້ນກັບນາຍທຶນຕ່າງປະເທດ ເປັນຕົ້ນແມ່ນບັນດາຂະແໜງອຸດສາຫະກຳ, ການຄົມມະນາ ຄົມ, ການຄ້າ, ທະນາຄານ, ການປູກພືດອຸດສາຫະກຳ.

ສັງລວມແລ້ວ, ສະພາບເສດຖະກິດຂອງປະເທດລາວກ່ອນປີ ຄສ 1975 ແມ່ນຍັງອ່ອນນ້ອຍ, ບໍ່ສາມາດກຸ້ມຕົນເອງໄດ້, ລະດັບການຂະຫຍາຍຕົວບໍ່ສະໝ່ຳສະເໝີ.

### 7.1.2 ເສດຖະກິດລາວນັບແຕ່ປີ 1975 ເຖິງປັດຈຸບັນ

ນັບແຕ່ສະຖາປານາເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຕົ້ນມາ (2/12/1975), ການກໍ່ສ້າງ ແລະ ຂະຫຍາຍເສດຖະກິດໄດ້ກ້າວເຂົ້າສູ່ໄລຍະແຫ່ງການປ່ຽນແປງໃໝ່ຢ່າງຮອບດ້ານໃນການພັດທະນາປະເທດຊາດໃຫ້ຈະເລີນເຂັ້ມແຂງ. ທຸກຂະແໜງເສດຖະກິດໄດ້ຮັບການດັດສ້າງ ແລະ ກໍ່ສ້າງຢ່າງຕັ້ງໜ້າ ທັງພັກ-ລັດຖະບານຂອງລາວ ແລະ ອຳນາດການປົກຄອງທຸກຂັ້ນໄດ້ສຸມໃສ່ ການວາງແນວທາງນະໂຍບາຍຂະຫຍາຍຕາໜ່າງ ເສດຖະກິດຢ່າງຮອບດ້ານ.

ບັນຫາອັນຮີບດ່ວນ ແມ່ນສຸມໃສ່ ການຜະລິດກະສິກຳ ເພື່ອແກ້ໄຂສະພາບການຂາດແຄນສະບຽງອາຫານ ແລະ ຄວາມຫຍຸ້ງຍາກດ້ານຊີວິດການເປັນຢູ່ຂອງປະຊາກອນໃນທົ່ວປະເທດ, ປຸກລະດົມປະຊາຊົນເຂົ້າຮ່ວມ ແລະ ດຳເນີນການຜະລິດຢ່າງຕັ້ງໜ້າເປັນຕົ້ນ ແມ່ນການກໍ່ສ້າງຊົນລະປະທານ, ຂະຫຍາຍເນື້ອທີ່ການຜະລິດ (ສັບຊ່າວນາໃໝ່, ຟື້ນຟູນາເຮື້ອ), ຈັດຕັ້ງສະຫະກອນກະເສດ, ຈັດຕັ້ງນິຄົມກະເສດ, ນຳໃຊ້ອຸປະກອນ ແລະ ເຄື່ອງມືທັນສະໄໝ... ການປະຕິບັດແຜນການດັ່ງກ່າວ ນີ້ໄດ້ເຮັດໃຫ້ການຜະລິດກະສິກຳປະສົບຜົນສຳເລັດສູງ ພໍສົມຄວນ ຄື: ສາມາດຜະລິດເຂົ້າກຸ້ມກິນ, ກຸ້ມຕົນເອງໃນຂັ້ນພື້ນຖານ, ຜະລິດຕະພັນຈາກການປູກຝັງ ແລະ ລ້ຽງສັດຫລາຍຊະນິດໄດ້ສົ່ງເປັນສິນຄ້າສົ່ງອອກ.

ຂະແໜງອຸດສາຫະກຳກໍໄດ້ເອົາໃຈໃສ່ໃນດ້ານການດັດສ້າງ ແລະ ກໍ່ສ້າງຂຶ້ນໃໝ່ ເຊັ່ນ: ໂອນເອົາບັນດາກິດຈະການຂອງນາຍທຶນມາເປັນຂອງລັດ ແລະ ກໍ່ສ້າງ ໂຮງງານອຸດສາຫະກຳເບົາຂຶ້ນຫລາຍແຫ່ງເປັນຕົ້ນ ຄື: ໂຮງງານສ້ອມແປງກົນຈັກ, ຜະລິດອຸປະກອນກໍ່ສ້າງ, ຜະລິດເຄື່ອງໃຊ້ສອຍ, ປຸງແຕ່ງກະສິກຳ, ອຸດສາຫະກຳພະລັງງານ, ຂຸດຄົ້ນບໍ່ແຮ່...

ນອກຈາກນັ້ນ, ບັນດາຂະແໜງການຄົມມະນາຄົມ-ຂົນສົ່ງກໍ່ໄດ້ຮັບການສ້ອມແປງ ແລະ ກໍ່ສ້າງຂຶ້ນຕື່ມຢ່າງຫລວງຫລາຍ ອັນໄດ້ສ້າງຄວາມສະດວກໃຫ້ແກ່ສາຍພົວພັນ ລະຫວ່າງ ການຜະລິດກັບ ການຊົມໃຊ້ ແລະ ການພົວພັນລະຫວ່າງທ້ອງຖິ່ນກັບທ້ອງຖິ່ນດີຂຶ້ນ.

ຈຸດເດັ່ນຂອງເສດຖະກິດລາວໃນໄລຍະມໍ່ໆມານີ້ ແມ່ນການເປີດກວ້າງຕາບ່າງເສດຖະກິດ ຢ່າງຮອບດ້ານ ເຊັ່ນ: ບັນດາກິດຈະການທາງດ້ານເສດຖະກິດຂອງລັດໄດ້ຮັບການສົ່ງເສີມ ແລະ ຂະຫຍາຍຕົວຢ່າງເປັນລະບົບ. ພ້ອມກັນນັ້ນ, ກໍອະນຸຍາດໃຫ້ເອກະຊົນທີ່ມີທຶນຮອນ ແລະ ມີຄວາມ ສາມາດຈັດຕັ້ງ ການຜະລິດຂອງຕົນຂຶ້ນ. ສິ່ງເຫລົ່ານັ້ນ ໄດ້ເຮັດໃຫ້ເສດຖະກິດຂອງປະເທດລາວມີທ່າ ຂະຫຍາຍຕົວກ້າວຂຶ້ນ ນອກຈາກໄດ້ເສີມຂະຫຍາຍການຮ່ວມມືກັບບັນດາປະເທດໃກ້ຄຽງແລ້ວ, ລັດຖະບານລາວ ຍັງໄດ້ເປີດກວ້າງຮ່ວມມືກັບສາກົນໃນຫລາຍລະດັບ ອັນໄດ້ເຮັດໃຫ້ການກໍ່ສ້າງ ເສດຖະກິດ ມີຈັງຫວະໄວຂຶ້ນ.

ສັງລວມແລ້ວ, ນັບຕັ້ງແຕ່ປີ 1975 ເປັນຕົ້ນມາເສດຖະກິດຂອງປະເທດລາວເຮົາໄດ້ມີ ບາດກ້າວຂະຫຍາຍຕົວຫລາຍ,ສາມາດມີຜົນຜະລິດຕອບສະໜອງໄດ້ສ່ວນໃດໜຶ່ງກັບຄວາມຕ້ອງການ ຂອງພາຍໃນປະເທດ ແລະ ມີຜະລິດຕະພັນສົ່ງອອກ ນັບມື້ຫລາຍຂຶ້ນ.

## 7.2 ລັກສະນະເສດຖະກິດລາວ

ສປປ ລາວ ເປັນປະເທດໜຶ່ງ ຊຶ່ງມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ແລະ ມີທີ່ຕັ້ງທີ່ມີຜົນສຳຄັນຕໍ່ສະພາບທາງດ້ານເສດຖະກິດ ແລະ ການເມືອງຂອງປະເທດເພາະຕັ້ງຢູ່ ໃນເສັ້ນທາງຄົມມະນາຄົມຕິດຕໍ່ກັບປະເທດຕ່າງໆ ໄດ້ສະດວກ. ແຕ່ເນື່ອງຈາກວ່າບໍ່ທັນພຽບພ້ອມໃນ ຫລາຍປັດໄຈຂອງການພັດທະນາ ເຊັ່ນ: ຂາດພະນັກງານເຕັກນິກ, ນັກວິຊາການ, ນັກບໍລິຫານງານ ແລະ ກຳມະກອນຜູ້ທີ່ມີຄວາມສາມາດ ແລະ ຊຳນິຊຳນານ, ຂາດທຶນຮອນ ແລະ ປັດໄຈບວກດ້ານອື່ນໆ ຈຶ່ງພາໃຫ້ເສດຖະ ກິດຂະຫຍາຍຕົວຊ້າ ແລະ ບໍ່ດຸ່ນດ່ຽງກັນລະຫວ່າງຂະແໜ່ງການຕ່າງໆ. ພື້ນຖານ ເສດຖະກິດແຫ່ງຊາດ ແມ່ນການກະສິກຳ ຊຶ່ງຍັງມີລັກສະນະອ່ອນນ້ອຍ ແລະ ຍັງຂຶ້ນກັບທຳມະຊາດຢູ່. ການຜະລິດກະສິກຳຕົ້ນຕໍ ແມ່ນການປູກເຂົ້າ, ສ່ວນການລ້ຽງສັດໂດຍສະເພາະ ແມ່ນສັດໃຫ່ຍນັ້ນ ຈຸດໜັກຈະລ້ຽງໄວ້ເພື່ອໃຊ້ງານ ແລະ ຖ້າຈະໃຊ້ເປັນອາຫານ ຫລື ເປັນສິນຄ້າກໍໃນຄາວຈຳເປັນເທົ່ານັ້ນ. ການຫັດຖະກຳຍັງ ແມ່ນແບບກຸ້ມຕົນເອງ ຄືຜະລິດ ເພື່ອການໃຊ້ສອຍພາຍໃນເປັນຕົ້ນຕໍ. ການ ອຸດສາຫະກຳມີໜ້ອຍ ແລະ ບໍ່ທັນມີບົດບາດພໍປານໃດໃນເສດຖະກິດແຫ່ງຊາດ. ສິນຄ້າຂາອອກ ສ່ວນຫລາຍ ແມ່ນວັດຖຸດິບຕ່າງໆ.

ແຕ່ວ່າ, ຈາກການປະຕິບັດແນວທາງ "ຈິນຕະນາການໃໝ່" ຢູ່ໃນທຸກຂົງເຂດຂອງຊີວິດສັງຄົມ ແລະ ເສດຖະກິດ ນັບແຕ່ປີ 1986 ເປັນຕົ້ນມານັ້ນໄດ້ເຮັດໃຫ້ສະພາບຄວາມອຶດອາດ ແລະ ຊັກຊ້າ ຂອງ ເສດຖະກິດຫລຸດຜ່ອນລົງສະພາບຄວາມຫຍຸ້ງຍາກຫລາຍໆ ປະການກໍໄດ້ຮັບການແກ້ໄຂ. ການຜະລິດ ມີຄວາມເປັນປົກກະຕິ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງເປັນທີ່ໜ້າພໍໃຈ ຊຶ່ງເຫັນໄດ້ຈາກການລົງທຶນ ຂອງລັດ ແລະ ຂອງຕ່າງປະເທດໃນຂະແໜງການຕ່າງໆ ນັບມື້ນັບເພີ່ມຂຶ້ນ, ບັນດາຂະແໜງການ ເສດຖະກິດໃໝ່ໆ ໄດ້ເກີດຂຶ້ນ, ບົດບາດຂອງຂະແໜງກະສິກຳໃນເສດຖະກິດແຫ່ງຊາດໄດ້ຄ່ອຍໆ ຫລຸດລົງໃນຂະນະທີ່ຂະແໜງການອື່ນໆ ເຊັ່ນ: ຂະແໜງຫັດຖະກຳ, ອຸດສາຫະກຳ ໂດຍສະເພາະແລ້ວ ແມ່ນດ້ານການຄ້າ ແລະ ການບໍລິການພວມມີບາດກ້າວສູງຂຶ້ນ. ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍບໍ່ຫລຸດ 7% ຕໍ່ປີ. ລາຍໄດ້ຂອງພົນລະເມືອງຕໍ່ຄົນຕໍ່ປີກໍເພີ່ມຂຶ້ນສູງກວ່າແຕ່ກ່ອນ ແລະ ເປັນ ທີ່ໜ້າພໍໃຈ. ຈາກບ່ອນນີ້ ຈຶ່ງພາໃຫ້ຊີວິດການເປັນຢູ່ຂອງພົນລະເມືອງລາວໄດ້ຮັບການປັບປຸງ ໃຫ້ດີຂຶ້ນເປັນກ້າວໆມາ.

## 7.3 ໂຄງປະກອບເສດຖະກິດລາວ

ຈາກການປະຕິບັດແນວທາງຈິນຕະນາການໃໝ່ ຫລື ເອີ້ນຢ່າງໜຶ່ງວ່າ "ກົນໄກເສດຖະກິດໃໝ່" ນັ້ນໄດ້ເຮັດໃຫ້ເສດຖະກິດຂອງລາວ ໄດ້ຫັນປ່ຽນຈາກກົນໄກເດີມດ້ວຍການຜ່ອນຄາຍການຄວບຄຸມຈາກສ່ວນກາງລົງ, ເພີ່ມໂອກາດແກ່ພາກເອກະຊົນ ໃນການປະກອບທຸລະກິດເພີ່ມປະສິດທິພາບແກ່ລັດວິສາຫະກິດ ແລະ ສົ່ງເສີມການລົງທຶນຈາກຕ່າງປະເທດການປະຕິບັດແນວທາງດັ່ງກ່າວ ໂດຍສະເພາະ ການເນັ້ນໃສ່ການພັດທະນາກົນໄກຕະຫລາດຢູ່ພາຍໃນປະເທດໃຫ້ຫລາຍຂຶ້ນ ໂດຍການຫລຸດກົດເກນຕ່າງໆ ຫລື ລະບຽບຕ່າງໆໃຫ້ໜ້ອຍລົງນັ້ນ ໄດ້ສົ່ງຜົນໃຫ້ໂຄງປະກອບເສດຖະກິດມີການປ່ຽນແປງໄປຈາກເດີມຄືຂະແໜງກະສິກຳ ຊຶ່ງເຄີຍເປັນຜູ້ກວມອັດຕາສ່ວນສູງກວ່າໝູ່ນັ້ນໄດ້ຫລຸດບົດບາດລົງໄປເລື້ອຍໆ.

ພ້ອມດຽວກັນນີ້, ຍອດຜະລິດຕະພັນພາຍໃນ (GDP) ກໍໄດ້ເພີ່ມຂຶ້ນເລື້ອຍໆ ແລະ ເພີ່ມຂຶ້ນໃນລະດັບທີ່ໄວພໍສົມຄວນ ໂດຍສະເພາະແລ້ວ ນັບແຕ່ມີການທຸ້ມເທການລົງທຶນເຂົ້າໃນພາກອຸດສາຫະກຳ ຊຶ່ງສ່ວນໃຫ່ຍຢູ່ໃນຂົງເຂດເຂື່ອນໄຟຟ້ານ້ຳຕົກ ແລະ ຂະແໜງບໍ່ແຮ່. ຖ້າທຽບກັບບັນດາປະເທດໃນອາຊຽນດ້ວຍກັນ ສປປ ລາວ ກໍນັບວ່າເປັນປະເທດທີ່ມີການປ່ຽນແປງດ້ານເສດຖະກິດໄປໃນທາງທີ່ດີຂຶ້ນຫລາຍ ແລະ ໄດ້ຖືກຈັດເປັນໜຶ່ງໃນປະເທດທີ່ມີອັດຕາການຈະເລີນເຕີບໂຕທາງດ້ານເສດຖະກິດໄວທີ່ສຸດໃນພາກພື້ນອາຊີຕາເວັນອອກສຽງໃຕ້ໃນປັດຈຸບັນ. ຂະນະດຽວກັນ, ລະດັບການຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດ ເມື່ອທຽບໃສ່ໂລກ ແລະ ພາກພື້ນອາຊຽນແລ້ວກໍເຫັນວ່າ ມີລຳດັບທີ່ກ້າວໜ້າຢ່າງໜ້າພໍໃຈ.

### 7.3.1 ການກະສິກຳ ແລະ ການປະມົງ

#### 7.3.1.1 ການປູກຝັງ

ການປູກຝັງມີຢູ່ 3 ຂະແໜງການດ້ວຍກັນ ຄື: ການປູກພືດທັນຍາຫານ, ການປູກພືດອຸດສາຫະກຳ ແລະ ການປູກພືດໃຫ້ໝາກ. ການປູກພືດທັນຍາຫານຕົ້ນຕໍໄດ້ແກ່ການປູກເຂົ້າ ຊຶ່ງມີທັງເຂົ້ານາ ແລະ ເຂົ້າໄຮ່. ສຳລັບເຂົ້ານາ (ທັງນາປີ ແລະ ນາແຊງ) ແມ່ນມີການປູກຫລາຍຢູ່ຕາມເຂດທົ່ງພຽງຕ່າງໆ, ສ່ວນເຂົ້າໄຮ່ນັ້ນມີການປູກຢູ່ຕາມພູ ແລະ ພູພຽງເປັນຈຸດໜັກ. ຈາກການທຸ້ມເທໃສ່ຂະແໜງການນີ້ ນັບແຕ່ປີ 2000 ເປັນຕົ້ນມາ ສປປ ລາວມີເຂົ້າກຸ້ມກິນພຽງພໍ ແລະ ຍັງມີສ່ວນທີ່ເຫລືອເພື່ອສົ່ງອອກຂາຍອີກ. ນອກຈາກເຂົ້າ ແລ້ວພືດທາດແປ້ງອື່ນໆ ທີ່ປູກກໍມີມັນຕົ້ນ, ເຜືອກ, ມັນດ້າງ, ສາລີ…ຊຶ່ງປູກໄວ້ເພື່ອເປັນອາຫານເພີ່ມແລະເປັນອາຫານສັດ. ສຳລັບຜັກບາງຊະນິດມີການປູກຫລາຍຈົນສາມາດສົ່ງເປັນສິນຄ້າອອກໄດ້ ເຊັ່ນ: ຜັກບົ່ວ, ຜັກທຽມ, ໝາກສະເອົ້, ຜັກກະລຳປີ …ເປັນຕົ້ນ.

ສຳລັບພືດອຸດສາຫະກຳທີ່ປູກກັນທົ່ວໄປ ໃນ ສປປ. ລາວກໍມີຝ້າຍ, ປ່ານ, ຢາສູບ, ມອນ, ຕົ້ນຕານ, ອ້ອຍ, ຖົ່ວດິນ, ກາເຟ, ຢາງ, ຕົ້ນໄມ້ປ່ອຍຄັ່ງ ແລະ ອື່ນໆອີກ. ສ່ວນພືດໃຫ້ໝາກນັ້ນ, ຢູ່ລາວມີທັງຊະນິດຂອງເຂດຮ້ອນ ແລະ ຂອງເຂດອົບອຸ່ນຊຶ່ງທົ່ວໄປ ແມ່ນປູກໄວ້ເພື່ອໃຊ້ບໍລິໂພກປະຈຳຄອບຄົວເປັນຕົ້ນຕໍ ເຊັ່ນ: ໝາກມ່ວງ, ໝາກພ້າວ, ໝາກມີ້, ໝາກລຳໄຍ…. ເປັນຕົ້ນ ອັນທີ່ປູກເປັນສິນຄ້າກໍມີແຕ່ບາງຊະນິດ ເຊັ່ນ: ໝາກກ້ຽງ, ໝາກຈອງ, ຖົ່ວລຽນ… ດັ່ງນີ້ເປັນຕົ້ນ

#### 7.3.1.2 ການລ້ຽງສັດ

ການລ້ຽງສັດຢູ່ລາວມີທັງການລ້ຽງສັດໃຫ່ຍ, ສັດນ້ອຍ ແລະ ສັດປີກ. ສັດໃຫ່ຍທີ່ລ້ຽງທົ່ວໄປໄດ້ແກ່ ງົວ ແລະ ຄວາຍຊຶ່ງມີຫລາຍຢູ່ແຂວງຕ່າງໆ ທີ່ເປັນເຂດທົ່ງພຽງ ແລະ ພູພຽງໂດຍລ້ຽງກັນແບບປະປ່ອຍ ຕາມທຳມະຊາດ ເປັນສ່ວນຫລາຍຢູ່ໃນນັ້ນເດັ່ນກວ່າໝູ່ ແມ່ນແຂວງສະຫວັນນະເຂດ,

ຈຳປາສັກ, ວຽງຈັນ ແລະ ສາລະວັນ. ນອກຈາກນັ້ນກໍມີມ້າ ຊຶ່ງນິຍົມກັນລ້ຽງຫລາຍຢູ່ບັນດາແຂວງພາກເໜືອ ແລະ ຢູ່ພູພຽງ ບໍລະເວນ. ພິເສດຢູ່ແຂວງໄຊຍະບູລີ, ຫລວງພະບາງ, ອັດຕະປື ຍັງມີການລ້ຽງຊ້າງອີກ.

ສຳລັບສັດນ້ອຍນິຍົມລ້ຽງຢູ່ທົ່ວໄປນັ້ນໄດ້ແກ່ໝູ ຊຶ່ງນຳໜ້າໝູ່ ແມ່ນແຂວງສະຫວັນນະເຂດ, ສາລະວັນ, ຫົວພັນ ແລະ ຫລວງພະບາງ. ສ່ວນແກະ ແລະ ແບ້ນັ້ນ ມີການລ້ຽງຫລາຍຢູ່ແຂວງຫລວງພະບາງ, ອຸດົມໄຊ ແລະ ຫົວພັນ. ນອກຈາກນີ້ແລ້ວຊາວລາວເກືອບທຸກຄົວເຮືອນຍັງນິຍົມກັນລ້ຽງສັດປີກຕ່າງໆ ອີກ ເຊັ່ນ: ໄກ່ລາດ, ເປັດເທດ, ໄກ່ງວງ ແລະ ຫ່ານ ຊຶ່ງທົ່ວໄປ ແມ່ນລ້ຽງແບບປະປ່ອຍຕາມທຳມະຊາດຢູ່. ແຕ່ປະຈຸບັນນີ້, ຢູ່ບາງບ່ອນກໍ່ມີການລ້ຽງໄກ່ພັນຊີ້ນຫລືໄກ່ພັນໄຂ່, ເປັດພັນໄຂ່ ແລະ ນົກກະທາໂດຍສະເພາະ ແມ່ນຢູ່ຕາມຕົວເມືອງໃຫ່ຍຕ່າງໆ.

#### 7.3.1.3 ການປະມົງ

ການປະມົງຢູ່ໃນສປປລາວເປັນການຫາປານ້ຳຈືດຊຶ່ງເປັນການຫາປາເພື່ອການກິນຢູ່ສຳລັບຄອບຄົວເປັນຕົ້ນຕໍ, ຈະຫາເພື່ອການຄ້າຂາຍນັ້ນກໍມີພຽງແຕ່ຢູ່ບາງເຂດເທົ່ານັ້ນ ເຊັ່ນ: ຢູ່ອ່າງໜ້າເຂື່ອນນ້ຳງື່ມ, ຢູ່ຕາມແມ່ນ້ຳຂອງ ແລະ ບາງສາຂາຂອງມັນ. ວິທີການຫາປາຍັງແມ່ນແບບພື້ນເມືອງຢູ່. ໃນປັດຈຸບັນ, ຄຽງຄູ່ກັບການຫາປາຕາມທຳມະຊາດນີ້ໃນຫລາຍທ້ອງຖິ່ນກໍມີການຂຸດໜອງລ້ຽງປາ ແຕ່ບໍ່ທັນຂະຫຍາຍຕົວພໍປານໃດ, ມີແຕ່ຕອບສະໜອງການກິນຢູ່ພາຍໃນຄອບຄົວສ່ວນໃດສ່ວນໜຶ່ງເທົ່ານັ້ນ.

### 7.3.2 ການຫັດຖະກຳ

ການຫັດຖະກຳຢູ່ ສປປ ລາວ ມີຫລາຍຂະແໜງການ ເຊັ່ນ: ການຕ່ຳຫູກ, ການຈັກສານ, ການຖັກແສ່ວ, ການປັ້ນຫລໍ່ການແກະສະຫລັກການລະບາຍສີ, ການຊ່າງເຄື່ອງເຮືອນ, ການຕີເຫລັກ, ການຕີເງິນ ແລະ ຄຳອື່ນໆ ຊຶ່ງພວມມີບົດບາດສຳຄັນຕໍ່ເສດຖະກິດແຫ່ງຊາດ. ເຖິງຢ່າງໃດກໍດີ, ການຫັດຖະກຳຂະແໜງຕ່າງໆຢູ່ ສປປ ລາວ ທົ່ວໄປຍັງຜະລິດໃນລະດັບຄອບຄົວ ແລະ ສ່ວນຫລາຍກໍຂະຫຍາຍຢູ່ເຂດຊົນນະບົດ, ໃນນັ້ນຂະຫຍາຍຫລາຍກວ່າໝູ່ ແມ່ນການຕ່ຳຫູກ, ມີຜະລິດຕະພັນຂອງຫລາຍທ້ອງຖິ່ນ ທີ່ມີຊື່ສຽງເປັນທີ່ຮູ້ຈັກກັນດີ ເຊັ່ນ: ສິ້ນໄໝວຽງຈັນ, ຊຳເໜືອ ແລະ ຫລວງພະບາງ, ສິ້ນໝີ່ປາກເຊ, ສະຫວັນນະເຂດ,ແລະ ທ່າແຂກ, ຜ້າກະໂດແຂວງອັດຕະປື... ເປັນຕົ້ນ. ບາງທ້ອງຖິ່ນກໍມີຊື່ສຽງໃນດ້ານການປັ້ນໝໍ້ ເຊັ່ນ: ບ້ານພະຂາວ (ນະຄອນຫລວງວຽງຈັນ) ແລະ ບ້ານສຸວັນນະຄີລີ (ແຂວງຈຳປາສັກ) ຂະນະທີ່ເມືອງໂພນໂຮງ, ທຸລະຄົມ(ວຽງຈັນ) ແລະ ຫລາຍທ້ອງຖິ່ນຂອງແຂວງຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ ພັດມີຊື່ສຽງໃນດ້ານການຈັກສານ. ພ້ອມດຽວກັນນີ້, ຫລາຍທ້ອງຖິ່ນຂອງແຂວງຫລວງພະບາງ, ຈຳປາສັກ, ຫົວພັນ ແລະ ຊຽງຂວາງພັດມີຊື່ສຽງໃນດ້ານການຕີເຫລັກ ພິເສດແຂວງຫລວງພະບາງຍັງມີຊື່ສຽງໃນດ້ານການຕີເງິນ-ຄຳ, ແກະສະຫລັກ ແລະ ຄົວດລາຍລະບາຍສີຕ່າງໆອີກດ້ວຍ.



ກ. ການຕ່ຳຫູກ ຂ. ການແກະສະຫລັກ ຄ. ການປັ້ນຫມໍ້



ງ. ການຖັກແສ່ວ ດ. ການຊ່າງເຄື່ອງເງິນ ຕ. ການຈັກສານ ຖ. ການຊ່າງເຄື່ອງເຮືອນ

ຮູບ 31: ຫັດຖະກຳ ຂະແໜງຕ່າງໆ ຢູ່ປະເທດລາວ

### 7.3.3 ການອຸດສະຫະກຳ

ຖ້າທຽບກັບຂະແໜງການອື່ນໆແລ້ວ ການອຸດສາຫະກຳຂອງ ສປປ.ລາວ ນັບວ່າຍັງອ່ອນນ້ອຍຢູ່ ຊຶ່ງຈະເຫັນໄດ້ຈາກອັດຕາສ່ວນຂອງຜູ້ປະກອບອາຊີບຢູ່ໃນຂະແໜງການນີ້ມີໜ້ອຍຫລາຍ. ແຕ່ວ່າມາໃນປັດຈຸບັນ, ຂະແໜງການດັ່ງກ່າວພວມມີບົດບາດສຳຄັນຫລາຍຂຶ້ນເລື້ອຍໆ ໃນເສດຖະກິດແຫ່ງຊາດ ເຖິງ 27% ໃນປີ 2011 ແລະ 31%ໃນປີ 2012 ຂະນະທີ່ພາກກະສິກຳກວມອັດຕາສ່ວນ 29% ແລະ 28%. ອຸດສາຫະກຳຂອງສປປ.ລາວສ່ວນຫລາຍໄດ້ແກ່ອຸດສາຫະກຳເບົາຫລືອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ຂະໜາດກາງ ຊຶ່ງໂດຍສ່ວນໃຫຍ່ເຕົ້າໂຮມຢູ່ນະຄອນຫລວງວຽງຈັນ ແລະ ຢູ່ບາງຕົວເມືອງໃຫ່ຍອື່ນໆ. ສ່ວນອຸດສາຫະກຳໜັກນັ້ນຕົ້ນຕໍ ແມ່ນອຸດສາຫະກຳຂຸດຄົ້ນບໍ່ແຮ່ ແລະ ອຸດສາຫະກຳພະລັງງານ ຊຶ່ງຢູ່ຈຸດໜັກ ແມ່ນອຸດສາຫະກຳໄຟຟ້ານ້ຳຕົກ. ອຸດສາຫະກຳເບົາຂອງລາວໃນປັດຈຸບັນປະກອບດ້ວຍຂະແໜງການຕ່າງໆ ຄື:

- ອຸດສາຫະກຳປະກອບ ແລະ ສ້ອມແປງກົນຈັກ: ມີໂຮງງານຫລາຍແຫ່ງໃນນະຄອນຫລວງວຽງຈັນແລະ ຢູ່ບາງຕົວເມືອງໃຫ່ຍອື່ນໆ.
- ອຸດສະຫະກຳຜະລິດວັດສະດຸກໍ່ສ້າງ: ມີໂຮງງານດິນຈີ່, ໂຮງງານດິນກະເບື້ອງ, ໂຮງງານເບຕົງສຳເລັດຮູບ, ໂຮງງານສັງກະສີ, ໂຮງງານເຫລັກເສັ້ນ, ໂຮງງານເຫລັກຕັບປູ-ລວດໜາມ ແລະ ໂຮງງານຊີມັງ ຊຶ່ງສ່ວນໃຫ່ຍເຕົ້າໂຮມຢູ່ນະຄອນຫລວງວຽງຈັນ.
- ອຸດສາຫະກຳເຄມີ: ມີໂຮງງານສະບູຝຸ່ນ, ໂຮງງານຢາປົວພະຍາດ, ໂຮງງານອອກຊີເຢັນ-ອາເຊເຕແລ່ນຢູ່ນະຄອນຫລວງວຽງຈັນ.
- ອຸດສາຫະກຳຕຳແຜ່ນ ແລະ ຕັດຫຍິບ : ມີໂຮງງານຕ່ຳແຜ່ນ,ໂຮງງານຍ້ອມຝ້າຍລາວ,ໂຮງງານຕັດຫຍິບຕ່າງໆ ...ຢູ່ນະຄອນຫລວງວຽງຈັນ ແລະ ຢູ່ບາງແຂວງ.
- ອຸດສາຫະກຳໄມ້: ມີໂຮງງານແປຮູບໄມ້ຊະນິດຕ່າງໆຄື: ໂຮງຊອຍ, ໂຮງເລື່ອຍ, ໂຮງງານໄມ້ອັດ, ໂຮງງານເຟີນີເຈີ...ຊຶ່ງຕັ້ງຢູ່ນະຄອນຫລວງວຽງຈັນ ແລະ ຢູ່ເກືອບທຸກແຂວງ.
- ອຸດສາຫະກຳປຸງແຕ່ງເຄື່ອງອຸປະໂພກ-ບໍລິໂພກ: ມີໂຮງງານເຂົ້າຈີ່-ເຂົ້າໜົມ, ໂຮງນ້ຳກ້ອນ, ໂຮງງານນ້ຳປາ, ໂຮງງານນ້ຳດື່ມ, ໂຮງງານທົ່ວອາຫານສັດ, ໂຮງງານເບຍ, ໂຮງງານນ້ຳຫວານ, ໂຮງງານຢາສູບ, ໂຮງງານຜະຫລິດປຶ້ມຂຽນ... ຊຶ່ງຕັ້ງຢູ່ນະຄອນຫລວງວຽງຈັນ ແລະ ຢູ່ແຂວງຕ່າງໆ.



ຮູບທີ 32: ໂຮງງານຊີມັງວັງວຽງ ແຂວງວຽງຈັນ

ສຳລັບອຸດສາຫະກຳໜັກນັ້ນ ເຖິງວ່າມີພຽງບາງຂະແໜງແຕ່ກໍມີບົດບາດສູງຕໍ່ເສດຖະກິດແຫ່ງຊາດ. ເວົ້າສະເພາະການຂຸດຄົ້ນແຮ່ທາດຕ່າງໆ ອັນມີ ເກືອ, ກົ່ວ, ແກ້ວ, ຫີນກາວ, ຖ່ານຫີນ, ຫີນປູນ, ຄຳ, ທອງແດງ...ນັ້ນເຫັນວ່າ ນັບມື້ນັບມີຄວາມສຳຄັນ ຄືລາຍຮັບຈາກຂະແໜງນີ້ຈາກທີ່ເຄີຍຢູ່ໃນອັນດັບທີ່ 8 ໃນປີ 2002 ໄດ້ກ້າວມາຢູ່ໃນອັນດັບທີ່ 1 ນັບແຕ່ປີ 2007 ເປັນຕົ້ນມາ ແລະ ປີ 2011 ຜ່ານມານີ້ ລາຍໄດ້ຈາກແຮ່ທາດຕ່າງໆ ມີເຖິງ 1,237 ລ້ານໂດລາສະຫະລັດ.

ໃນບັນດາແຮ່ທາດທີ່ຖືກຂຸດຄົ້ນມານັ້ນ ແຮ່ທາດທີ່ສຳຄັນກວ່າໝູ່ໄດ້ແກ່ແຮ່ຄຳ ແລະ ທອງ ໃນປີ ຄສ 2010 ທີ່ຜ່ານມາ ສປປ ລາວ ສາມາດສົ່ງຄຳອອກສູ່ຕະຫລາດໂລກ 5,105.8 ກິໂລ ແລະ ສົ່ງທອງອອກໄດ້ 366,845 ໂຕນ . ເວົ້າສະເພາະແຕ່ການຂຸດຄົ້ນແຮ່ຄຳ ແລະ ທອງຢູ່ເມືອງວິລະບູລີແຫ່ງດຽວເທົ່ານັ້ນໃນປີຄສ2011ສປປລາວກໍສາມາດສົ່ງຄຳອອກໄດ້ຫລາຍເຖິງ2,000ກິໂລກຼາມແລະ ສົ່ງທອງອອກໄດ້ 80,000 ໂຕນ. ຜະລິດຕະພັນແຮ່ທາດທີ່ກ່າວມານີ້ ມີສ່ວນເຮັດໃຫ້ຍອດຜະລິດຕະພັນພາຍໃນເຕີບໂຕຂຶ້ນ ແລະ ເປັນປັດໄຈເຮັດໃຫ້ປະເທດສາມາດຫລຸດໜີ້ສິນຕ່າງປະເທດລົງໄດ້.



ຮູບທີ 33: ການຜະລິດຄຳທີ່ເມືອງວິລະບູລີ ແຂວງສະຫວັນນະເຂດ

ສ່ວນອຸດສາຫະກຳໄຟຟ້ານ້ຳຕົກມາເຖິງປັດຈຸບັນນີ້ກຳລັງຜະລິດເພີ່ມຂຶ້ນ ຄື ໃນປີ ຄສ 1975 ມີກຳລັງການຜະລິດພຽງແຕ່ 35 ກິໂລວັດ ແຕ່ມາເຖິງ ປີ 2011 ກຳລັງຜະລິດເພີ່ມຂຶ້ນເປັນ 2,419 ກິໂລວັດ ແລະ ສາມາດຜະລິດກະແສໄຟຟ້າໄດ້ທັງໝົດ 3,539,000,000 ກິໂລວັດ ຊຶ່ງຢູ່ໃນນັ້ນ 65.60% ເປັນສ່ວນສົ່ງອອກ. ແຕ່ເຖິງຢ່າງນັ້ນກໍຕາມລາຍໄດ້ຈາກພະລັງງານໄຟຟ້າ ຊຶ່ງເຄີຍຄອງອັນດັບ 1 ແຕ່ປີ ຄສ 1999 ຫາ ປີ ຄສ 2003 ໄດ້ມາຢູ່ອັນດັບ 3 ໃນປີ ຄສ 2011.

ຕາລາງທີ 16: ເຂື່ອນໄຟຟ້າໃນອຸດສາຫະກຳພະລັງງານໃນປະເທດລາວ

| ລ/ດ | ໂຄງການເຂື່ອນ | ຄວາມສູງຂອງຕົວເຂື່ອນ (ມ) | ຂະໜາດບັນຈຸຂອງອ່າງ (ລ້ານມ3) | ກຳລັງຕິດຕັ້ງ (ເມກາວັດ) |
|---|---|---|---|---|
| 1 | ນ້ຳງື່ມ I | 75 | 7,010 | 150 |
| 2 | ນ້ຳງື່ມ II | 181 | 2,971 | 615 |
| 3 | ນ້ຳເລີກ | 45 | 185 | 60 |
| 4 | ເຊເສັດ I | 10 | 2 | 45 |
| 5 | ເຊເສັດ II | - | 0.8 | 76 |
| 6 | ເທີນ-ຫີນບູນ | 27 | 130 | 210 |
| 7 | ຫວ້ຍເຫາະ | 79 | 590 | 150 |
| 8 | ນ້ຳເທີນ II | 39 | 3,530 | 1,086 |
| 9 | ນ້ຳເລີກ I-II | 238 | 24,4 | 103 |
| ລວມກຳລັງຕິດຕັ້ງທັງໝົດ | | | | 2,419 |



ຮູບທີ 34: ເຂື່ອນໄຟຟ້ານ້ຳງື່ມ

### 7.3.4 ການຄົມມະນາຄົມຂົນສົ່ງ

ການຄົມມະນາຄົມຂົນສົ່ງຢູ່ ສປປ ລາວ ໃນປັດຈຸບັນນັບວ່າມີຄວາມສະດວກ ແລະ ວ່ອງໄວກວ່າແຕ່ກ່ອນຫລາຍ ແລະ ພາຫະນະຂົນສົ່ງກໍທັນສະໄໝອີກດ້ວຍ. ແຕ່ຢ່າງໃດກໍດີ, ກໍຍັງເຫັນວ່າມັນຂະຫຍາຍຕົວຊ້າ ແລະ ຍັງບໍ່ທັນຄົບຊຸດຄືມີພຽງແຕ່ທາງບົກ, ທາງນ້ຳ ແລະ ທາງອາກາດເທົ່ານັ້ນ (ຍັງບໍ່ມີທາງລົດໄຟ) ຊຶ່ງໃນນີ້ການຄົມມະນາຄົມຂົນສົ່ງທາງບົກ ນັບວ່າເປັນຂະແໜງທີ່ຂະຫຍາຍຕົວ ແລະ ນິຍົມໃຊ້ກັນຫລາຍທີ່ສຸດ. ໃນບັນດາຂະແໜງການຄົມມະນາຄົມຢູ່ໃນ ສປປ ລາວ, ການຄົມມະນາຄົມທາງບົກ ແມ່ນຂະແໜງທີ່ພົ້ນເດັ່ນກວ່າໝູ່ເພາະເປັນຂະແໜງການດຽວທີ່ຂະຫຍາຍຕົວ ແລະ ນິຍົມໃຊ້ກັນຫລາຍ ຊຶ່ງໃນຕະຫລອດເວລາທີ່ຜ່ານມາລັດຖະບານ ສປປ ລາວໄດ້ຕັ້ງໜ້າບູລະນະປົວແປງ ແລະ ສ້າງເສັ້ນທາງລົດຫລາຍໆເສັ້ນ ຊຶ່ງພາໃຫ້ທຸກແຂວງມີເສັ້ນທາງເຊື່ອມຕໍ່ຈອດກັນ ແຕ່ກໍ່ມີບາງເຂດທີ່ຍັງຂາດເສັ້ນທາງ ແລະ ຕ້ອງໄດ້ໃຊ້ຊ້າງ, ມ້າ... ເຂົ້າໃນການລຳລຽງຂົນສົ່ງ. ເສັ້ນທາງຫລວງແຫ່ງຊາດເລກທີ 13 ສາຍສຳຄັນຜ່ານແຕ່ເໜືອຫາໃຕ້ ແລະ ເສັ້ນທາງອື່ນໆ ເຊັ່ນ: ເສັ້ນທາງເລກທີ 1, ເສັ້ນທາງເລກທີ 2, ເສັ້ນທາງເລກທີ 4, ເສັ້ນທາງເລກທີ 6 ເສັ້ນທາງເລກທີ 7, ເສັ້ນທາງເລກທີ 8, ເສັ້ນທາງເລກທີ 9, ເສັ້ນທາງເລກທີ 13 ເປັນເສັ້ນທາງຫລວງແຫ່ງຊາດສາຍຫລັກ, ເສັ້ນທາງເລກທີ 16, ເສັ້ນທາງເລກທີ 15, ເສັ້ນທາງເລກທີ 18...ໃນນັ້ນເສັ້ນທາງເລກທີ 1 ໄດ້ຖືກກຳນົດເປັນເສັ້ນທາງຫລັກ ເສັ້ນທີ 2 ຊຶ່ງຕັດ ຜ່ານເຂດໃຈກາງຂອງປະເທດແຕ່ເໜືອເຖິງໃຕ້.

ແຜນທີ່ 9: ສະແດງເສັ້ນທາງຄົມມະນາຄົມທາງບົກໃນລາວ




ສຳລັບການຄົມມະນາຄົມຂົນສົ່ງທາງນ້ຳ ເຖິງວ່າມີຄວາມສະດວກວ່ອງໄວກວ່າແຕ່ກ່ອນຫລາຍແຕ່ກໍບໍ່ເປັນທີ່ນິຍົມປານໃດ ແລະ ຍັງຖືກຈຳກັດຢູ່ສະເພາະ ແມ່ນນ້ຳສ່ວນຫລາຍເປັນແມ່ນ້ຳທີ່ໄຫລແຮງ ແລະ ມີແກ້ງຫລາຍ ຫລື ບາງສາຍກໍໃຊ້ເປັນເສັ້ນທາງທ່ຽວໄປມາໄດ້ພຽງແຕ່ລະດູຝົນເທົ່ານັ້ນ. ສ່ວນການຄົມມະນາຄົມຂົນສົ່ງທາງອາກາດ ກໍໄດ້ຮັບການປັບປຸງໃຫ້ທັນສະໄໝຂຶ້ນ, ຢູ່ເກືອບທຸກໆແຂວງໄດ້ມີການສ້າງສາໜາມບິນຂຶ້ນ. ສະເພາະສະໜາມບິນວັດໄຕທີ່ນະຄອນຫລວງວຽງຈັນ, ສະໜາມບິນຫລວງພະບາງ ແລະ ສະໜາມບິນຈຳປາສັກກໍໄດ້ຮັບການປັບປຸງໃຫ້ເປັນສະໜາມບິນລະດັບສາກົນແລ້ວ. ແຕ່ວ່າ, ໃນປັດຈຸບັນການຄົມມະນາຄົມທາງອາກາດຂອງລາວກໍຍັງແມ່ນການບໍລິການທາງດ້ານໂດຍສານເປັນຕົ້ນຕໍຢູ່.

ແຜນທີ່ 10: ສະແດງເສັ້ນທາງບິນພາຍໃນ ແລະ ຕ່າງປະເທດຂອງການບິນລາວ




### 7.3.5 ການໄປສະນີ ແລະ ໂທລະຄົມມະນາຄົມ

ໃນປັດຈຸບັນຕາໜ່າງໄປສະນີຢູ່ລາວ ໄດ້ຂະຫຍາຍຕົວຢ່າງກ້ວາງຂວາງ ຈະເຫັນໄດ້ວ່າ ຫ້ອງການໄປສະນີໄດ້ຖືກສ້າງຂຶ້ນຢູ່ເກືອບທຸກເມືອງໃນທົ່ວປະເທດ. ຂະນະດຽວກັນ, ສູນກາງໂທລະຄົມມະນາຄົມ ລະຫວ່າງ ຊາດທີ່ຕິດຕໍ່ກັບດາວທຽມກໍໄດ້ສ້າງຕັ້ງຂຶ້ນຢູ່ທີ່ນະຄອນຫລວງວຽງຈັນ. ທ້ອງຖິ່ນຕ່າງໆ ໃນທົ່ວປະເທດສາມາດຕິດຕໍ່ສື່ສານກັນໄດ້ຢ່າງສະດວກ. ນັບແຕ ປີ ຄສ 2010 ມາມີສູນກາງໂທລະສັບ ອັດຕະໂນມັດ 104 ແຫ່ງ ແລະ ສູນກາງໂທລະສັບມືຖື 7 ແຫ່ງ ແລະ ມາຮອດປີ ຄສ 2014 -15 ການໃຫ້ ບໍລິການໂທລະສັບມືຖືໄດ້ເພີ່ມຂຶ້ນເປັນ 8 ເລກໝາຍ.

ເວົ້າລວມແລ້ວ, ການຄົມມະນາຄົມ ແມ່ນມີຄວາມສໍາຄັນເປັນຢ່າງຍິ່ງຕໍ່ການພັດທະນາເສດຖະກິດ ແລະ ສັງຄົມລາວ. ໃນປັດຈຸບັນ, ຂະແໜງການນີ້ພວມຂະຫຍາຍຕົວຢ່າງກວ້າງຂວາງ.

### 7.3.6 ການຄ້າ

ໃນປັດຈຸບັນ, ການຄ້າຂາຍໃນ ສປປ.ລາວ ພວມຂະຫຍາຍຕົວ ແລະ ມີທ່າອ່ຽງເພີ່ມຂຶ້ນຢ່າງຕໍ່ເນື່ອງ. ຈະເຫັນໄດ້ວ່າຕະຫລາດໄດ້ຂະຫຍາຍໄປເຖິງຊົນນະບົດ ແລະ ຫລາຍຕົວເມືອງໄດ້ກາຍເປັນສູນກາງການຄ້າ ເຊັ່ນ: ນະຄອນຫລວງວຽງຈັນ, ເມືອງໄກສອນ, ປາກເຊ, ທ່າແຂກ, ຊຽງຂວາງ... ເປັນຕົ້ນ. ລາວໄດ້ສົ່ງຜົນຜະລິດດ້ານກະສິກໍາ, ໄມ້ທ່ອນ, ໄມ້ແປຮູບ, ເຄື່ອງປ່າ, ກະແສໄຟຟ້າແຮ່ທາດ... ອອກຂາຍໃຫ້ຕ່າງປະເທດ ແລະ ພ້ອມດຽວກັນນີ້ກໍນໍາສິນຄ້າເຂົ້າປະເພດຕ່າງໆ ເຊັ່ນ:ເຄື່ອງກົນຈັກ, ນໍ້າມັນເຊື້ອໄຟ, ລົດຈັກ, ລົດໂອໂຕ, ເຄື່ອງເຫລັກ, ແຜ່ນແພ... ແຕ່ຈະເຫັນໄດ້ວ່າໃນດ້ານການຄ້າກັບຕ່າງປະເທດ ນີ້ສ່ວນຫລາຍລາວເຮົາເປັນຝ່າຍຂາດດູນຢູ່ຕະຫລອດມາ.

### 7.3.7 ການທ່ອງທ່ຽວ ແລະ ການບໍລິການ

ຕາມຕົວເລກຂອງກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວໄດ້ໃຫ້ຮູ້ວ່າ ໃນແຕ່ລະປີທີ່ຜ່ານມາ ຈຳນວນຂອງນັກທ່ອງທ່ຽວທີ່ເຂົ້າມາລາວໄດ້ເພີ່ມຂຶ້ນຢ່າງຫລວງຫລາຍ ອັນໄດ້ສ້າງລາຍຮັບໃຫ້ແກ່ຊາດເປັນຈຳນວນຫລວງຫລາຍເຊັ່ນກັນ ນັບແຕ່ ປີ ຄສ 1999 ເປັນຕົ້ນມາ ລາຍຮັບຈາກການທ່ອງທ່ຽວໄດ້ຢືນຢູ່ອັນດັບທີ 1 ຫລື ທີ 2 ໃນລາຍຮັບແຫ່ງຊາດ.

ຕາຕະລາງທີ 17: ສະຖິຕິ ສະແດງລາຍຮັບ ແລະຈຳນວນນັກທ່ອງທ່ຽວທີ່ເຂົ້າມາໃນ ສປປ ລາວ ແຕ່ປີ ຄສ 1995-2013

| ປີ ຄສ | ລາຍຮັບ | ນັກທ່ອງທ່ຽວ | ໝາຍເຫດ |
|---|---|---|---|
| 1995 | 24.738.480 Dollar | 346.460 ຄົນ | |
| 2000 | 113.898.285 Dollar | 737.208 ຄົນ | |
| 2005 | 146.770.074 Dollar | 1.095.315 ຄົນ | |
| 2007 | 233.304.695 Dollar | 1.623.943 ຄົນ | |
| 2008 | 275.515.758 Dollar | 1.736.787 ຄົນ | |
| 2009 | 267.700.224 Dollar | 2.008.363 ຄົນ | |
| 2010 | 381.669.031 Dollar | 2.513.028 ຄົນ | |
| 2011 | 406.184.338 Dollar | 2.723.564 ຄົນ | |
| 2012 | 513.576.784 Dollar | 3.330.072 ຄົນ | |
| 2013 | 595.909.127 Dollar | 3.779.490 ຄົນ | |

ການທ່ອງທ່ຽວບໍ່ພຽງແຕ່ເປັນການສ້າງລາຍຮັບເປັນເງິນຕາຕ່າງປະເທດໃຫ້ແກ່ຊາດເທົ່ານັ້ນ ແຕ່ຍັງກໍ່ໃຫ້ເກີດການລົງທຶນ ແລະ ດຳເນີນທຸລະກິດຢ່າງຫລວງຫລາຍ ຈາກພາຍໃນ ແລະ ຕ່າງປະເທດ ໃນກິດຈະການຕ່າງໆ ທີ່ກ່ຽວຂ້ອງກັບການທ່ອງທ່ຽວ ເຊັ່ນ: ກິດຈະການໂຮງແຮມ, ເຮືອນພັກ, ຮ້ານອາຫານ, ການຂົນສົ່ງ, ການນຳທ່ຽວ, ການຄ້າ, ອູ່ສ້ອມແປງລົດ, ຮ້ານເສີມຄວາມງາມ ແລະ ອື່ນໆ ຊຶ່ງສ່ວນຫລາຍມີການຂະຫຍາຍຕົວຢູ່ຕາມຕົວເມືອງໃຫ່ຍຕ່າງໆ. ເວົ້າສະເພາະແຕ່ ປີ ຄສ 2014 ຜ່ານມານີ້ ໃນທົ່ວປະເທດມີໂຮງແຮມ 513 ແຫ່ງ, ເຮືອນພັກ ແລະ ລີສອດ 1,908 ແຫ່ງ, ຮ້ານອາຫານ 1,911 ແຫ່ງ ແລະ ສະຖານບັນເທີງ 164 ແຫ່ງ ຊຶ່ງສ່ວນໃຫ່ຍເຕົ້າໂຮມກັນຢູ່ນະຄອນຫລວງວຽງຈັນ, ຫລວງພະບາງ, ສະຫວັນນະເຂດ, ຈຳປາສັກ ແລະ ອຸດົມໄຊ .ດັ່ງສະແດງໃນຕາລາງລຸ່ມນີ້.

ຕາລາງທີ 18: ສະແດງສິ່ງອຳນວຍຄວາມສະດວກໃນອຸດສາຫະກຳການທ່ອງທ່ຽວ

| ປີ ຄສ | ສິ່ງອຳນວຍຄວາມະດວກທາງການທ່ອງທ່ຽວ[64] | | | |
|---|---|---|---|---|
| | ໂຮງແຮມ | ເຮືອນພັກ ຣີສອດ | ຮ້ານອາຫານ | ສະຖານບັນເທີງ |
| 2006 | 193 | 1.000 | 816 | 182 |
| 2007 | 211 | 1.120 | 976 | 153 |
| 2008 | 265 | 1.120 | 742 | 164 |
| 2009 | 357 | 1.344 | 1.148 | 310 |
| 2010 | 357 | 1.344 | 1.148 | 310 |
| 2011 | 435 | 1.491 | 1.380 | 283 |
| 2012 | 468 | 1.491 | 1.276 | 220 |
| 2013 | 491 | 1.868 | 1.744 | 168 |
| 2014 | 513 | 1.908 | 1.911 | 164 |

ທີ່ມາ: ກົມພັດທະນາການທ່ອງທ່ຽວ. Statistical Report on Tourism in Laos ປີ ຄສ 2014
ພະແນກວິໄຈການທ່ອງທ່ຽວ

**ຄຳຖາມ:**

1. ເສດຖະກິດລາວໃນໄລຍະກ່ອນປີ 1975 ແລະ ເສດຖະກິດລາວໃນໄລຍະປີ 1975 ຫາ ປັດຈຸບັນເປັນຄືແນວໃດ ?
2. ດ້ວຍເຫດໃດອຸດສາຫະກຳຢູ່ລາວຈຶ່ງຂະຫຍາຍຕົວຊ້າ ?
3. ຂະແໜງກະສິກຳມີບົດບາດ ແລະ ຄວາມສຳຄັນແນວໃດໃນພື້ນຖານເສດຖະກິດແຫ່ງຊາດ ?
4. ຈົ່ງເວົ້າເຖິງບັນດາຂະແໜງອຸດສາຫະກຳຢູ່ລາວ, ໃນນັ້ນຍົກໃຫ້ເຫັນຄວາມສຳຄັນຂອງ ອຸດສາຫະກຳພະລັງງານ ແລະ ຂຸດຄົ້ນບໍ່ແຮ່ຕໍ່ການພັດທະນາປະເທດເຮົາ ?

[64] ກົມພັດທະນາການທ່ອງທ່ຽວລາວ. Statistical Report on Tourism in Laos 2012 ພະແນກວິໄຈການທ່ອງທ່ຽວ 2012 :18

ບົດທີ

8

# ຍຸດທະສາດ ແລະ ແຜນພັດທະນາເສດຖະກິດຂອງລາວ

## 8.1 ຄວາມໝາຍຄວາມສຳຄັນຂອງຍຸດທະສາດແລະແຜນພັດທະນາເສດຖະກິດຂອງລາວ

### 8.1.1 ຄວາມໝາຍ ຄວາມສຳຄັນຂອງຍຸດທະສາດຂອງລາວ

ຍຸດທະສາດໝາຍເຖິງ ແນວທາງນະໂຍບາຍຂອງລັດວາງອອກ ເພື່ອພັດທະນາການເມືອງ, ສັງຄົມ, ເສດຖະກິດ ແລະ ແຜນປະຕິບັດໃຫ້ໄດ້. ຍຸດທະສາດ ແມ່ນຂອດໄດ້ປຽບໃນການແຂ່ງຂັນ, ຍຸດທະສາດ ສ້າງຄວາມແຕກຕ່າງໃນການແບ່ງປັນຊັບພະຍາກອນ ແລະ ປະສິດທິພາບໃນການດຳເນີນງານ ຍຸດທະສາດສະທ້ອນໝາກຜົນແທ້ຈິງ.

### 8.1.2 ຄວາມໝາຍ ແລະ ຄວາມສຳຄັນຂອງແຜນພັດທະນາເສດຖະກິດຂອງລາວ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໝາຍເຖິງທິດທາງ, ຄາດໝາຍໃນການພັດທະນາເສດຖະກິດ-ສັງຄົມທີ່ລັດຖະບານສະເໜີຕໍ່ສະພາແຫ່ງຊາດຮັບຮອງເອົາ. ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ແມ່ນເຄື່ອງມືໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງຂອງພັກ ແລະ ການຄຸ້ມຄອງເສດຖະກິດຂອງລັດ ດ້ວຍການກຳນົດອອກເປັນນະໂຍບາຍ, ມາດຕະການ, ເປັນແຜນງານ, ໂຄງການ ແລະ ວຽກງານລະອຽດໃນແຕ່ລະໄລຍະ ແນໃສ່ບັນລຸເປົ້າໝາຍສູງສຸດທີ່ພັກໄດ້ກຳນົດໄວ້ຄື: ກໍ່ສ້າງປະເທດຊາດໃຫ້ຮັ່ງມີເຂັ້ມແຂງ, ສັງຄົມສີວິໄລຍຸຕິທຳ, ປະຊາຊົນຮັ່ງມີຜາສຸກ.

## 8.2 ແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VII (2011-2015) ເປັນແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ເພາະມັນເປັນແຜນສືບຕໍ່ບຸກທະລຸ ເພື່ອສ້າງພື້ນຖານ ແລະ ເງື່ອນໄຂອັນຈຳເປັນສຳລັບການນຳເອົາປະເທດເຮົາຫລຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020 ແລະ ສືບຕໍ່ກ້າວຂຶ້ນຢ່າງໜັກແໜ້ນສູ່ຈຸດໝາຍສັງຄົມນິຍົມ. ກ່ຽວກັບ ການບຸກທະລຸນັ້ນພວກເຮົາຕ້ອງເຊື່ອມຊຶມ ແລະ ກຳແໜ້ນເນື້ອໃນບຸກທະລຸ 4 ປະການ ທີ່ທ່ານເລຂາທິການໃຫຍ່ໄດ້ຍົກຂຶ້ນໃນລາຍງານການເມືອງຕໍ່ກອງປະຊຸມໃຫຍ່ນັ້ນແລ້ວ. ສະເພາະແຜນພັດທະນາເສດຖະກິດ-ສັງຄົມນີ້ພວກ ເຮົາໄດ້ຜັນຂະຫຍາຍອອກ ດັ່ງນີ້:

**1) ບຸກທະລຸດ້ານຈິນຕະນາການ**

ກ່ອນອື່ນຕ້ອງລົບລ້າງຜົນສະທ້ອນ ຂອງກົນໄກລວມສູນອາດຍາສິດ, ບໍລິຫານເກື້ອກູນຢ່າງສິ້ນເຊີງ, ຫັນໄປສູ່ກົນໄກເສດຖະກິດຕະຫລາດທີ່ມີການຄຸ້ມຄອງຂອງລັດ, ຍຶດໝັ້ນເອົາການພັດທະນາເສດຖະກິດເປັນໃຈກາງ, ສ້າງຄວາມກົມກຽວ ລະຫວ່າງ ການພັດທະນາເສດຖະກິດ ກັບການພັດທະນາວັດທະນະທຳ-ສັງຄົມ, ເສີມຂະຫຍາຍກຳລັງແຮງຂອງທຸກພາກສ່ວນເສດ ຖະກິດເຂົ້າໃນການຂະຫຍາຍກຳລັງການຜະລິດຢ່າງແຂງແຮງ, ສ້າງຄວາມສາມາດແຂ່ງຂັນເພີ່ມຂຶ້ນໃນຂະບວນວິວັດແຫ່ງການ ເຊື່ອມໂຍງສາກົນ, ຮັບປະກັນໃຫ້ການພັດທະນາດຳເນີນໄປຢ່າງຕໍ່ເນື່ອງ, ມີຄວາມໝັ້ນທ່ຽງ ແລະ ຍືນຍົງ.

**2) ບຸກທະລຸດ້ານການພັດທະນາຊັບພະຍາກອນມະນຸດ**

ແມ່ນການບຸກທະລຸດ້ານການສຶກສາໃຫ້ມີຄຸນນະພາບສູງ, ລົງທຶນໃສ່ຂົງເຂດການສຶກສາ ແລະ ສາທາລະນະສຸກຕາມກຳນົດໝາຍທີ່ວາງໄວ້; ນຳໃຊ້ເສດຖະກິດພູມປັນຍາໃຫ້ຫລາຍຂຶ້ນ, ສ້າງກຳລັງແຮງງານ ແລະ ວິຊາການທີ່ຊຳນານງານ, ສ້າງຖັນແຖວນັກທຸລະກິດ, ນັກຄຸ້ມຄອງ, ຜູ້ຈັດການທີ່ສົມຄູ່ກັບການພັດທະນາເສດຖະກິດຕາມກົນໄກຕະຫລາດ ແລະ ການເຊື່ອມໂຍງເສດຖະກິດສາກົນ. ປັບປຸງລະບົບນຳໃຊ້ກຳລັງແຮງງານໃຫ້ມີຄວາມເໝາະສົມ ແລະ ສ້າງລະບອບຈູງໃຈເພື່ອຮັບໃຊ້ການສ້າງສາພັດທະນາ, ຮັບປະກັນການຫັນແຮງງານກະສິກຳເຂົ້າເປັນແຮງງານອຸດສາຫະກຳ ແລະ ການບໍລິການໃຫ້ນັບມື້ນັບຫລາຍຂຶ້ນ.

3) ບຸກທະລຸດ້ານລະບົບກົນໄກ, ລະບອບ, ລະບຽບການບໍລິຫານ

ກ່ອນອື່ນແມ່ນຕ້ອງປູລະນາການບໍລິຫານແລະການບໍລິການໃຫ້ມີປະສິດທິຜົນແລະ ໂປ່ງໃສ, ສ້າງສິ່ງອຳນວຍຄວາມສະດວກແກ່ການແຂ່ງຂັນທີ່ສະເໝີພາບຕໍ່ໜ້າກົດໝາຍ ແລະ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ແກ້ໄຂຂອດການປະສານງານໃຫ້ດີ, ທັນສະໄໝ ແລະ ເຂົ້າກັບ ລະບົບຂອງສາກົນ ໂດຍຖືເອົາການບຸກທະລຸດ້ານນີ້ຕິດພັນກັບຂະບວນວິວັດແຫ່ງການເຂົ້າຮ່ວມສ້າງ ປະຊາຄົມເສດຖະກິດອາຊຽນ ແລະ ການກະກຽມເຂົ້າເປັນສະມາຊິກອົງການການຄ້າໂລກ (WTO).

4) ບຸກທະລຸດ້ານການແກ້ໄຂຄວາມທຸກຍາກຂອງປະຊາຊົນ

ດ້ວຍການຂຸດຄົ້ນແຫລ່ງທຶນຕ່າງໆ ແລະ ດ້ວຍນະໂຍບາຍສົ່ງເສີມເປັນພິເສດ, ສ້າງພື້ນຖານໂຄງ ລ່າງທາງດ້ານເສດຖະກິດ-ສັງຄົມຢ່າງມີຈຸດສຸມ ໂດຍຮັບປະກັນໃຫ້ມີການຄົມມະນາຄົມທາງບົກ (ລວມທັງທາງລົດໄຟ), ທາງອາກາດ ແລະ ທາງນ້ຳ ມີຄວາມໂລ່ງລ່ຽນ, ເຊື່ອມຕິດຈອດກັນແຕ່ສູນກາງ ຫາທ້ອງຖິ່ນ, ເຊື່ອມຈອດກັບປະເທດໃກ້ຄຽງ ແລະ ສາກົນ; ພ້ອມກັນນີ້, ກໍ່ມີຕາໜ່າງໄຟຟ້າ, ເຄືອຂ່າຍ ໂທລະຄົມມະນາຄົມ, ການສື່ສານ, ນ້ຳປະປາ ແລະ ອື່ນໆທີ່ຈຳເປັນ.

### 8.2.1 ຈຸດໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VII

ອີງໃສ່ຈຸດພິເສດຂອງສະພາບແວດລ້ອມສາກົນທີ່ມີທັງກາລະໂອກາດ ແລະ ສິ່ງທ້າທາຍ ພວກເຮົາວາງຈຸດໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ດັ່ງນີ້:

1) ເຮັດໃຫ້ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ ເຖິງປີ 2015 ລວມຍອດ ມູນຄ່າຜະລິດຕະພັນພາຍໃນໄລ່ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 1.700 ໂດລາສະຫະລັດ

2) ບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs), ສ້າງພື້ນຖານວັດຖຸເຕັກນິກທີ່ຈຳເປັນຈຳນວນໜຶ່ງ ເພື່ອນຳເອົາປະເທດເຮົາຫລຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາໃນປີ 2020 ກໍຄືໃຫ້ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ

3) ສ້າງຄວາມກົມກຽວ ແລະ ສົມສ່ວນລະຫວ່າງການພັດທະນາເສດຖະກິດກັບການພັດທະນາວັດທະນະທຳ-ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມທຳມະຊາດໃຫ້ຍືນຍົງ

4) ຮັບປະກັນສະຖຽນລະພາບທາງການເມືອງ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ ແລະ ເປັນເຈົ້າການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ.

### 8.2.2 ຄາດໝາຍສູ້ຊົນຕົ້ນຕໍຂອງແຜນການ 5 ປີ ຄັ້ງທີ VII

**ກ. ດ້ານເສດຖະກິດມະຫາພາກ**

- ຮັບປະກັນໃຫ້ອັດຕາການເຕີບໂຕຂອງລວມຍອດມູນຄ່າຜະລິດຕະພັນພາຍໃນ (GDP) ເພີ່ມຂຶ້ນ ນັບແຕ່ 8% ຂຶ້ນໄປຕໍ່ປີ; ໃນນັ້ນ, ຂະແໜງກະສິກຳ-ປ່າໄມ້ເພີ່ມຂຶ້ນປະມານ 3,5% ກວມປະມານ 23%, ອຸດສາຫະກຳເພີ່ມຂຶ້ນ 15% ກວມປະມານ 39% ແລະ ການບໍລິການເພີ່ມຂຶ້ນປະມານ 6,5% ກວມປະມານ 38%.
- ອັດຕາເງິນເຟີ້ໃຫ້ຢູ່ໃນລະດັບຕ່ຳກວ່າອັດຕາການຂະຫຍາຍຕົວຂອງເສດຖະກິດ, ຮັກສາອັດຕາແລກປ່ຽນໃຫ້ມີສະຖຽນລະພາບ, ເງິນກີບແຂງຄ່າ ຫລື ອ່ອນຄ່າຢູ່ໃນລະດັບບໍ່ເກີນ 5% ຕໍ່ປີທຽບກັບເງິນຕາຕ່າງປະເທດສະກຸນຫລັກ.
- ສູ້ຊົນປະຕິບັດລາຍຮັບທັງໝົດໃຫ້ໄດ້ປະມານ 19-21% ຂອງ GDP ຂຶ້ນໄປ, ຮັບປະກັນການຂາດດູນງົບປະມານປະມານ 3-5% ຂອງ GDP ຕໍ່ປີ.
- ສູ້ຊົນຫລຸດຜ່ອນໜີ້ສິນໃນທົ່ວລະບົບການເງິນຂອງລັດລົງບໍ່ໃຫ້ເກີນ 45% ຂອງ GDP.

- ລະດັບເງິນຝາກໃຫ້ເພີ່ມຂຶ້ນໂດຍສະເລ່ຍໃນແຕ່ລະປີ 25,6%.
- ຮັບປະກັນຄັງສຳຮອງເງິນຕາຕ່າງປະເທດໃຫ້ສາມາດກຸ້ມການນຳເຂົ້າສິນຄ້າບໍ່ໃຫ້ຫລຸດ6ເດືອນ.

ຂ. ການດູນດ່ຽງມະຫາພາກ

- ດູນດ່ຽງການລົງທຶນ: ລະດັບການລົງທຶນທົ່ວສັງຄົມກວມປະມານ 32% ຫລື ປະມານ 127 ພັນຕື້ກີບ; ໃນນັ້ນ, ຈາກງົບປະມານລັດ 10-12% ODA 24-26%, FDI 50-56% ແລະ ສິນເຊື່ອທະນາຄານ 10-12%. ຄາດຄະເນໂຄງປະກອບການລົງທຶນຂອງລັດຄື: ຂົງເຂດເສດຖະກິດກວມ30%, ຂົງເຂດສັງຄົມກວມ 35% ແລະ ພື້ນຖານໂຄງລ່າງ (ທາງ ແລະ ເຄຫາສະຖານ) ກວມ 35%. ແຜນການ 5 ປີ ຄັ້ງນີ້ ແມ່ນໄດ້ຍົກອັດຕາສ່ວນການລົງທຶນຂອງຂົງເຂດສັງຄົມສູງຂຶ້ນ, ໂດຍເນັ້ນໜັກໃສ່ການຮັບປະ ກັນໃຫ້ມີປະສິດທິຜົນສູງ ແລະ ໃຫ້ໄປຮອດປະຊາຊົນຢ່າງແທ້ຈິງ.

- ດູນດ່ຽງງົບປະມານ: ຄາດຄະເນລາຍຮັບງົບປະມານທັງໝົດໃນ 5 ປີໃຫ້ບັນລຸໄດ້ປະມານ 19-21% ຂອງ GDP, ລາຍຈ່າຍງົບປະມານ 22-255% ຂອງ GDP, ເອົາໃຈໃສ່ໃຫ້ການຂາດດູນງົບປະ ມານຢູ່ໃນລະດັບ 3-5% ຂອງ GDP.

- ດູນດ່ຽງຂາເຂົ້າ-ຂາອອກ: ສູ້ຊົນໃຫ້ມູນຄ່າການສົ່ງອອກ ແລະ ສິນຄ້ານຳເຂົ້າເພີ່ມຂຶ້ນຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາ ແລະ ການລົງທຶນ.

ດູນດ່ຽງການຊົມໃຊ້ ແລະ ການສະສົມ: ສູ້ຊົນໃຫ້ອັດຕາການສະສົມໃນລະບົບທະນາຄານມີທ່າກ້າວຂຶ້ນໃຫ້ຢູ່ໃນລະດັບຫລາຍກວ່າ 39.5% ຂອງ GDP ຕໍ່ປີ; ໃຫ້ຄັງສະສົມແຫ່ງລັດບັນລຸ 2-5% ຂຶ້ນໄປຕໍ່ປີຂອງລາຍຮັບພາຍໃນ.

- ດູນດ່ຽງແຮງງານ: ຮອດປີ 2015 ໃຫ້ສາມາດຕອບສະໜອງໄດ້ 3,17 ລ້ານຄົນ; ໃນນີ້ແຮງງານທີ່ເພີ່ມຂຶ້ນໃໝ່ປະມານ 227.000 ຄົນ; ໃນນັ້ນ, ໃຫ້ຂົງເຂດກະສິກຳປະມານ 210.000 ຄົນ, ຂົງເຂດອຸດສາຫະກຳປະມານ 14.000 ຄົນ ແລະ ຂົງເຂດການບໍລິການປະມານ 53.000 ຄົນ.

### 8.2.3 ທິດທາງໜ້າທີ່ການພັດທະນາຂະແໜງການ ແລະ ເຂດແຄວັນ

#### 2.3.1 ຂົງເຂດເສດຖະກິດ

**1) ຂະແໜງກະສິກຳ -ປ່າໄມ້**

ຂຸດຄົ້ນຄວາມອາດສາມາດບົ່ມຊ້ອນ ທາງດ້ານກະສິກຳ ຂອງປະເທດເຮົາ ໂດຍສຸມໃສ່ພັດທະນາ 7 ທົ່ງພຽງບູລິມະສິດ, ພ້ອມກັນນັ້ນກໍເອົາໃຈໃສ່ຢ່າງເພາະສົມເຖິງການພັດທະນາຢູ່ບັນດາທົ່ງພຽງນ້ອຍ ທາງພາກເໜືອເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ທັງສ້າງແຫລ່ງວັດຖຸດິບສະໜອງໃຫ້ອຸດສາຫະກຳປຸງແຕ່ງຢ່າງພຽງພໍ. ດ້ານໜຶ່ງອີກກໍ່ຕ້ອງສົ່ງເສີມກະສິກຳແບບປະສົມປະສານ, ກະສິກຳສະອາດ ແລະ ກະສິກຳປອດສານພິດ ເພື່ອຕອບສະໜອງຄວາມຕ້ອງການຢູ່ພາຍໃນ ແລະ ເປັນສິນຄ້າ ຂາອອກ.

**ຄາດໝາຍຕົ້ນຕໍ:**

- ດ້ານສະບຽງອາຫານ: ເຖິງປີ 2015 ຜະລິດເຂົ້າໃຫ້ບັນລຸ 4,2 ລ້ານໂຕນ, ສະມັດຖະພາບສະເລ່ຍປະມານ 4 ໂຕນຕໍ່ເຮັກຕາຕໍ່ລະດູການໜຶ່ງ; ສູ້ຊົນຜະລິດຊີ້ນໃຫ້ໄດ້ 221,5 ພັນໂຕນຕໍ່ປີ ແລະ ສັດນ້ຳ (ປາ, ກົບ, ກຸ້ງ) ໃຫ້ໄດ້ 157,2 ພັນໂຕນຕໍ່ປີ.
- ດ້ານຜະລິດເປັນສິນຄ້າ: ສູ້ຊົນຜະລິດເຂົ້າເພື່ອສົ່ງອອກໃຫ້ໄດ້ສະເລ່ຍ 600.000 ໂຕນຕໍ່ປີ.
- ດ້ານປ່າໄມ້: ຍົກລະດັບການປົກຫຸ້ມຂອງປ່າໄມ້ໃຫ້ໄດ້ 65% ໃນປີ 2015, ຟື້ນຟູປ່າທຳມະຊາດໃຫ້ໄດ້ 3,9 ລ້ານເຮັກຕາ ແລະ ປູກໄມ້ໃຫ້ໄດ້ 2 ແສນເຮັກຕາ, ຈັດສັນ ແລະ ປະກາດໃຊ້ປະເພດປ່າ 3 ປະເພດໃຫ້ໄດ້ 60% ແລະ ຂະຫຍາຍເຂດຍືນຍົງປ່າໄມ້ໃຫ້ໄດ້ 10% ຂອງປ່າຜະລິດທັງໝົດ ໃນປີ 2015.

2) ຂະແໜງອຸດສາຫະກຳ-ການຄ້າ

ເອົາໃຈໃສ່ພັດທະນາຂະແໜງອຸດສາຫະກຳປຸງແຕ່ງທີ່ມີພື້ນຖານວັດຖຸດິບພາຍໃນສະໜອງໃຫ້ໃນໄລຍະຍາວ, ພ້ອມກັນນັ້ນກໍໃຫ້ຄວາມສຳຄັນແກ່ການຂະຫຍາຍຂະແໜງອຸດສາຫະກຳເບົາທີ່ນຳໃຊ້ວັດຖຸດິບຈາກພາຍໃນ ແລະ ຕ່າງປະເທດ ເພື່ອມາປຸງແຕ່ງຮັບໃຊ້ພາຍໃນ ແລະ ສົ່ງອອກ; ພັດທະນາວິສາຫະກິດຂະໜາດນ້ອຍ-ຂະໜາດກາງ (SMEs), ວິສາຫະກິດຊົນນະບົດ ແລະ ຄອບຄົວ; ສົ່ງເສີມການຜະລິດຫັດຖະກຳທີ່ເປັນມູນເຊື້ອ ຂອງປະຊາຊົນໃຫ້ກວ້າງຂວາງ; ເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງດ້ານການຄ້າກັບຕ່າງປະເທດ ແລະ ປະຕິບັດສົນທິສັນຍາຂໍ້ຜູກພັນຕ່າງໆກັບສາກົນ, ຕັ້ງໜ້າກຽມຄວາມພ້ອມໃນການເຂົ້າຮ່ວມເຂດການຄ້າເສລີອາຊຽນ ໃນປີ ຄສ 2015 ແລະ ເປັນ ສະມາຊິກອົງການການຄ້າໂລກ.

**ຄາດໝາຍຕົ້ນຕໍ:**

- ສູ້ຊົນໃຫ້ອຸດສາຫະກຳປຸງແຕ່ງຂະຫຍາຍຕົວໃນອັດຕາສະເລ່ຍ 12-13% ຕໍ່ປີ, ຫັດຖະກຳຂະຫຍາຍຕົວໃນອັດຕາສະເລ່ຍປະມານ 15% ຕໍ່ປີ.
- ມູນຄ່າຈໍລະຈອນສິນຄ້າເພີ່ມຂຶ້ນສະເລ່ຍປະມານ 11% ຕໍ່ປີ.
- ຂະຫຍາຍຕະຫລາດຂາຍຍ່ອຍປະເພດຕ່າງໆໃຫ້ກວມ 80% ຂອງຈຳນວນກຸ່ມບ້ານ, ສ້າງຫົວ ໜ່ວຍວິສາຫະກິດຊົນນະບົດໃຫ້ກວມ 30% ຂອງຈຳນວນບ້ານ, ສ້າງ ແລະ ຂະຫຍາຍສູນການຄ້າ, ຊຸບເປີ້ມາກເກັດທີ່ທັນສະໄໝໃນຕົວເມືອງໃຫຍ່ໃຫ້ໄດ້ຕົວເມືອງລະ 2-3 ແຫ່ງ.

**3) ຂະແໜງພະລັງງານ-ບໍ່ແຮ່:**

ເລັ່ງໃສ່ນຳໃຊ້ ແລະ ຂະຫຍາຍແຫລ່ງພະລັງງານໄຟຟ້ານ້ຳຕົກຕ່າງໆ, ຄົ້ນຄວ້າ-ນຳໃຊ້ພະລັງງານ ຈາກແຫລ່ງອື່ນທີ່ເປັນມິດກັບທຳມະຊາດ ແລະ ສາມາດແຂ່ງຂັນໄດ້. ກໍ່ສ້າງລະບົບສາຍສົ່ງໄຟຟ້າແຮງສູງ-ແຮງກາງ, ສຸມໃສ່ສຳຫລວດສ້າງແຜນທີ່ທໍລະນີສາດແຮ່ທາດ, ຕີລາຄາຈຸດປະກົດແຮ່ທາດ ແລະ ປະລິມານ ສະສົມ, ຊຸກຍູ້ການສ້າງຕັ້ງໂຮງງານຫລອມແຮ່ໃຫ້ເປັນຜະລິດຕະພັນສຳເລັດຮູບ ຫລື ເຄິ່ງສຳເລັດຮູບ ເພື່ອຫລຸດຜ່ອນການສົ່ງອອກແຮ່ທາດໃນຮູບແຮ່ດິບ.

**ຄາດໝາຍຕົ້ນຕໍ:**

- ສູ້ຊົນຂະຫຍາຍສາຍສົ່ງແຮງກາງ 22 ກິໂລວັດ (kv) ແລະ ໄຟຟ້ານອກລະບົບ (off-grid) ໄປສູ່ ເຂດຊົນນະບົດຫ່າງໄກ ເພື່ອຮັບປະກັນໃຫ້ໄດ້ 80% ຂອງຈຳນວນຄອບຄົວໃນທົ່ວປະເທດໄດ້ມີໄຟຟ້າໃຊ້ ໃນປີ 2015.
- ສູ້ຊົນໃຫ້ສຳເລັດການສ້າງໂຮງງານຜະລິດໄຟຟ້າ 8 ແຫ່ງດ້ວຍກຳລັງຕິດຕັ້ງ 2.865.2 ເມກາວັດ (MW), ຊຸກຍູ້ໃຫ້ໄດ້ລົງມືກໍ່ສ້າງເຂື່ອນຂະໜາດໃຫຍ່ 10 ໂຄງການລວມ 5.015 ເມກາວັດ (MW), ເຂື່ອນຂະໜາດນ້ອຍ ແລະ ຂະໜາດກາງຈຳນວນໜຶ່ງ
- ສູ້ຊົນໃຫ້ໄດ້ຂຸດຄົ້ນ-ປຸງແຕ່ງບັນດາແຮ່ທາດສຳຄັນໃຫ້ເປັນຜະລິດຕະພັນສຳເລັດຮູບ ຫລື ເຄິ່ງສຳເລັດຮູບ ກ່ອນການຈຳໜ່າຍເຊັ່ນ: ທອງແຜ່ນ (86.200 ໂຕນຕໍ່ປີ), ຄຳແທ່ງ (6 ໂຕນຕໍ່ປີ), ຖ່ານຫີນ (1-2 ລ້ານໂຕນຕໍ່ປີ), ທອງຝຸ່ນ (208.000 ໂຕນຕໍ່ປີ), ຫີນກາວ (600.000 ໂຕນຕໍ່ປີ).

**4) ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນ:**

ສົ່ງເສີມການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດໄປພ້ອມໆກັບການປົກປັກຮັກສາຕາມທິດຮັບປະກັນປະສິດທິພາບທີ່ຍາວນານ, ຍືນຍົງ ແລະ ມີໝາກມີຜົນໃນລະດັບສູງ, ຜົນກະທົບໜ້ອຍຕໍ່ສິ່ງແວດລ້ອມ ແລະ ສັງຄົມ; ເຮັດໃຫ້ພົນລະເມືອງລາວມີສິດນຳໃຊ້ທີ່ດິນເພື່ອດຳລົງຊີວິດ, ສ້າງທີ່ຢູ່ອາໄສ ແລະ ທຳການຜະລິດຕາມກົດໝາຍ; ຫັນທີ່ດິນໃຫ້ເປັນທຶນ, ເປັນແຫລ່ງສ້າງຄວາມຮັ່ງມີ

ໃຫ້ປະຊາຊົນ ແລະ ປະເທດຊາດ, ສະກັດກັ້ນການລະເມີດກົດໝາຍກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

**ຄາດໝາຍຕົ້ນຕໍ:**

- ສ້າງແຜນຈັດສັນທີ່ດິນຂັ້ນມະຫາພາກ ແລະ ຈຸນລະພາກພ້ອມທັງແຜນນຳໃຊ້ທີ່ດິນໃຫ້ສຳເລັດໃນຂອບເຂດທົ່ວປະເທດ
- ມອບໝາຍຄວາມຮັບຜິດຊອບຄຸ້ມຄອງນຳໃຊ້ທີ່ດິນໃຫ້ການຈັດຕັ້ງ ແລະ ບຸກຄົນຕາມແຜນຈັດສັນ ແລະ ແຜນນຳໃຊ້ທີ່ດິນແຫ່ງຊາດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້
- ອອກໃບຕາດິນໃຫ້ໄດ້ 1 ລ້ານຕອນ.

**5) ຂະແໜງໂຍທາທິການ-ຂົນສົ່ງ:**

ການພັດທະນາພື້ນຖານໂຄງລ່າງດ້ານໂຍທາທິການ-ຂົນສົ່ງ ແມ່ນມີຄວາມສຳຄັນທີ່ສຸດຕໍ່ການຍົກປະສິດທິຜົນຂອງການຜະລິດ, ທຸລະກິດ ແລະ ການເຊື່ອມຈອດກັບບັນດາປະເທດໃກ້ຄຽງ, ສ້າງປະຖົມປັດໄຈເພື່ອຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

**ຄາດໝາຍຕົ້ນຕໍ:**

- ສູ້ຊົນກໍ່ສ້າງ ແລະ ຂະຫຍາຍເສັ້ນທາງຫລວງແຫ່ງຊາດທີ່ເຊື່ອມຕໍ່ລະຫວ່າງແຂວງຕໍ່ແຂວງລະຫວ່າງ ປະເທດເຮົາກັບອານຸພາກພື້ນໃຫ້ໄດ້ປະມານ 920 ກິໂລແມັດ
- ສ້າງ ແລະ ຍົກລະດັບເສັ້ນທາງຫລວງທ້ອງຖິ່ນ, ໂຄງການເຂດຈຸດສຸມຂອງລັດຖະບານ ແລະ ກຸ່ມບ້ານພັດທະນາຈຳນວນໜຶ່ງໃຫ້ສາມາດສັນຈອນໄປມາໄດ້ທັງ 2 ລະດູ; ສ້າງ ແລະ ປັບປຸງເສັ້ນທາງຮັບ ໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ
- ກໍ່ສ້າງລະບົບການຂົນສົ່ງຄົບຊຸດອອກສູ່ທະເລຫວຽດນາມໃຫ້ສຳເລັດ
- ຍົກລະດັບສະໜາມບິນວັດໄຕໃຫ້ສາມາດຮອງຮັບເຄື່ອງບິນປະເພດ Boeing 747 ແລະ ສະໜາມບິນຢູ່ 4 ແຂວງ (ຫລວງພະບາງ, ຊຽງຂວາງ, ສະຫວັນນະເຂດ ແລະ ຈຳປາສັກ) ໃຫ້ສາມາດຮອງຮັບເຄື່ອງບິນປະເພດ Boeing 737 ເພື່ອຕອບສະໜອງຄວາມຕ້ອງການຂອງການເຊື່ອມໂຍງສາກົນ.

**6) ຂະແໜງໄປສະນີ-ໂທລະຄົມ:**

ສົ່ງເສີມການພັດທະນາພື້ນຖານໂຄງລ່າງດ້ານໄປສະນີໂທລະຄົມມະນາຄົມ ແລະ ອິນເຕີເນັດທີ່ມີຄວາມໄວສູງ ເພື່ອສ້າງໃຫ້ເປັນຂະແໜງອຸດສາຫະກຳທີ່ສຳຄັນໃນການຂັບເຄື່ອນການພັດທະນາເສດຖະກິດ ແລະ ສັງຄົມໃຫ້ເຂັ້ມແຂງ, ຍືນຍົງ ແລະ ເປັນຈຸດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**ຄາດໝາຍຕົ້ນຕໍ:**

- ສຸມໃສ່ຂະຫຍາຍຕາໜ່າງ ແລະ ການບໍລິການໂທລະຄົມມະນາຄົມອອກສູ່ຊົນນະບົດໃຫ້ໄດ້ 90% ຂອງຈຳນວນບ້ານໃນທົ່ວປະເທດ ແລະ ກໍ່ສ້າງລະບົບສາຍກາບໃຍແສງໃຫ້ໄດ້ປະມານ 17.200 ກິໂລແມັດ
- ຂະຫຍາຍການນຳໃຊ້ໂທລະສັບມືຖື ແລະ ຕັ້ງໂຕະໃຫ້ໄດ້ 80% ຂອງຈຳນວນປະຊາກອນທັງໝົດ
- ສ້າງສະຖານີກວດກາ ແລະ ຄຸ້ມຄອງຄື້ນຄວາມຖີ່ວິທະຍຸໃຫ້ໄດ້ 3 ແຫ່ງໃນທົ່ວປະເທດ.

**7) ຂະແໜງທ່ອງທ່ຽວ:**

ສົ່ງເສີມການທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດທີ່ມີຫລາຍສີສັນ, ກາຍເປັນ ແຫລ່ງທ່ອງທ່ຽວສີຂຽວທີ່ມີລັກສະນະຍືນຍົງ ໂດຍການມີສ່ວນຮ່ວມຂອງປະຊາຊົນ.

ຄາດໝາຍຕົ້ນຕໍ:

- ໃນປີ 2015 ໃຫ້ມີນັກທ່ອງທ່ຽວເຂົ້າມາໃນປະເທດປະມານ 2,8 ລ້ານເທື່ອຄົນ ຊຶ່ງຈະສ້າງລາຍຮັບໄດ້ປະມານ 350 ລ້ານໂດລາສະຫະລັດຕໍ່ປີ

- ທົ່ວປະເທດໃຫ້ມີໂຮງແຮມ 300 ແຫ່ງ, ຂຸດຄົ້ນ ແລະ ຂະຫຍາຍແຫລ່ງທ່ອງທ່ຽວ ທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດໃຫ້ກາຍເປັນມໍລະດົກໂລກ 2 ແຫ່ງ ແລະ ມໍລະດົກແຫ່ງຊາດ 29 ແຫ່ງ.

### 2.3.2 ຂົງເຂດສັງຄົມ

ປະຕິບັດຕາມທິດນຳກ່ຽວກັບ ການສ້າງຄວາມກົມກຽວລະຫວ່າງການພັດທະນາຂົງເຂດເສດຖະກິດກັບການພັດທະນາຂົງເຂດວັດທະນະທຳ-ສັງຄົມ ເພື່ອຮັບປະກັນຍົກສູງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນຕາມລຳດັບ ແລະ ຮັບປະກັນການພັດທະນາແບບຍືນຍົງ, ໃນ 5 ປີຕໍ່ໜ້ານີ້ພວກເຮົາຈະສຸມໃສ່ແຕ່ລະດ້ານດັ່ງນີ້:

#### 1) ຂົງເຂດການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

ຈຸດໝາຍລວມ ແມ່ນເລັ່ງໃສ່ການປັບປຸງຍົກສູງການບໍລິການ ແລະ ສົ່ງເສີມການສ້າງລາຍຮັບຂອງປະຊາຊົນໃນເຂດຊົນນະບົດ ແລະ ເຂດທີ່ຍັງທຸກຍາກດ້ວຍນະໂຍບາຍສົ່ງເສີມເປັນພິເສດ ເພື່ອຮັບປະ ກັນການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ. ວຽກງານຕົ້ນຕໍແມ່ນຕ້ອງສືບຕໍ່ຫັນລົງ ຮາກຖານຢ່າງແຂງແຮງ ແລະ ເປັນປະຈຳເພື່ອປະຕິບັດ 4 ເນື້ອໃນ ດັ່ງນີ້:

1. ດຳເນີນວຽກງານໂຄສະນາສຶກສາອົບຮົມ ການເມືອງ-ແນວຄິດ ຕິດແທ້ນກັບການປັບປຸງກໍ່ສ້າງຮາກຖານການເມືອງໃຫ້ໜັກແໜ້ນເຂັ້ມແຂງ ຖືວຽກນີ້ ເປັນອັນຕັດສິນຜົນສຳເລັດຂອງການສ້າງບ້ານພັດທະນາ:

- ໂຄສະນາສຶກສາອົບຮົມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດໃຫ້ປະຊາຊົນ ຮັບຮູ້-ເຂົ້າໃຈ ນັບມື້ເລິກເຊິ່ງ, ໃນນັ້ນເອົາໃຈໃສ່ເປັນພິເສດ ຕໍ່ຜູ້ເປັນຫລັກແຫລ່ງ ເພື່ອຊ່ວຍໂຄສະນາອະທິບາຍ ແລະ ເປັນແບບຢ່າງນຳພາຜູ້ອື່ນເຮັດຕາມ.

- ສຶກສາອົບຮົມ ປຸກລະດົມປະຊາຊົນ ໃຫ້ມີຄວາມຕື່ນຕົວ ເປັນເຈົ້າການທຳມາຫາກິນ ແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມຢູ່ດີກິນດີແກ່ຄອບຄົວທີ່ປະກອບສ່ວນເຂົ້າໃນການສ້າງສາພັດທະນາບ້ານຊ່ອງ ແລະ ປະຕິບັດພັນທະໜ້າທີ່ຂອງພົນລະເມືອງ; ເວົ້າລວມ ແມ່ນເຮັດແນວໃດໃຫ້ຊາວບ້ານມີແນວຄິດພັດທະນາ, ມີນ້ຳໃຈສາມັກຄີເອື້ອເຟື້ອຊ່ວຍເຫລືອກັນດ ພ້ອມພຽງກັນ ຜ່ານຜ່າອຸປະສັກ ແລະ ຄວາມທຸກຍາກ ເພື່ອປັບປຸງ ແລະ ຍົກລະດັບຄຸນນະພາບຊີວິດຂອງຕົນໃຫ້ສູງຂຶ້ນເລື້ອຍໆ.

- ປັບປຸງ-ກໍ່ສ້າງໜ່ວຍພັກ ໃຫ້ເປັນໜ່ວຍພັກແຂງ, ສະມາຊິກພັກ ມີຄວາມຫ້າວຫັນເປັນແບບຢ່າງຕໍ່ໜ້າ ທັງຮູ້ສຶກສາອົບຮົມ ປຸກລະດົມ ຈັດຕັ້ງນຳພາຊາວບ້ານທຳມາຫາກິນ ປູກຝັງ-ລ້ຽງສັດ ເປັນສິນຄ້າ, ຮູ້ຈັກຊື້-ຂາຍ, ເຮັດການບໍລິການ ສ້າງລາຍໄດ້ ເພື່ອແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມຢູ່ດີກິນດີແກ່ຄອບຄົວ; ພ້ອມກັບນັ້ນ ກໍເປັນແບບຢ່າງ ໃນການບຸກບືນສູ້ຊົນຮ່ຳຮຽນ, ຍົກລະດັບການສຶກສາຂອງຕົນໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ.

- ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການແນວລາວສ້າງຊາດ ແລະ ອົງການມະຫາຊົນອື່ນໆ ຢູ່ຂັ້ນບ້ານ ໃຫ້ເປັນກຳລັງແຮງຊ່ວຍໜູນການພັດທະນາບ້ານຊ່ອງ.

2.ສຸມທຸກກຳລັງ ແລະ ສຸມທຸກການຊີ້ນຳເຂົ້າໃສ່ການແກ້ໄຂຄວາມທຸກຍາກດ້ວຍການສົ່ງເສີມການຜະລິດ ແລະ ການບໍລິການເປັນສິນຄ້າ, ປັບປຸງຄຸນນະພາບຊີວິດຂອງຊາວຊົນນະບົດໃຫ້ດີຂຶ້ນໂດຍຖືອັນນີ້ເປັນໜ້າທີ່ວຽກງານໃຈກາງ ຂອງການສ້າງບ້ານພັດທະນາ:

- ກຳແໜ້ນຈຳນວນຄອບຄົວທຸກຍາກ, ໂດຍຈຳແນກໃຫ້ແຈ້ງສາເຫດຂອງມັນ ເພື່ອກຳນົດວິທີການມາດຕະການແກ້ໄຂ ໃຫ້ຖືກຕ້ອງແທດເໝາະ ໂດຍແນໃສ່ສຳເລັດຕາມຄາດໝາຍ ຫລື ເຖິງປີ 2015 ຢູ່ແຕ່ລະບ້ານ ບໍ່ໃຫ້ມີຄອບຄົວທຸກຍາກ ເກີນ 10% ຂອງຈຳນວນຄອບຄົວທັງໝົດ.

- ໃນການແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມຢູ່ດີກິນດີ ຂອງຄອບຄົວນັ້ນ ໃຫ້ເອົາໃຈໃສ່ສ້າງເງື່ອນໄຂ ຫລື ປັດໃຈອັນຈຳເປັນຈຳນວນໜຶ່ງ ດັ່ງນີ້:

+ ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງ ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະແມ່ນທາງ, ໄຟຟ້າ, ຊົນລະປະທານ, ສູນສົ່ງເສີມການຜະລິດກະສິກຳ...

+ ເອົາໃຈໃສ່ ຕໍ່ການຈັດຕັ້ງຝຶກອົບຮົມ, ໃຫ້ມີຄວາມຮູ້ພື້ນຖານ ແກ່ປະຊາຊົນ ກ່ຽວກັບການປູກຝັງ-ລ້ຽງສັດເປັນສິນຄ້າ ໂດຍອີງໃສ່ທ່າແຮງ ຂອງແຕ່ລະພື້ນທີ່ຕົວຈິງ ແລະ ຈັດຝຶກອົບຮົມກັບທີ່ເປັນຕົ້ນຕໍ.

+ ຕອບສະໜອງທຶນ (ເປັນເງິນ, ເປັນສັດລ້ຽງ, ເປັນແນວພັນພືດ ຫລື ເປັນວັດຖຸອື່ນໆ) ທີ່ຈຳເປັນ ໃຫ້ແກ່ປະຊາຊົນ (ໂດຍສະເພາະແມ່ນຜູ້ທີ່ມີຄວາມຕື່ນຕົວຢາກເຮັດແທ້ທຳຈິງ) ໂດຍມີການອະທິບາຍ ແນະນຳໃຫ້ລະອຽດຈະແຈ້ງ ກ່ຽວກັບວິທີການນຳໃຊ້ຄຸ້ມຄອງ, ແຕ່ບໍ່ມີເງື່ອນໄຂ ຜູກມັດຫລາຍ.

+ ມີການຕິດຕາມ, ແນະນຳຊ່ວຍໜູນ ທາງດ້ານວິຊາການ ເພື່ອໃຫ້ການປູກຝັງ-ລ້ຽງສັດຂອງເຂົາເຈົ້າມີປະສິດທິຜົນ.

+ ຕ້ອງມີຕະຫລາດ ຊື້-ຂາຍ ຮອງຮັບ (ຜະລິດອອກມາແລ້ວໃຫ້ໄດ້ຂາຍ) ແລະ ມີການປຸງແຕ່ງຍິ່ງເປັນການດີ.

+ ຈັດຕັ້ງໃຫ້ມີກອງທຶນແກ້ໄຂຄວາມທຸກຍາກຫລືສະຫະກອນສິນເຊື່ອ, ສະຫະກອນບໍລິການ; ສະຫະກອນຜະລິດ ລວມທັງທະນາຄານເຂົ້າ ທະນາຄານສັດ... ເພື່ອຊຸກຍູ້ສົ່ງເສີມການຜະລິດ ແລະ ການບໍລິການສ້າງລາຍໄດ້ຂອງປະຊາຊົນ.

+ ຈັດຕັ້ງກຸ່ມຜູ້ຜະລິດ, ກຸ່ມລ້ຽງສັດ, ກຸ່ມນຳໃຊ້ນ້ຳ, ກຸ່ມຫັດຖະກຳ, ກຸ່ມຜູ້ຜະລິດເຂົ້າ-ພືດຜັກປອດສານພິດ... ເພື່ອສະດວກໃນການຈັດຕັ້ງຝຶກອົບຮົມ ແລະ ໃຫ້ການບໍລິການ ທາງດ້ານວິຊາການ, ລວມທັງໃຫ້ຂໍ້ມູນຂ່າວສານ ແລະ ການປົກປ້ອງຜົນປະໂຫຍດຂອງກຸ່ມ.

+ ຄົ້ນຄວ້າອອກນະໂຍບາຍ ແລະ ມາດຕະການສົ່ງເສີມເປັນພິເສດ ຕໍ່ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ທີ່ໄປລົງທຶນ ເຂົ້າໃນໂຄງການແກ້ໄຂຄວາມທຸກຍາກ ຂອງປະຊາຊົນໃນເຂດ ທີ່ຢູ່ຫ່າງໄກສອກຫລີກ ແລະ ທຸລະກັນດານ, ເພື່ອສ້າງບາດກ້າວບຸກທະລຸໃນການແກ້ໄຂຄວາມທຸກຍາກໃຫ້ເປັນຈິງ.

+ ໃຫ້ຈັດສັນພື້ນທີ່ທຳການຜະລິດ ແລະ ຕັ້ງຖິ່ນຖານພູມລຳເນົາຄົງທີ່ ໃຫ້ແກ່ປະຊາຊົນ, ກ່ອນອື່ນ ແມ່ນຜູ້ທີ່ບໍ່ມີບ່ອນທຳມາຫາກິນ ແລະ ບໍ່ມີຖິ່ນຖານຖາວອນ, ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຕ່າງໆ, ຜູ້ທີ່ເຮັດໄຮ່ເລື່ອນລອຍ, ຜູ້ທີ່ປະສົບກັບໄພພິບັດທາງທຳມະຊາດ ແລະ ອື່ນໆ...ເພື່ອສະກັດກັ້ນ ແລະ ແກ້ໄຂສະພາບການເຄື່ອນຍ້າຍແບບຊະຊາຍຂອງພົນລະເມືອງໃຫ້ຕົກໄປ; ໃຫ້ປະຊາຊົນມີຄວາມອຸ່ນອ່ຽນ ໃນການທຳມາຫາກິນແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມຢູ່ດີກິນດີໃຫ້ແກ່ຄອບຄົວບົນພື້ນຖານການມີດິນເປັນຂອງຕົນເອງ.

3. ການພັດທະນາຂົງເຂດສັງຄົມ-ວັດທະນະທຳ ໃຫ້ສົມຄູ່ກັບເສດຖະກິດ ໂດຍສະເພາະ

ແມ່ນການສົ່ງເສີມການສຶກສາ ແລະ ການຂະຫຍາຍຕາໜ່າງບໍລິການ ດ້ານສາທາລະນະສຸກ ໃຫ້ທົ່ວເຖິງໃນແຕ່ລະບ້ານ ເພື່ອສ້າງເງື່ອນໄຂ ໃຫ້ແກ່ການບັນລຸເປົ້າໝາຍສະຫັດສະວັດ ດ້ານການພັດທະນາ ໃນປີ 2015 ແລະ ເປັນພື້ນຖານອັນໜັກແໜ້ນ ໃຫ້ແກ່ການພັດທະນາໃນຂັ້ນຕໍ່ໄປ.

ບ້ານ ແມ່ນບ່ອນດຳລົງຊີວິດ ແລະ ທຳມາຫາກິນ ເປັນປະຈຳໃນແຕ່ລະວັນ ຂອງປະຊາຊົນ, ສະນັ້ນ ຕ້ອງເຮັດໃຫ້ບ້ານມີການພັດທະນາທາງດ້ານສັງຄົມ-ວັດທະນະທຳ ທີ່ສົມຄູ່ກັບເສດຖະກິດ ເພື່ອໃຫ້ ບ້ານເປັນບ່ອນຢູ່ອາໄສ ທີ່ມີຊີວິດຊີວາ ແລະ ມີພື້ນຖານແຫ່ງການພັດທະນາແບບຍືນຍົງ; ເມື່ອເປັນແນວ ນັ້ນຕ້ອງເອົາໃຈໃສ່ ດັ່ງນີ້:

- ອະນຸລັກ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳ-ປະເພນີ ຂອງປະຊາຊົນບັນດາເຜົ່າໃນແຕ່ລະບ້ານ; ເສີມສ້າງຄວາມສາມັກຄີປອງດອງ ລະຫວ່າງເຜົ່າ ໃຫ້ແໜ້ນແຟ້ນ ບໍ່ໃຫ້ມີການຈຳແນກ ຫລື ດູຖູກ ປະໝາດເຜົ່ານັ້ນ ເຜົ່ານີ້, ທັງມີສະຕິຕໍ່ກົນອຸບາຍແບ່ງແຍກຄວາມສາມັກຄີ ລະຫວ່າງເຜົ່າ ກໍຄືການສວຍໃຊ້ບັນຫາສາສະໜາ ແລະ ບັນຫາອື່ນໆ...

- ຈັດຕັ້ງເທສະການ ຫລື ກິດຈະກຳສົ່ງເສີມວັດທະນະທຳ ຂອງເຜົ່າຕ່າງໆ ເປັນປະຈຳ ຕາມມູນເຊື້ອ ແລະ ປະເພນີ ຂອງແຕ່ລະເຜົ່າ (ງານບຸນປະເພນີ) ຢູ່ໃນບ້ານ ເພື່ອສ້າງບັນຍາກາດເບີກບານ, ເຮັດໃຫ້ຊາວບ້ານ ໂດຍສະເພາະແມ່ນໄວໜຸ່ມ ມີຄວາມຮັກຄວາມຜູກພັນກັບບ້ານ, ຢາກດຳລົງຊີວິດຢູ່ບ້ານ (ບໍ່ຢາກໜີໄປຢູ່ບ່ອນອື່ນ), ສະນັ້ນ ບ້ານເຮົາ ຫລື ກຸ່ມບ້ານ ໃຫ້ມີສະໂມສອນ ຫລື ຫໍວັດທະນະທຳ, ມີຫ້ອງສະໝຸດຫລືຫ້ອງອ່ານໜັງສື, ມີໂທລະໂຄ່ງ ແລະກະດານແຈ້ງຂ່າວ, ມີເດີ່ນຫລິ້ນກິລາບາງປະເພດ ມີສະຖານທີ່ສາທາລະນະ ເພື່ອເປັນບ່ອນເຕົ້າໂຮມມວນຊົນ.

- ຢູ່ແຕ່ລະບ້ານ ຕ້ອງມີການຈັດຕັ້ງຮຽນໜັງສື ເພື່ອລົບລ້າງການກືກໜັງສື ແລະ ບຳລຸງວັດທະນະທຳ ໃຫ້ປະຊາຊົນ ໂດຍຕິດພັນກັບການຝຶກອົບຮົມສິ່ງຄວາມຮູ້ ກ່ຽວກັບການທຳມາຫາກິນ ປູກຝັງ-ລ້ຽງສັດ; ຈັດຕັ້ງການໂຄງສະນາສຸຂະສຶກສາ ເປັນປົກກະຕິ, ປ້ອງກັນ ແລະ ເຝົ້າລະວັງການເກີດພະຍາດລະບາດໃນຄົນ ແລະ ໃນສັດ; ຮັບປະກັນໃຫ້ປະຊາຊົນໄດ້ຮັບການກວດສຸຂະພາບ, ປິ່ນປົວພະຍາດ ແລະ ໄດ້ຮັບການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງ;ໃນສະເພາະໜ້ານີ້ ຕ້ອງປະຕິບັດນະໂຍບາຍ ຮຽນຈົບຊັ້ນປະຖົມພາກບັງຄັບ ແລະ ການເກີດລູກຢູ່ສຸກສາລາ, ຢູ່ໂຮງໝໍ ໂດຍບໍ່ເສຍຄ່າໃດໆ ໃຫ້ເປັນຈິງ.

4. ຈັດຕັ້ງປະຕິບັດ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ຢູ່ຮາກຖານບ້ານ ແລະ ກຸ່ມບ້ານຢ່າງເປັນລະບົບຕໍ່ເນື່ອງ ປົກກະຕິ; ສ້າງບ້ານປ້ອມໝັ້ນ ແລະ ກຸ່ມບ້ານສູ້ຮົບ ຕິດລຽນ ໃນບັນດາເຂດ ແລະ ບໍລິເວນຈຸດສຸມ; ແກ້ໄຂໄດ້ໜໍ່ແໜງ ແລະ ປັດໄຈ ຂອງຄວາມບໍ່ສະຫງົບປອດໄພ:

- ຈັດຕັ້ງໜ່ວຍກອງຫລອນ ແລະ ໜ່ວຍປ້ອງກັນຄວາມສະຫງົບຂອງບ້ານ ແລະ ກຸ່ມບ້ານ ໂດຍມີ ການຫັດແອບ, ຝຶກຊ້ອມ ເປັນປົກກະຕິ; ມີການປະກອບອາວຸດຢ່າງເໝາະສົມ.

- ກຳນົດລະບຽບການເຄື່ອນໄຫວ, ປະສານສົມທົບ ແລະ ຂອບເຂດຄວາມຮັບຜິດຊອບ ໃຫ້ຈະແຈ້ງ ລະຫວ່າງ ກຳລັງຕ່າງໆ, ທັງມີການປະຕິບັດລະບອບນະໂຍບາຍຢ່າງເໝາະສົມ.

- ກຳນົດກົດລະບຽບການຄຸ້ມຄອງພົນລະເມືອງ ແລະ ລະບຽບການຮັກສາຄວາມສະຫງົບ-ຄວາມ ເປັນລະບຽບຮຽບຮ້ອຍ, ລວມທັງລະບຽບການເສຍຄ່າທຳນຽມຕ່າງໆ ສຳລັບພົນລະເມືອງຢູ່ຂັ້ນບ້ານ ໃຫ້ເປັນລະບົບເອກະພາບ.

- ຕັ້ງໜ້າກຳຈັດ ແລະ ແກ້ໄຂການປູກຝິ່ນ, ບັນຫາຢາເສບຕິດ (ໂດຍສະເພາະໃນໂຮງຮຽນ ແລະ ຖັນແຖວຊາວໜຸ່ມ), ບັນຫາການພະນັນ ແລະ ປະກົດການຫຍໍ້ທໍ້ອື່ນໆ ໃນສັງຄົມ ຢ່າງຈິງຈັງ ດ້ວຍກຳລັງແຮງສັງລວມ ທີ່ມີຢູ່ໃນແຕ່ລະຮາກຖານບ້ານ, ເຮັດໃຫ້ບ້ານ ເປັນບ້ານປອດຢາເສບຕິດ, ເປັນບ້ານ

ປອດຄະດີ...

4 ຄາດໝາຍທີ່ກົມການເມືອງສູນກາງພັກວາງອອກເປັນທິດຊີ້ນຳຕົ້ນຕໍ ດັ່ງນີ້:

1. ບ້ານມີລະບົບການເມືອງເຂັ້ມແຂງ, ໃນນັ້ນມີໜ່ວຍພັກທີ່ໄດ້ຮັບການກໍ່ສ້າງແລະຍັ້ງຢືນເປັນໜ່ວຍພັກແຂງ, ມີອົງການປົກຄອງບ້ານ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນທີ່ ເຄື່ອນໄຫວຕາມພາລະໜ້າທີ່ ຢ່າງເປັນປົກກະຕິ ສາມາດເຕົ້າໂຮມຄວາມສາມັກຄີ ປະຊາຊົນບັນດາເຜົ່າຊັ້ນຄົນ, ບັນດາເຜົ່າພາຍໃນບ້ານ, ທັງປຸກລະດົມ ແລະ ຈັດຕັ້ງນຳພາຊາວບ້ານ ເປັນກຳລັງແຮງໃນການສ້າງສາພັດທະນາບ້ານຊ່ອງ.

2. ຊາວບ້ານໄດ້ຮັບການສຶກສາອົບຮົມດ້ານການເມືອງ-ແນວຄິດ, ມີຄວາມຕື່ນຕົວ ການເມືອງ ແລະ ມີຄວາມຫ້າວຫັນ ເປັນເຈົ້າການເຂົ້າຮ່ວມວຽກງານລວມຂອງບ້ານກໍຄືໃນການທຳມາຫາກິນແກ້ໄຂຄວາມທຸກຍາກ, ສ້າງຄວາມຢູ່ດີກິນດີ ແລະ ສ້າງຄວາມຮັ່ງມີແກ່ຄອບຄົວ, ທັງມີຄວາມສາມັກຄີປອງດອງ ແລະ ມີນ້ຳໃຈເອື້ອເຟື້ອຊ່ວຍເຫລືອກັນ ເປັນຊຸມຊົນທີ່ມີການຄຸ້ມຄອງກັນແໜ້ນ, ຮູ້ໄກ່ເກ່ຍແກ້ໄຂບັນຫາ ນຳກັນ ຢ່າງຖືກຕ້ອງເປັນທຳ.

3. ບ້ານມີພື້ນຖານໂຄງລ່າງ ຫລື ພື້ນຖານວັດຖຸເຕັກນິກ ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ ໃນລະດັບທີ່ສາມາດຮັບປະກັນ ໃຫ້ຊາວບ້ານດຳເນີນການຜະລິດ ແລະ ການບໍລິການ ເປັນສິນຄ້າ ສ້າງລາຍໄດ້ເຂົ້າຄອບຄົວເປັນປົກກະຕິ; ພາຍໃນບ້ານ ບໍ່ມີຄອບຄົວທຸກຍາກ, ທຸກຄອບຄົວລ້ວນແຕ່ມີພໍກິນພໍໃຊ້ ແລະ ມີຊີວິດການເປັນຢູ່ປົກກະຕິດີ; ເດັກໃນເກນອາຍຸເຂົ້າຮຽນ ໄດ້ຮຽນໜັງສືບໍ່ຫລຸດ 98%, ຜູ້ໃຫຍ່ມີອາຍຸ 15 ປີ ຂຶ້ນໄປ ຕ້ອງມີລະດັບການສຶກສາຈົບຊັ້ນປະຖົມບຳລຸງ ແລະມີແຜນຍົກລະດັບສູງຂຶ້ນເລື້ອຍໆ; ບ້ານໄດ້ຮັບການຍັ້ງຢືນເປັນບ້ານແບບຢ່າງ ດ້ານສາທາລະນະສຸກ, ທຸກຄອບຄົວມີກິນ, ມີສຸຂະພາບອະນາໄມ, ມີນ້ຳສະອາດໃຊ້ ແລະ ມີວິດຖ່າຍ, ເດັກໃນບ້ານໄດ້ຮັບການສັກຢາ ແລະ ຢອດຢາກັນພະຍາດບໍ່ຫລຸດ 95%; ອັດຕາສ່ວນການຕາຍ ຂອງເດັກ ແລະ ຂອງແມ່ຕ້ອງຕ່ຳກວ່າຄາດໝາຍລວມທີ່ລັດວາງອອກ ໃນແຕ່ລະໄລຍະ; ເປັນບ້ານທີ່ເປັນລະບຽບຈົບງາມ ແລະ ມີສິ່ງແວດລ້ອມທີ່ດີ.

4. ບ້ານມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ເປັນບ້ານປອດຢາເສບຕິດ ເປັນບ້ານປອດຄະດີ ໂດຍມີຊາວບ້ານເອງເຂົ້າຮ່ວມ ເປັນກຳລັງຕົ້ນຕໍໃນໜ່ວຍກອງຫລອນ ແລະ ໜ່ວຍປ້ອງກັນຄວາມສະຫງົບບ້ານ.

ນອກນັ້ນ, ຍັງເອົາບັນດາບ້ານ, ກຸ່ມບ້ານ, ເຂດພື້ນຖານການປະຕິວັດທີ່ຍັງທຸກຍາກເປັນເປົ້າໝາຍ ແລະ ຈຸດສຸມ; ເອົາໃຈໃສ່ສົ່ງເສີມການສ້າງລາຍຮັບໃຫ້ຄົວເຮືອນດ້ວຍການສົ່ງເສີມການຜະລິດເປັນ ສິນຄ້າທີ່ມີທ່າແຮງທາງດ້ານການຕະຫລາດ ແລະ ມູນເຊື້ອການຜະລິດຂອງປະຊາຊົນ ໂດຍສູນບໍລິການ ເຕັກນິກກະສິກຳຕ້ອງເຮັດໜ້າທີ່ນຳພາການເຮັດການຜະລິດໂດຍກົງ, ສະໜອງແນວພັນ, ໃຫ້ການຊ່ວຍເຫລືອທາງດ້ານວິຊາການແກ່ຊາວກະສິກອນຢ່າງທົ່ວເຖິງ. ພ້ອມກັນນັ້ນ, ກໍຕ້ອງໄດ້ພັດທະນາ ແລະ ສະໜອງພື້ນຖານໂຄງລ່າງຊົນນະບົດທີ່ຈຳເປັນໃຫ້ບ່ອນທີ່ຍັງຂາດເຂີນ, ເຮັດໃຫ້ຊົນນະບົດດັ່ງທີ່ກ່າວມາ ນັ້ນໄດ້ຮັບການພັດທະນາແບບຍືນຍົງ, ກາຍເປັນຊຸມຊົນໃໝ່, ເປັນເຂດພັດທະນາໃໝ່ທີ່ນຳໃຊ້ຊັບພະຍາກອນທຳມະຊາດແບບບໍ່ບົກແຫ້ງ.ເພື່ອໃຫ້ບັນລຸແຜນການ ດັ່ງກ່າວນັ້ນໄດ້ມີຄາດໝາຍໃນການປະຕິບັດຕົ້ນຕໍ ດັ່ງນີ້:

- ສູ້ຊົນເຮັດໃຫ້ອັດຕາຄອບຄົວທຸກຍາກຫລຸດລົງຕ່ຳກວ່າ 10% ຂອງຄອບຄົວທັງໝົດໃນທົ່ວປະເທດ.
- ສ້າງບ້ານຕົວແບບພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍໃຫ້ໄດ້ເມືອງລະ 1-2 ແຫ່ງ.

- ສູ້ຊົນເຕົ້າໂຮມບ້ານນ້ອຍຢູ່ຊົນນະບົດ ແລະ ເຂດຫ່າງໄກສອກຫລີກເຂົ້າເປັນບ້ານໃຫ່ຍ ແລະ ສ້າງຊຸມຊົນໃໝ່ (ຕົວເມືອງນ້ອຍ) ໃຫ້ເປັນຕົວແບບ, ແຂວງໜຶ່ງໃຫ້ໄດ້ 1-2 ແຫ່ງ.

2) ດ້ານການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດ ຖືເອົາວຽກງານການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດເປັນປັດໄຈທີ່ສຳຄັນໃນການພັດທະນາ, ຮັບປະກັນໃຫ້ການສຶກສາຂະຫຍາຍທັງປະລິມານ ແລະ ຄຸນນະພາບຢ່າງຕໍ່ເນື່ອງ, ສືບຕໍ່ປະຕິຮູບລະບົບການສຶກສາແຫ່ງຊາດຢ່າງຕັ້ງໜ້າ, ປັບປຸງສະຖາບັນອະຊີວະສຶກສາ ແລະ ຂະແໜງວິຊາຊີບໃຫ້ມີຄຸນນະພາບສູງຂຶ້ນ ເພື່ອສ້າງ ບຸກຄະລາກອນປະເພດຕ່າງໆເຊັ່ນ: ກຳມະກອນວິຊາຊີບ, ນາຍຊ່າງ, ນັກວິຊາການ, ນັກວິສະວະກອນ, ຜູ້ຄຸ້ມຄອງບໍລິຫານ, ຜູ້ປະກອບການ, ຜູ້ຈັດການ, ວິຊາຊີບດ້ານການກະສິກຳ-ປ່າໄມ້ ແລະ ອື່ນໆໃຫ້ສອດຄ່ອງກັບຄວາມຕ້ອງການຕົວຈິງຂອງແຕ່ລະຂົງເຂດວຽກງານ ແລະ ໃຫ້ສາມາດປະກອບອາຊີບໄດ້ຢ່າງໝັ້ນຄົງ ແລະ ມີລາຍຮັບສູງຂຶ້ນ. ອັນສຳຄັນຕ້ອງຮັບປະກັນໃຫ້ດ້ານການສຶກສາສາມາດບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs).ເພື່ອໃຫ້ບັນລຸແຜນການດັ່ງກ່າວນັ້ນ ໄດ້ມີຄາດໝາຍໃນການປະຕິບັດຕົ້ນຕໍ ດັ່ງນີ້:

- ສູ້ຊົນເຮັດໃຫ້ອັດຕາເຂົ້າຮຽນສຸດທິຊັ້ນປະຖົມເພີ່ມຂຶ້ນເປັນ98%, ເພີ່ມອັດຕາເຂົ້າຮຽນລວມຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ແລະ ຊັ້ນມັດທະຍົມຕອນປາຍໃຫ້ໄດ້ 75% ເຊັ່ນດຽວກັນ.
- ຕັ້ງໜ້າສ້າງເງື່ອນໄຂອັນຈຳເປັນ ເພື່ອລຶບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນບັນດາເຜົ່າໃນກຸ່ມ ເປົ້າໝາຍອາຍຸ 15-24 ປີ ໃຫ້ບັນລຸ 99%.
- ສ້າງຕັ້ງໂຮງຮຽນເຕັກນິກວິຊາຊີບໃນບັນດາຕົວເມືອງທີ່ມີເສດຖະກິດຂະຫຍາຍຕົວດີໃຫ້ໄດ້ຢ່າງໜ້ອຍ 3 ແຫ່ງ.

**3) ດ້ານສາທາລະນະສຸກ:**

ປະຕິບັດທິດນຳເອົາການກັນພະຍາດ ແລະ ສົ່ງເສີມສຸຂະພາບເປັນຕົ້ນຕໍໄປພ້ອມກັບການຖືເອົາການປິ່ນປົວທີ່ມີຄຸນນະພາບ ແລະ ສະໜອງການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງເປັນສຳຄັນ, ເຮັດໃຫ້ພົນລະເມືອງລາວມີສຸຂະພາບທີ່ດີ, ບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs). ເພື່ອໃຫ້ບັນລຸແຜນການດັ່ງກ່າວນັ້ນໄດ້ມີຄາດໝາຍໃນການປະຕິບັດຕົ້ນຕໍດັ່ງນີ້:

- ຫລຸດອັດຕາການຕາຍຂອງແມ່ໃຫ້ຍັງເຫລືອ 260 ຄົນ ຕໍ່ເດັກເກີດມີຊີວິດ 100.000 ຄົນ, ຫລຸດອັດ ຕາການຕາຍຂອງເດັກນ້ອຍຕ່ຳກວ່າ 1 ປີ ໃຫ້ຍັງເຫລືອ 45 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນ, ຫລຸດອັດ ຕາການຕາຍຂອງເດັກນ້ອຍຕ່ຳກວ່າ 5 ປີ ໃຫ້ຍັງເຫລືອ 70 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນ.
- ອັດຕາສ່ວນປະຊາກອນລວມນຳໃຊ້ນ້ຳສະອາດໃຫ້ໄດ້ 80% ຂອງຈຳນວນປະຊາກອນທັງໝົດ, ອັດຕາສ່ວນປະຊາກອນນຳໃຊ້ວິດຖ່າຍໃຫ້ໄດ້ 60% ຂອງຈຳນວນປະຊາກອນທັງໝົດ.
- ຄວບຄຸມການແຜ່ລະບາດຂອງພະຍາດໄຂ້ຍຸງ, ວັນນະໂລກ ແລະ ເຊື້ອ HIV/AIDS.

**4) ດ້ານແຮງງານ-ສະຫວັດດີການສັງຄົມ**

ພັດທະນາ ແລະ ສ້າງກຳລັງແຮງງານລາວໃຫ້ມີສີມື, ມີຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ, ມີທັດສະນະຄະຕິ ແລະ ລະບຽບວິໄນ, ມີວຽກເຮັດງານທຳທີ່ເໝາະສົມ, ເຮັດໃຫ້ຜູ້ອອກແຮງງານໄດ້ຮັບການປົກປ້ອງຄຸ້ມຄອງ ແລະ ໄດ້ຮັບສະຫວັດດີການທີ່ດີກວ່າເກົ່າ; ປະຕິບັດນະໂຍບາຍກະຕັນຍູຮູ້ບຸນຄຸນຕໍ່ຜູ້ທີ່ມີຄຸນງານຄວາມດີຕໍ່ປະເທດຊາດໃຫ້ທົ່ວເຖິງ; ພ້ອມກັນນັ້ນ ກໍພັດທະນາລະບົບສະຫວັດດີການສັງຄົມໃຫ້ເຂັ້ມແຂງ; ປຸກລະດົມທົ່ວສັງຄົມໃຫ້ມີສ່ວນຮ່ວມໃນການເບິ່ງແຍງຊ່ວຍເຫລືອຜູ້ ດ້ອຍໂອກາດ ແລະ ຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆ.ເພື່ອໃຫ້ບັນລຸແຜນການ ດັ່ງກ່າວນັ້ນໄດ້ມີຄາດໝາຍໃນການປະຕິບັດຕົ້ນຕໍ ດັ່ງນີ້:

- ຄາດຄະເນຄວາມຕ້ອງການແຮງງານໃນ 5 ປີຕໍ່ໜ້າມີປະມານ 3,3 ລ້ານຄົນ; ໃນນັ້ນ

ຂົງເຂດກະສິກຳປະມານ 70% ຂົງເຂດອຸດສາຫະກຳ-ກໍ່ສ້າງ-ບໍ່ແຮ່ກວມ 7%, ຂົງເຂດການບໍລິການກວມປະມານ 23%; ສູ້ຊົນຈັດຫາວຽກເຮັດງານທຳໃຫ້ກຳລັງແຮງງານໄດ້ເຂົ້າສູ່ຕະຫລາດແຮງງານໃໝ່ຢ່າງ ໜ້ອຍໃຫ້ໄດ້ 277.000 ຄົນ; ຄວບຄຸມອັດຕາການຫວ່າງງານສະເລ່ຍໃຫ້ຢູ່ໃນລະດັບບໍ່ເກີນ 2%; ສ້າງສູນພັດທະນາສີມືແຮງງານຂັ້ນແຂວງໃຫ້ໄດ້ 7 ສູນ.

- ປະຕິບັດນະໂຍບາຍຕໍ່ພະນັກງານອາວຸໂສທີ່ເຂົ້າຮ່ວມການປະຕິວັດກ່ອນປີ 1954 ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດໃຫ້ໄດ້ຢ່າງໜ້ອຍປະມານ 71.000 ທ່ານ; ປຸກເຮືອນໃຫ້ພະນັກງານຜູ້ເສຍອົງຄະພິເສດໃຫ້ສຳເລັດ 100% .
- ຂະຫຍາຍລະບົບປະກັນສັງຄົມລົງສູ່ບັນດາແຂວງ, ເຮັດໃຫ້ປະຊາຊົນໄດ້ຮັບການປະກັນສຸຂະພາບກວມ 50% ຂອງພົນລະເມືອງ.

**5) ດ້ານຖະແຫລງຂ່າວ ແລະ ວັດທະນະທຳ:**

ວຽກງານຖະແຫລງຂ່າວ ຕ້ອງສຸມໃສ່ການປະຕິບັດໜ້າທີ່ເປັນກະບອກສຽງໂຄສະນາເຜີຍແຜ່ແນວທາງຂອງພັກ ແລະ ລະບຽບກົດໝາຍຂອງລັດ, ເຮັດໃຫ້ປະຊາຊົນໄດ້ຮັບຂໍ້ມູນຂ່າວສານ, ສາລະຄວາມຮູ້ກ່ຽວກັບວິທະຍາສາດ-ວິທະຍາການໃໝ່, ກ່ຽວກັບແບບແຜນດຳລົງຊີວິດທີ່ສົດໃສ; ຕໍ່ສູ້ຕ້ານປະກົດການຫຍໍ້ທໍ້ຕ່າງໆໃນສັງຄົມ; ອະນຸລັກຮັກສາວັດທະນະທຳເປັນພື້ນຖານແຫ່ງຄວາມຍືນຍົງຂອງຊາດ.

**ຄາດໝາຍຕົ້ນຕໍຮອດປີ 2015:**

- ຂະຫຍາຍການກະຈາຍສຽງຂອງສະຖານີວິທະຍຸກະຈາຍສຽງໃຫ້ກວມເອົາຫລາຍກວ່າ 95% ຂອງພື້ນທີ່ທົ່ວປະເທດ.
- ປັບປຸງຄຸນນະພາບຂອງລາຍການໂທລະພາບຢູ່ບັນດາແຂວງ ແລະ ຂະຫຍາຍເວລາອອກອາກາດຢ່າງໜ້ອຍໃຫ້ໄດ້ 10 ຊົ່ວໂມງຕໍ່ວັນ, ຂະຫຍາຍສະຖານີຮັບສັນຍານໃຫ້ສາມາດກວມເອົາ 80% ຂອງພື້ນທີ່ທົ່ວປະເທດ.
- ສູ້ຊົນສ້າງບ້ານວັດທະນະທຳໃຫ້ໄດ້ຫລາຍກວ່າ 700 ບ້ານ ແລະ ຄອບຄົວວັດທະນະທຳໃຫ້ໄດ້ ຫລາຍກວ່າ 100.000 ຄອບຄົວ, ສ້າງສວນສາທາລະນະຢູ່ສູນກາງຢ່າງໜ້ອຍໃຫ້ໄດ້ 4 ແຫ່ງ, ເທດສະ ບານແຂວງໆ ລະ 1 ແຫ່ງ, ເທດສະບານເມືອງໆລະ 1 ແຫ່ງ.

**6) ຂະແໜງຍຸຕິທຳ:**

ສຸມໃສ່ກໍ່ສ້າງບຳລຸງນັກກົດໝາຍ ແລະ ພະນັກງານຍຸຕິທຳໃຫ້ໄດ້ທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອໃຫ້ສົມຄູ່ກັບໜ້າທີ່ການເມືອງໃນໄລຍະໃໝ່, ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດກ່ຽວກັບການສ້າງລັດແຫ່ງກົດໝາຍ ແລະ ການຄຸ້ມຄອງການປະຕິບັດຄວາມຍຸຕິທຳບົນພື້ນຖານກົດໝາຍ, ປັບປຸງກົງຈັກການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ, ລະບຽບການບໍລິຫານດ້ານຍຸຕິທຳໃຫ້ສອດຄ່ອງຕາມທິດຮັບໃຊ້ປະຊາຊົນໃຫ້ວ່ອງໄວ ແລະ ມີປະສິດທິຜົນສູງ.ເພື່ອໃຫ້ບັນລຸແຜນການ ດັ່ງກ່າວນັ້ນໄດ້ມີຄາດໝາຍໃນການປະຕິບັດຕົ້ນຕໍ ດັ່ງນີ້:

- ສຸມໃສ່ສ້າງປະມວນກົດໝາຍແພ່ງ ແລະ ອາຍາ, ສ້າງກົດໝາຍ ແລະ ນິຕິກຳໃໝ່ທີ່ຈຳເປັນ, ພ້ອມທັງປັບປຸງກົດໝາຍ ແລະ ນິຕິກຳທີ່ປະກາດໃຊ້ໄປແລ້ວໃຫ້ສອດຄ່ອງ
- ເອົາໃຈໃສ່ຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດໃຫ້ສຳເລັດຢ່າງທັນການ, ຍົກສູງຄຸນນະພາບຂອງການອອກໃບຢັ້ງຢືນຄວາມຖືກຕ້ອງຂອງເອກະສານຕ່າງໆ, ພ້ອມທັງແກ້ໄຂຂໍ້ ຂັດແຍ້ງທາງດ້ານເສດຖະກິດໃຫ້ວ່ອງໄວ, ຮັບປະກັນຄວາມຖືກຕ້ອງເປັນທຳ.

7) ການພັດທະນາປະຊາກອນ, ຄວາມສະເໝີພາບຍິງ-ຊາຍ ແລະ ການພັດທະນາແມ່ຍິງ ແລະ ເຍົາວະຊົນ-ຊາວໜຸ່ມ:

ດ້ານປະຊາກອນ:

ສົ່ງເສີມໃຫ້ທຸກຄົນເອົາໃຈໃສ່ການສຶກສາຮ່ຳຮຽນຍົກລະດັບຄວາມຮູ້ຄວາມສາມາດ, ມີວຽກເຮັດງານທຳ, ອາຊີບ ແລະ ມີລາຍໄດ້ສູງຂຶ້ນ, ພ້ອມກັນນັ້ນກໍເອົາໃຈໃສ່ຮັກສາສຸຂະພາບພະລານາໄມໃຫ້ສົມບູນ, ມີຄຸນສົມບັດສິນທຳ ແລະ ມີຄວາມຮັກຊາດດູດດື່ມ; ເອົາໃຈໃສ່ຍົກອັດຕາດັດຊະນີໝາຍຊັບພະຍາກອນມະນຸດ (HDI) ໃຫ້ສູງຂຶ້ນຕື່ມ. ເພື່ອໃຫ້ບັນລຸແຜນການດັ່ງກ່າວນັ້ນໄດ້ມີຄາດໝາຍໃນການປະຕິ ບັດຕົ້ນຕ ດັ່ງນີ້:

- ຄາດຄະເນວ່າຮອດປີ 2015 ປະເທດເຮົາຈະມີປະຊາກອນປະມານ 6,9 ລ້ານຄົນ, ດ້ວຍຈັງຫວະການຂະຫຍາຍຕົວໃນລະດັບ 2% ຕໍ່ປີ
- ການພັດທະນາແມ່ຍິງ, ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ. ອັນນີ້ເປັນນະໂຍບາຍໃຫຍ່ອັນໜຶ່ງຂອງພັກ ແລະ ລັດເຮົາ

**ຄາດໝາຍຕົ້ນຕໍ:**

- ສູ້ຊົນເພີ່ມຈຳນວນເພດຍິງເຂົ້າໃນຄະນະນຳຂອງອົງການຈັດຕັ້ງພັກ-ລັດ-ມະຫາຊົນຂັ້ນຕ່າງໆ ກວມ 15% ຂຶ້ນໄປ, ເປັນສະມາຊິກສະພາແຫ່ງຊາດໃຫ້ໄດ້ 30% ຂຶ້ນໄປ
- ຫລຸດຜ່ອນການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃຫ້ໄດ້ໃນລະດັບສູງ
- ການພັດທະນາເຍົາວະຊົນ-ຊາວໜຸ່ມ:

ສຶກສາອົບຮົມຄົນຮຸ່ນໜຸ່ມໃຫ້ມີນ້ຳໃຈຮັກຊາດ, ມີໂລກະທັດ, ຊີວະທັດກ້າວໜ້າ; ສົນໃຈຕໍ່ການສຶກສາຮ່ຳຮຽນ, ຍົກລະດັບຄວາມຮູ້ຄວາມສາມາດໃຫ້ສູງຂຶ້ນເລື້ອຍໆ, ເອົາໃຈໃສ່ຄົ້ນຄວ້າ, ນຳໃຊ້ວິທະ ຍາສາດ-ວິທະຍາການໃໝ່ເຂົ້າໃນການຜະລິດ, ທຸລະກິດ, ມີແບບແຜນດຳລົງຊີວິດທີ່ສົດໃສ.

**ຄາດໝາຍຕົ້ນຕໍ:**

- ສູ້ຊົນໃຫ້ເຍົາວະຊົນ-ຊາວໜຸ່ມຫລາຍກວ່າ 30% ໄດ້ເຂົ້າເປັນສະມາຊິກຂອງອົງການຕົນ
- ສ້າງໃຫ້ໄດ້ໜ່ວຍຊາວໜຸ່ມແບບຢ່າງ 2 ສາມັກຄີ 3 ດີ 4 ພັດທະນາ ແລະ ກອງເຍົາວະຊົນນຳໜ້າໃຫ້ໄດ້ຫລາຍກວ່າ 50% ຂອງຈຳນວນໜ່ວຍທັງໝົດ.

**8) ຂະແໜງກິລາກາຍະກຳ:**

ຍູ້ແຮງຂະບວນການກິລາ - ກາຍະກຳໃຫ້ມີບັນຍາກາດຟົດຟື້ນນັບແຕ່ຕົວເມືອງຮອດຊົນນະບົດ ແລະ ທັນເຂົ້າສູ່ຊີວິດ-ສັງຄົມຕົວຈິງ, ເຮັດໃຫ້ຊັ້ນຄົນຕ່າງໆ ໂດຍສະເພາະແມ່ນຊາວໜຸ່ມມີຄວາມ ສົນໃຈ ຫລິ້ນກິລາຫລາຍຂຶ້ນ; ພັດທະນານັກກິລາລາວໃຫ້ກາຍເປັນນັກກິລາອາຊີບ ແລະ ຫຍັບເຂົ້າໃກ້ກັບ ລະດັບຂອງພາກພື້ນ ແລະ ສາກົນເທື່ອລະກ້າວ.ສົ່ງເສີມ ແລະ ພັດທະນາກິລາພື້ນເມືອງຂອງບັນດາ ເຜົ່າ. ຈັດງານມະຫາກຳກິລາແຫ່ງຊາດຄັ້ງທີ 9 ໃນປີ 2011 ທີ່ແຂວງຫລວງພະບາງ ແລະ ຄັ້ງທີ 10 ໃນປີ 2014 ທີ່ແຂວງອຸດົມໄຊໃຫ້ມີຜົນສຳເລັດສູງ.

**9) ຂະແໜງວິທະຍາສາດ-ເຕັກໂນໂລຊີ:**

ວິທະຍາສາດ-ເຕັກໂນໂລຊີມີບົດບາດອັນສຳຄັນຕໍ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ. ດັ່ງນັ້ນ, ຈະຕ້ອງສຸມໃສ່ການຄົ້ນຄວ້າ ແລະ ນຳໃຊ້ຜົນສຳເລັດໃໝ່ເຂົ້າໃນການຂຸດຄົ້ນ ແລະ ເສີມຂະຫຍາຍທ່າແຮງຂອງປະເທດເຮົາ. ໃນສະເພາະໜ້ານີ້ ໃຫ້ສຸມໃສ່ປະຕິບັດໂຄງການຄຸ້ມຄອງລະບົບບໍລິຫານລັດ ດ້ວຍເອເລັກໂຕຣນິກໃຫ້ກວ້າງຂວາງ, ຂະຫຍາຍລະບົບຕາໜ່າງເຊື່ອມຕໍ່ທຸກເມືອງ ແລະ ຂັ້ນບ້ານໃຫ້ໄດ້ 20% ຂອງບ້ານທັງໝົດ; ສູ້ຊົນຄົ້ນຄວ້າເຕັກໂນໂລຊີໃໝ່ທີ່ເປັນມິດກັບສິ່ງແວດລ້ອມ ແລະ ປະຊາຊົນ ທົ່ວໄປສາມາດນຳໃຊ້ໄດ້.

ປົກປ້ອງຊັບສິນທາງປັນຍາ ແລະ ຂື້ນທະບຽນການຄ້າເພື່ອຮັບປະກັນຄວາມຍຸຕິທຳໃນສັງຄົມ, ຍົກສູງຄວາມສາມາດແຂ່ງຂັນໃນຂະບວນວິວັດແຫ່ງການເຊື່ອມໂຍງສາກົນ.

**10) ການແກ້ໄຂບັນຫາຢາເສບຕິດ:**

ຕັ້ງໜ້າສືບຕໍ່ປະຕິບັດຍຸດທະສາດ ກ່ຽວກັບ ການແກ້ໄຂບັນຫາການຜະລິດ, ການຊົມໃຊ້, ການລັກ ລອບຄ້າຂາຍ ແລະ ການກໍ່ອາດຊະຍາກຳທີ່ຕິດພັນກັບຢາເສບຕິດແນໃສ່ເຮັດໃຫ້ປະເທດເຮົາເປັນປະເທດປອດຢາເສບຕິດເທື່ອລະກ້າວ, ທັງປະກອບສ່ວນເຮັດໃຫ້ປະຊາຄົມອາຊຽນໄດ້ປອດຈາກຢາເສບຕິດພາຍໃນປີ 2015.

ໃນສະເພາະໜ້ານີ້, ຕ້ອງສູ້ຊົນພັດທະນາບ້ານ ເພື່ອຫັນປະຊາຊົນໄປປະກອບອາຊີບອື່ນທີ່ໝັ້ນທ່ຽງ, ພ້ອມກັນນັ້ນກໍເອົາໃຈໃສ່ປິ່ນປົວຄົນຕິດຝິ່ນ ແລະ ຄົນຕິດຢາບ້າໃຫ້ຫລຸດໜ້ອຍຖອຍລົງ, ກ້າວໄປ ເຖິງການແກ້ໄຂບັນຫານີ້ຢ່າງສິ້ນເຊີງ.

## 8.3 ຄວາມເປັນມາດ້ານນະໂຍບາຍທາງເສດຖະກິດຂອງລັດ

### 8.3.1 ການພົວພັນດ້ານສັງຄົມ ແລະ ເສດຖະກິດ

ການກຳນົດນະໂຍບາຍເປີດກວ້າງລັກສະນະທຸລະກິດ, ຜະລິດອຸດສາຫະກຳ ແລະ ຮູບແບບການກໍ່ສ້າງໂຮງງານອຸດສາຫະກຳນັ້ນໄດ້ເປັນຜົນກະທົບຕໍ່ການກຳເນີດ ແລະ ຂະຫຍາຍຕົວຂອງຫລາຍຂະແໜງອຸດສາຫະກຳຫລາຍຂະໜາດນັບທັງລັດ ແລະ ເອກະຊົນ. ນະໂຍບາຍຫັນປ່ຽນອຸດສາ ຫະກຳທັນສະໄໝຂອງພັກທີ່ຖືກຮັບຮອງເອົາໃນມະຕິກອງປະຊຸມສູນກາງຄັ້ງທີ IV ສະໄໝທີ VII ໄດ້ກຳນົດວ່າ: “ເອົາການພັດທະນາພະລັງງານໄຟຟ້າ, ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ-ປ່າໄມ້, ອຸດສາຫະກຳການທ່ອງທ່ຽວ, ອຸດສາຫະກຳບໍ່ແຮ່ ແລະ ອຸດສາຫະກຳວັດສະດຸກໍ່ສ້າງເປັນຂະແໜງບູລິມະສິດ. ສ່ວນວ່າຂະແໜງການສຶກສາ, ວິທະຍາສາດ-ເຕັກໂນໂລຢີ, ຄົມມະນາຄົມ ແລະ ເປັນຕະຫລາດຂໍກຸນແຈ” ໂດຍມີຄາດໝາຍສູ້ຊົນສູງສຸດຂອງປີ 2020 ຕ້ອງໃຫ້ປະເທດຊາດຫລຸດພົ້ນຈາກ ຄວາມດ້ອຍພັດທະນາ. ລັດຖະບານຍັງໄດ້ກຳນົດນະໂຍບາຍການກໍ່ສ້າງອຸດສາຫະກຳເພື່ອໃຫ້ແທດ ເໝາະກັບຄວາມສາມາດຕົວຈິງຂອງປະເທດ ເປັນຕົ້ນແມ່ນອຸດສາຫະກຳຂະໜາດນ້ອຍ ແລະ ກາງທັງຂອງລັດ ແລະ ເອກະຊົນ ຊຶ່ງມີທັງເງື່ອນໄຂຜະລິດ ແລະ ຈຳໜ່າຍຜົນຜະລິດ. ສຳລັບການຫັດຖະກຳກໍໄດ້ຮັບການຊຸກຍູ້ສົ່ງເສີມເຊັ່ນກັນ ຊຶ່ງມັນສະແດງອອກບາງດ້ານດັ່ງນີ້: ມີການກຳນົດບົດບາດ, ໃຫ້ການອູດໜູນດ້ານການເງິນ ແລະ ຄວາມຕ້ອງການຜະລິດຕະພັນສູ່ທ້ອງຕະຫລາດຂອງຂະແໜງນີ້ກໍ ເປັນປັດໄຈໜຶ່ງທີ່ຍູ້ດັນໃຫ້ຫັດຖະກຳຂະຫຍາຍຕົວຢ່າງແຂງແຮງ.

**ດ້ານເສດຖະກິດ:**

ສິ່ງສຳຄັນທີ່ສຸດຕໍ່ວິວັດການດຳເນີນການຜະລິດ ແມ່ນການລົງທຶນ ຍ້ອນວ່າທຶນ ເປັນໄມ້ງັດທີ່ເຮັດໃຫ້ອຸດສາຫະກຳ ແລະ ຫັດຖະກຳຂະຫຍາຍຢ່າງຕໍ່ເນື່ອງ. ດັ່ງນັ້ນ, ໃນໄລຍະຜ່ານມາຍ້ອນປະເທດເຮົາຂາດເຂີນທຶນຮອນການກຳເນີດໂຮງງານອຸດສາຫະກຳ ແລະ ຫັດຖະກຳຈຶ່ງຊັກຊ້າ ແລະ ມີລັກສະນະອ່ອນນ້ອຍ. ຍ້ອນແນວນັ້ນລັດຖະບານຈຶ່ງໄດ້ຫາຊ່ອງທາງແກ້ໄຂການຂາດເຂີນທຶນຮອນ ດ້ວຍການກູ້ຢືມ, ຮ່ວມມື ແລະ ໃຫ້ຕ່າງປະເທດມາລົງທຶນກໍ່ສ້າງໂຮງງານອຸດສາຫະກຳຫລາຍໆ ແຫ່ງ ໂດຍສະເພາະແມ່ນການລົງທຶນໃນການຂຸດຄົ້ນບໍ່ແຮ່ທີ່ມີລາຄາແພງ (ຄຳ, ທອງແດງ...) ເພື່ອເປັນທຶນຮອນໂດຍໄວ. ປັດໄຈຕະຫລາດກໍເປັນປັດໄຈໜຶ່ງທີ່ກະທົບຕໍ່ວິທີການຜະລິດອຸດສາຫະກຳ ແລະ ຫັດຖະກຳຢ່າງເລິກຊຶ້ງ. ສ່ວນປັດໄຈອື່ນໆເຊັ່ນ: ການຄົມມະນາຄົມ, ກະສິກຳ, ບໍລິການ... ກໍເປັນປັດໄຈຊຸກດັນໃນລະດັບໃດໜຶ່ງ.

ດ້ວຍເຫດນີ້, ການອຸດສາຫະກຳຂອງລາວຊຶ່ງອີງໃສ່ວັດຖຸດິບພາຍໃນຈຶ່ງມີລັກສະນະຈຳກັດ, ມີຂະໜາດນ້ອຍ (ບໍ່ນັບໄຟຟ້ານ້ຳຕົກ) ແລະ ຈຳເປັນຕ້ອງໄດ້ອາໄສວັດຖຸດິບນຳເຂົ້າຢ່າງຫລວງຫລາຍ (ຍົກເວັ້ນການຫັດຖະກຳ). ບັນຫາແຮງງານ ແລະ ລະດັບເຕັກນິກວິຊາການກໍມີອິດທິພົນບໍ່ໜ້ອຍຕໍ່ການກຳເນີດອຸດສາຫະກຳໃນໄລຍະຜ່ານມາ. ໃນບັນດາປັດໄຈຕ່າງໆ ທີ່ກ່າວມານັ້ນ ແມ່ນປັດໄຈນະໂຍບາຍຂອງລັດຖະບານຕັດສິນຊີ້ຂາດກວ່າໝູ່. ສ່ວນປັດໄຈອື່ນໆ ແມ່ນເປັນປັດໄຈພື້ນຖານທີ່ສຳຄັນຕໍ່ການກຳເນີດ ແລະ ຂະຫຍາຍຕົວຂອງອຸດສາຫະກຳ ແລະ ຫັດຖະກຳ. ເຊື່ອແນ່ວ່າໃນອານາຄົດໃກ້ໆນີ້ຈະມີຫລາຍຂະແໜງອຸດສາຫະກຳທີ່ສຳຄັນ ແລະ ໃຫ່ຍໂຕ ແລະ ຂະແໜງການຫັດຖະກຳທີ່ຂະຫຍາຍຕົວກ້າວຂຶ້ນສູ່ການຜະລິດເປັນແບບອຸດສາຫະກຳທີ່ທັນສະໄໝ.

ກ່ຽວກັບທ່າຂະຫຍາຍຕົວຂອງອຸດສາຫະກຳ ແລະ ຫັດຖະກຳໃນໄລຍະ 30 ປີຜ່ານມາ, ປະເທດລາວ ເປັນປະເທດທີ່ຫາກໍ່ມີການອຸດສາຫະກຳຂະຫຍາຍຕົວໃນໄລຍະບໍ່ພໍເທົ່າໃດທົດສະວັດມານີ້ ຊຶ່ງສ່ວນຫລາຍ ແມ່ນອຸດສາຫະກຳປຸງແຕ່ງເຄື່ອງອຸປະໂພກ ແລະ ບໍລິໂພກ. ມີຫລາຍຂະແໜງການໄດ້ສ້າງຂຶ້ນກ່ອນ ແລະ ຫລັງປົດປ່ອຍຊຶ່ງສ່ວນຫລາຍຈະຊົມໃຊ້ພາຍໃນປະເທດແຕ່ກໍຍັງບໍ່ທັນພຽງພໍກັບຄວາມຕ້ອງການ, ຕ້ອງໄດ້ສັ່ງຊື້ຈາກຕ່າງປະເທດ. ມາໃນປັດຈຸບັນນີ້ຜະລິດຕະພັນຈຳນວນຫລວງຫລາຍ ໄດ້ສົ່ງອອກຂາຍ ຢູ່ຕ່າງປະເທດ.

ຕະຫລອດໄລຍະ30ປີມານີ້, ເຫັນວ່າການພັດທະນາໃນຂົງເຂດອຸດສາຫະກຳແລະຫັດຖະກຳໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງ. ໂຮງງານອຸດສາຫະກຳໄດ້ເພີ່ມຈຳນວນຂຶ້ນຈາກ 100 ກວ່າແຫ່ງໃນປີ 1975 ມາເປັນ 26.200 ແຫ່ງໃນປີ 2005, ໃນນັ້ນເປັນໂຮງງານຂະໜາດໃຫ່ຍ (ມີກຳມະກອນແຕ່ 100 ຄົນຂຶ້ນໄປ) 207 ແຫ່ງ, ຂະໜາດກາງ (ມີກຳມະກອນແຕ່ 10-99 ຄົນ) 623 ແຫ່ງ ແລະ ຂະໜາດນ້ອຍ (ມີກຳມະກອນໜ້ອຍກວ່າ 10 ຄົນ) 25.458 ແຫ່ງ, ສາມາດຕອບສະໜອງໃຫ້ປະຊາຊົນມີວຽກເຮັດງານທຳໄດ້ 100.000 ກວ່າຄົນ. ຍອດມູນຄ່າຜະລິດອຸດສາຫະກຳໃນ 5 ປີຜ່ານມາ (2001-2005) ເພີ່ມຂຶ້ນສະເລ່ຍ 11,46% ຕໍ່ປີ ແລະ ໝົດປີ 2005 ຄາດວ່າຈະກວມອັດຕາສ່ວນ 27% ຂອງ GDP ແຫ່ງຊາດ.

## 8.4 ຄວາມເປັນມາທາງດ້ານການເງິນ ແລະ ການທະນາຄານ

ການບໍລິການດ້ານການເງິນ ແລະ ການທະນາຄານ ແມ່ນສຸມໃສ່ພັດທະນາການບໍລິການການເງິນ ແລະ ທະນາຄານ ເພື່ອຕອບສະໜອງຄວາມຕ້ອງການຂອງປະຊາຊົນຢ່າງກວ້າງຂວາງ ເຮັດໃຫ້ປະຊາຊົນທຸກຊັ້ນຄົນສາມາດນຳໃຊ້ການບໍລິການນີ້ ເຂົ້າໃນຊີວິດປະຈຳວັນຂອງຕົນເປັນຢ່າງດີ. ເອົາໃຈໃສ່ພັດທະນາການບໍລິການດ້ານທະນາຄານໃຫ້ເຂັ້ມແຂງຂຶ້ນເຊັ່ນ: ເປີດກວ້າງການບໍລິການຮັບຝາກເງິນ ແລະ ໃຫ້ກູ້ຢືມ, ນຳໃຊ້ລະບົບການຊຳລະເງິນດ້ວຍເອເລັກໂຕຼນິກທີ່ທັນສະໄໝ. ສືບຕໍ່ການລົງທຶນໃສ່ການສ້າງ ແລະ ປັບປຸງລະບົບຊຳລະເງິນ ລະຫວ່າງ ທະນາຄານ, ລະບົບຊຳລະດ້ວຍບັດເຄຼດິດ, ປະດິດສ້າງຮູບການບໍລິການໃໝ່ຈຳນວນໜຶ່ງ ເພື່ອແນໃສ່ຍົກສູງປະລິມານ ແລະ ຄຸນນະພາບການບໍລິການດ້ານການເງິນ ໃຫ້ມີຫລາຍຮູບຫລາຍແບບ. ດຶງດູດບັນດາພາກສ່ວນເສດຖະກິດຕ່າງໆເຂົ້າຮ່ວມກິດຈະການບໍລິການ ດ້ານການເງິນ, ທະນາຄານໃຫ້ຫລາຍ. ປັບປຸງການບໍລິການ ແລະ ປະສານ ງານໃນລະບົບການເງິນ ແລະ ທະນາຄານໃຫ້ດີຂຶ້ນ ເພື່ອເຮັດໃຫ້ມີຄວາມກ້າວໜ້າ, ທັນສະໄໝ ແລະ ເປັນລະບົບລະບຽບດີ.

## 8.5 ຄວາມເປັນມາທາງດ້ານການພົວພັນການຄ້າ ແລະ ການຕະຫລາດຂອງລາວ

ການຄ້າ ແມ່ນການບໍລິການປະເພດໜຶ່ງ ຊຶ່ງມີການແລກປ່ຽນ, ຊື້, ຂາຍ, ສິນຄ້າ, ສະໜອງການບໍລິການ ແລະ ຜະລິດຕະພັນຊຶ່ງກັນ ແລະ ກັນໂດຍຫວັງຜົນກຳໄລ. ການຄ້າຕ່າງປະເທດແມ່ນການແລກປ່ຽນຊື້ຂາຍສິນຄ້າ ແລະ ສະໜອງການບໍລິການເພື່ອຫວັງຜົນກຳໄລ ລະຫວ່າງນັກທຸລະກິດທີ່ມີສັນຊາດຕ່າງກັນ. ການຄ້າ ແລະ ຜະລິດຕະພັນສິນຄ້າເກີດຂຶ້ນໄດ້ ຍ້ອນສັງຄົມມີການແບ່ງງານ ແລະ ມີຫລາຍກຳມະສິດຕໍ່ພາຫະນະການຜະລິດ ຫລື ເວົ້າອີກຢ່າງໜຶ່ງການຄ້າເກີດຂຶ້ນໄດ້ກໍ່ຕໍ່ເມື່ອມະນຸດມີຄວາມຕ້ອງການຜະລິດຕະພັນສິນຄ້າທີ່ຕົນບໍ່ສາມາດຜະລິດໄດ້ ຫລື ບໍ່ມີໃນຂົງເຂດທີ່ຕົນອາໄສຢູ່. ດັ່ງນັ້ນຈຶ່ງຕ້ອງໄດ້ມີແລກປ່ຽນ, ຊື້ຂາຍ ວິວັດທະນາການນັ້ນໄດ້ມີມາແຕ່ດົນນານແລ້ວ, ຈາກການແລກ ປ່ຽນກັນວັດຖຸສິ່ງຂອງແຕ່ລະຊາດທີ່ຊົມໃຊ້ກັນໃນທຸກວັນນີ້. ການຄ້າ ແມ່ນວຽກງານໜຶ່ງທີ່ສຳຄັນເພາະມັນໄດ້ສະໜອງພາຫະນະການຜະລິດທີ່ຈຳເປັນ, ທັງເປີດກວ້າງຕະຫລາດຈຳໜ່າຍຈາກຕົວເມືອງສູ່ຊົນນະບົດ, ຈາກທົ່ງພຽງສູ່ພູດອຍຫ່າງໄກສອກຫລີກປະກອບສ່ວນອັນສຳຄັນເຂົ້າໃນພາລະກິດການປ່ຽນແປງພື້ນຖານເສດຖະກິດທຳມະຊາດເຄິ່ງທຳມະຊາດທີ່ຫລ້າຫລັງກະແຈກກະຈາຍໄປສູ່ເສດຖະກິດສິນຄ້າ ແລະ ເສດຖະກິດຕະຫລາດເປັນກ້າວໆ. ການຄ້າເປັນຕ່ອງໂສ້ໜຶ່ງທີ່ສຳຄັນຂອງເສດຖະກິດແຫ່ງຊາດ,ເປັນຂະແໜງເຊື່ອມຕໍ່ລະຫວ່າງການຜະລິດກັບການຜະລິດ, ການຜະລິດກັບການຊົມໃຊ້ ແລະ ເປັນ ຂະແໜງການທີ່ສ້າງສາຍພົວພັນ ລະຫວ່າງ ເຂດນີ້ກັບເຂດອື່ນ, ທຸລະກິດການຄ້າມີບົດບາດຄວບຄຸມ ລາຄາສິນຄ້າ ແລະ ເງິນຕາຂອງປະເທດໜຶ່ງໆ, ການຂະຫຍາຍຕົວຂອງການຄ້າໄດ້ເຮັດໃຫ້ວິວັດ ການຜະລິດມີການເຕີບໂຕຂຶ້ນເລື້ອຍໆ ເພາະຂະແໜງການຄ້າເຮັດໜ້າທີ່ຕົ້ນຕໍໃນການຈໍລະຈອນສິນຄ້າ ແລະ ເງິນຕາ. ຮອບວຽນການຈໍລະຈອນສິນຄ້າ ແລະ ເງິນຕາ ນັ້ນຍິ່ງສັ້ນເທົ່າໃດການຜະລິດກໍ່ຍິ່ງ ຂະຫຍາຍຕົວໄວ. ດັ່ງນັ້ນ, ທຸກໆ ປະເທດໃນໂລກຈຶ່ງໄດ້ຖືວຽກງານການຄ້າເປັນຂະແໜງການໜຶ່ງ ທີ່ມີຄວາມສຳຄັນເປັນພິເສດຕໍ່ການພັດທະນາປະເທດ.

### 8.5.1 ການຄ້າພາຍໃນ

ກ່ອນ ປີ ຄສ 1975 ໃນສະໄໝເປັນເມືອງຂຶ້ນຂອງຝຣັ່ງ ແລະ ອາເມຣິກາ, ສະພາບການຄ້າຂອງລາວ ຖືກຄວບຄຸມຈາກນາຍທຶນຕ່າງຊາດ, ປະເພດສິນຄ້າທີ່ຈຳໜ່າຍ ຢູ່ຕາມທ້ອງຕະຫລາດພາຍໃນປະເທດຕົ້ນຕໍແມ່ນ ຜະລິດຕະພັນຈາກຕ່າງປະເທດໂດຍມີບັນດາຫົວໜ່ວຍການຄ້າ (ເອກະເທດ, ບໍລິສັດ) ເປັນຕົວແທນຈຳໜ່າຍ, ສ່ວນສິນຄ້າພາຍໃນກໍມີພຽງເຄື່ອງປ່າຂອງດົງ, ຜະລິດຕະພັນຈາກການປູກຝັງ ແລະ ລ້ຽງສັດທີ່ເຫລືອໃຊ້ຂອງປະຊາຊົນພຽງເລັກໜ້ອຍເທົ່ານັ້ນ.

ສຳລັບເຂດປົດປ່ອຍໃນໄລຍະນັ້ນການຄ້າຂອງລັດ ແລະ ລວມໝູ່ໄດ້ມີບົດບາດໃນການບໍລິການຮັບໃຊ້ການຜະລິດ, ຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນປະເພດສິນຄ້າຕ່າງໆ ແມ່ນໄດ້ນຳເຂົ້າຈາກບັນດາປະເທດໃນສັງຄົມນິຍົມ.

ນັບແຕ່ ປີ ຄສ 1975 ເປັນຕົ້ນມາ, ການຄ້າພາຍໃນຂອງລາວໄດ້ມີການຂະຫຍາຍຕົວຢ່າງແຂງແຮງຕາໜ່າງການຄ້າໄດ້ຮັບການເປີດກວ້າງ ແລະກໍ່ສ້າງຂຶ້ນ, ຢູ່ໃນຫລາຍທ້ອງຖິ່ນໄດ້ມີການຈັດຕັ້ງແຈກຢາຍຜະລິດຕະພັນສິນຄ້າດ້ວຍການນຳໃຊ້ທ່າແຮງດ້ານການຄ້າໃນທຸກລະດັບ ເຊັ່ນ: ການຈັດຕັ້ງການຄ້າຂອງລັດ, ລວມໝູ່, ເອກະຊົນ...

ປີ ຄສ 1975 – 1965 ການຄ້າຂອງລັດ, ການຄ້າລວມໝູ່ ແລະ ເອກະຊົນໄດ້ເຮັດໜ້າທີ່ຈໍລະຈອນ ສິນຄ້າຢູ່ພາຍໃນປະເທດຢ່າງແຂງແຮງ, ລັດໄດ້ຜູກຂາດການຄ້າໃນຫລາຍຂະແໜງການທີ່ສຳຄັນເປັນຕົ້ນການຈຳໜ່າຍຜະລິດຕະພັນອຸດສະຫະກຳ, ສະບຽງອາຫານ, ການເກັບຊື້ເຄື່ອງປ່າຂອງດົງ...

ນັບແຕ່ປີ ຄສ 1986 ເປັນຕົ້ນມາ, ພັກ ແລະ ລັດຖະບານໄດ້ດຳເນີນນະໂຍບາຍປ່ຽນແປງ ໃໝ່ດ້ານເສດຖະກິດ. ດັ່ງນັ້ນ, ບັນດາຮູບແບບການຄ້າໄດ້ມີການປ່ຽນແປງໄປເປັນຕົ້ນກິດຈະການດ້ານການຄ້າແບບລວມໝູ່ໄດ້ສະຫລາຍຕົວ, ການຄ້າເອກະຊົນໄດ້ມີບົດບາດຕັ້ງໜ້າໃນການຈໍລະຈອນສິນຄ້າພາຍໃນປະເທດ. ລັດຖະບານໄດ້ອະນຸຍາດໃຫ້ເອກະຊົນຜູ້ທີ່ມີທຶນຮອນ, ມີຄວາມສາມາດໃນການບໍລິຫານຈັດຕັ້ງທຸລະກິດການຄ້າຂອງຕົນຂຶ້ນແຕ່ຢູ່ພາຍໃຕ້ການຊີ້ນຳ, ຄຸ້ມຄອງຂອງລັດ. ຍ້ອນແນວນັ້ນປະເພດສິນຄ້າທີ່ຈໍລະຈອນຢູ່ຕາມທ້ອງຕະຫລາດຈຶ່ງມີຫລາຍຊະນິດ ແລະ ອຸດົມສົມບູນຂຶ້ນເທື່ອລະກ້າວ. ນອກຈາກມີການເປີດກວ້າງດ້ານຕາໜ່າງ, ລະບົບການຈຳໜ່າຍສິນຄ້າ ແລະ ຮູບແບບການຄ້າແລ້ວ,ລັດຍັງໄດ້ວາງລະບຽບການຄຸ້ມຄອງຕະຫລາດການຄ້າ, ການເງິນ - ທະນາຄານ, ການລົງທຶນ...ທີ່ສອດ ຄ່ອງແນໃສ່ຊຸກຍູ້ວຽກງານການຄ້າ, ສິ່ງເຫລົ່ານີ້ໄດ້ສ້າງເງື່ອນໄຂສະດວກເຮັດໃຫ້ການບໍລິຫານການຄ້າມີການຂະຫຍາຍຕົວໄວ ແລະ ໄປຮອດໄປເຖິງທຸກທ້ອງຖິ່ນຂອງປະເທດ.

ເວົ້າລວມແລ້ວ, ພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍແລ້ວ ຂະແໜງການຄ້າຕ່າງໆຂອງປະເທດລາວມີທ່າຂະຫຍາຍຕົວດີຂຶ້ນ ຊຶ່ງສົ່ງຜົນດີຕໍ່ການຂະຫຍາຍດ້ານຜະລິດຕະພັນສິນຄ້າຂອງສປປ ລາວ ຈາກເມື່ອກ່ອນທີ່ເຄີຍຂາດແຄນດ້ານສະບຽງອາຫານແລ້ວສາມາດກຸ້ມກິນ ແລະ ສາມາດສົ່ງອອກເປັນສິນຄ້າໄດ້ 326,631,000 ໂດລາສະຫະລັດ ໃນ ປີ ຄສ 2006. ມີຫລາຍຂົງເຂດໄດ້ກາຍເປັນສູນກາງການຄ້າທີ່ສຳຄັນຂອງລາວໃນປັດຈຸບັນ ເຊັ່ນ: ນະຄອນຫລວງວຽງຈັນ, ສະຫວັນນະເຂດ, ປາກເຊ, ຫລວງພະບາງ, ອຸດົມໄຊ, ຫລວງນ້ຳທາ, ຫ້ວຍຊາຍ...ປະເພດຜະລິດຕະພັນໄດ້ໃນລາວບໍ່ສະເພາະແຕ່ຈໍລະຈອນ ແລະ ຊົມໃຊ້ໃນລາວເທົ່ານັ້ນ, ມີຫລາຍປະເພດໄດ້ສົ່ງອອກຂາຍຕ່າງປະເທດ ແລະ ມີຫລາຍປະເພດສິນຄ້າທີ່ນຳເຂົ້າຈາກຕ່າງປະເທດຖືກຈໍລະຈອນຕາມທ້ອງຕະຫລາດຮັບໃຊ້ຄວາມຕ້ອງການຂອງ ປະຊາຊົນ. ການຈໍລະຈອນສິນຄ້າຂອງລາວມີ 2 ປະເພດໃຫ່ຍ ຄື:

- ສິນຄ້າທັນຍາຫານ:

ສິນຄ້າທັນຍາຫານ ແມ່ນເປັນສິນຄ້າທີ່ມີພາລະບົດບາດສຳຄັນທີ່ສຸດ ແລະ ມີຄວາມຈຳເປັນແກ່ການດຳລົງຊີວິດຂອງຄົນ ແລະ ສັດກໍຄືທົ່ວສັງຄົມເຊັ່ນ: ເຂົ້າ, ສາລີ, ຖົ່ວຕ່າງໆ, ກາເຟ, ໝາກແໜ່ງ, ງົວ, ຄວາຍ, ແບ້, ສັດປີກ...

- ສິນຄ້າຫັດຖະກຳ ແລະ ອຸດສາຫະກຳ:

ສິນຄ້າຈາກຫັດຖະກຳ ແລະ ອຸດສາຫະກຳເປັນສິນຄ້າຂະແໜງການໜຶ່ງທີ່ມີບົດບາດຄວາມສຳຄັນສູງຕໍ່ກັບຊີວິດປະຈຳວັນຂອງສັງຄົມລາວ, ໂດຍສະເພາະວັດຖຸໃຊ້ສອຍທີ່ສຳເລັດຮູບຕ່າງໆ ຖືວ່າມີຄວາມຈຳເປັນຫລາຍທີ່ສຸດຕໍ່ການເປັນຢູ່ຂອງປະຊາຊົນລາວ ແຕ່ສ່ວນໃຫ່ຍກໍຍັງນຳເຂົ້າຈາກຕ່າງປະເທດ ເຊັ່ນ: ປະເທດໄທ, ຈີນ, ຫວຽດນາມ...ແຕ່ສ່ວນທີ່ລາວຜະລິດໄດ້ກໍມີຫລາຍພໍສົມຄວນ. ນອກຈາກນີ້, ສປປ ລາວ ຍັງສາມາດຜະລິດ-ຜະລິດຕະພັນອຸດສາຫະກຳອື່ນໆອີກ ເຊັ່ນ: ຊີມັງ, ຢາປົວພະຍາດ, ຄຳ, ທອງແດງ.

ເຖິງຢ່າງໃດກໍຕາມ ໂດຍລວມແລ້ວທົ່ວປະເທດເຫັນວ່າ: ການເຄື່ອນໄຫວຊື້ຂາຍຈໍລະຈອນສິນຄ້າ, ການຜະລິດຕະພັນຕ່າງໆ ຍັງບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຜູ້ຊົມໃຊ້ ແລະ ຍັງບໍ່ທັນເປັນຂະບວນການທີ່ຟົດຟື້ນເທົ່າທີ່ຄວນຍັງຕ້ອງໄດ້ນຳເຂົ້າສິນຄ້າທັງທັນຍາຫານ ແລະ ຜະລິດຕະພັນອຸດສາຫະກຳ ແລະ ວັດຖຸໃຊ້ສອຍປະຈຳວັນ ເປັນຈຳນວນຫລວງຫລາຍຈາກຕ່າງປະເທດຊຶ່ງເຮັດ ໃຫ້ເງິນຕາຕ່າງປະເທດໄຫລອອກຈາກປະເທດດ້ວຍປັດໄຈສຳຄັນເຊັ່ນ:

- ລະດັບການຜະລິດຢູ່ ສປປ ລາວ ຍັງບໍ່ທັນຂະຫຍາຍຕົວ, ຜູ້ບໍລິໂພກມີໜ້ອຍ, ລາຍໄດ້ໜ້ອຍ ແລະ ຄວາມສາມາດຊື້ໜ້ອຍ, ປະເພດສິນຄ້າມີໜ້ອຍ ແລະ ສິນຄ້າທີ່ຈຳເປັນຍັງມີຂີດຈຳກັດໃນການຜະລິດ.

- ປະເພດສິນຄ້າມີໜ້ອຍບໍ່ພຽງພໍກັບຄວາມຕ້ອງການຂອງຕະຫລາດ, ປະລິມານ ແລະ ຄຸນນະພາບຍັງຕໍ່າ.

- ສະພາບທາງດ້ານການຄົມມະນາຄົມ-ຂົນສົ່ງຍັງບໍ່ທັນສະດວກເທົ່າທີ່ຄວນ ຊຶ່ງບໍ່ທັນສາມາດເປັນຂົວຕໍ່ລະຫວ່າງເຂດຜະລິດ ແລະ ເຂດສະໜອງສູ່ຜູ້ບໍລິໂພກເທົ່າທີ່ຄວນ[64].

### 8.5.2 ການຄ້າພາຍນອກ ແລະ ການລົງທຶນຂອງຕ່າງປະເທດ

ການຄ້າກັບຕ່າງປະເທດ ໝາຍເຖິງການຊື້ຂາຍສິນຄ້າກັບພາຍນອກປະເທດທີ່ເປັນຮູບແບບການຈໍລະຈອນສິນຄ້າໃນຮູບການຂາຍຍົກ ຊຶ່ງຂະບວນການດັ່ງກ່າວ ແມ່ນການໄຫລເຂົ້າ-ອອກຂອງເງິນຕາຕ່າງປະເທດ ໂດຍເອົາເງິນໂດລາສະຫະລັດເປັນສື່ກາງເງິນຕາສາກົນ.

ໃນໄລຍະກ່ອນ ປີ ຄສ 1975 ການຄ້າຕ່າງປະເທດຂອງລາວມີລັກສະນະອ່ອນນ້ອຍ ແລະ ຂຶ້ນກັບນາຍທຶນຕ່າງປະເທດ, ສິນຄ້າຂາອອກຕົ້ນຕໍ ແມ່ນຊັບພະຍາກອນທຳມະຊາດ ແລະ ຜະລິດຕະພັນຈາກກະສິກຳ. ໃນໄລຍະເປັນເມືອງຂຶ້ນຂອງຝຣັ່ງ, ປະເທດລາວໄດ້ດູນການຄ້າກັບຕ່າງປະເທດ ເຊັ່ນ: ປີ ຄສ 1939 ຂາເຂົ້າມີພຽງ 1.868.000 ໂດລາອາເມລິກາ, ແຕ່ຂາອອກມີເຖິງ 3.312.000 ໂດລາອາເມລິກາ ຈາກການຈຳໜ່າຍ: ແຮ່ກົ່ວ, ງົວ, ຄວາຍ, ເຂົ້າ, ຄັ່ງ, ຍານ, ກະເຟ, ງາຊ້າງ, ໜັງສັດ ແລະ ເຄື່ອງປ່າຂອງດົງຕ່າງໆ. ປີ ຄສ 1740 ຂາເຂົ້າ 881.000 ໂດລາ, ຂາອອກມີເຖິງ 4.348.000 ໂດລາ. ທັງນີ້ກໍຍ້ອນຄວາມຕ້ອງການໃນທ້ອງຕະຫລາດສູງ, ລະດັບການຂະຫຍາຍຕົວທາງດ້ານເສດຖະກິດຍັງຕໍ່າເຮັດໃຫ້ສິນຄ້າທີ່ສົ່ງອອກນັ້ນມີມູນຄ່າສູງກວ່າຂາເຂົ້າ. ແຕ່ຜົນກຳໄລບໍ່ໄດ້ຊົມໃຊ້ເຂົ້າໃນການບູລະນະເສດຖະກິດຂອງລາວ, ເປັນພຽງສ້າງຮັ່ງຄູນມີແກ່ນາຍທຶນຕ່າງປະເທດ ແລະ ຜູ້ກຳອຳນາດຂອງລັດຖະບານລາວ ໃນໄລຍະນັ້ນ. ນັບແຕ່ ປີ ຄສ 1951 ເປັນຕົ້ນມາການຄ້າຂາອອກຂອງລາວເລີ່ມຫລຸດໜ້ອຍຖອຍລົງ.

ໃນສະໄໝເປັນເມືອງຂຶ້ນຂອງອາເມຣິກາ, ໄລຍະນີ້ການຄ້າຕ່າງປະເທດໄດ້ເສຍດູນໄປເພາະສິນຄ້າຂາເຂົ້າຫລາຍກວ່າຂາອອກຫລາຍເທົ່າຕົວ. ສິນຄ້າສົ່ງອອກຫລາຍຊະນິດໄດ້ຫລຸດລົງຈາກເດີມທີ່ເຄີຍມີສິນຄ້າຂາເຂົ້າໄດ້ເພີ່ມຂຶ້ນນັບທັງວັດຖຸດິບ ເພື່ອປ້ອນໂຮງງານອຸດສາຫະກຳທີ່ສ້າງຂຶ້ນໃໝ່. ຈຸດປະສົງ ຂອງການນຳເອົາສິນຄ້າຈາກຕ່າງປະເທດເຂົ້າມາລາວກໍ ເພື່ອຫັນເອົາລາວເປັນຕະຫລາດຈຳໜ່າຍຂອງພວກນາຍທຶນຕ່າງປະເທດ. ນັບແຕ່ ປີ ຄສ 1963 ຄືນຫລັງແຕ່ລະປີບໍລິມາດສິນຄ້າທີ່ນຳເຂົ້າລາວໂດຍສະເລ່ຍມີເຖິງ 31 ລ້ານໂດລາ ແຕ່ວ່າສິນຄ້າທີ່ສົ່ງອອກສະເລ່ຍບໍ່ຮອດ 1,6 ລ້ານໂດລາ. ມາເຖິງປີ ຄສ 1973 ຂາອອກ 3.044.674 ໂດລາ, ແຕ່ຂາເຂົ້າມີເຖິງ 34.298.286 ໂດລາ, ຂາດດູນເຖິງ 31.251.612 ໂດລາ ສະພາບການດັ່ງກ່າວ ເຮັດໃຫ້ເສດຖະກິດລາວມີລັກສະນະຂຶ້ນກັບຕ່າງປະເທດ, ລາຄາເງິນກີບຕົກຕໍ່າ, ເກີດພາວະໄພເງິນເຟີ້...

ສຳລັບເຂດປົດປ່ອຍເປັນເຂດທີ່ມີທຳມະຊາດທຸລະກັນດານທັງເປັນເຂດທີ່ຖືກສົງຄາມທຳລາຍຢ່າງຮ້າຍແຮງ. ດັ່ງນັ້ນ, ສະພາບການພົວພັນຄ້າຂາຍກັບຕ່າງປະເທດ ແມ່ນມີການແລກປ່ຽນຄ້າຂາຍກັບບັນດາປະເທດເພື່ອນບ້ານໃກ້ຄຽງ ຊຶ່ງໄດ້ນຳເອົາເຄື່ອງປ່າຂອງດົງຈຳນວນໜຶ່ງເປັນສິນຄ້າສົ່ງອອກ.

ໃນປັດຈຸບັນເພື່ອເປັນການຊຸກຍູ້ສົ່ງເສີມ ແລະ ຄຸ້ມຄອງວຽກງານການຄ້າ, ລັດຖະບານວາງແນວທາງນະໂຍບາຍໃໝ່, ພ້ອມທັງເພີ່ມມາດຕະການໃນການຈັດຕັ້ງປະຕິບັດຂຶ້ນ ເຊັ່ນ:

- ອະນຸຍາດໃຫ້ເອກະຊົນສາມາດຈັດຕັ້ງວິສາຫະກິດ, ທຸລະກິດໃນການພົວພັນຄ້າຂາຍກັບຕ່າງປະເທດໂດຍຢູ່ພາຍໃຕ້ການຄຸ້ມຄອງຂອງລັດ.
- ຄຸ້ມຄອງລາຄາສິນຄ້າພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດເພື່ອຮັບປະກັນແກ່ສັງຄົມໄດ້

[64] ມາ: ປຶ້ມແບບຮຽນພູມສາດ ຊັ້ນມັດທະຍົມສຶກສາປີທີ 7 ສະບັບຊົ່ວຄາວ, ກະຊວງສຶກສາທິການ ແລະ ກິລາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ 2011.

ຊົມໃຊ້ຢ່າງຍຸດຕິທຳ.

- ຄົ້ນຄວ້າສຶກສາເງື່ອນໄຂເພື່ອເຂົ້າເປັນສະມາຊິກອົງການການຄ້າສາກົນ ແລະ ກຸ່ມເສດຖະກິດຕ່າງໆ ທີ່ຈະເປັນປະໂຫຍດໃຫ້ແກ່ປະເທດເຮົາໃນອານາຄົດ, ຫັນເອົາທຸລະກິດການຄ້າຕ່າງປະເທດໄປສູ່ລະບົບທຸລະກິດການຄ້າແບບສາກົນເທື່ອລະກ້າວ.
- ຄົ້ນຄວ້າ, ສ້າງຕັ້ງ, ຄຸ້ມຄອງເຂດການຄ້າເສລີຕາມຊາຍແດນລາວກັບປະເທດໃກ້ຄຽງ.
- ເພີ່ມທະວີການຄ້າຂາອອກ, ແກ້ໄຂການຂາດດຸນເທື່ອລະກ້າວ.

ເພື່ອບັນລຸເປົ້າໝາຍທີ່ກ່າວມານັ້ນ, ລັດໄດ້ສົ່ງເສີມການຜະລິດສິນຄ້າຂາອອກທີ່ປະເທດເຮົາມີທ່າແຮງທີ່ຜະລິດສົ່ງອອກໃຫ້ໄດ້ຫລາຍ. ສ່ວນຂາເຂົ້າໄດ້ມີການຫລຸດຜ່ອນແລະຈຳກັດປະເພດສິນຄ້າທີ່ສາມາດຜະລິດໄດ້ພາຍໃນປະເທດ, ສົ່ງເສີມຂາເຂົ້າວັດຖຸດິບ, ອຸປະກອນ, ຜະລິດຕະພັນເຄິ່ງສຳເລັດຮູບ ເພື່ອນຳມາຜະລິດສົ່ງອອກ, ພ້ອມນັ້ນກໍ່ສົ່ງເສີມຂາເຂົ້າຂະໜາດນ້ອຍໃນໝູ່ປະຊາຊົນ.

ຜົນຂອງການຊຸກຍູ້ສົ່ງເສີມ ແລະ ເປີດກວ້າງການພົວພັນການຄ້າກັບຕ່າງປະເທດໄດ້ເຮັດໃຫ້ການຄ້າພາຍນອກມີການຂະຫຍາຍຕົວໄວ, ພົວພັນການຄ້າບໍ່ພຽງແຕ່ໃນບັນດາປະເທດຂົງເຂດອາຊຽນເທົ່ານັ້ນ ຍັງໄດ້ຕິດຕໍ່ພົວພັນຄ້າຂາຍກັບບັນດາປະເທດນອກກຸ່ມອາຊຽນນຳອີກ ເປັນຕົ້ນແມ່ນບັນດາປະເທດສະຫະພາບເອີຣົບ, ບັນດາປະເທດໃນເຂດອາຊີ: (ຈີນ, ອິນເດຍ, ຍີ່ປຸ່ນ, ເກົາຫລີໃຕ້, ປາກິດສະຖານ), ບັນດາປະເທດໃນເຂດໂອຊີເນຍ (ອົດສະຕຣາລີ, ນິວຊີແລນ), ບັນດາປະເທດໃນເຂດອາເມຣິກາ(ອາເມຣິກາ,ການາດາ)...ຊຶ່ງປະລິມານການສົ່ງອອກແລະການນຳເຂົ້າໄດ້ມີຕົວເລກສູງຂຶ້ນໃນແຕ່ລະປີສະແດງອອກ ດັ່ງນີ້:

ປີ ຄສ 1994 ຂາອອກ 194 ລ້ານໂດລາສິນຄ້າທີ່ສົ່ງອອກທີ່ສຳຄັນໄດ້ແກ່ໄມ້ ແລະ ຜະລິດຕະພັນຈາກໄມ້, ໄຟຟ້າ, ຜະລິດຕະພັນກະສິກຳ... ແລະ ຂາເຂົ້າປະມານ 326 ລ້ານໂດລາ ສິນຄ້ານຳເຂົ້າສຳຄັນໄດ້ແກ່

ເຂົ້າ, ອາຫານ, ເຄື່ອງອຸປະໂພກ, ເຄື່ອງຈັກຕ່າງໆ ...ຂາດດູນ 132 ລ້ານໂດລາ. ໄລຍະປີ ຄສ 2001-2005 ການຄ້າຂາອອກຂອງລາວປະຕິບັດໄດ້ 1.830 ລ້ານໂດລາ, ສິນຄ້າສົ່ງອອກທີ່ສຳຄັນໄດ້ແກ່ ໄຟຟ້າ, ແຮ່ທາດ, ຜະລິດຕະພັນຈາກໄມ້, ເຄື່ອງຫັດຖະກຳ, ເຄື່ອງຕັດຫຍິບ, ເຄື່ອງຈາກກະສິກຳ. ການນຳເຂົ້າຈາກຕ່າງປະເທດ ປີ ຄສ 2001-2005 ມີ 2.860 ລ້ານໂດລາ, ສິນຄ້າທີ່ນຳເຂົ້າທີ່ສຳຄັນໄດ້ແກ່: ນ້ຳມັນເຊື້ອໄຟ ແລະ ວັດຖຸດິບ, ເຄື່ອງຈັກ ແລະ ອາໄຫລ່, ສິນຄ້າປະເພດເຄື່ອງອຸປະໂພກ ແລະ ບໍລິໂພກ.

ປີ ຄສ 2009-2010 ການຄ້າກັບຕ່າງປະເທດບັນລຸໄດ້ປະມານ 1.789 ລ້ານໂດລາ, ການສົ່ງອອກ ສ່ວນໃຫຍ່ແມ່ນແຮ່ທາດ, ໄຟຟ້າ, ໄມ້, ຜະລິດຕະພັນຈາກໄມ້, ເຄື່ອງຕັດຫຍິບ. ການນຳເຂົ້າປະມານ 1.671 ລ້ານໂດລາ, ການນຳເຂົ້າສ່ວນໃຫຍ່ແມ່ນ: ນ້ຳມັນເຊື້ອໄຟ ແລະ ອາຍແກັດ, ເຄື່ອງກົນຈັກ, ອຸປະໂພກ ແລະ ບໍລິໂພກ...

ເບິ່ງລວມແລ້ວເຖິງວ່າການຄ້າກັບຕ່າງປະເທດຂອງລາວມີການຂະຫຍາຍຕົວເພີ່ມຂຶ້ນກໍຕາມ, ປະເທດເຮົາກໍຍັງ ມີການຂາດດູນການຄ້າຈຳນວນຫລາຍສົມຄວນ ອັນນີ້ເນື່ອງມາຈາກວ່າຄວາມຕ້ອງການພາຍໃນພວກເຮົາຍັງສູງ, ການຜະລິດພາຍໃນຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງສັງຄົມ, ມີຫລາຍຜະລິດຕະພັນຕ້ອງໄດ້ອີງໃສ່ການນຳເຂົ້າຈາກຕ່າງປະເທດເປັນຈຳນວນຫລວງຫລາຍ. ແຕ່ການສົ່ງອອກສະເລ່ຍໃສ່ຫົວຄົນຍັງຕ່ຳຍ້ອນມີຂໍ້ຈຳກັດຫລາຍຢ່າງບໍ່ວ່າໃນຂອດການຜະລິດ ກໍຄືຂັ້ນຕອນການສົ່ງອອກຜົນຜະລິດ, ການສົ່ງອອກສິນຄ້າກະສິກຳທີ່ບໍ່ທັນໄດ້ປຸງແຕ່ງ, ເຄື່ອງປ່າຂອງດົງ ແລະ ວັດຖຸດິບທີ່ມີມູນຄ່າເພີ່ມຕ່ຳຍັງກວມເອົາອັດຕາສ່ວນສູງ, ມັກຖືກກົດລາຄາ

ເມື່ອລາຄາຕະຫລາດມີການປ່ຽນແປງ. ນອກນັ້ນ, ລາຍຮັບທີ່ໄດ້ຈາກການສົ່ງອອກກວມອັດຕາສ່ວນຫລາຍ ແມ່ນໄດ້ມາຈາກຜະລິດຕະພັນທີ່ມີຕະຫລາດບໍ່ແນ່ນອນເຊັ່ນ: ຕັດຫຍິບ, ຜະລິດຕະພັນຈາກກະສິກຳ...ແຕ່ລັດຖະບານກໍ່ມີຄວາມເຊື່ອ ໝັ້ນວ່າໃນອະນາຄົດການຂາດດູນການຄ້າໃນປະເທດເຮົາຈະຄ່ອຍໆ ຫລຸດລົງ ຍ້ອນການຜະລິດພາຍ ໃນຂອງພວກເຮົາ ນັບມື້ນັບຂະຫຍາຍຕົວທາງດ້ານປະລິມານກໍ່ຄືຄຸນນະພາບ ໂດຍສະເພາະແມ່ນການຜະລິດເພື່ອສົ່ງອອກ.

**ຄຳຖາມ:**

1. ຈົ່ງອະທິບາຍຄວາມໝາຍ ແລະ ຄວາມສຳຄັນຂອງຍຸດທະສາດ ແລະ ແຜນພັດທະນາເສດຖະກິດຂອງລາວມີຄືແນວໃດ ?
2. ການຄ້າມີບົດບາດ ແລະ ຄວາມສຳຄັນແນວໃດໃນການພັດທະນາເສດຖະກິດຂອງລາວ ?
3. ຄວາມເປັນມາທາງດ້ານການຄ້າພາຍໃນປະເທດຂອງລາວເປັນຄືແນວໃດ? ພ້ອມທັງຍົກຕົວຢ່າງສິນຄ້າທີ່ນຳເຂົ້າ ແລະສົ່ງອອກຂອງລາວມາຈັກ 3-4 ຢ່າງ
4. ຄວາມເປັນມາທາງດ້ານການຄ້າຕ່າງປະເທດຂອງລາວມີລັກສະນະແນວໃດ ?

# ບົດທີ 9

## ສັງຄົມລາວ

## 9.1 ລັກສະນະ ແລະ ໂຄງປະກອບຂອງສັງຄົມລາວ

### 9.1.1 ລັກສະນະຂອງສັງຄົມລາວ

ປະຊາກອນລາວປະກອບດ້ວຍຫລາຍຊົນເຜົ່າທີ່ດຳລົງຊີວິດຢູ່ຮ່ວມຜືນແຜ່ນດິນອັນດຽວກັນ, ມີຄວາມຮັກແພງສາມັກຄີກັນ ຢ່າງແໜ້ນແກ່ນ ແລະ ໂຮມກັນເປັນຊາດລາວເອກະພາບມາແຕ່ດົນນານແລ້ວ; ສັງຄົມລາວປັດຈຸບັນມີລັກສະນະທີ່ສຳຄັນ ດັ່ງນີ້:

- ຢູ່ຮ່ວມກັນບົນຜືນແຜ່ນດິນດຽວກັນ ພາຍໃຕ້ສັງຄົມໜຶ່ງໆ ຈະມີອານາເຂດທີ່ແນ່ນອນ ຊຶ່ງອານາເຂດນີ້ຈະຄວບຄຸມຊຸມຊົນທີ່ມີຂະໜາດນ້ອຍ.

- ມີຄວາມຜູກພັນ ແລະ ເພິ່ງພາອາໄສຊຶ່ງກັນ ແລະ ກັນ ສັງຄົມເປັນຮູບແບບຂອງອົງການທີ່ມີຄວາມຜູກພັນລະຫວ່າງສະມາຊິກ ຊຶ່ງຄວາມຜູກພັນກັນ ແລະ ກັນນີ້ເປັນໄປຢ່າງທຳມະຊາດບໍ່ແມ່ນຖືກບັງຄັບ ທັງນີ້ກໍເພື່ອເພິ່ງພາອາໄສຊ່ວຍເຫລືອເກື້ອກູນຊຶ່ງກັນ ແລະ ກັນ.

- ມີວັດທະນະທຳຮ່ວມກັນໃນແຕ່ລະສັງຄົມຈະມີວັດທະນະທຳທີ່ເປັນເອກະລັກຂອງຕົນເອງ, ວັດທະນະທຳນີ້ ສາມາດຜູກມັດສະມາຊິກທັງຫລາຍມີຄວາມເປັນອັນໜຶ່ງອັນດຽວກັນເຊັ່ນ: ສະມາຊິກສັງຄົມມີແບບແຜນການດຳເນີນຊີວິດທີ່ເໝືອນກັນ ຊຶ່ງລວມໄປເຖິງການມີຂະນົບທຳນຽມປະເພນີ, ຄວາມເຄີຍຊິນ, ຄວາມເຊື່ອ ແລະ ຄ່ານິຍົມຢ່າງດຽວກັນ ເຮັດໃຫ້ມະນຸດໃນສັງຄົມນັ້ນສາມາດເຂົ້າໃຈສິ່ງຕ່າງໆ ກົງກັນເປັນຕົ້ນ ແມ່ນເຄື່ອງແຕ່ງກາຍ, ບ້ານເຮືອນ, ອາຫານໄປຈົນເຖິງເລື່ອງທາງດ້ານວັດທະນະທຳ ເຊັ່ນ: ຄ່ານິຍົມແບບດຽວກັນ.

- ມີລະບຽບແບບແຜນທາງສັງຄົມ, ການຈັດແບບແຜນທາງສັງຄົມນັ້ນຖືເປັນສັນຍາລັກທີ່ສຳຄັນຫລາຍຂອງສັງຄົມມະນຸດ ເພາະຖ້າສັງຄົມໃດບໍ່ມີລະບຽບ, ສັງຄົມນັ້ນກໍ່ຈະມີຄວາມຫຍຸ້ງຍາກສັບສົນ ແລະ ຫາຄວາມກ້າວໜ້າບໍ່ໄດ້. ລັກສະນະຄວາມມີລະບຽບທາງສັງຄົມອາດສະແດງອອກໄປຫລາຍລະດັບ ຄື: ລະດັບທີ່ນ້ອຍທີ່ສຸດສັງຄົມໄດ້ຈັດໃຫ້ມີລະບົບຄອບຄົວເພື່ອໃຫ້ມີການຈັດກິດຈະກຳໃນການອົບຮົມບົ່ມສອນສະມາຊິກຂອງຄອບຄົວ ຊຶ່ງຖືເປັນການປູກຝັງຈິດສຳນຶກ, ລະບຽບແບບແຜນທາງສັງຄົມ ຂັ້ນພື້ນຖານທີ່ສຸດ. ນອກຈາກນີ້, ມີລະບຽບກ່ຽວກັບການສຶກສາ, ລະບຽບກ່ຽວກັບສາສະໜາ, ລະບຽບແບບແຜນທາງເສດຖະກິດ, ລະບຽບແບບແຜນທາງການເມືອງ ເພື່ອຄວບຄຸມສັງຄົມໃນຂັ້ນສູງສຸດ ຄືການອອກກົດໝາຍເພື່ອຄວບຄຸມກິດຈະກຳຂອງມະນຸດທັງປວງໃຫ້ຢູ່ໃນແນວທາງທີ່ຖືກຕ້ອງ ແລະ ເປັນທຳ.

- ຄວາມເປັນອິດສະຫລະເຖິງ ແມ່ນວ່າສັງຄົມຈະມີການຕິດຕໍ່ປະສານງານກັນ ເພື່ອເພິ່ງພາລະຫວ່າງ ສັງຄົມ, ແຕ່ທຸກສັງຄົມກໍຈະມີອິດສະຫລະຈາກກັນ ຄື: ບໍ່ຕ້ອງຢູ່ພາຍໃຕ້ການບັງຄັບຂອງສັງຄົມອື່ນ.

### 9.1.2 ອົງປະກອບຂອງສັງຄົມລາວ

ອົງປະກອບສັງຄົມທີ່ສຳຄັນເປັນພື້ນຖານຂອງສັງຄົມລາວມີ ດັ່ງນີ້

- ປະຊາກອນ:

ຕ້ອງມີຈຳນວນຕັ້ງແຕ່ 2 ຄົນຂຶ້ນໄປສັງຄົມທີ່ມີຂະໜາດນ້ອຍທີ່ສຸດຄື: ຄອບຄົວທີ່ມີພໍ່ແມ່ ຫລື ພໍ່ແມ່ລູກ ໃນຂະນະທີ່ຊຸມຊົນ ຫລື ໝູ່ບ້ານຈະມີສະມາຊິກເພີ່ມຂຶ້ນຈົນກາຍເປັນເມືອງ, ແຂວງ, ພາກ, ປະເທດຕະຫລອດຈົນເຖິງສັງຄົມໂລກທີ່ມີປະຊາກອນອາໄສຢູ່ຮ່ວມກັນ.

- ຄວາມສຳພັນ:

ຄວາມສຳພັນປະຊາກອນ ຫລື ສະມາຊິກໃນສັງຄົມນັ້ນຈະຕ້ອງມີຄວາມສຳພັນ ແລະ ການປະຕິສຳພັນລະຫວ່າງ ກັນ, ພ້ອມກັນຊ່ວຍເຫລືອຊຶ່ງກັນ ແລະ ກັນ.

- ພື້ນທີ່ ຫລື ອານາເຂດ

ຄົນໃນສັງຄົມຈະອາໄສຢູ່ໃນບໍລິເວນແຫ່ງໃດແຫ່ງໜຶ່ງ ພື້ນທີ່ອາດມີຂະໜາດຈຳກັດ ເຊັ່ນ: ບໍລິເວນ ບ້ານຂອງຄອບຄົວໜຶ່ງ ຫລື ບໍລິເວນກວ້າງຂວາງເປັນເມືອງ ຫລື ແຂວງ ໂດຍບໍ່ຖືກຈຳກັດພື້ນທີ່ ເຊັ່ນ: ການສື່ສານລະຫວ່າງບຸກຄົນທາງອິນເຕີເນັດ.

- ການຈັດລະບຽບທາງສັງຄົມ:

ການຢູ່ຮ່ວມກັນໃນສັງຄົມນັ້ນສະມາຊິກຈະຕ້ອງປະຕິບັດຕາມກົດລະບຽບ ຫລື ບັນທັດຖານທີ່ຄວບຄຸມຕາມຕຳແໜ່ງສິດທິ ແລະ ໜ້າທີ່ຂອງສະມາຊິກແຕ່ລະຄົນ, ບັນທັດຖານທາງສັງຄົມ ຈະມີລະບົບແບບແຜນເປັນທີ່ຍອມຮັບ ແລະ ເຂົ້າໃຈຮ່ວມກັນຂອງຄົນໃນສັງຄົມ ເພື່ອໃຫ້ສາມາດຢູ່ຮ່ວມກັນໄດ້ຢ່າງມີຄວາມສຸກ.

- ການມີວັດທະນະທຳຂອງຕົນ:

ມະນຸດມາຢູ່ຮ່ວມກັນ ເປັນໝູ່ເປັນຊຸມຊົນພາຍໃຕ້ສະພາບແວດລ້ອມດຽວກັນ ທັງທາງກາຍະ ພາບ ແລະ ປະຫວັດສາດ, ພວກເຂົາກໍ່ສ້າງວັດທະນະທຳ ແລະ ຂະນົບທຳນຽມປະເພນີຂຶ້ນເພື່ອຕອບສະໜອງຕໍ່ຄວາມຕ້ອງການ ກໍ່ໃຫ້ເກີດເປັນວັດທະນະທຳສະເພາະຂອງຕົນເອງ.

### 9.1.3 ລັກສະນະການຕັ້ງຖິ່ນຖານຂອງຄົນລາວ

ການຕັ້ງຖິ່ນຖານໝາຍເຖິງການສ້າງສາທີ່ຢູ່ອາໄສຂອງມະນຸດ ໂດຍຈະລວມກັນເປັນກຸ່ມ, ເປັນບ້ານ ແລະ ເມືອງ ຊຶ່ງມີສ່ວນປະກອບທີ່ສຳຄັນຄື: ຈຳນວນຄົນ, ພື້ນທີ່ ແລະ ການຕິດຕໍ່ພົວພັນ ຊຶ່ງກັນ ແລະ ກັນ ໂດຍມີວັດຖຸພື້ນຖານໂຄງລ່າງຈຳນວນໜຶ່ງ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ ເຊັ່ນ: ໂຮງຮຽນ, ໂຮງໝໍ, ວັດ, ຮ້ານຄ້າ ແລະ ສະຖານທີ່ສາທາລະນຸປະໂພກຕ່າງໆ. ການຕັ້ງຖິ່ນ ຖານຂອງປະຊາກອນລາວມີມາແຕ່ດົນນານ, ບາງແຫ່ງໄດ້ຮັບການພັດທະນາຈົນກາຍເປັນເມືອງ ຫລື ໃຈກາງການເຄື່ອນໄຫວເສດຖະກິດ, ວັດທະນະທຳ... ຂອງລາວໃນປັດຈຸບັນ. ຮູບແບບການຕັ້ງຖິ່ນຖານ ຂອງຄົນລາວລວມມີຮູບແບບຕ່າງໆ ຄື: ການຕັ້ງຖິ່ນຖານແບບຊົ່ວຄາວ, ແບບເຄິ່ງຖາວອນ ແລະ ແບບຖາວອນ.

#### 9.1.3.1 ການຕັ້ງຖິ່ນຖານແບບຊົ່ວຄາວ

ປະຊາກອນລາວບາງຊົນເຜົ່າ ຍັງສືບຕໍ່ການດຳລົງຊີວິດດ້ວຍການຕັ້ງຖິ່ນຖານແບບຊົ່ວຄາວເປັນຕົ້ນ ແມ່ນຈຳນວນທີ່ດຳເນີນການຜະລິດແບບເຄື່ອນທີ່, ອາໄສການລ່າເນື້ອ ແລະ ເກັບເຄື່ອງປ່າຂອງດົງເປັນອາຫານ, ການລວມກຸ່ມບໍ່ໃຫຍ່, ຈຳນວນໜ້ອຍ ຊຶ່ງການຕັ້ງຖິ່ນຖານແບບນີ້ພາໃຫ້ເນື້ອທີ່ປ່າຖືກທຳລາຍ, ຄິດສະເລ່ຍແລ້ວປະມານ 350.000 ເຮັກຕາຕໍ່ປີ ເຊັ່ນ: ຢູ່ພາກເໜືອເປັນຕົ້ນ.

ນອກນີ້, ຍັງມີການດຳລົງຊີວິດແບບຊົ່ວຄາວຂອງພະນັກງານ ຫລື ຜູ້ມີອາຊີບບຸກເບີກສ້າງສາ ເຊັ່ນ: ສ້າງເສັ້ນທາງ, ເຂື່ອນໄຟຟ້າ, ຂຸດຄົ້ນແຮ່ທາດ...ຊຶ່ງມີລັກສະນະລະດູການ ຫລື ຕາມໜ້າວຽກ ເມື່ອສຳເລັດແລ້ວກໍຍ້າຍໄປບ່ອນໃໝ່.

#### 9.1.3.2 ການຕັ້ງຖິ່ນຖານແບບເຄິ່ງຖາວອນ

ການຕັ້ງຖິ່ນຖານແບບເຄິ່ງຖາວອນ ໝາຍເຖິງການຕັ້ງຖິ່ນຖານຂອງປະຊາກອນທີ່ເຮັດການຜະລິດກະສິກຳ 2-5 ປີ ກໍກັບຄືນບ່ອນເກົ່າ. ເກີນກວ່າ 5 ປີໄປແລ້ວໄຮ່ທີ່ຫລົກມາຫລາຍຄັ້ງກໍບໍ່ມີໄມ້ອີກ, ມັນໄດ້ກາຍເປັນປ່າຫຍ້າ ຫລື ປ່າຄັງ ຊຶ່ງບໍ່ສາມາດໃຊ້ເປັນບ່ອນປູກຝັງໄດ້ເຂົາກໍຍ້າຍໄປບ່ອນໃໝ່. ການລວມກຸ່ມຂອງປະຊາກອນໜ້ອຍ ແລະ ການຕັ້ງຖິ່ນຖານແບບເຄິ່ງຖາວອນນີ້ໄດ້ຄ່ອຍໆຫລຸດລົງກາຍມາເປັນການ ຕັ້ງຖິ່ນຖານແບບຖາວອນຫລາຍຂຶ້ນ.

#### 9.1.3.3 ການຕັ້ງຖິ່ນຖານແບບຖາວອນ

ການຕັ້ງຖິ່ນຖານແບບຖາວອນ ແມ່ນການຕັ້ງຖິ່ນຖານໃນພື້ນທີ່ການຜະລິດທີ່ແນ່ນອນ, ຍ້ອນພື້ນທີ່ການຜະລິດສາມາດລ້ຽງຊີບໄດ້ດີໃນຂັ້ນພື້ນຖານ ໂດຍສະເພາະແມ່ນຕາມເຂດລ້ອງນໍ້າ ແລະ ເຂດທົ່ງພຽງ ຊຶ່ງໃນພື້ນທີ່ດັ່ງກ່າວນີ້ເຂົາເຈົ້າເຮັດນາເປັນຕົ້ນຕໍ. ປະຊາກອນຢູ່ຮວມກັນເປັນກຸ່ມໃຫຍ່, ເປັນບ້ານໃຫຍ່, ມີການສ້າງກິດຈະການທາງວັດທະນະທໍາເຊັ່ນ: ວັດ, ໂຮງຮຽນ...ການສ້າງອາຄານບ້ານເຮືອນກໍແໜ້ນໜາຈົບງາມ, ສາມາດນໍາໃຊ້ໄດ້ຫລາຍປີ ຊຶ່ງສ່ວນຫລາຍເປັນເຮືອນຮ້ານມຸງຫຍ້າ, ມຸງແປ້ນ...ຕົກມາໃນປັດຈຸບັນນີ້ອາໄສມີຄວາມທັນສະໄໝດີຂຶ້ນຄື: ມີເຮືອນກໍ່, ມຸງສັງກະສີ, ມຸງກະເບື້ອງ ແຕ່ສ່ວນຫລາຍກໍແມ່ນຢູ່ໃນເທດສະບານແຂວງ, ເມືອງ ແລະ ບ້ານໃຫຍ່ໃນເຂດທົ່ງພຽງ.

ປະເທດລາວ ເປັນປະເທດໜຶ່ງທີ່ມີຮູບແບບລັກສະນະການຕັ້ງຖິ່ນຖານ ແລະ ແບບແຜນອາດດໍາລົງຊີວິດທີ່ມີເອກະລັກສະເພາະ, ມີທັງການຕັ້ງຖິ່ນຖານແບບຊົ່ວຄາວ, ເຄິ່ງຖາວອນ ແລະ ແບບຖາວອນ.ເຂດພູດອຍເປັນບ້ານນ້ອຍກະແຈກກະຈາຍ, ເຂດທົ່ງພຽງເປັນບ້ານໃຫຍ່ສ່ວນຫລາຍ ມີວັດເປັນສູນກາງລວມຂອງບ້ານ. ສໍາລັບຄວາມເຊື່ອຖືກໍແຕກຕ່າງກັນໄປ, ໂດຍສ່ວນໃຫຍ່ຄື: 66,8% ແມ່ນຖືສາ ສະໜາພຸດ; ດ້ານຮີດຄອງປະເພນີກໍມີຫລາຍບຸນປະເພນີສໍາລັບເຜົ່າລາວ, ບຸນກະເຣີ ຂອງເຜົ່າກຶມມຸ ແລະບຸນກິນຈຽງ ຂອງເຜົ່າມົ້ງ. ການທໍາມາຫາກິນກໍແຕກຕ່າງຕາມຄວາມຊິນເຄີຍທີ່ສືບທອດກັນມາ ຂອງແຕ່ລະເຜົ່າ. ຄົນລາວ ບໍ່ມີຄ່ານິຍົມໃນການຍ້າຍຖິ່ນຄືຊາວຕ່າງດ້າວ.

#### 9.1.3.4 ລັກສະນະຂອງການຕັ້ງຖິ່ນຖານ

ກ. ການຕັ້ງຖິ່ນຖານໃນເຂດພູດອຍມີຈຸດພິເສດດັ່ງນີ້:

- ການຮວມກຸ່ມຂອງປະຊາກອນບໍ່ຫລາຍ, ຢູ່ກະແຈກກະຈາຍ, ຈໍານວນຫລັງຄາເຮືອນກໍໜ້ອຍ.
- ພື້ນທີ່ຕັ້ງຖິ່ນຖານຄັບແຄບ, ບາງແຫ່ງຕັ້ງລຽບຕາມເປີ້ນພູ ຫລື ເລາະຕາມແຄມຫ້ວຍ.
- ການສ້າງບ້ານເຮືອນບາງບ່ອນກໍຍົກພື້ນເຮືອນສູງຂຶ້ນ (ເຮືອນຮ້ານ), ວັດສະດຸໃນການປຸກສ້າງເຮືອນເກືອບ 100% ແມ່ນໄມ້ ແລະ ເຄືອໄມ້.
- ເຮືອນສ່ວນຫລາຍແມ່ນມຸງດ້ວຍຫຍ້າ ແລະ ຫລັງຄາຊັນ.
- ບໍ່ມີການຈັດສັນຄວາມເປັນລະບຽບຂອງບ້ານເຮືອນ.

ຂ.ການຕັ້ງຖິ່ນຖານໃນເຂດພູພຽງ ແລະ ທົ່ງພຽງໃນຊົນນະບົດມີລັກສະນະຖາວອນກວ່າເຂດພູດອຍຊຶ່ງມີຈຸດພິເສດ ດັ່ງນີ້:

- ການເຕົ້າໂຮມຫລາຍຫລັງຄາເຮືອນຫລາຍ ແລະ ມີຈໍານວນພົນຫລາຍ (100 ກວ່າຄົນຂຶ້ນໄປ).
- ຮູບແບບ ຫລື ສະຖານທີ່ຕັ້ງບ້ານບໍ່ຈໍາກັດ, ມັກຢູ່ລຽບຕາມທົ່ງພຽງ ແລະ ລຽບຕາມແຄມແມ່ນໍ້າໃຫຍ່, ລຽບຕາມແຄມຖະໜົນ ຫລື ໃກ້ກັບບ່ອນຜະລິດ.
- ເຮືອນສ່ວນຫລາຍເປັນເຮືອນຮ້ານສູງ, ເຮັດດ້ວຍໄມ້, ພາຍໃນເຮືອນຈະມີຫລາຍຫ້ອງ ແລະ ມີເຮືອນຄົວ ຫລື ບາງຄອບຄົວກໍຈະມີເຮືອນຄົວຕ່າງຫາກ.
- ກ້ອງຕະລ່າງເປັນບ່ອນພັກຜ່ອນ ຫລື ບາງທ້ອງຖິ່ນກໍໃຊ້ເປັນຜູກສັດ ຫລື ດໍາເນີນວຽກຫັດຖະກໍາຕ່າງໆ.
- ບ້ານໃນເຂດພູພຽງ ແລະ ທົ່ງພຽງນີ້ສ່ວນຫລວງຫລາຍຈະມີວັດເປັນສູນລວມຂອງບ້ານ.

ຄ.ການຕັ້ງຖິ່ນຖານຢູ່ເຂດຕົວເມືອງໃນປັດຈຸບັນໄດ້ຂະຫຍາຍຕົວຢ່າງວ່ອງໄວ. ສະນັ້ນ, ຈຶ່ງມີລັກສະນະ ແລະ ຈຸດພິເສດແຕກຕ່າງກັນໄປ ດັ່ງນີ້:

- ໃຊ້ວັດຖຸກໍ່ສ້າງທີ່ທັນສະໄໝ, ມີລັກສະນະສິລະປະສີໄມ້ລາຍມີແບບປະສົມທັງສິລະປະພື້ນເມືອງ ແລະ ຂອງຕ່າງປະເທດ.
- ເຂດຊານເມືອງກໍມີການປະສົມລະຫວ່າງເຮືອນຮ້ານລາວເດີມກັບເຮືອນກໍ່ (ວິນລາ).
- ການຕັ້ງບ້ານເຮືອນຍັງບໍ່ທັນເປັນລະບຽບເພາະຂາດຜັງເມືອງ, ບ່ອນປຸກສ້າງກໍຄັບແຄບແອອັດແຕ່ກໍຢູ່ໃນໄລຍະດັດແປງ ແລະ ວາງຜັງໃໝ່ ໂດຍສະເພາະເຂດຊານເມືອງ ແລະ ເມືອງສ້າງໃໝ່.
- ວິຖີການດຳລົງຊີວິດຂອງຊາວເມືອງໄດ້ປ່ຽນໄປຫລາຍຖ້າທຽບໃສ່ຊົນນະບົດຍ້ອນມີບັນດາກິດຈະການດ້ານເສດຖະກິດ, ວັດທະນະທຳ ແລະ ສັງຄົມມີການພັດທະນາຂຶ້ນ.

ປະເທດລາວເປັນປະເທດໜຶ່ງທີ່ມີຮູບແບບລັກສະນະການຕັ້ງຖິ່ນຖານ ແລະ ແບບແຜນວາດດຳລົງຊີວິດທີ່ມີເອກະລັກສະເພາະ, ມີທັງການຕັ້ງຖິ່ນຖານແບບຊົ່ວຄາວ, ເຄິ່ງຖາວອນ ແລະ ແບບຖາວອນ. ເຂດພູດອຍເປັນບ້ານນ້ອຍກະແຈກກະຈາຍ, ເຂດທົ່ງພຽງເປັນບ້ານໃຫ່ຍສ່ວນຫລາຍ ມີວັດເປັນສູນກາງລວມຂອງບ້ານ. ສຳລັບຄວາມເຊື່ອຖືກໍແຕກຕ່າງກັນໄປ, ໂດຍສ່ວນໃຫ່ຍ ຄື: 66,8% ແມ່ນຖືສາສະໜາພຸດ; ດ້ານຮີດຄອງປະເພນີກໍມີຫລາຍບຸນປະເພນີສຳລັບເຜົ່າລາວ, ບຸນກະເຣິຂອງເຜົ່າກຶມມຸ ແລະ ບຸນກິນຈຽງຂອງເຜົ່າມົ້ງ. ການທຳມາຫາກິນກໍແຕກຕ່າງຕາມຄວາມຊິນເຄີຍທີ່ສືບທອດກັນມາຂອງແຕ່ລະເຜົ່າ. ຄົນລາວ ບໍ່ມີຄ່ານິຍົມໃນການຍ້ານຖິ່ນຄືຊາວຕ່າງດ້າວ.

## 9.2 ສັງຄົມເມືອງ ແລະ ສັງຄົມຊົນນະບົດ

ຕົວເມືອງ ແລະ ຊົນນະບົດ ແມ່ນຖິ່ນທີ່ຢູ່ອາໄສທີ່ມີມາແຕ່ດົນນານຂອງປະຊາກອນລາວ ຊຶ່ງມັນໄດ້ຕິດພັນກັບປະຫວັດສາດການຂະຫຍາຍຕົວຂອງສັງຄົມລາວ, ລັກສະນະຂອງຕົວເມືອງ ແລະ ຊົນນະບົດ ນັ້ນກໍ່ເປັນສິ່ງຢັ້ງຢືນເຖິງລະດັບການຂະຫຍາຍຕົວທາງເສດຖະກິດ ແລະ ສັງຄົມຂອງປະເທດ.

### 9.2.1 ລັກສະນະສັງຄົມເມືອງ

ຕົວເມືອງເປັນສູນລວມດ້ານຈິດໃຈ, ວັດທະນະທຳ, ສິລະປະ, ການປົກຄອງ, ເສດຖະກິດ ແລະ ອື່ນໆ ຂອງປະຊາກອນລາວມາແຕ່ບູຮານນະການ. ດັ່ງນັ້ນ, ຕົວເມືອງຂອງລາວຈຶ່ງກາຍເປັນຫລັກຖານທາງປະຫວັດສາດຂອງຄົນລາວ ທີ່ຢັ້ງຢືນເຖິງວິວັດທະນາການຄວາມເປັນມາຂອງສັງຄົມ ແລະ ເສດຖະກິດຂອງລາວ.

ເມືອງຕ່າງໆ ຂອງລາວໂດຍສ່ວນໃຫຍ່ໄດ້ກຳເນີດມາແຕ່ເຫິງນານແລ້ວ ໃນເມື່ອກ່ອນນັ້ນ ແມ່ນ ສູນເຕົ້າໂຮມຂອງປະຊາກອນອ້ອມຂ້າງທີ່ຕັ້ງຂອງສັກດີນາທ້ອງຖິ່ນ ແລ້ວຕໍ່ມາກໍໄດ້ຮັບການພັດທະນາຂຶ້ນເລື້ອຍໆ ຈົນກາຍເປັນຕົວເມືອງຂອງຍຸກປະຈຸບັນ. ເຖິງວ່າໄດ້ກຳເນີດມາເປັນເວລາຍາວນານແລ້ວກໍຕາມ, ແຕ່ລັກສະນະສະເພາະຂອງຕົວເມືອງຍັງປາກົດໃຫ້ເຫັນເຖິງຄວາມຫລ້າຊ້າໃນການພັດທະນາຕົວເມືອງ ແລະ ກິດຈະການກໍ່ສ້າງ, ແຕ່ກໍບໍ່ໝາຍຄວາມວ່າຕົວເມືອງໃນລາວບໍ່ໄດ້ຮັບການບູລະນະປັບແປງແຕ່ຢ່າງໃດ. ລັກສະນະທີ່ໂດດເດັ່ນຂອງມັນ ແມ່ນເປັນຕົວເມືອງ ຂອງຊາວພຸດທີ່ສ້າງສາພັດທະນາຕົວເມືອງ ໄປຄຽງຄູ່ກັບການສ້າງສາພັດທະນາປະຕິສັງຂອນວັດວາອາຮາມ. ດັ່ງນັ້ນ, ຕົວເມືອງໃນລາວ ຈຶ່ງປາກົດລັກສະນະເຈືອປົນລະຫວ່າງສະຖານທີ່ສາທາລະນະກັບບ້ານເຮືອນຂອງປະຊາຊົນ. ຕົວເມືອງຍັງມີລັກສະນະເຈືອປົນ ລະຫວ່າງ ກິດຈະການທັນສະໄໝກັບຊົນນະບົດ. ສອງລັກສະນະນັ້ນຍັງແຊກຊ້ອນກັນໄປໃນທຸກພື້ນທີ່ຂອງຕົວເມືອງ, ໃນນັ້ນລັກສະນະດັ້ງເດີມກວມເອົາອັດຕາສ່ວນຫລາຍ ກວ່າກິດ ຈະການກໍ່ສ້າງສະໄໝໃໝ່.

ເຖິງວ່າຕົວເມືອງຈະເປັນສູນເຕົ້າໂຮມປະຊາກອນຫລາຍກວ່າຢູ່ໃນຊົນນະບົດ, ແຕ່ມີລັກສະນະການຕັ້ງຖິ່ນຖານບ້ານເຮືອນຍັງຂາດຄວາມເປັນລະບຽບ, ບໍ່ມີການຈັດສັນໃຫ້ເປັນລະບົບສວຍງາມ. ດັ່ງນັ້ນ, ຈຶ່ງບໍ່ມີຄວາມແຕກຕ່າງກັນຫລາຍລະຫວ່າງຕົວເມືອງໃຫ່ຍກັບຕົວເມືອງນ້ອຍ ແລະ ລະຫວ່າງ

ຕົວເມືອງ ກັບຊົນນະບົດ, ໂດຍສະເພາະແລ້ວຊານເມືອງຍັງບໍ່ທັນມີຄວາມແຕກຕ່າງກັນຢ່າງຈະແຈ້ງ ເມື່ອທຽບກັບ ຕົວເມືອງຂອງຕ່າງປະເທດ. ຈຸດພິເສດທີ່ເຫັນໄດ້ໃນໄລຍະມໍ່ໆນີ້ ແມ່ນການປ່ຽນແປງຂອງຕົວເມືອງມີລັກສະນະໄວວາ, ຄວາມກ້າວໜ້າທັນສະໄໝດ້ານກິດຈະການກໍ່ສ້າງ, ຄວາມສີວິໄລສະໄໝໃໝ່ໄດ້ແຊກຊຶມເຂົ້າສູ່ຕົວເມືອງຢ່າງວ່ອງໄວ. ຕົວເມືອງໃຫຍ່ໆ ແລະ ສຳຄັນກວ່າໝູ່ໄດ້ແກ່ ນະຄອນຫລວງວຽງຈັນ. ນອກນັ້ນ, ກໍມີເມືອງໄກສອນ, ປາກເຊ ແລະ ຫລວງພະບາງ.

ເມືອງຕ່າງໆ ທີ່ກ່າວມານັ້ນ ເຖິງວ່າບໍ່ແມ່ນເມືອງທີ່ໃຫຍ່ພິລຶກແຕ່ກໍເຫັນວ່າມັນມີຄວາມມ່ວນຊື່ນຢູ່ຕະຫລອດເວລາ. ທັງນີ້ກໍ່ເພາະວ່າມັນໄດ້ດຶງດູດ ແລະ ເຕົ້າໂຮມເອົາຜູ້ຄົນຈາກທ້ອງຖິ່ນຕ່າງໆມາຢູ່ນັບມື້ນັບຫລາຍຂຶ້ນ ແລະ ໄດ້ກາຍເປັນສູນລວມທາງດ້ານການເມືອງ, ເສດຖະກິດ, ສັງຄົມ ແລະ ວັດທະນາທຳຂອງຊາວລາວ. ໃນປັດຈຸບັນນີ້, ເນື່ອງຈາກມີການຍົກຍ້າຍຂອງຜູ້ຄົນຈາກຊົນນະບົດເຂົ້າສູ່ຕົວເມືອງເປັນຈຳນວນຫລວງຫລາຍ ຈຶ່ງເຮັດໃຫ້ອັດຕາສ່ວນຂອງຊາວເມືອງເພີ່ມຂຶ້ນເປັນ 27.1% (ປີ ຄສ 2005). ສຳລັບການຍ້າຍຖິ່ນເຂົ້າສູ່ຕົວເມືອງດັ່ງກ່າວມີຈຳນວນຫລວງຫລາຍທີ່ສຸດ ແມ່ນຢູ່ນະຄອນຫລວງວຽງຈັນ ຊຶ່ງມີມາເຖິງປັດຈຸບັນນີ້ມີອັດຕາສ່ວນຂອງປະຊາກອນທີ່ເປັນຊາວເມືອງສູງເຖິງ 81.6%.

ພ້ອມກັບການເພີ່ມຂຶ້ນຂອງຈຳນວນພົນລະເມືອງນັ້ນໂຄງສ້າງດ້ານອາຊີບໃນເມືອງກໍມີການປ່ຽນແປງເຊັ່ນດຽວກັນຄື:ຜູ້ປະກອບອາຊີບໃນຂະແໜງອຸດສາຫະກຳ.ການຄ້າແລະບໍລິການຕ່າງໆ ກໍນັບມື້ນັບມີຈຳນວນຫລາຍຂຶ້ນເລື້ອຍໆ. ນອກຈາກນີ້, ລັກສະນະເດີມຂອງພົນລະເມືອງກໍ່ ນັບມື້ນັບປ່ຽນແປງ ເຊັ່ນດຽວກັນຄື: ຕຶກ, ອາຄານ ຫລື ສິ່ງກໍ່ສ້າງຕ່າງໆໄດ້ເກີດຂຶ້ນນັບມື້ນັບຫລາຍທັງມີຫລາຍສີສັນທີ່ແປກຕາ ແລະ ໂດດເດັ່ນອີກດ້ວຍ.

ປະເທດເຮົາກໍເປັນປະເທດທີ່ມີການຕັ້ງຖິ່ນຖານບ້ານເມືອງທີ່ເປັນເອກະລັກແລະມີຈຸດພິເສດຂອງຕົວເມືງຕ່າງຈາກຫລາຍຂົງເຂດ ເພາະເປັນເມືອງຊາວພຸດ,ການຂະຫຍາຍຕົວຂອງຕົວເມືອງຈຶ່ງໄປຄຽງຄູ່ກັບການສ້າງສາວັດວາອາຮາມ. ເມືອງຂອງລາວເປັນເມືອງນ້ອຍບໍ່ທັນເປັນລະບຽບຮຽບຮ້ອຍຄື: ສ່ວນຫລາຍເປັນເມືອງທີ່ເຈືອປົນກັບເນື້ອທີ່ຜະລິດກະສິກຳ; ເສດຖະກິດສ່ວນໃຫ່ຍເປັນຂອງລັດ ແລະ ເອກະຊົນຈຳນວນຫລາຍສົມຄວນ. ນອກນັ້ນ, ຍັງມີການທຳມາຄ້າຂາຍຂອງຊາວຕ່າງດ້າວ ເຊັ່ນ: ຊາວຈີນ,ຫວຽດນາມ...ຊາວຊົນນະບົດກໍຫລັ່ງໄຫລເຂົ້າມາຊອກວຽກເຮັດວຽກທຳໃນຕົວເມືອງຢ່າງຫລວງຫລາຍຄືກັນ. ກິດຈະການທາງດ້ານເສດຖະກິດໄດ້ຂະຫຍາຍຕົວຢ່າງກວ້າງຂວາງ ແລະ ໄດ້ບຸກລຸກເນື້ອທີ່ກະສິກຳໃນ ເຂດຕົວເມືອງ ແລະ ຊານເມືອງຢ່າງກວ້າງຂວາງ ເຮັດໃຫ້ເກີດມີບັນຫາຫລາຍຢ່າງດ້ານສະພາບແວດລ້ອມ ເຊັ່ນ: ເກີດມົນລະພິດ ແລະ ມົນລະພາວະຕ່າງໆ.

### 9.2.2 ລັກສະນະສັງຄົມຊົນນະບົດ

#### 9.2.2.1 ຊົນນະບົດ

ປະຊາກອນລາວໄດ້ດຳລົງຄົງຕົວຢູ່ເທິງຜືນແຜ່ນດິນຕອນນີ້ມາເປັນເວລາຫລາຍພັນປີແລ້ວ, ໄດ້ທຳການບຸກເບີກສ້າງສາຖິ່ນທີ່ຢູ່ອາໄສ ແລະ ຂະຫຍາຍພື້ນທີ່ເຮັດຢູ່ທຳກິນຢ່າງຕໍ່ເນື່ອງກັນມາ. ບາງເຂດ-ບາງບ້ານກໍໄດ້ຮັບການພັດທະນາຈາກບ້ານນ້ອຍຈົນກາຍເປັນບ້ານໃຫ່ຍ, ບາງແຫ່ງ ກໍໄດ້ກາຍເປັນຕົວເມືອງ ຫລື ເປັນສູນກາງຂອງທ້ອງຖິ່ນ; ຊີວິດການເຄື່ອນໄຫວຕົ້ນຕໍຂອງຊາວລາວ ແມ່ນປູກຝັງ,ລ້ຽງສັດ,ຊຸດຄົ້ນເຄື່ອງປ່າຂອງດົງ,ຫັດຖະກຳ...ຮູບການການຜະລິດນັ້ນມັນໄດ້ຕິດພັນກັບຊີວິດການເຄື່ອນໄຫວດຳລົງຊີວິດຂອງຊາວຊົນນະບົດລາວມາແຕ່ບູຮານ.

ຊົນນະບົດຂອງ ສປປ ລາວ ກວມເອົາເກືອບໝົດເນື້ອທີ່ຊຶ່ງຖືກບຸກເບີກ, ດັດແປງເປັນບ່ອນຢູ່ອາໄສ ແລະ ເປັນແຫລ່ງທຳມາຫາກິນຂອງຄົນລາວ ກວມເອົາຈຳນວນພົນລະເມືອງເຖິງ 73% ຊຶ່ງເກືອບທັງໝົດ ນັ້ນເປັນຊາວໄຮ່, ຊາວນາ, ຊາວສວນ, ຊາວປະມົງ ແລະ ຜູ້ປະກອບອາຊີບໃນ

ຂະແໜງກະສິກຳອື່ນໆ. ຊາວລາວທີ່ອາໄສໃນຊົນນະບົດນັ້ນໄດ້ເຕົ້າໂຮມກັນຢູ່ເປັນບ້ານນ້ອຍ ຫລື ບ້ານໃຫຍ່ ຕາມທີ່ເງື່ອນໄຂທາງ ດ້ານທີ່ຕັ້ງ, ພື້ນທີ່, ແຫລ່ງທຳມາຫາກິນ... ອຳນວຍໃຫ້. ຈຸດພິເສດຂອງຊາວຊົນນະບົດລາວຈຶ່ງສະແດງອອກ ດັ່ງນີ້:

- ຊີວິດຕິດພັນກັບທຳມະຊາດ
- ການຜະລິດແມ່ນກະສິກຳ (ປູກຝັງ, ລ້ຽງສັດ)
- ການຕັ້ງຖິ່ນຖານກະແຈກກະຈາຍຢູ່ຫ່າງໄກກັນ
- ຈຳນວນປະຊາກອນໃນບ້ານບໍ່ຫລາຍ ແລະ ສ່ວນຫລາຍເປັນບ້ານນ້ອຍ
- ການຕັ້ງບ້ານເຮືອນຍັງຮັກສາລັກສະນະດັ້ງເດີມ ແລະ ປະເພນີຂອງແຕ່ລະຊົນເຜົ່າ
- ການຕັ້ງຖິ່ນຖານຂອງບາງຊົນເຜົ່າຍັງມີລັກສະນະຊົ່ວຄາວຫລືເຄິ່ງຖາວອນຊົນນະບົດຂອງລາວໄດ້ກວມເອົາພື້ນທີ່ອັນກວ້າງໃຫ່ຍຂອງປະເທດ; ລັກສະນະການຕັ້ງຖິ່ນຖານຂອງປະຊາກອນຊົນນະບົດ ແມ່ນມີລັກສະນະຄ້າຍຄືກັນ, ເຖິງຈະມີຄວາມແຕກຕ່າງແຕ່ກໍມີພຽງເລັກນ້ອຍ ໂດຍອີງໃສ່ຈຸດພິເສດ ຂອງແຕ່ລະທ້ອງຖິ່ນ ແລະ ແຕ່ລະຂົງເຂດ... ດັ່ງນັ້ນ, ຊົນນະບົດຈຶ່ງແບ່ງຕາມລັກສະນະຂອງການກຳເນີດ ແລະ ຕາມລັກສະນະຂອງພື້ນທີ່.

#### 9.2.2.2 ປະເພດຊົນນະບົດແບ່ງຕາມລັກສະນະຂອງພື້ນທີ່

ການອາໄສຢູ່ຂອງປະຊາຊົນລາວມີລັກສະນະອີງໃສ່ສະພາບທຳມະຊາດເປັນຕົ້ນຕໍ, ດັ່ງນັ້ນ, ຮູບແບບການຕັ້ງຖິ່ນຖານ ແລະ ການເຄື່ອນໄຫວຜະລິດຈຶ່ງເປັນໄປຕາມທຳມະຊາດ. ບ້ານຂອງຊາວລາວມີ 2 ປະເພດໃຫຍ່ໆ ດ້ວຍກັນຄື: ບ້ານໃນເຂດທົ່ງພຽງ ແລະ ບ້ານໃນເຂດພູດອຍ. ບ້ານໃນເຂດທົ່ງພຽງມັກຈະເປັນບ້ານໃຫຍ່ ແລະ ມີລັກສະນະຖາວອນ. ສ່ວນບ້ານໃນເຂດພູດອຍໂດຍທົ່ວໄປຈະເປັນບ້ານນ້ອຍທີ່ຕັ້ງຢູ່ກະແຈກກະຈາຍ ແລະ ເຮືອນສ່ວນຫລາຍຈະມີລັກສະນະບໍ່ໝັ້ນຄົງຖາວອນ.

**ບ້ານໃນເຂດພູດອຍ**

ເຂດພູດອຍກວມເອົາເນື້ອທີ່ກວ້າງຂວາງເຖິງ 4/5 ຂອງເນື້ອທີ່ທົ່ວປະເທດ, ເຂດພູດອຍ (ນັບທັງພູພຽງ)ນັ້ນກໍເປັນຖິ່ນອາໄສຂອງປະຊາກອນລາວເຊັ່ນດຽວກັນ.ການຕັ້ງບ້ານເຮືອນຢູ່ຊົນນະບົດຂອງເຂດພູດອຍມີຫລາຍຮູບແບບແຕກຕ່າງກັນໂດຍມີລັກສະນະດັ່ງນີ້:

- ຂອບເຂດບ້ານແຄບແຕ່ມີພື້ນທີ່ກວ້າງນັ້ນໝາຍຄວາມວ່າ ຕັ້ງບ້ານເຮືອນຢູ່ໃນບໍລິເວນແຄບ ແຕ່ຫາກມີຊາຍແດນລະຫວ່າງບ້ານຕໍ່ບ້ານນັ້ນກວ້າງ ແລະ ຫ່າງໄກກັນ.
- ໃນບ້ານໜຶ່ງໆມີຈຳນວນຫລັງຄາເຮືອນໜ້ອຍ, ຈຳນວນປະຊາກອນຂອງບ້ານກໍໜ້ອຍ.
- ປະຊາກອນຂອງບ້ານສ່ວນຫລາຍມີລັກສະນະເອກະລາດຂອງອົງປະກອບທາງດ້ານຊົນເຜົ່າ ຄືການຢູ່ຮ່ວມກັນລະຫວ່າງເຜົ່າຕ່າງໆໃນບ້ານໜຶ່ງຍັງມີໜ້ອຍ.
- ເນື້ອທີ່ທຳການຜະລິດຄົງທີ່ມີໜ້ອຍ ແລະ ກະແຈກກະຈາຍ ແຕ່ກວມເອົາບໍລິເວນພື້ນທີ່ກວ້າງ.

**ບ້ານໃນເຂດທົ່ງພຽງ**

ເຂດທົ່ງພຽງເປັນເຂດທີ່ມີເນື້ອທີ່ຮາບພຽງດີ, ສ້າງຄວາມສະດວກສະບາຍໃຫ້ແກ່ການສ້າງບ້ານເຮືອນ ແລະ ທີ່ຢູ່ທຳກິນຂອງປະຊາກອນ. ດັ່ງນັ້ນ, ເຂດທົ່ງພຽງຈຶ່ງເປັນເຂດທີ່ມີຈຸດພິເສດສະເພາະດັ່ງນີ້:

- ບ້ານໜຶ່ງປະກອບດ້ວຍຫລາຍຫລັງຄາເຮືອນ ແລະ ເປັນບ້ານໃຫ່ຍ, ຈຳນວນປະຊາກອນກໍຫລາຍ, ຂອບເຂດບ້ານກໍກວ້າງ.
- ເຂດທົ່ງພຽງສ່ວນຫລາຍເປັນບ້ານຊົນເຜົ່າໄທລາວ; ດັ່ງນັ້ນ, ລັກສະນະການຕັ້ງເຮືອນກໍແມ່ນ

ເຮືອນຮ້ານ (ມີກ້ອງຕະລ່າງ) ເປັນສ່ວນຫລາຍ. ໃນປັດຈຸບັນ, ຮູບແບບກໍ່ສ້າງສະໄໝໃໝ່ໄດ້ຄ່ອຍໆ ແຊກຊຶມເຂົ້າສູ່ບ້ານໃນເຂດທົ່ງພຽງຫລາຍຂຶ້ນຕາມລໍາດັບ ໂດຍສະເພາະ ແມ່ນເຂດຊານເມືອງ.

- ບ້ານໃນເຂດທົ່ງພຽງສ່ວນຫລາຍເປັນບ້ານເດີມມາແຕ່ດົນນານ ເປັນຕົ້ນແມ່ນບ້ານທີ່ຢູ່ລຽບ ຕາມຝັ່ງຂອງແມ່ນໍ້າຂອງ ແລະ ສາຂາຂອງມັນ.

- ເຖິງຈະມີພື້ນທີ່ການຕັ້ງບ້ານເຮືອນກວ້າງກໍຕາມ ແຕ່ບ້ານໃນເຂດທົ່ງພຽງກໍບໍ່ມີຄວາມເປັນ ລະບຽບຮຽບຮ້ອຍ, ຫລາຍບ້ານມີລັກສະນະຄັບແຄບແອອັດຈາກການຕັ້ງເຮືອນຕິດໆ ກັນ.

ລັກສະນະຂອງຊົນນະບົດລາວເຮົາ ແມ່ນໄດ້ດໍາລົງຄົງຕົວມາແຕ່ບູຮານນະການ ຊຶ່ງລັກສະນະ ຂອງຊົນນະບົດນັ້ນມັນແຕກຕ່າງກັນແຕ່ລະທ້ອງຖິ່ນໃນການຕັ້ງຖິ່ນຖານ, ການດໍາລົງຊີວິດ ແມ່ນຕິດພັນ ກັບທໍາມະຊາດ, ການຜະລິດຕົ້ນຕໍ ແມ່ນກະສິກໍາ, ລັກສະນະຂອງບ້ານ ແມ່ນຫ່າງໄກສອກຫລີກກະແຈກກະ ຈາຍ.

## 9.3 ສະຫວັດດີການທາງສັງຄົມໃນລາວ

### 9.3.1 ນະໂຍບາຍສະຫວັດດີການສັງຄົມ

- ປະຕິບັດນະໂຍບາຍຕໍ່ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດຢ່າງເໝາະສົມ ແລະ ທົ່ວເຖິງໃຫ້ ໄດ້ 70.498 ທ່ານ. ໃນນີ້ພະນັກງານປະຕິວັດ, ອາວຸໂສ ໃນ ປີຄສ 1954 ຄືນຫລັງ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ; ປຸກເຮືອນໃຫ້ພະນັກງານເສຍອົງຄະພິເສດໃຫ້ສໍາເລັດ 100%. ປັບປຸງກົນໄກຄຸ້ມຄອງ- ບໍລິຫານເຮັດໃຫ້ສັງຄົມມີສ່ວນຮ່ວມໃນການຊ່ວຍເຫລືອຄົນພິການແລະເຮັດໃຫ້ເຂົາເຈົ້າໄດ້ເຂົ້າເຖິງສິ່ງ ບໍລິການສາທາລະນະຕ່າງໆ ດີຂຶ້ນເທື່ອລະກ້າວ. ພັດທະນາຄຸນນະພາບຊີວິດການເປັນຢູ່ຂອງຜູ້ອາຍຸ ສູງ, ຜູ້ທຸກຍາກ ແລະ ປ່ວຍພອຍຢູ່ 17 ແຂວງ.

- ພັດທະນາລະບົບປະກັນສັງຄົມຕ່າງໆ ທີ່ມີຢູ່ໃຫ້ກາຍເປັນລະບົບປະກັນສັງຄົມແຫ່ງຊາດທີ່ ເຂັ້ມແຂງ.

- ພັດທະນາລະບົບບໍລິການສັງຄົມສົງເຄາະໃຫ້ແກ່ເດັກນ້ອຍ, ຜູ້ດ້ອຍໂອກາດ ແລະ ຜູ້ປະສົບ ໄພພິບັດຕ່າງໆລວມທັງສ້າງເງື່ອນໄຂເພື່ອປ້ອງກັນ ແລະ ຫລຸດຜ່ອນຄວາມສ່ຽງຈາກໄພພິບັດ.

- ຂະຫຍາຍລະບົບປະກັນສັງຄົມທີ່ມີຢູ່ລົງສູ່ບັນດາແຂວງໃນຂອບເຂດທົ່ວປະເທດ ເຮັດໃຫ້ ປະຊາຊົນໄດ້ຮັບປະກັນສຸຂະພາບກວມ 50% ຂອງພົນລະເມືອງທັງໝົດ, ພົນລະເມືອງມີເຮືອນຢູ່ອາໄສ ທີ່ເໝາະສົມຫລາຍກວ່າ 80% ໃນປີຄສ 2015.

- ປັບປຸງ ແລະ ສ້າງລະບົບເຕືອນໄພຢູ່ 5 ແຂວງ, ປະຕິບັດນະໂຍບາຍຊ່ວຍເຫລືອສົງເຄາະຜູ້ ປະສົບໄພພິບັດຕ່າງໆ ແລະ ຜູ້ດ້ອຍໂອກາດໃຫ້ທົ່ວເຖິງທັນກັນ.

- ສືບຕໍ່ຈັດຕັ້ງປະຕິບັດ ແລະ ຂະຫຍາຍແຜນງານ, ໂຄງການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ ໂດຍສະເພາະແມ່ນແຜນງານ, ໂຄງການຕ້ານໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງ.

- ການແກ້ໄຂບັນຫາລະເບີດທີ່ບໍ່ທັນແຕກເຮັດໃຫ້ປະຊາຊົນໃນຊຸມຊົນສາມາດດໍາລົງຊີວິດ ໂດຍປາສະຈາກໄພຂົ່ມຂູ່ຈາກລະເບີດບໍ່ທັນແຕກ, ເຮັດໃຫ້ປະຊາຊົນສາມາດທໍາມາຫາກິນຢ່າງປອດ ໄພ ແລະ ກ້າວໄປສູ່ການຫລຸດຜ່ອນຄວາມທຸກຍາກ.

- ສຸມໃສ່ສໍາຫລວດຂໍ້ມູນລະເບີດຕົກຄ້າງຢູ່ຕາມໜ້າດິນໃນເຂດບ້ານທີ່ມີຄວາມສ່ຽງສູງ, ຕັ້ງສູນຮັບ ຟັງການລາຍງານຈາກປະຊາຊົນໃຫ້ກະຈາຍຫລາຍຂຶ້ນ; ຝຶກອົບຮົມ ແລະ ຍົກລະດັບຊີວິດ ວິຊາການ ດ້ານວຽກງານເກັບກູ້ລະເບີດໃຫ້ພະນັກງານທີ່ເຮັດວຽກດ້ານນີ້ໃຫ້ມີຄວາມຊໍານານ ແລະ ເຂົ້າໃຈກໍາມະວິທີຕ່າງໆ ທີ່ຖືກຕ້ອງ

- ເກັບກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ໃຫ້ໄດ້ຢ່າງໜ້ອຍ 12.500 ເຮັກຕາ, ໃນນີ້ເປັນ

ເນື້ອທີ່ດິນສໍາລັບການຜະລິດ 11.875 ເຮັກຕາ ແລະ ເນື້ອທີ່ດິນສໍາລັບການພັດທະນາຕ່າງໆ 625 ເຮັກຕາ.

### 9.3.2 ການປະຕິບັດນະໂຍບາຍສະຫວັດດີການສັງຄົມ

ລັດຊຸກຍູ້ ແລະ ສົ່ງເສີມການພັດທະນາວຽກງານປະກັນສັງຄົມ ໃຫ້ດໍາເນີນໄປຄຽງຄູ່ກັບການເຕີບໂຕທາງດ້ານເສດຖະກິດ ຊຶ່ງລັດເປັນຜູ້ໃຊ້ແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ ຕ້ອງປະກອບທຶນເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ເພື່ອຮັບປະກັນການຕອບສະໜອງການອຸດໜູນປະກັນສັງຄົມພາຍໃຕ້ການຄຸ້ມຄອງຂອງລັດ ໂດຍມີການຍົກເວັ້ນອາກອນສໍາລັບເງິນອຸດໜູນປະກັນສັງຄົມປະເພດຕ່າງໆ. ລັດຊຸກຍູ້ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນດ້ານທຶນຮອນ ແລະ ເຕັກນິກວິຊາການ ເຂົ້າໃນການພັດທະນາວຽກງານປະກັນສັງຄົມໃຫ້ເຕີບໃຫ່ຍຂະຫຍາຍຕົວ.

ການປະກັນສັງຄົມແມ່ນການຮັບປະກັນໃຫ້ຜູ້ປະກັນຕົນໄດ້ຮັບເງິນອຸດໜູນຈາກກອງທຶນປະກັນສັງຄົມແຫ່ງຊາດ ໃນກໍລະນີມີການປິ່ນປົວສຸຂະພາບ, ອອກລູກ ຫລື ຫລຸລູກ, ເກີດອຸປະຕິເຫດແຮງງານ, ພະຍາດອາຊີບ, ເສຍກໍາລັງແຮງງານ, ເສຍອົງຄະ, ປ່ອຍການ, ບໍານານ, ເສຍຊີວິດ, ອຸດໜູນສະມາຊິກ ຄອບຄົວ ແລະ ວ່າງງານ. ປະເພດການອຸດໜູນປະກັນສັງຄົມມີ ດັ່ງນີ້:

#### ກ. ການອູດໜູນປິ່ນປົວສຸຂະພາບ:

ແມ່ນການສະໜອງເງິນອຸດໜູນ ເພື່ອປິ່ນປົວສຸຂະພາບໃຫ້ຜູ້ປະກັນຕົນລວມທັງລູກ, ຜົວ ຫລື ເມຍ ຂອງຜູ້ກ່ຽວ. ເງື່ອນໄຂຮັບການອູດໜູນປິ່ນປົວສຸຂະພາບ: ຜູ້ທີ່ຈະໄດ້ຮັບການອຸດໜູນປິ່ນປົວສຸຂະພາບຕ້ອງມີເງື່ອນໄຂ ດັ່ງນີ້:

- ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ ແຕ່ 1 ເດືອນຂຶ້ນໄປ, ສໍາລັບການເກີດອຸປະຕິເຫດແຮງງານ, ພະຍາດອາຊີບ ແລະ ການເຈັບເປັນຍ້ອນການອອກລູກ ຫລື ຫລຸລູກ
- ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່3ເດືອນຂຶ້ນໄປສໍາລັບການເປັນພະຍາດທົ່ວໄປ ແລະ ອຸປະຕິເຫດທີ່ບໍ່ແມ່ນອຸປະຕິເຫດແຮງງານ

ຜົວ ຫລື ເມຍຂອງຜູ້ປະກັນຕົນ ແລະ ລູກຂອງຜູ້ກ່ຽວທີ່ມີອາຍຸບໍ່ເກີນ 18 ປີ ຫລື ຍັງສຶກສາຮໍ່າຮຽນ ທີ່ບໍ່ທັນໄດ້ແຕ່ງດອງ ຊຶ່ງມີອາຍຸບໍ່ເກີນ 23 ປີ ຈະໄດ້ຮັບການອູດໜູນປິ່ນປົວສຸຂະພາບ. ໃນກໍລະນີຜູ້ປະກັນຕົນຫາກເສຍຊີວິດນັ້ນ ຜົວ ຫລື ເມຍ ແລະ ລູກຂອງຜູ້ກ່ຽວຈະໄດ້ຮັບການອຸດໜູນປິ່ນປົວສຸຂະພາບ ພາຍ ໃນເວລາ 3 ເດືອນນັບແຕ່ຜູ້ປະກັນຕົນໄດ້ເສຍຊີວິດເປັນຕົ້ນໄປ.

ການນໍາໃຊ້ເງິນອຸດໜູນປິ່ນປົວສຸຂະພາບ ແມ່ນນໍາໃຊ້ເຂົ້າໃນການບໍລິການປິ່ນປົວສຸຂະພາບໃຫ້ແກ່ຜູ້ປະກັນຕົນ ຜົວ ຫລື ເມຍ ແລະ ລູກຂອງຜູ້ກ່ຽວໃນເວລາເຈັບເປັນ ໂດຍມີສັນຍາກັບສະຖານທີ່ບໍລິການສຸຂະພາບດ້ວຍຮູບການຈ່າຍແບບມອບເໝົາ, ແບບໃບບິນ ແລະ ອື່ນໆ.

#### ຂ. ການອຸດໜູນອອກລູກ ຫລື ຫລຸລູກ:

ແມ່ນການສະໜອງເງິນບໍາເນັດເທື່ອດຽວຕໍ່ລູກ 1 ຄົນໃນກໍລະນີຜູ້ປະກັນຕົນອອກລູກ ຫລື ຫລຸລູກ ຫາກມີການເຈັບເປັນຊຶ່ງໄດ້ພັກວຽກ ເພື່ອປິ່ນປົວສຸຂະພາບກໍ່ຍັງຈະໄດ້ຮັບເງິນອຸດໜູນຕື່ມອີກຕາມລະບຽບການ. ເງື່ອນໄຂຂອງບຸກຄົນ ຜູ້ທີ່ຈະໄດ້ຮັບການອຸດໜູນອອກລູກ ຫລື ຫລຸລູກຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

- ຖອກເງິນທຶນເຂົ້າກອງທຶນປະກັນສັງຄົມ ແຕ່ຫົກເດືອນຂຶ້ນໄປ

- ອອກລູກ ຫລື ຫລຸລູກຫລັງຈາກຖືພາແຕ່ 3 ເດືອນຂຶ້ນໄປ ຫລື ລູກຕາຍໃນທ້ອງ ໂດຍມີການຢັ້ງຢືນ ດ້ານການແພດຢ່າງຖືກຕ້ອງ.

**ຄ. ການອຸດໜູນອຸປະຕິເຫດແຮງງານ, ພະຍາດອາຊີບ ຫລື ອຸປະຕິເຫດອື່ນທີ່ມີການເສຍກຳລັງແຮງງານ ຫລື ເສຍອົງຄະ:**

ແມ່ນການສະໜອງເງິນອຸດໜູນເສຍກຳລັງແຮງງານຊົ່ວຄາວ, ເງິນອຸດໜູນເສຍອົງຄະເທື່ອດຽວ ຫລື ລາຍເດືອນ ໃຫ້ຜູ້ປະກັນຕົນທີ່ປະສົບອຸປະຕິເຫດແຮງງານ, ເປັນພະຍາດອາຊີບ ຫລື ປະສົບອຸປະຕິເຫດອື່ນ.ເງື່ອນໄຂຂອງບຸກຄົນຜູ້ທີ່ຈະໄດ້ຮັບການອຸດໜູນອຸປະຕິເຫດແຮງງານ, ພະຍາດອາຊີບ ຫລື ອຸປະຕິເຫດອື່ນຕ້ອງມີເງື່ອນໄຂດັ່ງນີ້:

- ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມນັບແຕ່ໜຶ່ງເດືອນຂຶ້ນໄປສຳລັບຜູ້ປະກັນຕົນທີ່ປະສົບອຸປະຕິເຫດແຮງງານ ຫລື ພະຍາດອາຊີບ ແລະ ສິບສອງເດືອນຂຶ້ນໄປສຳລັບຜູ້ປະກັນຕົນທີ່ປະສົບອຸປະຕິເຫດອື່ນ.
- ຂາດສະມັດຕະພາບແຮງງານແລະສະພາວະປົກກະຕິຂອງຈິດໃຈຍ້ອນປະສົບອຸປະຕິເຫດແຮງງານຢູ່ສະຖານທີ່ເຮັດວຽກ, ໄລຍະທາງໄປ-ກັບລະຫວ່າງທີ່ພັກເຊົາຫາບ່ອນເຮັດວຽກ ຫລື ໄລຍະການເຄື່ອນໄຫວວຽກງານທາງລັດຖະການ
- ເປັນພະຍາດອາຊີບທີ່ເກີດຈາກວຽກງານວິຊາສະເພາະ
- ເສຍອົງຄະ ຫລື ເສຍອະໄວຍະວະໃດໜຶ່ງຂອງຮ່າງກາຍຍ້ອນປະສົບອຸປະຕິເຫດແຮງງານ, ພະຍາດອາຊີບ, ອຸປະຕິເຫດອື່ນ ຫລື ພະຍາດທົ່ວໄປ

ເງື່ອນໄຂທີ່ 2, 3 ແລະ 4 ຂ້າງເທິງນີ້ຕ້ອງມີການຢັ້ງຢືນດ້ານການແພດ. ສຳລັບເງື່ອນໄຂການເສັຍກຳລັງແຮງງານ ຫລື ເສຍອົງຄະຍ້ອນການສູ້ຮົບ ແລະ ການຮັບໃຊ້ການຮັບໃຊ້ການສູ້ຮົບ ເພື່ອປະເທດຊາດໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ງ. ການອຸດໜູນປ່ອຍການ:**

ແມ່ນການສະໜອງເງິນອຸດໜູນໃຫ້ຜູ້ປະກັນຕົນທີ່ຍັງບໍ່ສາມາດກັບມາເຮັດວຽກປົກກະຕິຍ້ອນປະສົບອຸປະຕິເຫດແຮງງານ ຫລື ອຸປະຕິເຫດອື່ນ, ເປັນພະຍາດອາຊີບ ຫລື ພະຍາດອື່ນ. ຍ້ອນເຈັບ ເປັນເນື່ອງຈາກການອອກລູກ ຫລື ຫລຸລູກ ຊຶ່ງຖືກຢຸດຈ່າຍເງິນເດືອນຊົ່ວຄາວໃນເວລາປິ່ນປົວ ແລະ ຟື້ນຟູ ສຸຂະພາບ. ເງື່ອນໄຂຂອງບຸກຄົນ ຜູ້ທີ່ຈະໄດ້ຮັບການອຸດໜູນປ່ອຍການຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

- ໄດ້ຖອກເງິນເຂົ້າກອງທຶນປະກັນສັງຄົມນັບແຕ່ສາມເດືອນຂຶ້ນໄປ
- ໄດ້ຖືກຢຸດຈ່າຍເງິນເດືອນຊົ່ວຄາວ
- ມີການຢັ້ງຢືນດ້ານການແພດກ່ຽວກັບການປ່ອຍການ

**ຈ. ການອຸດໜູນບຳນານ:**

ແມ່ນການສະໜອງເງິນອຸດໜູນເປັນລາຍເດືອນໃຫ້ຜູ້ປະກັນຕົນທີ່ພັກຮັບບຳນານເງື່ອນໄຂຂອງບຸກຄົນ ຜູ້ທີ່ຈະໄດ້ຮັບການອຸດໜູນບຳນານຕ້ອງມີເງື່ອນໄຂ ດັ່ງນີ້:

- ມີອາຍຸກະສຽນ 60 ປີ ສຳລັບເພດຊາຍແຕ່ 55 ປີຂຶ້ນໄປສຳລັບເພດຍິງ ແລະ ມີປີການແຕ່ 25 ປີ ຂຶ້ນໄປ.

- ເຮັດການປະຕິວັດກ່ອນ ປີຄສ 1975, ເສັຍອົງຄະປະເພດ 1 ຫາ 4 ແລະ ເຮັດວຽກກັບທາດເບື່ອລຽນຕິດແຕ່ຫ້າປີຂຶ້ນໄປ. ມີອາຍຸກະສຽນ 55 ປີ ສຳລັບເພດຊາຍ, 50 ປີສຳລັບເພດຍິງ ແລະ ມີປີການແຕ່ 20 ປີ ຂຶ້ນໄປ.

- ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່ 20 ຫລື 25 ປີ ຕາມແຕ່ລະກໍລະນີສຳລັບພະນັກງານ, ລັດຖະກອນ, ທະຫານ ແລະ ຕຳຫລວດ.

- ຖ້າຫາກໄດ້ຖອກເງິນສົມທົບເກີນ 25 ປີຂຶ້ນໄປ ແຕ່ຜູ້ປະກັນຕົນດັ່ງກ່າວຫາກມີສຸຂະພາບອ່ອນເພຍ ແລະ ມີກະສຽນອາຍຸບໍ່ຄົບແຕ່ 3 ປີລົງມາກໍສາມາດຮັບບຳນານ. ໃນນັ້ນ, ອາຍຸກະສຽນຫລຸດໜຶ່ງປີ ໃດໃຫ້ຫລຸດໜຶ່ງສ່ວນຮ້ອຍຂອງອັດຕາສ່ວນຮ້ອຍອຸດໜູນບຳນານ.

- ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ ແຕ່ 15 ປີຂຶ້ນໄປ ສຳລັບຜູ້ອອກແຮງງານໃນຫົວໜ່ວຍແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ຜູ້ສະໝັກໃຈ.

- ມີການຢັ້ງຢືນຮັບບຳນານຢ່າງຖືກຕ້ອງຈາກຂະແໜງການທີ່ກ່ຽວຂ້ອງ.

**ສ. ການອຸດໜູນເສຍຊີວິດ:**

ແມ່ນການສະໜອງເງິນຊາປະນະກິດສົບ ແລະ ເງິນອຸດໜູນຄອບຄົວໃຫ້ແກ່ສະມາຊິກຄອບຄົວຂອງຜູ້ປະກັນຕົນທີ່ໄດ້ເສຍຊີວິດ.ເງື່ອນໄຂຂອງບຸກຄົນ ຜູ້ທີ່ຈະໄດ້ຮັບການອຸດໜູນເສັຍຊີວິດຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

- ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມນັບແຕ່ 3 ເດືອນຂຶ້ນໄປ.
- ມີການຢັ້ງຢືນການເສັຍຊີວິດຢ່າງຖືກຕ້ອງ.

ສຳລັບເງື່ອນໄຂຮັບການອຸດໜູນການເສັຍສະຫລະຊີວິດຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບ ເພື່ອປະເທດຊາດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ຊ. ການອຸດໜູນສະມາຊິກຄອບຄົວຂອງຜູ້ປະກັນຕົນ:**

ແມ່ນການສະໜອງເງິນອຸດໜູນເປັນລາຍເດືອນໃຫ້ຜົວ ຫລື ເມຍ, ລູກ, ແລະ ແມ່ ຂອງຜູ້ປະກັນຕົນ ທີ່ໄດ້ເສຍຊີວິດ.ເງື່ອນໄຂຂອງບຸກຄົນ ຜູ້ທີ່ຈະໄດ້ຮັບການອຸດໜູນກໍຕໍ່ເມື່ອຜູ້ປະກັນຕົນທີ່ເສັຍຊີວິດຫາກໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມ ແຕ່ 5 ປີຂຶ້ນໄປສຳລັບລູກ, ຜົວ ຫລື ເມຍ. ສະມາຊິກຄອບຄົວຕ້ອງມີເງື່ອນໄຂ ດັ່ງນີ້:

- ຜົວມີອາຍຸກະສຽນ 60 ປີ, ເມຍ 55 ປີຂຶ້ນໄປ ທີ່ບໍ່ມີລາຍໄດ້ໃດໜຶ່ງ ແລະ ບໍ່ໄດ້ແຕ່ງດອງໃໝ່ ຫລື ເສຍອົງຄະປະເພດ 1.

- ລູກຄີງ, ລູກລ້ຽງ ຫລື ລູກນ້າທີ່ມີອາຍຸຕ່ຳກວ່າ 18 ປີ. ສຳລັບລູກທີ່ເປັນຄົນພິການ ຫລື ເສຍຈິດທີ່ບໍ່ສາມາດອອກແຮງງານຈະໄດ້ຮັບເງິນອຸດໜູນຕະຫລອດຊີວິດ.

- ພໍ່ທີ່ມີອາຍຸກະສຽນແຕ່ 60 ປີ ແລະ ແມ່ ທີ່ມີອາຍຸກະສຽນ ແຕ່ 15 ຂຶ້ນໄປ ຊຶ່ງບໍ່ມີລາຍໄດ້ປົກກະຕິ ແລະ ຜູ້ເສຍຊີວິດເປັນຜູ້ເບິ່ງແຍງລ້ຽງດູ.

- ສຳລັບພໍ່ ຫລື ແມ່ ທີ່ລູກທັງໝົດໄດ້ເສຍຊີວິດຍ້ອນການສູ້ຮົບ ແລະ ຮັບໃຊ້ການສູ້ຮົບເພື່ອປະເທດຊາດນັ້ນ ເຖິງວ່າບໍ່ໄດ້ຮັບປະກັນຕົນກໍຕາມ ກໍຈະໄດ້ຮັບການອຸດໜູນຕະຫລອດຊີວິດ.

**ຍ. ການອຸດໜູນວ່າງງານ:**

ແມ່ນການສະໜອງເງິນອຸດໜູນເປັນລາຍເດືອນໃຫ້ຜູ້ປະກັນຕົນໃນເວລາຫວ່າງງານເປັນແຕ່ລະໄລຍະ. ເງື່ອນໄຂຂອງບຸກຄົນ ຜູ້ທີ່ຈະໄດ້ຮັບການອຸດໜູນວ່າງງານຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

- ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມແຕ່ 12 ເດືອນຂຶ້ນໄປ.
- ວ່າງງານຍ້ອນການລົ້ມລະລາຍຂອງຫົວໜ່ວຍແຮງງານຫລືການລະດົມໃຫ້ອອກຈາກວຽກ.
- ວ່າງງານແຕ່ 30 ວັນຂຶ້ນໄປ ໂດຍມີການຢັ້ງຢືນຢ່າງຖືກຕ້ອງ.

**ຄໍາຖາມ:**

1. ລັກສະນະ ແລະ ອົງປະກອບຂອງສັງຄົມລາວເປັນຄືແນວໃດ ?
2. ການຕັ້ງຖິ່ນຖານຂອງປະຊາກອນລາວມີຈັກຮູບແບບ ແລະ ຈັກລັກສະນະ? ຄືຮູບແບບ ແລະ ລັກສະນະໃດແດ່ ?
3. ຈຸດພິເສດຂອງຕົວເມືອງມີຫຍັງແດ່ ?
4. ຈົ່ງອະທິບາຍຈຸດພິເສດ ແລະ ປະເພດຊົນນະບົດຂອງລາວມີຄືແນວໃດ ?
5. ນະໂຍບາຍດ້ານສະຫວັດດີການສັງຄົມ ແລະ ການປະຕິບັດນະໂຍບາຍດ້ານສະຫວັດດີການສັງຄົມໃນລາວ ມີຄືແນວໃດ ?

ບົດທີ

10

# ວັດທະນະທຳລາວ

## 10.1 ຄວາມໝາຍ ແລະ ຄວາມເປັນມາຂອງວັດທະນະທຳລາວ

ວັດທະນະທຳໝາຍເຖິງຮູບແບບພຶດຕິກຳຊຸດໜຶ່ງ ຊຶ່ງຄົນກຸ່ມໜຶ່ງໄດ້ສະແດງອອກຕັ້ງແຕ່ເລື່ອງຄວາມກ້າວໜ້າເທັກໂນໂລຊີ, ພາສາ, ສາສະໜາ, ສິລະປະ, ການພົວພັນຂອງສັງຄົມ, ການດຳລົງຊີວິດປະຈຳວັນ, ລະບົບການເມືອງ ຕະຫລອດເຖິງກົດໝາຍບ້ານເມືອງ. ອົງປະກອບທາງວັດທະນະທຳເຫລົ່ານີ້ ຍ່ອມແຕກຕ່າງກັນໃນແຕ່ລະພື້ນທີ່. ວັດທະນະທຳເປັນແນວຄວາມຄິດ ແລະ ການກະທຳຕົວຈິງ ທີ່ສາມາດ ຖ່າຍທອດກັນໄດ້ຈາກຄົນຮຸ່ນນີ້ໄປສູ່ຄົນຮຸ່ນໃໝ່ ຫລື ຈາກຄົນກຸ່ມໜຶ່ງໄປສູ່ອີກກຸ່ມໜຶ່ງ. ການຖ່າຍທອດ ວັດທະນະທຳບໍ່ແມ່ນແຕ່ອາໄສປັດໄຈທາງກາຍະພາບເທົ່ານັ້ນ. ແຕ່ອາໄສສັນຍາລັກກໍຄື ພາສາເປັນສື່. ວັດທະນະທຳຂອງມະນຸດມີຄວາມສັບສົນ ແລະ ໝັ້ນຄົງ (Haggett,1979). ຄວາມຫລາກຫລາຍຂອງວັດ ທະນະທຳຂອງມະນຸດ ເຮັດໃຫ້ເກີດຄວາມສັບສົນເຂົ້າໃຈຍາກ. ແນວໃດກໍຕາມ ນັກພູມສາດຊື່ ເຊີລິນສະກີ (Zelinsky, 1973) ໄດ້ແບ່ງອົງປະກອບຂອງວັດທະນະທຳດັ່ງນີ້:

ອົງປະກອບພື້ນຖານມີຄື ພາສາ, ສາສະໜາ, ສິລະປະ, ເວດມົນຄາຖາ, ທັດສະນະຄະຕິ ແລະ ສິ່ງປະດິດຕ່າງໆ. ຄຸນລັກສະນະເດັ່ນມີຄື: ວິຖີຊີວິດ, ການປະກອບອາຊີບ, ລັກສະນະທາງສັງຄົມ ແລະ ອຸດົມການ.ໃນຄວາມເປັນຈິງຄວາມເປັນມາຂອງວັດທະນະທຳຂອງແຕ່ລະປະເທດ ແມ່ນພົວພັນກັບທີ່ຕັ້ງ ຂອງປະເທດ ກໍຄື ຂອງເຂດຕ່າງໆບົນໜ້າໂລກນີ້ເຊັ່ນ: ນັກພູມີສາດຊື່ ແຈນ ເອມ. ບຣ໊ອກ (Jan M. Broek) ໄດ້ແບ່ງເຂດວັດທະນະທຳຂອງໂລກອອກເປັນ 4 ເຂດໃຫຍ່ ແລະ 3 ເຂດ ຍ່ອຍຄື:

ກ. ເຂດໃຫຍ່

1. ເຂດວັດທະນະທຳຕາເວັນຕົກ
2. ເຂດວັດທະນະທຳອິສະລາມ
3. ເຂດວັດທະນະທຳອິນເດຍ
4. ເຂດວັດທະນະທຳເອເຊຍຕາເວັນອອກ

ຂ. ເຂດຍ່ອຍ:

- ເຂດເອເຊຍຕາເວັນອອກສຽງໃຕ້
- ເຂດແອຟຣິກາກາງ
- ເຂດແປຊີຟິກໃຕ້

ເປັນດັ່ງນັ້ນ, ເຂດເອເຊຍຕາເວັນອອກສຽງໃຕ້ ຊຶ່ງແມ່ນເຂດຍ່ອຍຂອງວັດທະນະທຳທີ່ບໍ່ຄືເຂດວັດທະນະທຳອື່ນໆ ເພາະພື້ນທີ່ເຂດນີ້ ເປັນດິນແດນທາງຜ່ານ ຈຶ່ງເປັນເຂດປັບປຸງຂອງວັດທະນະທຳ ທີ່ເກີດຈາກການປະສົມປະສານທາງວັດທະນະທຳຂອງທຸກໆເຂດ. ແຕ່ປະເທດລາວ ແມ່ນໜຶ່ງປະເທດທີ່ມີທີ່ຕັ້ງຢູ່ໃນແຫລມອິນດູຈີນຊຶ່ງແມ່ນພື້ນທີ່ສ່ວນໜຶ່ງຂອງເຂດອາຊີຕາເວັນອອກສຽງໃຕ້.ຜ່ານມາໄດ້ຮັບ ອິດທິພົນທາງດ້ານວັດທະນະທຳຈາກອິນເດຍ ແລະ ຈີນຈຶ່ງເອີ້ນແຫລມນີ້ວ່າແຫລມອິນດູຈີນ. ໃນແຫລມນີ້ ວັດທະນະທຳອິນເດຍແຜ່ອິດທິພົນໄປທົ່ວເຂດໃນຮູບຂອງສາສະໜາ ໂດຍສະເພາະແມ່ນສາສະໜາພຸດ. ດັ່ງນັ້ນ, ປະເທດລາວຈຶ່ງເປັນປະເທດໜຶ່ງທີ່ໄດ້ຮັບອິດທິພົນຈາກວັດທະນະທຳອິນເດຍ ແລະ ຄົນລາວກໍເປັນຜູ້ທີ່ນັບຖືສາສະໜາພຸດເປັນສ່ວນຫລາຍ ໂດຍການນຳເຂົ້າມາແຕ່ສະໄໝກໍ່ຕັ້ງອານາຈັກລາວລ້ານຊ້າງເອກະພາບ ໃນລັດຊະການຂອງພະເຈົ້າຟ້າງຸ່ມໃນສະຕະວັດທີ 14 ເປັນຕົ້ນມາ. ວັດທະນະທຳລາວມີສ່ວນກ່ຽວຂ້ອງກັບສາສະໜາພຸດນັ້ນ, ກໍເນື່ອງຈາກວ່າສາສະໜາພຸດແມ່ນສູນລວມທາງດ້ານຈິດໃຈຂອງຊາວລາວທັງປວງ ພ້ອມທັງເປັນພື້ນຖານສ່ວນໜຶ່ງຂອງວັດທະນະທຳລາວເຊັ່ນ: ສິລະປະ, ວັນນະກຳ, ງານບຸນ, ງານປະເພນີ, ພິທີກຳ, ປັດຊະຍາ, ຄຳສັ່ງສອນ, ກົດໝາຍ, ຫລັກການ ແລະ

ແນວທາງປະຕິບັດເພື່ອປົກຄອງລັດ, ຄຸ້ມຄອງລັດ ແລະ ຄຸ້ມຄອງສັງຄົມ ຊຶ່ງລ້ວນແຕ່ມີສ່ວນກ່ຽວພັນກັບຫລັກສິນທຳຄຳສອນຂອງສາສະໜາພຸດນັ້ນເອງ. ນອກຈາກນັ້ນຊາວລາວຈຳນວນໜຶ່ງກໍເຊື່ອຖືຜີ, ດັ່ງນັ້ນ, ວັດທະນະທຳຕໍ່ກັບຄວາມເຊື່ອຊຶ່ງກ່ຽວຂ້ອງກັບພິທີກຳຕ່າງໆກໍຈຶ່ງແຕກຕ່າງກັນ. ດ້ານການນຸ່ງຖືກໍເຊັ່ນກັນໃນເມື່ອມີຫລາຍເຜົ່າ, ການນຸ່ງຖືກໍແຕກຕ່າງກັນຕະຫລອດຮອດປະເພນີການເຮັດບຸນ, ງານດອງ ຫລື ງານສົບກໍຕ່າງກັນ.

## 10.2 ອົງປະກອບຂອງວັດທະນະທຳລາວ

ຄືດັ່ງທີ່ກ່າວມາແຕ່ເບື້ອງຕົ້ນແລ້ວວ່າ ວັດທະນະທຳລາວກ່ຽວຂ້ອງກັບສາສະໜາພຸດເປັນສ່ວນໃຫຍ່, ນອກນັ້ນກໍຍັງກ່ຽວຂ້ອງກັບຄວາມເຊື່ອໃນສິ່ງສັກສິດຄືເຊື່ອຖືຜີບັນພະບູລຸດ, ຜີພູຜາປ່າໄມ້, ຜີຕົ້ນໄມ້ໃຫຍ່... ພ້ອມກັນນີ້, ວັດທະນະທຳຍັງກ່ຽວຂ້ອງກັບພື້ນທີ່, ພູມອາກາດກໍຄືລະດູການຕ່າງໆຊຶ່ງພວກເຮົານິຍົມກັນເອີ້ນວ່າສິ່ງແວດລ້ອມທຳມະຊາດນັ້ນເອງ. ດັ່ງນັ້ນອົງປະກອບຂອງວັດທະນະທຳລາວ ຈຶ່ງມີດັ່ງນີ້: ພາສາ, ຄວາມເຊື່ອຖື, ການເຄື່ອນໄຫວດຳລົງຊີວິດປະຈຳວັນ, ການກິນ, ການຢູ່, ການນຸ່ງຖືເອ້ຍ້ອງ (ການແຕ່ງກາຍ), ການອອກແຮງງານ, ການຮັກສາຄວາມສະອາດ (ການອານາໄມ), ອາຊີບ, ງານສິລະປະ, ການມ່ວນຊື່ນລື່ນເລີງ, ການເກີດ, ການແຕ່ງງານ, ການເສຍຊີວິດ, ພິທີກຳ, ພິທີການ, ງານບຸນ ແລະ ອື່ນໆຊຶ່ງຈະອະທິບາຍບາງຢ່າງຄືດັ່ງນີ້:

### 10.2.1 ພາສາ

"ພາສາບອກຊາດມາລະຍາດບອກຕະກຸນ" ນີ້ແມ່ນປະໂຫຍກໜຶ່ງທີ່ຂຽນຂຶ້ນມາເພື່ອສະແດງໃຫ້ຮູ້ເຖິງການມີຊາດກໍຕ້ອງມີພາສາເປັນຂອງຕົນເອງ. ມາລະຍາດຂອງຄົນເຊັ່ນກັນ, ຄົນຜູ້ທີ່ມີມາລະຍາດດີ ຖືກກັບຄ່ານິຍົມຂອງສັງຄົມ ກໍສະແດງເຖິງຄົນຜູ້ນັ້ນເກີດ ແລະ ໃຫຍ່ຢູ່ໃນຕະກຸນໃດໜຶ່ງຢູ່ໃນສັງຄົມນັ້ນ ທີ່ສຶກສາອົບຮົມລູກຫລານໃນຕະກຸນໃຫ້ເປັນຜູ້ດີນັ້ນເອງ. ດັ່ງນັ້ນ, ພາສາຈຶ່ງແມ່ນການສະແດງອອກ ຂອງຄົນດ້ວຍການປາກເວົ້າ, ຮ້ອງເພັງ, ຂັບ-ລຳ ແລະ ອື່ນໆພ້ອມທັງດ້ວຍການຂຽນເປັນຕົວໜັງສືເພື່ອສື່ສານໃຫ້ຜູ້ອື່ນເຂົ້າໃຈ. ການສະແດງອອກທາງດ້ານພາສາປາກເວົ້າ ຫລື ດ້ານການຂີດຂຽນເປັນຕົວໜັງສືແມ່ນໝາຍເຖິງວັດທະນະທຳຂອງແຕ່ລະຊາດ ຫລື ແຕ່ລະສັງຄົມນັ້ນເອງ. ວັດທະນະທຳທາງດ້ານພາສາຂອງຄົນລາວກໍເຊັ່ນກັນ ແມ່ນການສະແດງອອກດ້ວຍການປາກເວົ້າ, ຂັບ, ລຳ, ຮ້ອງເພັງ, ເອີ້ນຂວັນ ດ້ວຍການບາສີສູ່ຂວັນ, ຮຽກຂວັນ ແລະ ດ້ວຍການຂຽນເປັນຕົວໜັງສືເພື່ອສື່ສານໃຫ້ຜູ້ອື່ນເຂົ້າໃຈ.

ເມື່ອປະຊາກອນລາວປະກອບດ້ວຍຫລາຍຊົນເຜົ່າຈຶ່ງເປັນຂອງທຳມະດາທີ່ມີການໃຊ້ຫລາຍພາສາຢູ່ໃນສັງຄົມລາວ. ແຕ່ຕາມລັດຖະທຳມະນູນແຫ່ງ ສປປ ລາວ ນັ້ນ, ພາສາລາວ ແລະ ຕົວອັກ ສອນລາວ ແມ່ນພາສາ ແລະ ຕົວອັກສອນທີ່ໃຊ້ເປັນທາງການຂອງປະເທດລາວ. ຕົວໜັງສືລາວທີ່ໃຊ້ກັນ ຢູ່ໃນປັດຈຸບັນນີ້ເປັນຕົວໜັງສືທີ່ສືບທອດ ແລະ ດັດແປງມາຈາກອັກຂະຫລະຂອງອິນເດຍ ແລະ ຂອມ.

ໃນແຕ່ລະທ້ອງຖິ່ນ, ພາສາລາວມີຄວາມແຕກຕ່າງກັນທາງດ້ານການຜັນສຽງ, ເນັ້ນສຽງ ແລະ ຄວາມໄວຂອງການເວົ້າ. ບາງຄຳສັບມີຄວາມໝາຍອັນດຽວກັນກໍຍັງມີຄວາມແຕກຕ່າງກັນຢູ່ໃນບາງທ້ອງຖິ່ນ ເຊັ່ນ: ຊາວລາວພາກໃຕ້ພາກັນເອີ້ນວ່າ "ໝາກພິກ" ແຕ່ຊາວວຽງຈັນເອີ້ນວ່າ "ໝາກເຜັດ " ໄທເໜືອເອີ້ນວ່າ "ໝາກເອືອດ" ດັ່ງນີ້ເປັນຕົ້ນ. ກໍລະນີອື່ນກໍມີດັ່ງນີ້: ຊາວລາວໂດຍທົ່ວໄປມີການຈຳແນກສຽງຂອງຕົວ "ພ" ກັບຕົວ "ຟ" ແຕ່ຊາວສະຫວັນນະເຂດພັດບໍ່ສູ້ໃຊ້ສຽງຕົວ"ຟ" ນີ້ເລີຍ ຫລື ຊາວຈຳປາສັກ-ປາກເຊ ແລະ ຊາວລາວໃນບາງທ້ອງຖິ່ນຂອງພາກເໜືອມີການຜັນສຽງຕົວ "ດ" ເປັນຕົວ "ລ" ດັ່ງນີ້ເປັນຕົ້ນ.

#### 10.2.2 ຄວາມເຊື່ອຖື

ປະຊາກອນລາວບັນດາເຜົ່າມີຄວາມເຊື່ອຖືທີ່ແຕກຕ່າງກັນໄປ ຊຶ່ງສ່ວນໃຫຍ່ເຂົາເຈົ້ານັບຖືສາສະໜາພຸດນິກາຍຫີນະຍານຄືກັບຊາວໄທ, ກຳປູເຈຍ, ມຽນມາ, ສີລັງກາ... ດັ່ງນັ້ນສາສະໜາພຸດຈຶ່ງກາຍເປັນສູນລວມຈິດໃຈຂອງຊາວລາວ ແລະ ເປັນພື້ນຖານສ່ວນໜຶ່ງຂອງວັດທະນະທຳລາວ. ແຕ່ຊາວລາວສ່ວນໜຶ່ງກໍນັບຖືສາສະໜາຄາໂທລິກ ແລະ ອີກສ່ວນໜຶ່ງທີ່ມີຈຳນວນບໍ່ໜ້ອຍໄດ້ພາກັນນັບຖືຜີ, ເທວະດາ ຫລື ສິ່ງສັກສິດທັງຫລາຍຕາມຄວາມເຊື່ອຖືດັ້ງເດີມມາແຕ່ສະໄໝບູຮານ.

ແນວໃດກໍຕາມ, ຄວາມເຊື່ອຖືໃນວັດທະນະທຳລາວ ສະແດງອອກທາງດ້ານການກະທຳຕົວຈິງ ຫລາຍຢ່າງເຊັ່ນ: ການນົບໄຫວ້ບູຊາໃນພິທີກຳຕ່າງໆ, ການສະເຫລີມສະຫລອງ, ການບະບົນ-ການຖອຍ (ແກ້ບະ) ແລະ ອື່ນໆຊຶ່ງສະແດງອອກຄືດັ່ງນີ້:

- ການນົບໄຫວ້ບູຊາໃນພິທີກຳຕ່າງໆ

- ແມ່ນການສະແດງເຖິງຄວາມເຄົາລົບນັບຖືຜູ້ທີ່ເຮົາມີຄວາມເຊື່ອຖື ເຊັ່ນ: ເຮົາເຊື່ອຖືສາສະໜາພຸດເຮົາກໍນົບໄຫວ້ບູຊາພະເຈົ້າ ແລະ ພະສົງຊຶ່ງສະແດງອອກໃນພິທີກຳຕ່າງໆເຊັ່ນ: ການເຮັດງານບຸນວັດຊຶ່ງມີການຟັງເທດສະໜາ, ການຕັກບາດ, ການຖະຫວາຍສັງຂະທານແດ່ພະສົງ ແລະ ອື່ນໆ. ເຮົາມີຄວາມເຊື່ອຖືຜີບ້ານເຮົາກໍມີການນົບໄຫວ້ບູຊາຜີບ້ານດ້ວຍການເຮັດພິທີກຳລ້ຽງຜີບ້ານໂດຍມີການ ຂ້າສັດຢ່າງໜ້ອຍກໍແມ່ນໄກ່, ໝູ, ງົວ, ຄວາຍມາປຸງແຕ່ງເປັນອາຫານແຕ່ງພາເຂົ້າຖະຫວາຍໃຫ້ຜີບ້ານໄດ້ກິນ ດັ່ງນີ້ເປັນຕົ້ນ.

- ການສະເຫລີມສະຫລອງ

ແມ່ນການສະແດງເຖິງຄວາມຮູ້ບຸນຄຸນບັນພະບູລຸດທີ່ເປັນຜູ້ກໍ່ສ້າງ ແລະ ນຳພາສ້າງສາພັດທະນາສິ່ງໃດ-ໜຶ່ງຈົນປະສົບຜົນສຳເລັດ ກາຍເປັນສິ່ງສັກກະລະບູຊາ ຂອງປວງຊົນທັງຫລາຍເຊັ່ນ: ພະເຈົ້າໄຊຍະເສດຖາທິລາດ ນຳພາສ້າງພະທາດຫລວງວຽງຈັນ ຊຶ່ງເປັນພະທາດທີ່ກວມພະອັດຖິທົ່ວເນົ່າຂອງພຣະພຸດທະເຈົ້າ ຊຶ່ງປວງຊົນລາວທີ່ເປັນຊາວພຸດເຄົາລົບນັບຖື ແລະ ນົບໄຫວ້ບູຊາເປັນຢ່າງຍິ່ງ ຈຶ່ງໄດ້ຈັດງານບຸນສະເຫລີມສະຫລອງພະທາດຫລວງໃນທຸກໆ ປີໃນເດືອນສິບສອງເພັງ. ນອກຈາກນັ້ນ, ຄວາມເຊື່ອ ຖືເທວະດາ, ຜີຟ້າ, ຜີແຖນ ແລະ ສິ່ງສັກສິດທັງຫລາຍຂອງຊາວລາວທີ່ກ່ຽວຂ້ອງ ກັບອາຊີບການ ເຮັດນາກໍຍັງປາກົດຢ່າງຫລວງຫລາຍ ຢູ່ໃນປັດຈຸບັນເພາະວ່າ ໃກ້ຈະຮອດມື້ເພັງເດືອນຫົກໃນແຕ່ລະປີ ຊາວລາວມີການກະກຽມເຮັດບັ້ງໄຟເພື່ອນຳໄປຈູດໃນມື້ເພັງເດືອນຫົກ. ຖືວ່າເປັນມື້ທີ່ມີການສະເຫລີມສະຫລອງບັ້ງໄຟ ຊຶ່ງເປັນງານບຸນໃຫຍ່ອັນໜຶ່ງທີ່ມີພິທີການແຫ່ບັ້ງໄຟກ່ອນນຳໄປຈູດຢ່າງມ່ວນຊື່ນເບີກບານ ເພື່ອຂໍໃຫ້ເທວະດາ, ຜີຟ້າ, ຜີແຖນສົ່ງຝົນລົງມາໃຫ້ຊາວລາວໄດ້ເຮັດນາ.

- ການບະບົນ-ການຖອຍບະ (ແກ້ບະ)

ການບະບົນ ແລະ ການຖອຍບະ(ແກ້ບະ) ແມ່ນການສະແດງອອກເຖິງຄວາມເຊື່ອຖືຂອງຊາວລາວທີ່ມີຄວາມເຄົາລົບນັບຖືຜີວ່າເປັນຜູ້ມີອຳນາດສາມາດຄຸ້ມຄອງ ແລະ ສາມາດຕອບສະໜອງຕາມຄວາມມຸ້ງຫວັງຂອງຕົນຈຶ່ງມີການຮ້ອງຫາດ້ວຍການບະບົນຕ່າງໆ. ເມື່ອໄດ້ຮັບຜົນສຳເລັດຕາມຄວາມມຸ້ງຫວັງ ກໍມີການຖອຍບະດ້ວຍສິ່ງທີ່ໄດ້ກ່າວໄວ້ ເຊັ່ນ: ການເຊື່ອຖືຜີຂອງຊາວເມືອງວັງວຽງ ທີ່ເອີ້ນວ່າ: ຍາພໍ່ຜາແດງ, ເມື່ອຊາວເມືອງວັງວຽງຜູ້ໃດ-ຜູ້ໜຶ່ງ ມີຄວາມເດືອດຮ້ອນດ້ານໃດ-ດ້ານໜຶ່ງຄື: ມີການເຈັບໜັກເຖິງຂັ້ນໄດ້ປາດໃຫຍ່ຢູ່ໂຮງໝໍ ກໍໃຫ້ຄົນໃນຄອບຄົວໄປບະບົນນຳເຈົ້າຈ້ຳ ຢູ່ທໍ່ຂອງຍາພໍ່ຜາແດງເພື່ອໃຫ້ເພິ່ນໄປຄຸ້ມຄອງຜູ້ທີ່ເຈັບ ໃຫ້ຫາຍດີຈາກອາການເຈັບ ແລ້ວຈະຖອຍບະດ້ວຍງົວໜຶ່ງຕົວ. ຫລັງຈາກນັ້ນ, ເມື່ອຫາຍຈາກການເຈັບ ແລະ ອອກໂຮງໝໍມາແລ້ວກໍຕ້ອງຖອຍບະໂດຍການຂ້າງົວ, ເຮັດພາເຂົ້າໄປຖະຫວາຍເພິ່ນຢູ່ຫໍຂອງຍາພໍ່ຜາແດງໂດຍແມ່ນເຈົ້າຈ້ຳເປັນຜູ້ຮ້ອງຫາ ແລະ ຮຽກເອີ້ນຫາຍາພໍ່ຜາແດງໃຫ້ມາຮັບປະທານອາຫານໃນພາເຂົ້ານັ້ນ.

### 10.2.3 ອາຊີບ

ອາຊີບຂອງຊາວລາວສ່ວນຫລາຍກ່ຽວພັນກັບຊັບພະຍາກອນທຳມະຊາດກໍຄືພື້ນທີ່ດິນ ແລະ ພູມອາກາດທີ່ສົ່ງເສີມ ຫລື ອຳນວຍຄວາມສະດວກໃຫ້ຊາວລາວໄດ້ມີອາຊີບທີ່ສາມາດດຳລົງຊີວິດຢູ່ໄດ້ດ້ວຍການກະສິກຳໂດຍສະເພາະແມ່ນການປູກຝັງເຊັ່ນ: ການເຮັດນາປູກເຂົ້າ, ການເຮັດໄຮ່ປູກເຂົ້າ, ການເຮັດສວນປູກພືດຜັກ ແລະ ຕົ້ນໄມ້ໃຫ້ໝາກຕ່າງໆ ຊຶ່ງພື້ນທີ່ດິນ ແລະ ນ້ຳທີ່ມີໃນລະດູຝົນອຳນວຍຄວາມສະດວກ ໂດຍສະເພາະແມ່ນການເຮັດນາປູກເຂົ້າ. ດັ່ງນັ້ນ, ອາຊີບເຫລົ່ານີ້ຈຶ່ງກາຍເປັນວັດທະນະທຳ ຂອງຊາວລາວມາແຕ່ດົນນານ. ແຕ່ໃນບໍ່ດົນມານີ້ຈາກການສ້າງຊົນລະປະທານເອົານ້ຳເຂົ້ານາໃນລະດູແລ້ງ ການເຮັດນາໃນ 2 ລະດູຕໍ່ປີກໍຈຶ່ງເກີດຂຶ້ນໃນບາງເຂດ. ນັ້ນກໍສະແດງເຖິງການເຮັດອາຊີບການເຮັດນາຕະຫລອດປີ ສາມາດໃຫ້ຜົນຜະລິດເຂົ້າຫລາຍຂຶ້ນ. ນອກຈາກນີ້, ຊາວລາວຍັງມີອາຊີບເສີມໂດຍການນຳໃຊ້ຊັບພະຍາກອນທຳມະຊາດເຊັ່ນ: ການນຳໃຊ້ໄມ້ໄຜ່ມາສານຫວດໜຶ້ງເຂົ້າໜຽວ, ການເຮັດພາເຂົ້າດ້ວຍໄມ້ໄຜ່ ແລະ ຫວາຍ, ການນຳໃຊ້ໄມ້ປ້ອງສານເປັນແຕະເຮັດຮົ້ວ. ການເຮັດເຄື່ອງເຮືອນດ້ວຍໄມ້ຕ່າງໆ. ການຕ່ຳສິ້ນ, ຕີນສິ້ນ ແລະ ແພຊະນິດຕ່າງໆດ້ວຍຝ້າຍ ແລະ ໄໝມ້ອນທີ່ ຜະລິດເອງຢູ່ພາຍ ໃນປະເທດດັ່ງນີ້ເປັນຕົ້ນ.



ຮູບທີ 35: ການເຂັນຝ້າຍ



ທີ 36: ການເຮັດນາປູກເຂົ້າ

### 10.2.4 ວິຖີຊີວິດ ແລະ ເຮືອນຢູ່

ວິຖີຊີວິດ ແລະ ເຮືອນຢູ່ ຫລື ທີ່ຢູ່ອາໄສມີສ່ວນກ່ຽວຂ້ອງກັນເປັນຢ່າງຍິ່ງເພາະວ່າວິຖີຊີວິດໝາຍເຖິງວິທີທຳມາຫາກິນ ຫລື ເອີ້ນວ່າອາຊີບຂອງແຕ່ລະບຸກຄົນນັ້ນເອງວ່າການເຄື່ອນໄຫວປະຈຳວັນມີຫຍັງແດ່ຊຶ່ງລວມທັງການນຸ່ງຖື (ການແຕ່ງຕົວ), ການເຮັດວຽກ, ການກິນ-ການດື່ມ, ການພັກຜ່ອນ-ການນອນ ແລະ ການມ່ວນຊື່ນລື້ນເລີງ ຊຶ່ງທັງໝົດນັ້ນ ແມ່ນອາດເຄື່ອນໄຫວຢູ່ໃນເຮືອນ ໂດຍສະເພາະການນຸ່ງເຄື່ອງ-ການແຕ່ງກາຍ, ການກິນ-ການດື່ມ ແລະ ການພັກຜ່ອນເປັນຕົ້ນ ແມ່ນການນອນຕ້ອງນອນໃນເຮືອນຂອງຕົນເອງ (ມີແຕ່ມີຄວາມຈຳເປັນຈຶ່ງໄປນອນບ່ອນອື່ນ). ນອກຈາກນັ້ນ, ການຈັດງານໃນບາງໂອກາດກໍຕ້ອງຈັດໃນເຮືອນຂອງເຮົາເຊັ່ນ: ງານສູ່ຂວັນບາສີໃນການເກີດແອນ້ອຍ, ການແຕ່ງງານ, ງານເຮັດບຸນເຮືອນ-ເຮັດກອງທານ, ງານມ່ວນຊື່ນລື້ນເລີງເປັນຕົ້ນ ແມ່ນງານສະຫລອງວັນເກີດ ຫລື ງານທຸກໂສກເສຍໃຈເຊັ່ນ: ງານການເສຍຊີວິດ. ດັ່ງນັ້ນ, ວິຖີຊີວິດ ແລະ ເຮືອນຢູ່ຈຶ່ງກ່ຽວຂ້ອງກັນໃນການດຳລົງຊີວິດຂອງຄົນເຮົາ. ຊາວລາວກໍເຊັ່ນກັນ ຊຶ່ງຂຶ້ນກັບອາຊີບເຊັ່ນ: ອາຊີບການເຮັດນາ ນອກຈາກຍາມນາແລ້ວ ຊາວນາກໍນຸ່ງຖື-ແຕ່ງກາຍ, ກິນ-ດື່ມຢູ່ໃນເຮືອນ ແລະ ນອນໃນເຮືອນຕົນເອງ ຊຶ່ງພວກເຮົາເອີ້ນວ່າຢູ່ເຮືອນ. ດັ່ງນັ້ນ, ເຮືອນຈຶ່ງແມ່ນສະຖານທີ່ທີ່ມີຄວາມສຳຄັນເປັນຢ່າງຍິ່ງຂອງມະນຸດ, ຜູ້ທີ່ມີຖານະດີ-ຮັ່ງມີ ແມ່ນເຮັດເຮືອນໃຫຍ່ໄວ້ເປັນທີ່ຢູ່ອາໄສຂອງຕົນ. ດັ່ງນັ້ນ, ວິຖີຊີວິດ ແລະ ເຮືອນຢູ່ຂອງຊາວລາວ ຈຶ່ງກາຍເປັນວັດທະນະທຳຂອງຄົນລາວຊຶ່ງມີດັ່ງນີ້:

### ກ. ວິຖີຊີວິດ

**ການນຸ່ງຖື-ການແຕ່ງກາຍ:**

ຄົນລາວເຮົາມີວັດທະນະທຳໃນການນຸ່ງຖື-ການແຕ່ງກາຍ ມາແຕ່ບູຮານນະການ ແລະ ໃນປັດຈຸບັນກໍມີການປັບປຸງໃຫ້ສອດຄ່ອງກັບຍຸກສະໄໝຄື: ໃນເວລາປົກກະຕິຂອງຊີວິດປະຈຳວັນຄົນລາວທົ່ວໄປທີ່ເປັນຜູ້ຊາຍນຸ່ງຖື-ແຕ່ງກາຍຄືນຸ່ງໂສ້ງ-ເສື້ອແບບທົ່ວໄປທີ່ຄົນປະເທດອື່ນໆນິຍົມກັນ, ໄວ້ຊົງຜົມ ສັ້ນ. ສຳລັບແມ່ຍິງມີການນຸ່ງຖື-ແຕ່ງກາຍທີ່ເປັນເອກະລັກຂອງຕົນເອງສະເໝີມາ ໂດຍສະເພາະເຜົ່າລາວ ແມ່ນນຸ່ງສິ້ນທີ່ມີຕີນສິ້ນ ແຕ່ບາງເຜົ່ານຸ່ງກະໂປ່ງ ແລະ ນຸ່ງເສື້ອສີຕ່າງໆ. ໃນງານພິທີຕ່າງໆ ທີ່ສຳຄັນ ເຊັ່ນ: ງານບຸນທີ່ມີພິທີຕັກບາດ, ງານແຕ່ງງານ, ງານມົງຄົນຕ່າງໆ, ຜູ້ຊາຍລາວຈະນຸ່ງຜ້າຕ່ຽວທີ່ຕ່ຳດ້ວຍໄໝ, ນຸ່ງເສື້ອຂາວຄໍພົນແຂນຍາວ, ຄາດຜ້າບ່ຽງທີ່ມີສີສັນຢ່າງງົດງາມ, ຮັດສາຍແອວໜັງ, ໃສ່ຖົງຕີນສີ ຂາວ ແລະ ໃສ່ເກີບໜັງ, ແຕ່ບາງເຜົ່ານຸ່ງໂສ້ງຂາໃຫຍ່ ແລະ ໃສ່ໝວກ. ສ່ວນແມ່ຍິງກໍພາກັນນຸ່ງສິ້ນໄໝທີ່ມີສີສັນລວດລາຍທີ່ສວຍງາມ ຫລື ສິ້ນຝ້າຍມັດໝີ່ ແລ້ວແຕ່ຄວາມນິຍົມຂອງແຕ່ລະທ້ອງຖິ່ນ, ນຸ່ງເສື້ອໄໝ ຫລື ເສື້ອຝ້າຍແຂນສັ້ນ, ແຂນສາມສ່ວນ ຫລື ແຂນຍາວທີ່ມີສີສັນເຂົ້າກັບສິ້ນ ແລະ ໃສ່ແພບ່ຽງໄໝ. ການໄວ້ຊົງຜົມ, ແມ່ຍິງລາວນິຍົມກັນໄວ້ຜົມຍາວທີ່ສາມາດມັດ ຫລື ເກົ້າໄດ້ຊຶ່ງໃນງານທີ່ສຳຄັນ ເຂົາເຈົ້າຈະມີການເຮັດຊົງຜົມແບບເກົ້າ ຫລື ມ້ວນທີ່ສວຍງາມພ້ອມທັງມີການແຕ່ງໜ້າທີ່ງົດງາມ. ການໃສ່ເຄື່ອງເອ້ ແມ່ຍິງລາວນິຍົມກັນໃສ່ເຄື່ອງເອ້ທີ່ເຮັດດ້ວຍຄຳ ເຊັ່ນ: ຕ້າງຫູ, ສາຍຄໍ, ສາຍແຂນ ແລະ ແຫວນມື. ແມ່ຍິງບາງເຜົ່າໃນງານພິທີຕ່າງໆ ແມ່ນນິຍົມກັນນຸ່ງກະໂປ່ງ ແລະ ເສື້ອທີ່ປັກແສ່ວເປັນລວດລາຍຫລາຍສີສັນຢ່າງສວຍງາມ ພ້ອມທັງປະດັບດ້ວຍເຄື່ອງເອ້ຕ່າງໆ ທີ່ເຮັດດ້ວຍເງິນ ນອກນັ້ນກໍຍັງມີແພຄຽນຫົວ ແລະ ແພມັດແອວທີ່ມີຫລາຍສີແຕກຕ່າງກັນ.

**ການເຮັດວຽກ:**

ວັດທະນະທຳການເຮັດວຽກຂອງຊາວລາວ ທີ່ສ່ວນໃຫຍ່ດຳເນີນອາຊີບເປັນຊາວກະສິກອນ. ດັ່ງນັ້ນ, ການເຮັດວຽກຈຶ່ງກ່ຽວຂ້ອງກັບທົ່ງນາ, ພື້ນທີ່ໄຮ່ ແລະ ພື້ນທີ່ສວນເປັນຈຸດໜັກ ແລະ ວິຖີຊີວິດໃນການເຮັດວຽກຈຶ່ງເພິ່ງຕິງໄປຕາມການຈັດແບ່ງລະດູການກໍຄືພູມອາກາດເປັນຕົ້ນຕໍຄື: ປະເທດລາວເຮົາຢູ່ໃນເຂດພູມອາກາດຮ້ອນຊຸ່ມມໍລະສຸມປະກອບດ້ວຍ 2 ລະດູຈະແຈ້ງຄື: ລະດູແລ້ງ ແລະ ລະດູຝົນ. ສຳລັບລະດູຝົນທີ່ມີນ້ຳອຳນວຍຄວາມສະດວກໃນການປູກຝັງ, ຊາວກະສິກອນລາວກໍສຸມໃສ່ການປູກເຂົ້າ ຊຶ່ງໃນລະດູນີ້ບໍ່ວ່າຍິງ ຫລື ຊາຍກໍລ້ວນແຕ່ອອກແຮງງານຢ່າງໜັກໜ່ວງໃນພື້ນທີ່ນາ, ໄຮ່ ແລະ ສວນຂອງຕົນຄື: ໃນມື້ໜຶ່ງໆ ຊາວກະສິກອນລາວ ກໍຈະລຸກແຕ່ເດິກ ເພື່ອທຳການເຮັດວຽກໃນພື້ນທີ່ປູກຝັງຂອງຕົນ ເປັນຕົ້ນຄືໃນລະດູການເຮັດນາ ຊາວນາໃນເຂດຊົນນະບົດ ທີ່ມີນາຢູ່ຫ່າງໄກກໍພາກັນຍ້າຍໄປຢູ່ຖຽງນາຂອງຕົນ ເພາະມັນຫຍຸ້ງຍາກໃນການຫຽວໄປກັບຈາກເຮືອນໄປນາໃນແຕ່ລະວັນຈົນກວ່າການດຳນາແລ້ວ ຈຶ່ງກັບມານອນເຮືອນ. ແຕ່ໃນລະດູແລ້ງ, ການເຮັດວຽກຂອງຊາວກະສິກອນລາວບໍ່ໜັກໜ່ວງປານໃດ, ຍົກເວັ້ນແຕ່ບາງທ້ອງຖິ່ນທີ່ມີນ້ຳຊົນລະປະທານສາມາດເຮັດນາແຊງ, ເຮັດສວນປູກຜັກ ຫລື ປູກພືດອຸດສາຫະກຳ ແລະ ເຮັດອາຊີບເສີມຕ່າງໆ. ນອກຈາກນັ້ນ ຜູ້ປະກອບອາຊີບອື່ນໆ ກໍດຳເນີນວຽກປະຈຳວັນຂອງເຂົາເຈົ້າ ເຊັ່ນ: ພະນັກງານຂອງລັດ, ພະນັກງານຂອງບໍລິສັດເອກະຊົນ ແລະ ຜູ້ດຳເນີນອາຊີບເອກະເທດຄື: ຊາວຄ້າ ຂາຍ ແລະ ຜູ້ດຳເນີນການບໍລິການຕ່າງໆ ກໍດຳເນີນວິຖີຊີວິດຂອງຕົນຕາມສະຖານທີ່ ຫລື ພື້ນທີ່ທີ່ເຮັດວຽກ ຂອງຕົນປະຈຳວັນນັ້ນເອງ. ດັ່ງນັ້ນ, ເມື່ອເວົ້າເຖິງການເຮັດວຽກ ແລະ ເຮືອນຢູ່ ຈຶ່ງມີສ່ວນກ່ຽວຂ້ອງທີ່ຕ່າງກັນ ຄື: ບາງອາຊີບ ເຮັດວຽກໃນເຮືອນຕົນເອງ ເຊັ່ນ: ອາຊີບຄ້າຂາຍທີ່ຂາຍເຄື່ອງໃນເຮືອນຕົນເອງ, ອາຊີບທີ່ເປັນນັກທຸລະກິດທີ່ເປີດທຸລະກິດໃນເຮືອນຕົນເອງເຊັ່ນການເປີດບໍລິສັດໃນເຮືອນຕົນເອງ ແລະ ອື່ນໆ. ແຕ່ສຳລັບຜູ້ທີ່ເປັນພະນັກງານຂອງລັດ, ພະນັກງານບໍລິສັດ ແລະ ຊາວກະສິກອນ ແມ່ນເຮັດວຽກໃນສະຖານທີ່ອື່ນ

ທີ່ບໍ່ແມ່ນເຮືອນຂອງຕົນເອງໝາຍຄວາມວ່າຕອນກາງເວັນ ແມ່ນໄປເຮັດວຽກ ແລະ ຕອນຄ່ຳຄືນກັບມາພັກຜ່ອນນອນຢູ່ເຮືອນ. ສຳລັບວັນພັກກໍຢູ່ເຮືອນ ຊຶ່ງພະນັກງານ ແມ່ນພັກວັນເສົາ, ວັນອາທິດ ແລະ ວັນພັກປະຈຳຊາດ, ຊາວກະສິກອນແມ່ນພັກວັນສິນຊຶ່ງວັນພັກຕ່າງໆ ເຫລົ່າ ນີ້ຊາວລາວກໍມີວິຖີຊີວິດພັກຜ່ອນຢູ່ເຮືອນ ຫລື ໄປຢາມພີ່ນ້ອງ, ໝູ່ເພື່ອນ ແລະ ໄປທ່ຽວຫລິ້ນຕາມໃຈຊອບ ແລະ ກັບມານອນເຮືອນຕົນເອງ, ຍົກເວັ້ນແຕ່ມີການລາພັກປະຈຳປີຍາວນານ ສຳລັບພະນັກງານທີ່ໄປຢາມພໍ່ແມ່-ພີ່ນ້ອງທີ່ຢູ່ຫ່າງໄກຈຶ່ງໄປນອນບ່ອນອື່ນ.

**ການກິນ-ການດື່ມ:**

ການກິນ-ການດື່ມ ແມ່ນວັດທະນະທຳຂອງມະນຸດຊາດຢູ່ບົນໜ້າໂລກ. ເວົ້າສະເພາະຄົນລາວ, ວັດທະນະທຳການກິນ-ການດື່ມ ແມ່ນກິນເຂົ້າໜຽວເກືອບທຸກຄາບເຂົ້າ ແລະ ອາຫານທີ່ແຕ່ງກໍໃສ່ປາແດກເກືອບທຸກເຍື່ອງ, ການດື່ມ ແມ່ນດື່ມນ້ຳສະອາດຊຶ່ງແຕ່ກ່ອນນິຍົມກັນດື່ມນ້ຳສ້າງ, ນ້ຳລິນ ຕໍ່ມານິຍົມກັນດື່ມນ້ຳຕົ້ມສຸກ ແລະ ມາຮອດປັດຈຸບັນ, ນິຍົມກັນດື່ມນ້ຳກະຕຸກໃຫຍ່ ແລະ ນ້ຳບໍລິສຸດ ໃນກວດທີ່ສຳເລັດຮູບ. ໂດຍທົ່ວໄປ, ຊາວລາວກິນອາຫານຫລາຍຊະນິດທີ່ຕົນຜະລິດໄດ້ ແລະ ຫາໄດ້ຕາມທຳມະຊາດຕະຫລອດເຖິງອາຫານທີ່ນຳເຂົ້າຈາກຕ່າງປະເທດ. ອາຫານພື້ນຖານໄດ້ແກ່ເຂົ້າ, ປາ ແລະ ຜັກ. ປາແມ່ນອາຫານທີ່ຊາວລາວນິຍົມກິນຫລາຍໂດຍສະເພາະຊາວຊົນນະບົດ. ນອກຈາກນັ້ນຍັງນິຍົມກັນກິນປາແດກທີ່ເຮັດດ້ວຍປາ ຊຶ່ງສ່ວນຫລາຍແມ່ນເອົາປຸງແຕ່ງໃສ່ອາຫານເກືອບທຸກປະເພດ. ອາຫານລາວ ມີຫລາຍເຍື່ອງ ແຕ່ນິຍົມກັນຫລາຍກໍແມ່ນລາບ, ກ້ອຍ, ແກງ, ປີ້ງ, ແຈ່ວ ແລະ ອື່ນໆ. ໂດຍທົ່ວໄປ ຊາວລາວກິນເຂົ້າຢູ່ໃນເຮືອນ ທັງ 3 ຄາບຄື: ຄາບເຊົ້າເອີ້ນວ່າ ປັ້ນເຂົ້າເຊົ້າ, ຄາບສວາຍ ຫລື ຄາບທ່ຽງ ເອີ້ນວ່າກິນເຂົ້າສວາຍ ຫລື ເຂົ້າທ່ຽງ ແລະ ຄາບແລງ ເອີ້ນວ່າກິນເຂົ້າແລງ ແລະ ຕາມປົກກະຕິແຕ່ລະຄອບຄົວ ຈະກິນເຂົ້າໃນເຮືອນຕົນເອງໃນແຕ່ລະຄາບ. ໃນຮູບແບບການບໍລິໂພກ ຫລື ວິທີການບໍລິໂພກກໍແມ່ນສ່ວນໜຶ່ງຂອງປະເພນີ ແລະ ວັດທະນະທຳ ໃນການກິນທີ່ເຜົ່າລາວເຄີຍປະຕິບັດກັນມາແຕ່ດົນນານ ນັ້ນແມ່ນຄົນໃນຄອບຄົວນັ່ງອ້ອມພາເຂົ້າຫວາຍ (ປັດຈຸບັນເຮັດດ້ວຍອາລຸຍມີນຽມກໍມີ) ທີ່ວາງຢູ່ເທິງພື້ນເຮືອນຊຶ່ງປູດ້ວຍສາດ, ຜູ້ຍິງສ່ວນຫລາຍນັ່ງພັບແພບ, ຜູ້ຊາຍນັ່ງຂັດຕະໝາດ. ແຕ່ມາຮອດປັດຈຸບັນ, ຢູ່ໃນຕົວເມືອງໃຫຍ່ກໍມີຫລາຍຄອບຄົວນຳໃຊ້ໂຕະຮັບປະທານອາຫານ ໂດຍການນັ່ງເທິງຕັ່ງ ເກົ້າອີ້ອ້ອມໂຕະ. ການບໍລິໂພກຜູ້ທຳອິດ ແມ່ນຜູ້ສູງອາຍຸ ລົງມືກ່ອນ, ຈາກນັ້ນ, ຜູ້ອື່ນໆ ຈຶ່ງຄ່ອຍບໍລິໂພກຕາມຫລັງດ້ວຍຄວາມສຸພາບຮຽບຮ້ອຍ. ການບໍລິໂພກ ແມ່ນນຳໃຊ້ມືເພື່ອປັ້ນເຂົ້າໜຽວ ແລ້ວເຮັດເປັນຄຳເຂົ້າເພື່ອກິນກັບອາຫານປະເພດຕ່າງໆ ແລະ ນຳໃຊ້ບ່ວງເພື່ອຕັກຂອງແຫລວ ເຊັ່ນ: ຕັກແກງ. ແຕ່ຖ້າບໍລິໂພກເຂົ້າຈ້າວຈະນຳໃຊ້ບ່ວງຕະຫລອດໄລຍະຄາບເຂົ້າ. ຫລັງຈາກບໍລິໂພກແລ້ວ ຫລື ເອີ້ນວ່າກິນອີ່ມແລ້ວ, ກ່ອນອອກຈາກພາເຂົ້າ ແຕ່ລະຄົນຕ້ອງຍໍມື ນົບເຖິງບຸນຄຸນເຂົ້າ ແລະ ອາຫານໃນພາເຂົ້າແລ້ວຈຶ່ງ ລຸກອອກໄປລ້າງມື. ການແຕ່ງກິນ ແມ່ນແຕ່ງຢູ່ເຮືອນຄົວ ຊຶ່ງເຮືອນຫລັງໜຶ່ງອາດເຮັດເຮືອນຄົວຕິດກັບ ເຮືອນໃຫຍ່ ຫລື ເຮັດເຮືອນຄົວຕ່າງຫາກ. ບາງຄອບຄົວກໍກິນເຂົ້າຢູ່ໃນເຮືອນຄົວ ແຕ່ບາງຄອບຄົວກໍກິນເຂົ້າໃນເຮືອນໃຫຍ່ຊຶ່ງສຸດແລ້ວແຕ່ຄວາມສະດວກນັ້ນເອງ. ນອກຈາກນັ້ນ, ໃນບາງໂອກາດ, ບາງຄອບຄົວກໍນິຍົມໄປບໍລິໂພກຢູ່ຮ້ານອາຫານ.

ແນວໃດກໍຕາມປະເພນີ ແລະ ວັດທະນະທຳໃນການກິນໂດຍສະເພາະໃນຮູບແບບ ຫລື ວິທີການກິນຂອງເຜົ່າລາວ ກໍແມ່ນວິທີການໜຶ່ງໃນການສ້າງຄວາມສາມັກຄີຮັກແພງກັນ ໃນການຢູ່ຮ່ວມກັນພາຍໃນຄອບຄົວລວມເຖິງການສະແດງຄວາມເຄົາລົບນັບຖືຊຶ່ງກັນແລະກັນພາຍໃນຄອບຄົວອີກດ້ວຍ.

**ການພັກຜ່ອນ-ການນອນ:**

ການພັກຜ່ອນ ໂດຍສະເພາະແມ່ນການນອນຂອງມະນຸດ ຖືວ່າແມ່ນວັດທະນະທຳອັນໜຶ່ງທີ່ສຳຄັນຍິ່ງ ເພາະວ່າມະນຸດ ກໍຄືສັດທຸກຊະນິດ ຕ້ອງການພັກຜ່ອນ ແລະ ນອນ ເພາະວ່າຮ່າງກາຍມີຄວາມຕ້ອງການຄືແນວນັ້ນ. ດັ່ງນັ້ນ, ມະນຸດທຸກຄົນກໍຕ້ອງນອນໃນເຮືອນຂອງຕົນເອງ, ຊາວລາວ ກໍເໝືອນກັນຕ້ອງນອນໃນເຮືອນຂອງຕົນເອງ, ມີແຕ່ຍາມຈຳເປັນຈຶ່ງໄປນອນບ່ອນອື່ນເຊັ່ນ: ຍາມໄປຢາມພີ່ນ້ອງ ຫລື ມີວຽກຈຳເປັນຕ່າງໆ. ດັ່ງນັ້ນ, ໃນເຮືອນຂອງເຮົາຈຶ່ງມີບ່ອນນອນຂອງໃຜ-ລາວ ຊຶ່ງ ເອີ້ນວ່າ ຫ້ອງນອນນັ້ນເອງ. ສຳລັບການໄປນອນບ່ອນອື່ນດ້ວຍຈຸດປະສົງໄປທ່ອງທ່ຽວ ແມ່ນຫາກໍ່ ເລີ່ມປາກົດຕົວ ສຳລັບຊາວລາວ ແລະ ກໍຍັງບໍ່ທັນເປັນຂະບວນການພໍທີ່ຈະເອີ້ນວ່າແມ່ນວັດທະນະທຳຂອງຊາວລາວໄດ້ເທື່ອ.

**ການມ່ວນຊື່ນລື້ນເລີງ**

ຄຽງຄູ່ກັບການເຮັດວຽກ ທີ່ແມ່ນວັດທະນະທຳຂອງຄົນທົ່ວໜ້າໂລກ, ການມ່ວນຊື່ນລື້ນເລີງກໍມີຄວາມຈຳເປັນຂອງຄົນເຮົາທີ່ແຕ່ລະຄົນຕ້ອງຊອກສະແຫວງຫາ ເພື່ອເຮັດໃຫ້ຕົນເອງ ກາຍເປັນຜູ້ທີ່ມີສຸຂະພາບຈິດເຂັ້ມແຂງ ຕໍ່ສູ້ດຳລົງຊີວິດຕໍ່ໄປ. ການມ່ວນຊື່ນລື້ນເລີງຈຶ່ງກາຍເປັນວັດທະນະທຳຂອງຄົນໃນໂລກ. ດັ່ງນັ້ນ, ຄົນລາວກໍຊອກສະແຫວງຫາການມ່ວນຊື່ນລື້ນເລີງເຊັ່ນກັນ ແລະ ກາຍເປັນວັດທະນະທຳ, ແຕ່ມີລົດນິຍົມແຕກຕ່າງກັນລະຫວ່າງຊາວເມືອງ ແລະ ຊາວຊົນນະບົດ. ຊາວລາວທີ່ອາໄສຢູ່ໃນເມືອງ ໂດຍສະເພາະແມ່ນພະນັກງານ, ກຳມະກອນ ແລະ ຜູ້ເຮັດວຽກບໍລິການຕ່າງໆ ທີ່ມີວັນພັກສຸດສັປະດາ, ເມື່ອຮອດມື້ພັກ ກໍນິຍົມກັນໄປກິນເຂົ້າປ່າຕາມແຄມແມ່ນ້ຳ, ແຄມໜອງ ຫລື ຕາມສະຖານທີ່ທ່ອງທ່ຽວທີ່ຢູ່ບໍ່ໄກຈາກຕົວເມືອງປານໃດ ສາມາດໄປ-ກັບໃນວັນດຽວກັນ ແລ້ວກັບມານອນເຮືອນ. ສຳລັບຜູ້ບໍ່ມັກໄປທ່ຽວ, ເຂົາເຈົ້າກໍຈະຢູ່ເຮືອນຊົມໂທລະພາບ, ຢ້ຽມຢາມພີ່ນ້ອງ, ພົບປະສັງສັນກັບເພື່ອນຝູງ ແລະ ອື່ນໆ. ແຕ່ສຳລັບຊາວຊົນນະບົດ ຫລື ຊາວລາວໃນເຂດຊານເມືອງ, ຮູບແບບການມ່ວນຊື່ນລື້ນເລີງທີ່ນິຍົມກັນທີ່ສຸດນັ້ນ ແມ່ນການຫລິ້ນບຸນໃນງານບຸນຕ່າງໆ ໂດຍສະເພາະຮອດລະດູແລ້ງຈະມີການຈັດງານບຸນຕາມຮີດຄອງປະເພນີຢູ່ວັດ ໂດຍມີການຂ່າວໃຫ້ຊາວບ້ານໃກ້ຄຽງຮູ້ ແລະ ພາກັນມາຮ່ວມມ່ວນຊື່ນນຳ ໂດຍມີການຊົມສິລະປະວັນນະຄະດີ ຊຶ່ງມີການຮ້ອງເພັງ, ການຂັບ-ລຳ, ບາງທ້ອງຖິ່ນກໍນິຍົມການເບິ່ງລຳເລື່ອງ ດັ່ງນີ້ເປັນຕົ້ນ.

ນອກຈາກການຫລິ້ນບຸນແລ້ວ ຍັງມີການແຂ່ງຂັນກິລາພື້ນເມືອງ ຄືການແຂ່ງຂັນຊ່ວງເຮືອ, ແລ່ນໃນຖົງປ່ານ, ການດຶງເຊືອກ... ຊາວຊົນນະບົດທີ່ມີເງື່ອນໄຂສະດວກຈຳນວນໜຶ່ງ ກໍນິຍົມເຂົ້າໄປຫລິ້ນໃນເມືອງເພື່ອທ່ຽວຊົມຕົວເມືອງ, ສັງເກດການເຄື່ອນໄຫວຂອງສັງຄົມໃນເມືອງ, ຊອກຊື້ເຄື່ອງຕາມຕະຫລາດ ແລະ ອື່ນໆ. ທັງໝົດການມ່ວນຊື່ນລື້ນເລີງຂອງຊາວລາວ ກໍຍັງນິຍົມກັບຄືນໄປນອນເຮືອນໃນມື້ນັ້ນເອງ. ດັ່ງນັ້ນ, ເຮືອນຈຶ່ງແມ່ນທີ່ຢູ່ອາໄສຢ່າງແທ້ຈິງຂອງຊາວລາວ ຊຶ່ງຍາມໃດກໍມີຄວາມນິຍົມ ກໍຄືມັນໄດ້ກາຍເປັນວັດທະນະທຳ ທີ່ຕ້ອງນອນເຮືອນຕົນເອງ, ຖ້າຜູ້ໃດມັກໄປນອນເຮືອນອື່ນໂດຍບໍ່ມີເຫດຜົນທີ່ຈຳເປັນ ແມ່ນຖືກກ່າວຂວັນນິນທາ ໂດຍສະເພາະແມ່ນຍິງສາວ. ດັ່ງນັ້ນ, ວິຖີຊີວິດຂອງຊາວລາວ ເຖິງວ່າມີສ່ວນກ່ຽວຂ້ອງກັບຫລາຍຢ່າງ ແຕ່ເຮືອນແມ່ນສະຖານທີ່ທີ່ມີສ່ວນພົວພັນຫລາຍກວ່າໝູ່ ຖ້າເຮົາຄິດໄລ່ໄລຍະເວລາໃນການດຳລົງຊີວິດໃນມື້ໜຶ່ງໆ.

**ຂ. ເຮືອນຢູ່:**

ຄຳວ່າເຮືອນ ແມ່ນມີຄວາມໝາຍຕໍ່ການດຳລົງຊີວິດຂອງມະນຸດ ເພາະວ່າເຮືອນ ແມ່ນທີ່ຢູ່ອາໄສປະຈຳວັນ ຊຶ່ງບອກເຖິງຖານະຄວາມໝັ້ນຄົງຂອງຊີວິດຂອງມະນຸດ. ດັ່ງນັ້ນ, ເຮືອນຈຶ່ງແມ່ນສິ່ງທີ່ມີຄວາມຈຳເປັນເປັນຢ່າງຍິ່ງໃນຊີວິດຂອງຄົນເຮົາ, ເຮືອນຈຶ່ງກາຍເປັນວັດທະນະທຳທາງວັດຖຸຂອງຄົນເຮົາທີ່ແຕ່ລະສັງຄົມຫລືແຕ່ລະເຜົ່າມີຄວາມນິຍົມໃນການສ້າງເຮືອນຢູ່ໃນຮູບຊົງຕ່າງໆ ຕາມແຕ່ລະເຂດພູມອາກາດ ແລະ ວັດຖຸນຳມາກໍ່ສ້າງ ຈະອຳນວຍຄວາມສະດວກ. ສຳລັບຊາວລາວທີ່ດຳລົງຊີວິດໃນເຂດ

ພູມອາກາດຮ້ອນຊຸ່ມນໍລະສຸມ, ໃນເມື່ອມີປ່າໄມ້ອຳນວຍຄວາມສະດວກ, ຊາວລາວຈຶ່ງມີວັດທະນະທຳກໍ່ສ້າງເຮືອນແບບພື້ນເມືອງດ້ວຍໄມ້ເປັນພື້ນຖານ ແລະ ມີຢູ່ທົ່ວໄປ ໂດຍສະເພາະແມ່ນຢູ່ເຂດຊົນນະບົດໃນເຂດທົ່ງພຽງ ແມ່ນກໍ່ສ້າງເປັນເຮືອນຍົກພື້ນ, ປູດ້ວຍແປ້ນ, ແອ້ມດ້ວຍແປ້ນ ຫລື ແອ້ມດ້ວຍໄມ້ປ້ອງ, ມຸງດ້ວຍໄມ້ໄຜ່, ຫຍ້າຄາ, ແປ້ນ, ສັງກະສີ ຫລື ກະເບື້ອງ... ເຮືອນແຕ່ລະຫລັງນິຍົມປຸກສ້າງເປັນເຮືອນດ່ຽວ ຊຶ່ງປະກອບດ້ວຍຫ້ອງຕ່າງໆ ຄື: ຫ້ອງນອນ, ຫ້ອງພະ ຫລື ຫ້ອງເປີງ, ເຊຍ, ບ່ອນກິນເຂົ້າ, ບ່ອນຮັບແຂກ, ເຮືອນຄົວ ແລະ ຊານ (ບ່ອນມ້ຽນໄຫນ້ຳເພື່ອໃຊ້ແຕ່ງກິນປະຈຳວັນ). ກ້ອງຕະລ່າງເຮືອນໃຊ້ເປັນບ່ອນມ້ຽນອຸປະກອນການຜະລິດ, ເຄື່ອງໃຊ້ຕ່າງໆ ແລະ ຟືນ. ນອກຈາກນັ້ນ, ກ້ອງຕະລ່າງຍັງໃຊ້ເປັນບ່ອນ ຕ່ຳຫູກ ຫລື ເປັນບ່ອນພັກຜ່ອນນອນເວັນ ແລະ ນັ່ງຫລິ້ນໂດຍສະເພາະໃນລະດູຮ້ອນ. ສ່ວນໃນເຂດພູດອຍ, ມີທັງເຮືອນຍົກພື້ນ ແລະ ເຮືອນຊູດິນທີ່ເຮັດດ້ວຍໄມ້ແປ້ນ ແລະ ໄມ້ປ້ອງທີ່ມຸງດ້ວຍຫຍ້າຄາ, ໄມ້ໄຜ່ ແລະ ສັງກະສີ... ບາງເຮືອນກໍເປັນເຮືອນໃຫຍ່ທີ່ມີຫລາຍຄອບຄົວ (ຄູ່ຜົວເມຍ) ທີ່ເປັນພີ່ນ້ອງເຊື້ອສາຍດຽວກັນຢູ່ນຳກັນ. ສຳລັບເຮືອນສະໄໝໃໝ່ ແມ່ນພົບເຫັນຫລາຍຢູ່ ຕາມຕົວເມືອງຕ່າງໆ ແລະ ຢູ່ເມືອງໃຫຍ່ອື່ນໆ. ເຮືອນແບບສະໄໝໃໝ່ເປັນເຮືອນທີ່ປຸກສ້າງຂຶ້ນດ້ວຍດິນຈີ່, ຊີມັງ, ຫີນ, ຊາຍ, ເຫລັກຫລືດ້ວຍໄມ້ທີ່ລວມມີເຮືອນວິນລາຊັ້ນດຽວຫລືສອງຊັ້ນ, ຕຶກແລະອາຄານທີ່ມີຫລາຍໆຊັ້ນ. ໃນເຮືອນປະກອບດ້ວຍເຄື່ອງເຮືອນຫລາຍຢ່າງ, ມີລະບົບໄຟຟ້າ ແລະ ນ້ຳປະປາຢ່າງຄົບຊຸດ ເປັນເຮືອນທີ່ທັນສະໄໝ ຊຶ່ງມາຮອດປັດຈຸບັນ ຊາວລາວຜູ້ທີ່ມີລາຍຮັບສູງກໍແຫ່ປຸກສ້າງເຮືອນຫລັງໃຫຍ່ໂອ່ໂຖງຈົນພວກເຮົາເອີ້ນວ່າ ຄະລືຫາດ.



ຮູບທີ 37: ຮູບເຮືອນຊົງລາວ



ຮູບທີ 38: ເຮືອນສະໄໝໃໝ່(ຄະລືຫາດ)

## 10.3 ປະເພນີ ແລະ ວັດທະນະທຳຂອງຊົນເຜົ່າໃນລາວ

ພົນລະເມືອງລາວສືບເຊື້ອສາຍມາຈາກບັນພະບູລຸດຫລາຍກົກເຫຼົ່າ ຊຶ່ງດຳລົງຊີວິດຮ່ວມກັນມາເທິງແຜ່ນດິນຕອນນີ້ມາແຕ່ດົນນານແລ້ວ. ດ້ວຍເຫດນີ້, ມາເຖິງປັດຈຸບັນພົນລະເມືອງລາວຈຶ່ງປະກອບດ້ວຍຫລາຍເຜົ່າທີ່ມີເອກະລັກໃນການດຳລົງຊີວິດແຕກຕ່າງກັນໄປ. ແຕ່ຖ້າອີງຕາມລັກສະນະຄວາມຄ້າຍຄືກັນທາງດ້ານພາສາເວົ້າແລ້ວ ກໍສາມາດແບ່ງພົນລະເມືອງລາວອອກເປັນໝວດຕ່າງໆດັ່ງນີ້:

### ກ. ໝວດທີ່ໃຊ້ພາສາລາວ-ໄຕ

ປະກອບມີ 8 ຊົນເຜົ່າຄື: ແຊກ, ຍວນ, ໄຕ, ໄທເໜືອ, ຜູ້ໄທ, ຢັ້ງ, ລາວ, ລື້ ຊຶ່ງບັນດາເຜົ່າເຫລົ່ານີ້ສ່ວນໃຫຍ່ອາໄສຢູ່ຕາມເຂດທົ່ງພຽງແຄມແມ່ນ້ຳຕ່າງໆ ເປັນຕົ້ນແມ່ນຢູ່ຕາມແຄມແມ່ນ້ຳຂອງໂດຍກວມຈຳນວນ 2/3 ຂອງຈຳນວນພົນລະເມືອງລາວທັງໝົດ.

### ຂ. ໝວດທີ່ໃຊ້ພາສາມອນ-ຂະແມ

ປະກອບດ້ວຍ 32 ຊົນເຜົ່າຄື: ກຶມມຸ, ກະຕາງ, ກະຕູ, ກຣຽງ, ກຣີ, ຂະແມ, ງວນ, ເຈັງ, ສາມຕ່າວ, ສະດາງ, ຊ່ວຍ, ຊິງມູນ, ຍະເຫີນ, ຕະໂອ້ຍ, ຕຣຽງ, ຕຣີ, ຕູມ, ແທ່ນ, ບິດ, ເບຣົາ, ປະໂກະ, ໄປຣ, ຜ້ອງ, ມະກອງ, ມ້ອຍ, ຢຣຸ, ແຢະ, ລະເມດ, ລະວີ, ໂອຍ, ເອີດູ, ຮ່າຮັກ ຊຶ່ງກວມເອົາອັດຕາສ່ວນປະມານ 22% ຂອງພົນລະເມືອງທັງໝົດ ແລະ ອາໄສຢູ່ເຂດພູພຽງພາກໃຕ້ ແລະ ຢູ່ລຽບສາຍພູຫລວງເປັນສ່ວນຫລາຍ.

ຄ. ພວກທີ່ໃຊ້ພາສາມົ້ງ-ອີວມຽນ

ປະກອບ ມີ 2 ຊົນເຜົ່າຄື: ມົ້ງ (ຂາວ, ດຳ, ລາຍ, ແດງ...) ແລະ ອີວມຽນ (ຢ້າວ) ຊຶ່ງອາໄສຢູ່ເຂດພູສູງທາງພາກເໜືອເປັນສ່ວນຫລາຍ.

ງ. ພວກທີ່ໃຊ້ພາສາຈີນ-ຕີເບດ[65]

ປະກອບມີ 7 ຊົນເຜົ່າຄື: ສິງສິລີ, ສີລາ, ລາຫູ, ອາຄາ, ຮາຍີ່, ໂລໂລ, ຫໍ້ ຊຶ່ງອາໄສ ຢູ່ບັນດາແຂວງພາກເໜືອ ໂດຍສະເພາະແມ່ນຢູ່ບັນດາແຂວງລຽບຊາຍແດນລາວ-ຈີນ ແລະ ລາວ-ມຽນມາ ທີ່ຢູ່ໃນແຂວງຜົ້ງສາລີ, ອຸດົມໄຊ, ຫລວງນ້ຳທາ ແລະ ຫົວພັນ

ນອກຈາກບັນດາພວກເຜົ່າຕ່າງໆນີ້ແລ້ວ, ໃນປະເທດລາວຍັງມີຊາວຕ່າງດ້າວອີກຈຳນວນໜຶ່ງ ເຊັ່ນ: ຊາວຫວຽດນາມ, ຈີນ, ໄທ, ອິນເດຍ... ຊຶ່ງມັກອາໄສຢູ່ຕາມຕົວເມືອງໃຫຍ່ຕ່າງໆ ແລະ ທຳອາ ຊີບຄ້າຂາຍເປັນຕົ້ນຕໍ.

ຈາກທີ່ພົນລະເມືອງລາວປະກອບດ້ວຍຫລາຍເຜົ່າຄືດັ່ງກ່າວມານັ້ນຮີດຄອງປະເພນີ ແລະ ວັດທະນະທຳຈຶ່ງມີຫລາກຫລາຍເພາະວ່າແຕ່ລະເຜົ່າກໍມີຮີດຄອງປະເພນີ ແລະ ວັດທະນະທຳຂອງໃຜ-ມັນ. ແຕ່ຈະຂໍກ່າວແຕ່ປະເພນີ ແລະ ວັດທະນະທຳບາງຢ່າງຂອງບາງເຜົ່າເທົ່ານັ້ນ.

### 10.3.1 ປະເພນີ ແລະ ວັດທະນະທຳຂອງຊົນເຜົ່າທີ່ໃຊ້ພາສາລາວ-ໄຕ

ປະເພນີ ແລະ ວັທະນະທຳການຂອງຊົນເຜົ່າທີ່ໃຊ້ພາສາລາວ-ໄຕ ແມ່ນຈະສະເໜີປະເພນີ ແລະ ວັດທະນະທຳການແຕ່ງດອງ ຫລື ການແຕ່ງງານຂອງຊົນເຜົ່າລາວຊຶ່ງມີການດຳເນີນງານດັ່ງນີ້:

ພິທີການແຕ່ງດອງຂອງຊົນເຜົ່າລາວເປັນພິທີທີ່ຈັດໃຫ້ນ້ອຍ ຫລື ໃຫຍ່ ແມ່ນອີງໃສ່ຖານະ ຂອງແຕ່ລະຄອບຄົວ. ຕາມປະເພນີທີ່ນິຍົມປະຕິບັດກັນມາແຕ່ບູຮານນະການນັ້ນ, ການກະກຽມງານດອງທີ່ເພິ່ນເອີ້ນວ່າ "ການອຸ່ນດອງ" ກໍມີຂຶ້ນທັງ 2 ເຮືອນຄືເຮືອນເຈົ້າບ່າວ ແລະ ເຮືອນເຈົ້າສາວ ຊຶ່ງມີຍາດພີ່ນ້ອງ ເພື່ອນມິດຂອງແຕ່ລະຝ່າຍມາຊ່ວຍວຽກ ຫ້າງຫາກະກຽມຈັດແຈງເຄື່ອງຂອງ, ເຄື່ອງປະກອບອາຫານ ພ້ອມທັງມີການຄົບງັນຊຸມແຊວດື່ມເຫລົ້າຂາວໃນເມື່ອກ່ອນ, ແຕ່ປັດຈຸບັນມີຄ່ານິຍົມກາຍເປັນວັດທະນະທຳໃໝ່ ແມ່ນດື່ມເບຍໂດຍສະເພາະຢູ່ໃນຕົວເມືອງໃຫຍ່. ກ່ອນຮອດມື້ແຕ່ງດອງ, ໃນເມື່ອກ່ອນເຈົ້າບ່າວ ແລະ ເຈົ້າສາວໄດ້ໄປເລົ່າດອງ, ຮຽກດອງ ຫລື ໄປເຊີນຍາດພີ່ນ້ອງເພື່ອນມິດໃຫ້ມາຮ່ວມງານດອງດ້ວຍຕົນເອງ ຫລື ຍາດພີ່ນ້ອງໄປເລົ່າໃຫ້. ແຕ່ປັດຈຸບັນເພິ່ນໃຊ້ ບັດເຊີນທີ່ສົ່ງດ້ວຍຕົນເອງ ຫລື ຝາກໃຫ້ກໍໄດ້. ໃນມື້ແຕ່ງດອງ ຫລື ແຕ່ງງານກໍມີພິທີບາສີສູ່ຂວັນຢູ່ເຮືອນເຈົ້າສາວ ແລະ ມີການແຫ່ເຈົ້າບ່າວໄປເຮືອນເຈົ້າສາວດ້ວຍຄວາມເບີກບານມ່ວນຊື່ນ ຄືມີການຮ້ອງລຳໄປພ້ອມໂດຍສະເພາະແມ່ນຮ້ອງເພັງ "ແຫ່ເຂີຍ". ສຳລັບການນຸ່ງເຄື່ອງ-ເອ້ຍ້ອງ, ເຈົ້າບ່າວຈະນຸ່ງເຄື່ອງໃຫ້ຖືກຕາມຮີດຄອງປະເພນີຢ່າງແທ້ຈິງ ແມ່ນນຸ່ງເສື້ອຂາວແຂນຍາວຄໍຕັ້ງ ແລະ ຜ້າຫາງ ທີ່ເຮັດດ້ວຍໄໝມ້ອນສີຟ້າ, ຂຽວ ຫລື ແດງ, ໃສ່ເກີບໜັງສີດຳ-ຖົງຕີນສີຂາວ, ພາຍຖົງຝ້າຍ ຫລື ໄໝທີ່ໃສ່ເງິນ, ພາຍງ້າວຫລືດາບ, ມີເບື້ອງຊ້າຍຈັບຕົ້ນກ້ວຍ-ຕົ້ນອ້ອຍ ແລະ ກັ້ງຄັນຮົ່ມ (ມີໝູ່ກັ້ງໃຫ້). ເວລາແຫ່ເຂີຍ ແມ່ນມີຂັນໝາກ 3 ຂັນທີ່ປົກຫຸ້ມດ້ວຍຜ້າຂາວ ຄືຂັນໃສ່ເງິນ-ຄຳຄ່າດອງໃຫ້ຜູ້ເຖົ້າເຈົ້າ ໂຄດລຸງຕາຖືຍ່າງອອກໜ້າໄປກ່ອນຂະບວນແຫ່, ສ່ວນຂັນໃສ່ຄຳໝາກ-ພູ ແລະ ຂັນໃສ່ເຫລົ້າຢາດູດ ແມ່ນໃຫ້ຍິງສາວພົມມະຈາຣີ (ຍິງສາວບໍລິສຸດ) ຈຳນວນ 4 ຄົນຫາມຍ່າງຕາມຫລັງເຈົ້າໂຄດລຸງຕາ, ຕໍ່ມາກໍແມ່ນເຈົ້າບ່າວພ້ອມດ້ວຍຍາດພີ່ນ້ອງເພື່ອນມິດ. ເວລາໄປຮອດເຮືອນເຈົ້າສາວ ກໍມີການຕ້ອນຮັບຂັບສູ່ກັນດ້ວຍການເຍັ້ນເຫລົ້າຢູ່ປະຕູຮົ້ວຂອງເຮືອນຝ່າຍຍິງ ແລະ ເຖົ້າແກ່ຝ່າຍຍິງຜູ້ທີ່ໄດ້ປູບ່ອນນອນໃຫ້ນັ້ນ (ຕ້ອງເອົາຜູ້ທີ່ມີຜົວດຽວເມຍດຽວ) ເອົາສາຍແອວທອງນາກ ຫລື ສາຍແອວຄຳໄປຈູງເອົາເຈົ້າບ່າວ. ເວລາມາຮອດຂັ້ນໄດເຮືອນເຈົ້າສາວ

[65] ກົມຊົນເຜົ່າ. ບັນດາຊົນເຜົ່າໃນ ສປປ.ລາວ. ສູນກາງແນວລາວສ້າງຊາດ, ໂຮງພິມມັນທາຕຸລາດ ນະຄອນຫລວງວຽງຈັນ, 2008

ກ່ອນຈະຂຶ້ນເຮືອນກໍຕ້ອງມີນ້ອງ ຫລື ຫລານຂອງເຈົ້າສາວທີ່ຍັງເປັນເດັກຜູ້ຍິງເອົານ້ຳ ສະອາດລ້າງຕີນໃຫ້ເຈົ້າບ່າວ. ຈາກນັ້ນ, ເຈົ້າບ່າວຈຶ່ງໄດ້ຂຶ້ນເຮືອນໄປເຂົ້າພາຂວັນ ແລະ ນັ່ງພະແພບຕໍ່ໜ້າພາຂວັນທີ່ກະກຽມ ແລະ ວາງໄວ້ເທິງພື້ນເຮືອນທີ່ປູດ້ວຍສາດ ຫລື ຜ້າພົມ. ສຳລັບເຈົ້າໂຄດລຸງຕາ ທາງຝ່າຍຊາຍກໍຍົກຂັນທັງ 3 ຂັນໃຫ້ເຈົ້າໂຄດຝ່າຍຍິງ ແລ້ວເຈົ້າໂຄດຝ່າຍຍິງກໍເປີດແພອອກແລ້ວທຳການກວດກາເງິນ-ຄຳທີ່ເປັນຄ່າດອງ ວ່າຖືກຕ້ອງຕາມຕົວຈິງທີ່ໄດ້ເວົ້າກັນໃນເວລາສູ່ຂໍ ຫລື ບໍ່? ຖ້າຖືກຕ້ອງແລ້ວ ເຈົ້າໂຄດຝ່າຍຍິງກໍຈະອະນຸຍາດໃຫ້ເຈົ້າສາວທີ່ນຸ່ງເຄື່ອງແຕ່ງຕົວດ້ວຍການນຸ່ງເສື້ອໄໝ, ສິ້ນໄໝ, ແພບ່ຽງໄໝ, ເກົ້າຜົມໃສ່ເຄື່ອງເອ້ດ້ວຍຄຳອອກມາຈາກຫ້ອງນອນ ໂດຍແມ່ນແມ່ຍິງທີ່ປູບ່ອນນອນໃຫ້ນັ້ນ ເປັນຜູ້ນຳໃຊ້ມີດສະໜາກ (ມີດໜີບສຽດເພື່ອຄ້ຽວໝາກ) ຈູງແຂນອອກມາແລ້ວນັ່ງຄຽງຂ້າງເບື້ອງຊ້າຍຂອງເຈົ້າບ່າວ. ຈາກນັ້ນ, ໝໍພອນກໍເລີ່ມຕົ້ນທຳການບາສີ-ສູ່ຂວັນ ຫລື ເອີ້ນຂວັນຂອງທັງເຈົ້າບ່າວ ແລະ ເຈົ້າສາວພ້ອມທັງໃຫ້ພອນ ໃຫ້ເຂົາເຈົ້າເປັນຜົວດຽວ-ເມຍດຽວ, ເປັນຄູ່ຄອງກັນຕະຫລອດຊີວິດນັ້ນເອງ. ຈາກນັ້ນກໍມີການມັດແຂນໃຫ້ເຈົ້າບ່າວ ແລະ ເຈົ້າສາວ. ເມື່ອສຳເລັດພິທີບາສີສູ່ຂວັນແລ້ວ, ເຈົ້າບ່າວ ແລະ ເຈົ້າສາວກໍຂູມາພໍ່ແມ່ ແລະ ເຈົ້າໂຄດລຸງຕາທັງ 2 ກົກ 2 ຝ່າຍດ້ວຍຂັນຂູມາ. ຈາກນັ້ນຈຶ່ງມີການຈູງແຂນເຈົ້າບ່າວ ແລະ ເຈົ້າສາວດ້ວຍມີດສະໜາກພ້ອມທັງນຳເອົາພາຂວັນເຂົ້າສູ່ຫ້ອງນອນ. ເປັນອັນວ່າຈົບພິທີທາງຮີດຄອງປະເພນີການແຕ່ງດອງ ຈາກນັ້ນກໍມີງານລ້ຽງຕອນທ່ຽງຢູ່ໃນເຮືອນເຈົ້າສາວ. ນອກຈາກນັ້ນ, ບາງຄອບຄົວທີ່ຢາກເຮັດງານລ້ຽງຕື່ມອີກ ກໍຈະເຮັດຂຶ້ນຕອນຄ່ຳຂອງມື້ດັ່ງກ່າວຊຶ່ງຈະເຮັດຢູ່ໂຮງແຮມ ຫລື ພັດຕາຄານໃດໜຶ່ງສຳລັບໃນຕົວເມືອງໃຫຍ່ ແຕ່ບາງຄອບຄົວກໍຈັດຕາມສະຖານທີ່ທີ່ເໝາະສົມ ໂດຍສະເພາະແມ່ນເຂດຕົວເມືອງນ້ອຍ ຫລື ຕາມຊົນນະບົດຕ່າງໆ.

### 10.3.2 ປະເພນີ ແລະ ວັດທະນະທຳຂອງຊົນເຜົ່າທີ່ໃຊ້ພາສາມອນ-ຂະແມ

ປະເພນີ ແລະ ວັດທະນະທຳຂອງຊົນເຜົ່ານີ້ ແມ່ນຈະສະເໜີປະເພນີ ແລະ ວັດທະນະທຳຂອງຊົນເຜົ່າກຶມມຸໃນການເຮັດບຸນ "ກະເຣີ" ຫລື "ບຸນກູ້ເຜືອກກູ້ມັນ" ຫລື "ບຸນປົດປີ" ແປວ່າປົດປີເກົ່າຂຶ້ນປີໃໝ່ ຊຶ່ງໝາຍເຖິງການສົ່ງທ້າຍປີເກົ່າດ້ວຍການຊຳລະສະສາງສິ່ງທີ່ບໍ່ດີບໍ່ງາມເຊັ່ນ: ພະຍາດໂລຄາ, ເຄາະຮ້າຍ, ເວນກຳ, ຄວາມອຶດຢາກຂາດເຂີນ ຈົ່ງໜີໄປນຳປີເກົ່າ ແລະ ຕ້ອນຮັບປີໃໝ່ດ້ວຍໂຊກໄຊ, ຄວາມຮັ່ງມີດີໄດ້, ມີເງິນມີຄຳໄຫລມາເທມາ ພ້ອມທັງສຸຂະພາບກໍໃຫ້ເຂັ້ມແຂງມີອາຍຸໝັ້ນຍືນ. ຊາວເຜົ່າ ກຶມມຸຈັດຕັ້ງບຸນດັ່ງກ່າວນີ້ ໃນໄລຍະເດືອນຈຽງ-ເດືອນຍີ່ ຊຶ່ງກົງກັບເດືອນສິບສອງຕໍ່ໃສ່ເດືອນໜຶ່ງ ສາກົນຂອງທຸກໆ ປີ. ພາຍຫລັງເກັບກູ້ເຂົ້າ ແລະ ຂົນເຂົ້າຂຶ້ນເລົ້າແລ້ວທຸກໆຄອບຄົວຂອງຊາວເຜົ່າກຶມມຸຈະໄດ້ທ້າງຫາກະກຽມເຮັດບຸນນີ້ຂຶ້ນມາ,ຖ້າບໍ່ດັ່ງນັ້ນຈະບໍ່ສາມາດເຮັດວຽກອື່ນໃນໄລຍະຕໍ່ໄປໄດ້. ການເຮັດບຸນນີ້ໃນແຕ່ລະປີ ກໍເພາະວ່າຊາວເຜົ່າກຶມມຸມີຄວາມເຊື່ອຕໍ່ບັນພະບູລຸດ, ຕໍ່ພໍ່ແມ່ ແລະ ຄຸນຄ່າຂອງທັນຍາຫານ ຊຶ່ງເນື້ອແທ້ ແມ່ນຈັດພິທີກຳກິນທານຫາບັນພະບູລຸດ, ພໍ່ແມ່ຂອງຕົນເອງທີ່ເສຍຊີວິດໄປ ເພາະວ່າຊາວເຜົ່າກຶມມຸເຄົາລົບບູຊາບັນພະບູລຸດ ແລະ ພໍ່ແມ່. ເຂົາເຈົ້າຄິດວ່າບໍ່ມີສິ່ງໃດປະເສີດທໍ່ບຸນຄຸນຂອງຜູ້ທີ່ເປັນພໍ່ແມ່ ເພາະວ່າພໍ່ແມ່ເປັນຜູ້ໃຫ້ກຳເນີດລູກອອກມາ, ໃຫ້ການລ້ຽງດູ, ສັ່ງສອນ ໃຫ້ລູກເປັນຄົນຮູ້ຜູ້ດີ. ດ້ວຍເຫດນີ້, ເມື່ອພໍ່ແມ່ເສຍຊີວິດໄປລູກຍັງຕ້ອງຈື່ຈຳ ແລະ ຮູ້ບຸນຄຸນຂອງພໍ່ແມ່ຢູ່ສະເໝີ ຈຶ່ງມີການປົດປີເກົ່າຂຶ້ນປີໃໝ່ລ້ຽງຜີພໍ່ແມ່, ສູ່ຂວັນລູກຫລານ, ສະເຫລີມສະຫລອງຮັບຕ້ອນຜົນງານການຜະລິດໃນປີໜຶ່ງຜ່ານມາ. ກ່ອນມື້ຈະເຮັດບຸນ, ເພິ່ນພາກັນໄປກູ້ເຜືອກ, ກູ້ມັນ, ເກັບໝາກອຶ-ໝາກໂຕ່ນເພື່ອໄວ້ໜຶ້ງກິນໃນມື້ເຮັດບຸນ. ນອກຈາກນັ້ນ, ເພິ່ນຍັງເຮັດເຂົ້າຕົ້ມ, ເຂົ້າໜົມ, ມີທັງເຄື່ອງສົ້ມຂອງຫວານເຊັ່ນ: ກ້ວຍ, ອ້ອຍ ແລະ ເຄື່ອງປູກຂອງຝັງປະເພດອື່ນໆ. ເຄື່ອງປະກອບພິທີກຳລວມມີ ເຫລົ້າໄຫສອງໄຫ, ໄກ່ສອງໂຕ (ໄກ່ຜູ້ໜຶ່ງໂຕ ແລະ ໄກ່ແມ່ໜຶ່ງໂຕ), ຂັນໝາກ, ເຄື່ອງມືການຜະລິດຈຳນວນໜຶ່ງເຊັ່ນ: ພ້າ, ກ່ຽວ, ເງິນ, ຄຳ,

ງາຊ້າງ. ໃນການຈັດງານບຸນ ແມ່ນຈັດໃນຕອນບ່າຍຂອງມື້ທີ່ບໍ່ແມ່ນວັນເສຍຊີວິດຂອງພໍ່ ຫລື ຂອງແມ່ ຈົນຮອດບ່າຍສາມໂມງ ຫລື ສິບຫ້າໂມງຂອງມື້ຕໍ່ມາ ຈຶ່ງສຳເລັດ. ການທຳບຸນນີ້ ບໍ່ສະເພາະແຕ່ປະຕິບັດຕາມຮີດຄອງປະເພນີເທົ່ານັ້ນ ຫາກຍັງໝາຍເຖິງຄວາມມຸ່ງມາດປາຖະໜາຫາຄວາມສຸກ, ຄວາມຈະເລີນຂອງຊົນເຜົ່າກຶມມຸອີກດ້ວຍ[66].

### 10.3.3 ປະເພນີ ແລະ ວັດທະນະທຳຂອງຊົນເຜົ່າທີ່ໃຊ້ພາສາມົ້ງ-ອິວມຽນ

ປະເພນີ ແລະ ວັດທະນະທຳຂອງໝວດພາສາມົ້ງ-ຢ້າວ ແມ່ນຈະສະເໜີປະເພນີ ແລະ ວັດທະນະທຳບຸນກິນຈຽງຊຶ່ງພາສາມົ້ງເອີ້ນວ່າ "ນໍເປ້ເຈົາ" ແປວ່າ ກິນສາມສິບ ໝາຍຄວາມວ່າ ການທຳການຜະລິດ ພາຍໃນໜຶ່ງປີຈະຕ້ອງມີຂອງກິນສາມສິບຢ່າງມາຮວມກິນນຳກັນ ໃນຍາມບຸນກິນຈຽງ. ບຸນກິນຈຽງ ແມ່ນປະເພນີໜຶ່ງທີ່ຊົນເຜົ່າມົ້ງປະຕິບັດສືບທອດກັນມາແຕ່ບູຮານນະການ. ທຸກໆ ປີຈະຕ້ອງໄດ້ຈັດຂຶ້ນ ເພື່ອເປັນການສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່ລະຫວ່າງມື້ແຮມ 15 ຄ່ຳເດືອນ 11 ຫລື ມື້ແຮມ 15 ຄ່ຳເດືອນ 12. ການຈັດບຸນກິນຈຽງຂອງແຕ່ລະທ້ອງຖິ່ນຈະບໍ່ຈັດຢູ່ໃນໄລຍະດຽວກັນ ເພາະວ່າເພິ່ນອີງໃສ່ປະຕິທິນສາກົນຂອງແຕ່ລະປີ ທີ່ມີຄວາມແຕກຕ່າງກັນຄື: ບາງປີກິນຈຽງໄວ ແມ່ນກິນໃນມື້ແຮມ 15 ຄ່ຳເດືອນ 11 ແລະ ບາງປີກິນຈຽງຊ້າແມ່ນກິນມື້ແຮມ 15 ຄ່ຳເດືອນ 12[67]. ນອກຈາກນັ້ນເພິ່ນຍັງອີງໃສ່ການເກັບກູ້ຜົນລະປູກຂອງຊຸມຊົນທ້ອງຖິ່ນ ຖ້າສຳເລັດໄວກໍກິນຈຽງໄວ, ຖ້າສຳເລັດຊ້າກໍກິນຈຽງຊ້າ. ແນວໃດກໍຕາມ, ບຸນກິນຈຽງ ແມ່ນມີຄວາມສຳຄັນຕໍ່ຊາວເຜົ່າມົ້ງເປັນຢ່າງຍິ່ງ ຄ້າຍໆ ກັບບຸນປີໃໝ່ລາວ ທີ່ມີຄວາມສຳຄັນຕໍ່ຊາວເຜົ່າລາວເພາະວ່າ ມີການອວຍພອນໄຊຊຶ່ງກັນ ແລະ ກັນ ໂດຍສະເພາະແມ່ນຜູ້ໜຸ່ມກວ່າໄປສົ່ງພອນໃຫ້ຜູ້ອາວຸໂສກວ່າ ຊຶ່ງໝາຍເຖິງການເຄົາລົບນັບຖືຜູ້ອາວຸໂສກວ່ານັ້ນເອງ. ໃນໄລຍະບຸນກິນຈຽງ ຊາວເຜົ່າມົ້ງຈະບໍ່ເຮັດວຽກ, ຈະພັກຜ່ອນຢູ່ນຳຄອບຄົວ, ເປີດໂອກາດໃຫ້ບ່າວສາວຊອກຄູ່ຄອງ, ເປັນການວາງແຜນໃນການທຳການຜະລິດໃນປີຕໍ່ໄປ ແລະ ເປັນການພົບປະສ້າງສັນ ເພື່ອສ້າງຄວາມສາມັກຄີລະຫວ່າງຄົນພາຍໃນຄອບຄົວ ແລະ ສັງຄົມ. ສ່ວນໜຶ່ງຂອງຮີດຄອງປະເພນີໃນການກິນຈຽງ ມີການສົ່ງພອນໃຫ້ຜູ້ອາວຸໂສຄືດັ່ງກ່າວມາ ແຕ່ຂໍເລົ່າລະອຽດຄື: ຕື່ນແຕ່ເຊົ້າຂອງມື້ໃດໜຶ່ງຂອງໄລຍະບຸນກິນຈຽງ, ພາຍຫລັງລ້າງໜ້າຕາຮຽບຮ້ອຍແລ້ວ, ພໍ່ເຮືອນ ຊຶ່ງໝາຍເຖິງຜູ້ຊາຍທີ່ມີອາຍຸກາງຄົນ (ຍັງໜຸ່ມ ແຕ່ແຕ່ງງານແລ້ວ) ພາຍໃນບ້ານພາກັນກະກຽມເອົາເຫລົ້າ ແລະ ຂອງແກ້ມເຫລົ້າ ແລ້ວໄປຫາເຮືອນຜູ້ອາວຸໂສ, ຈາກນັ້ນພາກັນຈັດພາເຂົ້າ, ມີການດື່ມເຫລົ້າ ແລະ ກິນຂອງແກ້ມເຫລົ້າໄປນຳ. ຈາກນັ້ນກໍເຊີນຜູ້ອາວຸໂສມານັ່ງຢູ່ເບື້ອງເໜືອພາຍໃນເຮືອນຂອງເພິ່ນ ແລະ ພວກລູກຂອງເພິ່ນພ້ອມດ້ວຍພໍ່ເຮືອນທີ່ຍັງໜຸ່ມທັງຫລາຍ ກໍພາກັນນັ່ງຊຸເຂົ່າຄາລະວະຢູ່ກັບພື້ນເຮືອນ. ຜູ້ເປັນຕົວແທນເຍັ້ນເຫລົ້າ ໃຫ້ຜູ້ອາວຸໂສ ພ້ອມກ່າວໃຫ້ພອນ ແລະ ຈາກນັ້ນຜູ້ອາວຸໂສໃຫ້ພອນແກ່ພວກໜຸ່ມ ແລະ ເຍັ້ນເຫລົ້າໃຫ້ພວກໜຸ່ມເປັນສອງສາມຮອບຕາມການໃຫ້ພອນຈາກຜູ້ອາວຸໂສທີ່ເວົ້າເຖິງແຕ່ສິ່ງດີງາມ ເຊັ່ນ: ໃຫ້ພວກໜຸ່ມກາຍເປັນຄົນດີ, ມີຄວາມຮູ້ ຄວາມສາມາດ ແລະ ເປັນຄົນທີ່ສັງຄົມຍອມຮັບເໝືອນຕົນ ເອງທີ່ເປັນຜູ້ອາວຸໂສໃນປັດຈຸບັນ.

### 10.3.4 ປະເພນີ ແລະ ວັດທະນະທຳຂອງຊົນເຜົ່າທີ່ໃຊ້ພາສາຈີນ-ຕີເບດ

ປະເພນີ ແລະ ວັດທະນະທຳຂອງຊົນເຜົ່ານີ້ ແມ່ນຈະສະເໜີການແຕ່ງດອງ ຫລື ການແຕ່ງງານຂອງຊົນເຜົ່າອາຄາ ຊຶ່ງເປັນຊົນເຜົ່າໜຶ່ງທີ່ໃຊ້ພາສາຈີນ-ຕີເບດ. ເຂົາເຈົ້າດຳລົງຊີວິດຢູ່ໃນປະເທດລາວໃນບັນດາແຂວງພາກເໜືອຄື: ຜົ້ງສາລີ, ຫລວງນ້ຳທາ, ອຸດົມໄຊ ແລະ ບໍ່ແກ້ວ. ການແຕ່ງງານຂອງຊົນເຜົ່ານີ້ແມ່ນເລີ່ມດ້ວຍຄວາມມັກຮັກແລະຕົກລົງປົງໃຈກັນຂອງບ່າວສາວ. ຈາກນັ້ນ, ຜູ້ໃຫຍ່ຝ່າຍຊາຍຕ້ອງໄປສູ່ຂໍກັບພໍ່ແມ່ຝ່າຍຍິງ. ເມື່ອຕົກລົງກັນໄດ້ແລ້ວ, ຝ່າຍຊາຍກໍພາເຈົ້າສາວມາເຮືອນຂອງຕົນເອງ

[66] ສຸກສະຫວ່າງ ສີມານະ, ເອລີຊາເບັດ ໄພຣສິກ. ການຄົງຊີບຂອງເຜົ່າກຶມມຸ. 1998: 39.
[67] ເປົາລໍ່ ປາເຈົ້າ, ລໍວັນ ເກຍຕຸໄກສີ, ເລົ້າ ຢ່າງ 2011: 5

(ເຮືອນເຈົ້າບ່າວ) ໂດຍໃຫ້ນອນຢູ່ເຮືອນພີ່ນ້ອງກ່ອນໜຶ່ງຄືນ. ຈາກນັ້ນ, ໃນມື້ຕໍ່ມາພິທີແຕ່ງດອງຂອງຊົນເຜົ່ານີ້ກໍເລີ່ມຂຶ້ນ ໂດຍມີຜູ້ເຖົ້າທີ່ເອີ້ນວ່າ ແຍະໝໍ່ (ຜູ້ຮູ້ເລື່ອງພິທີກຳ) ເປັນຜູ້ນຳພາເຖົ້າແກ່ ແລະ ຍາດພີ່ນ້ອງທຳພິທີແຫ່ເຈົ້າສາວໄປເຮືອນເຈົ້າບ່າວ ໂດຍທີ່ເຈົ້າສາວກໍມີການແຕ່ງຕົວເປັນຢ່າງດີ. ໃນເວລານຳພາເຈົ້າສາວໄປເຮືອນເຈົ້າບ່າວນັ້ນ, ບັນດາເຖົ້າແກ່ ແລະ ຍາດພີ່ນ້ອງພາກັນເອົາໄມ້ຕີທາງເຂົ້າເຮືອນເຈົ້າບ່າວ ແລະຫລັງຄາເຮືອນເຈົ້າບ່າວ ເພື່ອບອກໃຫ້ວິນຍານຂອງເຈົ້າສາວຮູ້ວ່າໄດ້ມາເຖິງເຮືອນເຈົ້າບ່າວແລ້ວ ແລະ ໃຫ້ເຂົ້າໄປໃນເຮືອນເຈົ້າບ່າວ. ຈາກນັ້ນຄູ່ບ່າວສາວກໍສົ່ງໄຂ່ໄກ່ສະຫລັບວົນກັນຈຳນວນ 3 ຮອບໂດຍບໍ່ໃຫ້ໄຂ່ຕົກເພາະເຊື່ອວ່າຖ້າໄຂ່ຕົກຈະເຮັດໃຫ້ບໍ່ມີລູກ ແລະ ບໍ່ມີບຸນ ຊຶ່ງເປັນຂັ້ນຕອນທີ່ສຳຄັນທີ່ສຸດໃນງານດອງ. ຫລັງຈາກນັ້ນກໍມີການຂ້າໄກ່ໜຶ່ງໂຕ ແລ້ວຕັດເປັນຕ່ອນຄື: ຕັດຂາ, ກົກຂາ, ຫົວ, ຫົວໃຈ, ໄສ້, ກົ້ນໄກ່ ແລະ ຕັດຊີ້ນອີກ 1 ຕ່ອນແລ້ວນຳໄປຕົ້ມ ເພື່ອໃຫ້ຄູ່ບ່າວສາວຮັບປະທານຮ່ວມກັນ ໂດຍຖືວ່າແມ່ນຄາບເຂົ້າຄັ້ງທຳອິດຂອງຄູ່ແຕ່ງງານ ທີ່ເຂົາເຈົ້າຕ້ອງຮັບປະທານໃຫ້ໝົດ ເພາະເຊື່ອວ່າຖ້າຮັບປະທານໝົດ ຈະສົ່ງຜົນໃຫ້ມີລູກດ້ວຍກັນ ແລະ ຈະເຮັດໃຫ້ລູກແຂງແຮງສົມບູນດີ. ນອກຈາກນັ້ນ ຈະມີການຂ້າໝູ ແລະ ຜ່າທ້ອງໝູເພື່ອເບິ່ງຫົວໃຈ ແລະ ຕັບ ຊຶ່ງເປັນການສ່ຽງທວາຍວ່າ ລູກທີ່ຈະເກີດມາຈະເປັນຍິງ ຫລື ຊາຍ. ມື້ຕໍ່ມາ, ພໍຮຸ່ງເຊົ້າ ເຈົ້າສາວກໍຈະຕື່ນແຕ່ເຊົ້າເພື່ອເຮັດວຽກເຮືອນທຸກຢ່າງ, ທັງຕັກນ້ຳ ແລະ ກຽມພາເຂົ້າແລ້ວກໍເອີ້ນຜູ້ເຖົ້າຜູ້ແກ່ມາຮັບປະທານອາຫານຮ່ວມກັນທີ່ເຮືອນຂອງເຈົ້າບ່າວ. ຜູ້ມາຮ່ວມງານພາກັນຮ້ອງເພງເພື່ອເປັນການໃຫ້ພອນແກ່ຄູ່ສ້າງຄອບຄົວໃໝ່. ໃນຕອນຄ່ຳກໍຈະມີການດື່ມເຫລົ້າ ໂດຍຄູ່ສ້າງຄອບຄົວໃໝ່ຕ້ອງຖືແກ້ວເຫລົ້າໄປໃຫ້ຜູ້ເຖົ້າຜູ້ແກ່ເຍັ້ນ ແລະ ດື່ມ ຊຶ່ງຖືວ່າເປັນການຂໍບຸນຈາກຜູ້ເຖົ້າຜູ້ແກ່ ແລະ ໃນມື້ທີ 3 ເຈົ້າສາວຕ້ອງອອກໄປຕັດຕົ້ນກ້ວຍແດງທີ່ ເອີ້ນວ່າ (ງາເນະ) ໃນປ່າ ຊຶ່ງຕ້ອງເອົາຍອດກ້ວຍມາເຜົາໃຫ້ແຂກຮັບປະທານໃນມື້ນີ້, ພ້ອມນີ້ ກໍຍັງໄດ້ຂ້າໄກ່ຕົ້ມ ແຕ່ງເປັນພາເຂົ້າໃຫ້ເຖົ້າແກ່ ແລະ ແຂກຄົນທີ່ມາຮ່ວມງານຮັບປະທານອີກດ້ວຍ. ນອກຈາກນີ້ຍັງມີການທາຂີ້ໝິ້ນໝໍ້ ຄືແຂກທີ່ມາຮ່ວມງານຈະທານ້ຳມັນພືດໃສ່ມືແລ້ວໄປລູບຂີ້ໝິ້ນໝໍ້ຈາກກົ້ນໝໍ້ດຳແລ້ວໄປທາໜ້າຄູ່ສ້າງຄອບຄົວໃໝ່ ເພື່ອເປັນການທົດສອບຄວາມອົດທົນກ່ອນທີ່ຈະດຳລົງຊີວິດຮ່ວມກັນ. ນອກຈາກນັ້ນ ບັນດາຜູ້ມາຮ່ວມງານກໍຈະໄລ່ທາຂີ້ໝິ້ນໝໍ້ໃສ່ກັນຕື່ມອີກເພື່ອຄວາມມ່ວນຊື່ນນັ້ນເອງ. ເປັນອັນວ່າການແຕ່ງງານດຳເນີນເປັນເວລາ 3 ວັນຈຶ່ງສຳເລັດ.

## 10.4 ມາລະຍາດ ການປະພຶດ ແລະ ຂໍ້ຫ້າມໃນສັງຄົມລາວ

### 10.4.1 ມາລະຍາດ ແລະ ການປະພຶດຂອງຄົນລາວ

ຄຳວ່າມາລະຍາດໝາຍເຖິງ ການສະແດງອອກທາງດ້ານບຸກຄະລິກລັກສະນະຂອງຄົນທາງດ້ານການປະພຶດທາງຮ່າງກາຍ ເປັນຕົ້ນແມ່ນການພົວພັນຂອງຄົນໃນສັງຄົມ ຊຶ່ງກ່ຽວຂ້ອງກັບຄ່ານິຍົມຂອງສັງຄົມ ວ່ານິຍົມມາລະຍາດຂອງຄົນແນວໃດເຊັ່ນ: ເວລາພົບກັນສັງຄົມລາວນິຍົມການຍໍມືນົບວ່າເປັນຄົນທີ່ມີມາລະຍາດດີ. ແຕ່ສັງຄົມຊາວຢູຣົບ ເມື່ອເພື່ອນຊະນິດ ຫລື ຍາດພີ່ນ້ອງພົບກັນກໍກອດຫອມກັນ ດັ່ງນີ້ເປັນຕົ້ນ.

ຄຳວ່າການປະພຶດ ໝາຍເຖິງການກະທຳ ຫລື ການປະຕິບັດຕົວຈິງ ທີ່ສະແດງອອກທາງດ້ານຮ່າງກາຍຂອງຄົນໃນການພົວພັນກັບວັດຖຸສິ່ງຂອງ ຫລື ສິ່ງທີ່ມີຊີວິດອື່ນໆ ໂດຍສະເພາະແມ່ນຄົນດ້ວຍກັນ ຫລື ສັດ. ມັນຈຶ່ງໄປກ່ຽວຂ້ອງ ກັບມາລະຍາດຂອງຄົນ ເພາະວ່າ ຄົນເຮົາສະແດງມາລະຍາດຂອງຕົນອອກມາສູ່ພາຍນອກໂດຍຜ່ານການປະພຶດຕົວຈິງ. ມາລະຍາດ ແລະ ການປະພຶດຂອງຄົນລາວຈຶ່ງກ່ຽວຂ້ອງກັບຄຸນສົມບັດຂອງຄົນລາວທີ່ມີຄ່ານິຍົມຄື:

**ນິໄສອ່ອນໂຍນ, ມີຄວາມຄ່ຽມຄົມ:**

ຄົນລາວມີຄ່ານິຍົມຄົນທີ່ມີນິໄສອ່ອນໂຍນ ຊຶ່ງສະແດງອອກດ້ວຍການເວົ້າຈາສຸພາບ ຊຶ່ງໝາຍເຖິງການໃຊ້ຄຳເວົ້າທີ່ບໍ່ສຽດສີ, ບໍ່ດູຖູກຢຽດຢາມຄົນອື່ນ, ໃຫ້ກຽດຄົນອື່ນສະເໝີ. ນອກຈາກນັ້ນ, ການສະແດງອອກທາງດ້ານການເຄື່ອນໄຫວຂອງຮ່າງກາຍ ກໍມີການວາງຕົວເໝາະສົມໃນສະຖານທີ່ຕ່າງໆ. ການໄປ-ມາ ແມ່ນມີຄວາມຄ່ຽມຄົມໃນຕົວ ຄືກາຍໜ້າຜູ້ໃຫຍ່ຕ້ອງກົ້ມຫົວ, ຕ້ອງຍໍມືໄຫວ້ເວລາພົບຜູ້ໃຫຍ່ ຫລື ຜູ້ອາວຸໂສ. ໃບໜ້າກໍຄວນຍິ້ມແຍ້ມແຈ່ມໃສຢູ່ສະເໝີ.

**ຮູ້ຈັກເຄົາລົບເຊື່ອຟັງຜູ້ໃຫຍ່ ແລະ ຜູ້ອາວຸໂສ:**

ຄົນລາວຖືວ່າຜູ້ໃຫຍ່ ຫລື ຜູ້ອາວຸໂສເປັນຜູ້ທີ່ເກີດກ່ອນ ແລະ ເຫັນຟ້າເຫັນດິນກ່ອນ, ດັ່ງນັ້ນຍ່ອມມີບົດຮຽນ ແລະ ປະສົບການໃນຊີວິດມາຫລາຍພຽງພໍທີ່ຈະເປັນຜູ້ແນະນຳຕັກເຕືອນລູກຫລານ ຫລື ຜູ້ທີ່ມີອາຍຸໜ້ອຍກວ່າໃຫ້ເປັນຄົນຮູ້ຜູ້ດີ, ມີລະບຽບແບບແຜນໃນການດຳເນີນຊີວິດ. ຄົນລາວກ່າວຂວັນ ແລະ ປະນາມຜູ້ທີ່ບໍ່ຢູ່ໃນໂອວາດຂອງຜູ້ໃຫຍ່. ດ້ວຍເຫດນີ້, ວິຖີຊີວິດຂອງລູກເຕົ້າຈຶ່ງມັກເປັນໄປຕາມຄວາມເຫັນດີ ແລະ ຄວາມປະສົງຂອງພໍ່ແມ່ ຫລື ຜູ້ອາວຸໂສເຊັ່ນ: ການເລືອກອາຊີບ, ການເລືອກຄູ່ຄອງ, ການເລືອກທີ່ຢູ່ອາໄສ.

**ນັບຖືແຂກຮັກແພງເພື່ອນມິດ, ມີຈິດໃຈເອື້ອເຟື້ອເພື່ອແຜ່:**

ແມ່ນມາລະຍາດຂອງຄົນລາວທີ່ເປັນຄົນມີໃຈກວ້າງຂວາງ, ມີຄວາມເປັນມິດກັບທຸກຄົນ, ເປັນກັນເອງ ແລະ ຮັບແຂກດ້ວຍນ້ຳໃສໃຈຈິງມາແຕ່ບູຮານນະການ ທັງບໍ່ເຄີຍເອົາປຽບແຂກທີ່ມາຢ້ຽມຢາມ. ກົງກັນຂ້າມ ມີແຕ່ເອົາໃຈໃສ່ຊ່ວຍເຫລືອຢ່າງຈິງໃຈ ເພາະວ່າຄົນລາວມີຈິດໃຈເອື້ອເຟື້ອເພື່ອແຜ່ ຊ່ວຍເຫລືອໃນຄາວຈຳເປັນ ແລະ ກ່າວປະນາມກ່າວຂວັນຜູ້ເອົາປຽບຜູ້ອື່ນຢູ່ສະເໝີ.

**ມີຄວາມກະຕັນຍູຕໍ່ຜູ້ມີພະຄຸນ:**

ຄົນລາວມີວັດທະນະທຳວ່າພໍ່ແມ່ ແລະ ຜູ້ທີ່ລ້ຽງດູຊ່ວຍເຫລືອຕົນເປັນຜູ້ມີພະຄຸນຢ່າງສູງສົ່ງ. ດັ່ງນັ້ນຈຶ່ງຕ້ອງຕອບບຸນແທນຄຸນພໍ່, ແມ່ດ້ວຍການລ້ຽງດູເບິ່ງແຍງພວກເພິ່ນໃນຍາມເຖົ້າແກ່ຊະລາການ. ດ້ວຍເຫດນີ້, ໃນສັງຄົມລາວຈຶ່ງບໍ່ມີບັນຫາກ່ຽວກັບຜູ້ສູງອາຍຸຂາດຜູ້ລ້ຽງດູຍ້ອນລູກຫລານບໍ່ລ້ຽງດູເບິ່ງແຍງ.

**ມັກຄວາມສະຫງົບ ແລະ ບໍ່ບຽດບຽນຄົນອື່ນ:**

ຄົນລາວນິຍົມຄວາມມີມາລະຍາດຢູ່ແບບສະຫງົບ ແລະ ມີຄວາມຊັກຊ້າເພາະວ່າບໍ່ຕ້ອງຮີບຮ້ອນແຂ່ງຂັນກັນ, ເບິ່ງແລ້ວຄ້າຍຄືວ່າມີຄວາມກະຕືລືລົ້ນໜ້ອຍໃນສິ່ງຕ່າງໆ ຊຶ່ງສະແດງອອກຄືບໍ່ທະເຍີທະຍານທີ່ຈະເອົາແບບຢ່າງຂອງຜູ້ອື່ນທີ່ປະສົບຜົນສຳເລັດໃນຊີວິດມາກ່ອນ ໂດຍຖືວ່າທຸກຄົນກໍມີຄວາມສຸກໄດ້ຖ້າພໍໃຈໃນສິ່ງທີ່ຕົນມີຢູ່, ຄົນເຮົາບໍ່ຄວນໄຝ່ສູງຫລາຍ. ລັກສະນະດັ່ງກ່າວພາໃຫ້ຄົນລາວບໍ່ມີຄວາມອິດສາລິດສະຫຍາ ແລະ ບໍ່ບຽດບຽນຜູ້ອື່ນ. ຄວາມໃຈຮ້ອນທີ່ສະແດງອອກດ້ວຍມາລະຍາດແບບຈູ້ຈີ້ຈຸກຈິກກໍບໍ່ສູ້ມີ ເພາະວ່າສ່ວນຫລວງຫລາຍຄົນລາວ ເປັນຄົນໃຈເຢັນວາງເສີຍຊຶ່ງແມ່ນຄ່ານິຍົມຂອງຄົນລາວເຮົາເອງ. ແຕ່ຄົນລາວກໍບໍ່ຍອມໃຫ້ຜູ້ອື່ນດູຖູກຢຽດຢາມ.

ນອກຈາກມາລະຍາດທີ່ເປັນຄ່ານິຍົມແລ້ວ, ຄົນລາວຍັງມີຄ່ານິຍົມດ້ານຄຸນສົມບັດອີກເຊັ່ນ: ຄວາມດຸໝັ່ນ, ຄວາມຊື່ສັດ-ຈິງໃຈ, ຮູ້ຈັກຖ່ອມຕົວ-ບໍ່ອວດອົ່ງທະນົງຕົວ-ບໍ່ຖະແຫລງແປງລີ້ນ-ບໍ່ຕົວະຕົ້ມຫລອກລວງ, ຮູ້ຕອບແທນແຮງງານ ຫລື ຕອບບຸນແທນຄຸນ, ບໍ່ກ່າວຂວັນນິນທາຄົນອື່ນ-ບໍ່ຫາເລື່ອງໃສ່ຄວາມດັ່ງນີ້ເປັນຕົ້ນ.

## 11.1 ຄວາມເປັນມາຂອງອາຊຽນ

### 11.1.1 ທີ່ມາ

ຄຳວ່າ ອາຊຽນ ມາຈາກຕົວຫຍໍ້ໃນພາສາອັງກິດ 5 ຕົວຄື "ASEAN" ໂດຍມີຄຳເຕັມ "Association of South East Asian Nations" ພາສາລາວເອີ້ນວ່າ ສະມາຄົມປະຊາຊາດແຫ່ງເອເຊຍຕາເວັນອອກສຽງໃຕ້" ຊຶ່ງເປັນອົງການລະຫວ່າງປະເທດໃນລະດັບພາກພື້ນທີ່ປະກອບມີສະມາຊິກທັງໝົດ 10 ປະເທດ. ຈຸດກຳເນີດຂອງອາຊຽນເລີ່ມຕົ້ນມາຈາກສະມາຄົມອາສາ ຊຶ່ງກໍ່ຕັ້ງຂຶ້ນໃນເດືອນ ກໍລະກົດ ຄສ 1961 ອັນປະກອບມີ ລາຊະອານາຈັກໄທ, ຟີລິບປິນ ແລະ ມາເລເຊຍ. ສະມາຄົມດັ່ງກ່າວນັ້ນສ້າງຕັ້ງຂຶ້ນ ໂດຍມີຈຸດປະສົງເປົ້າໝາຍເພື່ອຮ່ວມມືກັນທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ. ແຕ່ການຮ່ວມມືກັນດຳເນີນໄປໄດ້ພຽງແຕ່ສອງປີ ກໍຕ້ອງຢຸດສະຫງັກລົງ ອັນເນື່ອງມາຈາກຄວາມຜູກພັນທາງການເມືອງລະຫວ່າງປະເທດ ເກີດມີຄວາມຂັດແຍ່ງ ໂດຍສະເພາະຄວາມສຳພັນລະຫວ່າງປະເທດອິນໂດເນເຊຍ ກັບ ປະເທດມາເລເຊຍ.

ການສະແຫວງຫາຫົນທາງເພື່ອຄວາມຮ່ວມມືກັນຂອງປະຊາຊາດອາຊຽນ ກັບມາຟື້ນຕົວຄືນອີກຄັ້ງ ພາຍຫລັງທີ່ຜູ້ນຳຂອງບັນດາປະເທດອາຊຽນທັງຫ້າ ຊຶ່ງໄດ້ແກ່: ທ່ານ ອາດຳ ມາລິກ ແຫ່ງອິນໂດເນເຊຍ, ທ່ານ ນາຊີໂຊ ຣາມອດ ແຫ່ງ ຟີລິບປິນ, ທ່ານ ອັບດຸນ ຣາຊັດ ແຫ່ງມາເລເຊຍ, ທ່ານ ເອັດສ໌ ຣາຊາຣັດ ຕະນຳ ແຫ່ງສິງຄະໂປ ແລະ ທ່ານ ຖະນັດ ຄໍມັນ ແຫ່ງລາຊະອານາຈັກໄທ ໄດ້ມາພົບປະກັນທີ່ ບາງກອກ ປະເທດໄທ ເພື່ອຮ່ວມກັນລົງນາມໃນຮ່າງມະຕິສົນທິສັນຍາບາງກອກ ຊຶ່ງເອີ້ນວ່າ "ກົດບັດສະມາຄົມປະຊາຊາດແຫ່ງເອເຊຍຕາເວັນອອກສຽງໃຕ້ Declaration of ASEAN Concord" ແລະ ຕົກລົງຮ່ວມກັນສ້າງຕັ້ງ "ສະມາຄົມປະຊາຊາດແຫ່ງເອເຊຍຕາເວັນອອກສຽງໃຕ້" ຢ່າງເປັນທາງການຂຶ້ນໃນວັນທີ 8 ສິງຫາ ຄສ 1967.

ຫລັງຈາກປະຊາຄົມອາຊຽນໄດ້ຮັບການສ້າງຕັ້ງຂຶ້ນແລ້ວ ອາຊຽນກໍໄດ້ເປີດຮັບເອົາບັນດາປະເທດຕ່າງໆ ໃນພາກພື້ນເອເຊຍຕາເວັນອອກສຽງໃຕ້ດ້ວຍກັນເຂົ້າເປັນສະມາຊິກໃໝ່ຢ່າງເປັນທາງການເພີ່ມຂຶ້ນເປັນລະຍະຕາມລຳດັບເຊັ່ນ:

- ວັນທີ 8 ມັງກອນ 1984 ໄດ້ເປີດຮັບເອົາ ບຣູນາຍ ດາຣູຊາລາມ ເຂົ້າເປັນສະມາຊິກ
- ໃນວັນທີ 28 ກໍລະກົດ 1995 ໄດ້ເປີດຮັບເອົາ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເຂົ້າເປັນສະມາຊິກ.
- ໃນວັນທີ 23 ກໍລະກົດ 1997 ໄດ້ເປີດຮັບເອົາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຂົ້າເປັນສະມາຊິກ
- ໃນວັນທີ 23 ກໍລະກົດ 1997 ໄດ້ເປີດຮັບເອົາ ສະຫະພາບມຽນມ້າ ເຂົ້າເປັນສະມາຊິກ
- ໃນວັນທີ 30 ກໍລະກົດ 1999 ໄດ້ເປີດຮັບເອົາ ຣາຊະອານາຈັກກຳປູເຈຍເຂົ້າເປັນສະມາຊິກ

ດ້ວຍເຫດນັ້ນ, ນັບແຕ່ມື້ສ້າງຕັ້ງມາຮອດປັດຈຸບັນ ປີ ຄສ 2015 ອາຊຽນປະກອບມີສະມາຊິກທັງໝົດ 10 ປະເທດ ໄດ້ແກ່:

1) ສາທາລະນະລັດ ອິນໂດເນເຊຍ (Republic of Indonesia)

1) ສາທາລະນະລັດ ຟີລິບປິນ (Republic of the Philippines)

2) ສາທາລະນະລັດ ສິງຄະໂປ (The Republic of Singapore)

3) ສາທາລະນະລັດສັງຄົມນິຍົມວຽດນາມ (The Socialist Republic of Vietnam)

4) ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (The Lao People's Democratic Republic)

### 10.4.2 ຂໍ້ຫ້າມໃນສັງຄົມລາວ

ຊາດລາວເປັນຊາດທີ່ປະກອບດ້ວຍຫລາຍເຜົ່າທີ່ມີພາສາເວົ້າ, ວັດທະນະທຳ, ວາດດຳລົງຊີວິດ.... ແຕກຕ່າງກັນໄປ. ແຕ່ບັນດາເຜົ່າເຫລົ່ານັ້ນ ກໍມີຄວາມສາມັກຄີເປັນເອກະພາບ ແລະ ເຕົ້າໂຮມກັນເປັນຊາດໜຶ່ງມາແຕ່ດົນນານມາແລ້ວ. ການທີ່ຊາວລາວບັນດາເຜົ່າສາມາດຢູ່ຮ່ວມກັນເປັນຊາດໜຶ່ງ ຫລື ສັງຄົມໜຶ່ງຢ່າງເປັນລະບຽບຮຽບຮ້ອຍນີ້ ກໍເພາະວ່າຊາວລາວມີລະບຽບ, ແບບແຜນ ແລະ ຂໍ້ບັງຄັບຕ່າງໆ ເພື່ອຄຸ້ມຄອງສັງຄົມນັ້ນເອງ. ສິ່ງເຫລົ່ານີ້ເອີ້ນວ່າ ກົດລະບຽບຂອງສັງຄົມໃນການຢູ່ຮ່ວມກັນ ຫລື ເພິ່ນເອີ້ນຄຳໜຶ່ງວ່າ ບັນທັດຖານ ຊຶ່ງໝາຍເຖິງຂໍ້ຫ້າມ ຫລື ຂໍ້ບັງຄັບພື້ນຖານຂອງສັງຄົມໃນການຢູ່ຮ່ວມກັນ. ຂໍ້ຫ້າມດັ່ງກ່າວປະກອບດ້ວຍວິຖີປະຊາ, ຈາຮີດ ຫລື ກົດສິນທຳ, ກົດໝາຍ ແລະ ອື່ນໆ ຄືດັ່ງນີ້:

#### 10.4.2.1 ວິຖີປະຊາ

ຄຳວ່າ "ວິຖີປະຊາ" ແມ່ນມາຈາກ 2 ຄຳສັບຄື ວິຖີ ໝາຍເຖິງແບບແຜນການປະພຶດປະຕິບັດ. ປະຊາ ໝາຍເຖິງ ປະຊາຊົນ ຫລື ພົນລະເມືອງ ຫລື ສັງຄົມມະນຸດ ຊຶ່ງແມ່ນຜູ້ຄົນຢູ່ຮ່ວມກັນເປັນກຸ່ມເປັນພວກ. ເມື່ອເອົາ2ຄຳສັບມາໂຮມກັນຈຶ່ງສາມາດໃຫ້ຄວາມໝາຍວ່າ: ແບບແຜນການປະພຶດປະຕິບັດຂອງຄົນໃນສັງຄົມໃຫ້ສາມາດຢູ່ຮ່ວມກັນໄດ້ ຫລື ແບບແຜນການຄຸ້ມຄອງຄົນໃນສັງຄົມ. ດັ່ງນັ້ນ, ວິຖີປະຊາຈຶ່ງແມ່ນ ແບບແຜນການປະພຶດທີ່ຊາວລາວທັງປວງເຫັນພ້ອມນຳກັນວ່າ ເປັນອັນ "ຄວນ" ຫລື "ບໍ່ຄວນ" ປະພຶດ ຫລື ປະຕິບັດຕົນຢູ່ໃນສັງຄົມໂດຍພາກັນຍອມຮັບປະຕິບັດຕາມ ຈົນເປັນປະເພນີ ແລະ ເປັນຄວາມເຄີຍຊິນ ຊຶ່ງມັນໝາຍເຖິງຄຸນສົມບັດ ຫລື ມາລະຍາດໃນການສະແດງອອກຂອງຄົນຜູ້ໜຶ່ງຢູ່ໃນສັງຄົມທີ່ບໍ່ຄວນເຮັດ ຕ່າງໝູ່ຕ່າງພວກ, ໝູ່ເຮັດແນວໜຶ່ງ ຕົນເອງພັດເຮັດແນວອື່ນເຊັ່ນ: ການແຕ່ງກາຍໃຫ້ເໝາະສົມກັບກາລະເທສະ ຄື: ໃນງານພິທີຕັກບາດຢູ່ວັດແມ່ຍິງລາວຕ້ອງນຸ່ງສິ້ນ, ບ່ຽງແພ, ໄວ້ຊົງຜົມໃຫ້ຮຽບຮ້ອຍຈົບງາມ ແຕ່ມີຍິງສາວຜູ້ໜຶ່ງ ພັດນຸ່ງຕ່າງໝູ່ຄື: ນຸ່ງໂສ້ງຂາສັ້ນ, ປ່ອຍຜົມແຕ່ງຕົວແບບນີ້ກໍບໍ່ຄວນຈະໄປຕັກບາດນຳໝູ່ ເຮັດໃຫ້ຄົນທັງຫລາຍເວົ້າວ່າຍິງສາວຜູ້ນັ້ນເປັນບ້າ. ນອກຈາກນັ້ນ, ການປະພຶດປະຕິບັດຕົນໃນດ້ານອື່ນໆ ກໍຕ້ອງໃຫ້ເໝາະສົມ, ບໍ່ຄວນເຮັດໂລດໂຜນເກີນໄປ ຊຶ່ງເວົ້າລວມແລ້ວກໍແມ່ນການຮັກສາຄຸນສົມບັດກໍຄືມາລະຍາດຜູ້ດີ ໃນການຢູ່ຮ່ວມສັງຄົມນັ້ນເອງ. ຜູ້ຝ່າຝືນຕໍ່ແບບແຜນພຶດຕິກຳເຫລົ່ານີ້ ເຖິງວ່າບໍ່ຖືກລົງໂທດຢ່າງເປັນທາງການ ແຕ່ກໍຖືກຕິສິນນິນທາກ່າວຂວັນຕ່າງໆ ຫລື ຖືກກີດກັນບໍ່ໃຫ້ເຂົ້າຮ່ວມກຸ່ມນຳ ແລະ ອື່ນໆອີກ. ວິຖີປະຊາມີບົດບາດ ແລະ ມີຄວາມສຳຄັນຫລາຍຕໍ່ວາດດຳລົງຊີວິດຂອງຊາວລາວ.

#### 10.4.2.2 ຈາຮີດ

ຄຳວ່າຈາຮີດໝາຍເຖິງຮີດຄອງປະເພນີ ຫລື ຂະນົບທຳນຽມຕ່າງໆທີ່ເຄີຍປະຕິບັດກັນມາ, ເປັນກົດສິນທຳທີ່ກຳນົດວ່າອັນໃດຖືກອັນໃດຜິດ ໂດຍບໍ່ໄດ້ອະທິບາຍເຫດຜົນ. ຊາວລາວຖືວ່າຈາຮີດເປັນກົດສິນທຳທີ່ມີຄວາມສຳຄັນທີ່ສຸດຕໍ່ສະຫວັດດີພາບ ແລະ ຄວາມປອດໄພຂອງຕົນ ແລະ ຖ້າຜູ້ໃດຜ່າຝືນ ກໍຈະຖືກສັງຄົມລົງໂທດຢ່າງຮຸນແຮງ. ໃນສັງຄົມລາວ, ຈາຮີດຫລາຍຢ່າງກໍກ່ຽວຂ້ອງກັບຂໍ້ຫ້າມເຊັ່ນ:

- ຫ້າມທຳຮ້າຍ ຫລື ຂ້າຜູ້ອື່ນ
- ຫ້າມປະພຶດຜິດທາງເພດ
- ຫ້າມລັກໂລບເອົາຂອງຜູ້ອື່ນ
- ຫ້າມສົມລົດກັບບິດາ-ມານດາ ຫລື ພີ່ນ້ອງຮ່ວມອຸທອນດຽວກັນ
- ຫ້າມນອກໃຈສາມີ-ພັນລະຍາ
- ຫ້າມກິນຊີ້ນຄົນ ແລະ ອື່ນໆ.

ນອກຈາກນັ້ນ, ຈາຮີດຫລາຍຢ່າງກໍກ່ຽວຂ້ອງກັບຂໍ້ບັງຄັບໃຫ້ປະຕິບັດຄື: ຕ້ອງເຄົາລົບນັບຖື ແລະ ມີຄວາມກະຕັນຍູຮູ້ບຸນຄຸນພໍ່ແມ່, ຕ້ອງນັບຖືຜູ້ໃຫຍ່ ແລະ ຜູ້ອາວຸໂສ, ຕ້ອງຊ່ວຍເຫລືອຜູ້ອື່ນ, ຕ້ອງມີຄວາມຊື່ສັດຕໍ່ກັນລະຫວ່າງສາມີ-ພັນລະຍາ ແລະ ອື່ນໆອີກ.

#### 10.4.2.3 ກົດໝາຍ

ແມ່ນຂໍ້ລະບຽບຂອງການຄຸ້ມຄອງລັດ - ຄຸ້ມຄອງສັງຄົມລາວ ໂດຍມີການບັນທຶກໄວ້ເປັນລາຍລັກອັກສອນ ແລະ ມີການກຳນົດເຖິງຂໍ້ຫ້າມບໍ່ໃຫ້ກະທຳ, ຂໍ້ບັງຄັບໃຫ້ປະຕິບັດຕາມ ແລະ ບົດລົງໂທດ ຕາມຄວາມຜິດທີ່ບຸກຄົນໃດໜຶ່ງກະທຳໄວ້ຢ່າງບໍ່ມີຂໍ້ຍົກເວັ້ນໃດໆ ກັບຜູ້ໃດຜູ້ໜຶ່ງເລີຍ ທັງມີລັກສະນະຊັດເຈນດີກວ່າບັນທັດຖານປະເພດອື່ນໆອີກ. ຢູ່ປະເທດລາວ, ເຖິງວ່າກົດໝາຍມີຂຶ້ນລຸນຫລັງວິຖີປະຊາ ແລະ ຈາຮີດ ແຕ່ກໍເຫັນວ່າມັນມີຄວາມສຳຄັນເປັນພິເສດທີ່ຂາດບໍ່ໄດ້ໃນການຄຸ້ມຄອງສັງຄົມທັງໃນປັດຈຸບັນ ແລະ ອະນາຄົດ.

ນອກຈາກວິຖີປະຊາ, ຈາຮີດ ແລະ ກົດໝາຍທີ່ກ່າວມາແລ້ວ, ໃນການຈັດລະບຽບສັງຄົມລາວຍັງມີບັນທັດຖານປະເພດອື່ນໆເຊັ່ນ: ພິທີກຳ, ພິທີການ, ຄ່ານິຍົມ. ໃນການຈູງໃຈ ຫລື ບັງຄັບໃຫ້ທຸກຄົນປະຕິບັດຕາມລະບຽບການທາງສັງຄົມທີ່ໄດ້ກ່າວມານັ້ນເພິ່ນໃຊ້ 2 ວິທີການຄື:ການໃຫ້ລາງວັນ ແລະ ການລົງໂທດ ຊຶ່ງແຕ່ລະຢ່າງປະກອບດ້ວຍພາກປະຕິບັດຕົວຈິງດັ່ງນີ້:

- ການໃຫ້ລາງວັນມີ ຄື: ການຍົກຍ້ອງ, ການໃຫ້ອຳນາດ, ການໃຫ້ຊັບສິນ.
- ການລົງໂທດມີ ຄື: ການບໍ່ຍອມຮັບເປັນພັກພວກ, ການປັບໃໝ, ການເນລະເທດ, ການຈຳຄຸກ, ການປະຫານຊີວິດ.

**ຄຳຖາມ:**

1. ຄວາມໝາຍ ແລະ ຄວາມເປັນມາຂອງວັດທະນະທຳລາວແມ່ນແນວໃດ ? ຈົ່ງອະທິບາຍ
2. ອົງປະກອບຂອງວັດທະນະທຳລາວມີຫຍັງແດ່ ? ແຕ່ລະອົງປະກອບສະແດງໃຫ້ຮູ້ເຖິງວັດທະນະທຳລາວຄືແນວໃດ?
3. ຈົ່ງເລົ່າເຖິງປະເພນີ ແລະ ວັດທະນະທຳການແຕ່ງດອງຂອງຊົນເຜົ່າລາວ?
4. ຈົ່ງເລົ່າເຖິງປະເພນີ ແລະ ວັດທະນະທຳໃນການເຮັດບຸນ"ກະເຣີ" ຫລື "ບຸນກູ້ເຜືອກກູ້ມັນ" ຫລື "ບຸນປີໃໝ່" ຂອງຊົນເຜົ່າກຶມມຸ ?
5. ຈົ່ງເລົ່າເຖິງປະເພນີ ແລະ ວັດທະນະທຳການເຮັດບຸນກິນຈຽງຂອງຊົນເຜົ່າມົ້ງ ?
6. ຈົ່ງເລົ່າເຖິງປະເພນີ ແລະ ວັດທະນະທຳການແຕ່ງດອງຂອງຊົນເຜົ່າອາຄາ ?
7. ມາລະຍາດໝາຍເຖິງຫຍັງ ? ຈົ່ງອະທິບາຍ
8. ຄົນລາວມີຄ່ານິຍົມຄຸນສົມບັດທີ່ສະແດງອອກຄືແນວໃດແດ່ ? ຈົ່ງອະທິບາຍ
9. ຂໍ້ຫ້າມໃນສັງຄົມລາວມີຫຍັງແດ່ ? ຈົ່ງອະທິບາຍ

ບົດທີ

# 11

## ຄວາມຮູ້ກ່ຽວກັບອາຊຽນ

5) ສະຫະພາບພະມ້າ (Union of Myanmar)

6) ລາຊະອານາຈັກຈັກໄທ (Kingdom of Thailand)

7) ລາຊະອານາຈັກ ກຳປູເຈຍ (Kingdom of Cambodia)

8) ປະເທດມາເລເຊຍ (Malaysia)

9) ບຣູນາຍ ດາຣຸດຊາແລັມ (Brunei Darussalam)

ແຜນທີ່ 10: ສະແດງພື້ນທີ່ຂອງປະເທດສະມາຊິກອາຊຽນ




ອາຊຽນມີພື້ນທີ່ກວມເອົາ 4,479,210.5 ກິໂລແມັດມົນທົນ ແລະ ມີປະຊາກອນ 601 ລ້ານຄົນ ໂດຍມີຄວາມໜາແໜ້ນສະເລ່ຍ 135 ຄົນຕໍ່ກິໂລແມັດມົນທົນ.

### 11.1.2 ສັນຍາລັກອາຊຽນ

ສັນຍາລັກອາຊຽນສະແດງເຖິງຄວາມສາມັກຄີ ແລະ ການສະໜັບສະໜູນຂອງປະເທດສະ ມາຊິກໃນການຮວມຕົວກັນເປັນປຶກແຜ່ນຂອງອາຊຽນຊຶ່ງປະກອບດ້ວຍ:

- ຮູບຮວງເຂົ້າສີເຫລືອງເທິງພື້ນສີແດງ ອ້ອມຮອບດ້ວຍວົງກົມສີຂາວ ແລະ ສີຟ້າ ຊຶ່ງຮວງເຂົ້າ 10 ຕົ້ນທີ່ມັດຮວມກັນໝາຍເຖິງປະເທດສະມາຊິກ 10 ປະເທດຮວມກັນເພື່ອມິດຕະພາບ ແລະ ຄວາມເປັນຈິດໜຶ່ງໃຈດຽວ.

- ວົງກົມສະແດງເຖິງຄວາມເປັນເອກະພາບ ມີຕົວອັກສອນຫຍໍ້ວ່າ "asean" ສີຟ້າຢູ່ລຸ່ມຮູບພາບຮວງເຂົ້າສະແດງເຖິງຄວາມມຸ່ງໝັ້ນທີ່ຈະເຮັດວຽກຮ່ວມກັນເພື່ອຄວາມໝັ້ນຄົງ, ສັນຕິພາບ, ເອກະພາບ ແລະ ຄວາມກ້າວໜ້າຂອງປະເທດສະມາຊິກອາຊຽນ.

- ສີເຫລືອງ,ແດງ,ຂາວ ແລະ ຟ້າ ສະແດງເຖິງສີຫລັກຂອງທຸງຊາດບັນດາປະເທດສະມາຊິກອາຊຽນໂດຍມີຄວາມໝາຍດັ່ງນີ້: ສີເຫລືອງ ໝາຍເຖິງຄວາມຈະເລີນຮຸ່ງເຮືອງ, ສີແດງໝາຍເຖິງ ຄວາມກ້າຫານ ແລະ ຄວາມກ້າວໜ້າ; ສີຂາວໝາຍເຖິງຄວາມບໍລິສຸດ ແລະ ສີຟ້າ ໝາຍເຖິງສັນຕິພາບ ແລະ ຄວາມໝັ້ນຄົງ.

ຮູບທີ 49 : ສັນຍາລັກອາຊຽນ

### 11.1.3 ຄຳຂວັນອາຊຽນ

ຄຳຂວັນປະຈຳອາຊຽນ ທີ່ບັນດາປະຊາຊາດໃນອາຊຽນ ໄດ້ຮ່ວມກັນຕົກລົງ ແລະ ສ້າງຂຶ້ນນັ້ນ ແມ່ນ 3Os ຊຶ່ງໄດ້ແກ່ " One Vision, One Identity, One Community" ທີ່ມີຄວາມໝາຍ ໃນພາສາລາວເຮົາວ່າ: ໜຶ່ງວິໄສທັດ ໜຶ່ງເອກະລັກ ແລະ ໜຶ່ງປະຊາຄົມ".

### 11.1.4 ວິໄສທັດອາຊຽນ

**ວິໄສທັດຂອງອາຊຽນໃນປີຄສ 2020**

- ວົງສະໝານສັນແຫ່ງເອເຊຍຕາເວັນອອກສຽງໃຕ້ (A Concert of Southeast Asian Nations)
- ຫຸ້ນສ່ວນເພື່ອການພັດທະນາຢ່າງມີພະລັງ (A Partnership in Dynamic Development)
- ຊຸມຊົນແຫ່ງສັງຄົມທີ່ເອື້ອອາລີ ແລະ ແບ່ງປັນ (ACommunity of caring and Sharing Societies)
- ເນັ້ນການສ້າງຄວາມສຳພັນຮ່ວມມືກັບພາຍນອກ (An Outward-Looking ASEAN)

### 11.1.5 ໜ່ວຍງານຂອງອາຊຽນ

ໜ່ວຍງານ (ASEAN Secretariat) ທີ່ເຮັດໜ້າທີ່ປະສານງານ ແລະ ຕິດຕາມຜົນການດຳເນີນ ງານໃນຂອບເຂດອາຊຽນປະກອບດ້ວຍ:

1) ສຳນັກເລຂາທິການອາຊຽນ

ສຳນັກເລຂາທິການອາຊຽນມີສຳນັກງານຕັ້ງຢູ່ທີ່ນະຄອນຈາກາຕາປະເທດອິນໂດເນເຊຍຊຶ່ງໜ່ວຍງານນີ້ມີໜ້າທີ່ໃນການເປັນສູນກາງຕິດຕໍ່ພົວພັນ ລະຫວ່າງ ປະເທດສະມາຊິກດ້ວຍກັນ ໂດຍມີເລຂາທິການອາຊຽນ (Secretary General of ASEAN) ເປັນຫົວໜ້າສຳນັກງານ ຊຶ່ງມີວາລະໃນການດຳລົງຕຳແໜ່ງ 5 ປີ.

2) ສຳນັກງານເລຂາທິການແຫ່ງຊາດ

ເປັນໜ່ວຍງານໃນລະດັບກົມສັງກັດກະຊວງການຕ່າງປະເທດຂອງແຕ່ລະປະເທດສະມາຊິກມີໜ້າທີ່ເປັນຜູ້ປະສານງານກິດຈະການອາຊຽນ ແລະ ຕິດຕາມຜົນການດຳເນີນງານໃນປະເທດນັ້ນໆ.

3) ກົມອາຊຽນກະຊວງການຕ່າງປະເທດແລະຄະນະກຳມະການຜູ້ແທນຖາວອນປະຈຳອາຊຽນ Commitee of Permanent Representatives CPR ຊຶ່ງປະກອບດ້ວຍເອກອັກຄະລາຊະທູດທີ່ໄດ້ຮັບການແຕ່ງຕັ້ງ ມາຈາກປະເທດສະມາຊິກ ມີພາລະກິດໃນການສະໜັບສະໜູນການເຮັດວຽກຂອງຄະນະມົນຕີປະຊາຄົມອາຊຽນ ແລະ ອົງການລະດັບລັດຖະມົນຕີອາຊຽນສະເພາະສາຂາ.

ເລຂາທິການໄດ້ຮັບການແຕ່ງຕັ້ງຂຶ້ນ ໂດຍການປະຊຸມສຸດຍອດອາຊຽນ ຊຶ່ງມີໄລຍະເວລາໃນການດຳລົງຕຳແໜ່ງ 5 ປີ ໂດຍຄັດເລືອກມາຈາກບຸກຄົນຜູ້ທີ່ມີສັນຊາດຂອງລັດສະມາຊິກອາຊຽນຕາມລຳດັບຕົວອັກສອນພະຍັນຊະນະພາສາອັງກິດ. ເລຂາທິການອາຊຽນຄົນປັດຈຸບັນມີຊື່ວ່າ "ເລ ເລືອງ ມິນ" ດຳລົງຕຳແໜ່ງລະຫວ່າງປີ 2013-2018.

## 11.2 ຈຸດປະສົງຂອງການສ້າງຕັ້ງອາຊຽນ[68]

ອາຊຽນສ້າງຕັ້ງຂຶ້ນໂດຍມີຈຸດປະສົງເພື່ອສ້າງສັນຕິພາບໃນພູມີພາກອາຊີຕາເວັນອອກສຽງໃຕ້ ອັນຈະນຳມາຊຶ່ງຄວາມໝັ້ນຄົງທາງດ້ານການເມືອງ, ຄວາມຈະເລີນກ້າວໜ້າທາງເສດຖະກິດ, ສັງຄົມ ແລະ ວັດທະນະທຳ. ຈາກສົນທິສັນຍາໄມຕີ ແລະ ຄວາມຮ່ວມມືໃນເອເຊຍຕາເວັນອອກສຽງໃຕ້ ໄດ້ສະຫລຸບແນວທາງຂອງການສ້າງຕັ້ງ ສະມາຄົມປະຊາຊາດແຫ່ງເອເຊຍຕາເວັນອອກສຽງໃຕ້ ໄວ້ເປັນຂໍ້ໆ ດັ່ງນີ້:

- ເພື່ອສົ່ງເສີມຄວາມຮ່ວມມື ແລະ ຄວາມຊ່ວຍເຫລືອຊຶ່ງກັນ ແລະ ກັນໃນທາງເສດຖະກິດ, ສັງຄົມ,ວັດທະນະທຳ, ເທັກໂນໂລຍີ, ວິທະຍາສາດ ແລະ ການບໍລິຫານ.
- ເພື່ອສົ່ງເສີມສັນຕິພາບ ແລະ ຄວາມໝັ້ນຄົງໃນພາກພື້ນ
- ເພື່ອເສີມສ້າງຄວາມຈະເລີນຮຸ່ງເຮືອງທາງເສດຖະກິດ ແລະ ພັດທະນາການທາງວັດທະ ນະທຳໃນພາກພື້ນ.
- ເພື່ອເສີມສ້າງໃຫ້ປະຊາຊົນໃນອາຊຽນມີຄວາມເປັນຢູ່ ແລະ ຄຸນນະພາບຊີວິດທີ່ດີ
- ເພື່ອໃຫ້ຄວາມຊ່ວຍເຫລືອຊຶ່ງກັນ ແລະ ກັນໃນຮູບແບບການຝຶກອົບຮົມ,ການຄົ້ນຄວ້າວິໄຈ ແລະ ການການສົ່ງເສີມການສຶກສາດ້ານເອເຊຍຕາເວັນອອກສຽງໃຕ້.
- ເພື່ອເພີ່ມປະສິດທິພາບ ຂອງການກະສິກຳ ແລະ ອຸດສາຫະກຳ. ການຂະຫຍາຍການຄ້າຕະຫລອດຮອດການປັບປຸງລະບົບການຄົມມະນາຄົມ ແລະ ການຂົນສົ່ງ.
- ເພື່ອສົ່ງເສີມຄວາມຮ່ວມມືອາຊຽນກັບປະເທດພາຍນອກ, ອົງການຄວາມຮ່ວມມືແຫ່ງພາກພື້ນອື່ນໆ ແລະ ອົງການລະຫວ່າງປະເທດ.

ຕໍ່ມາເມື່ອກິດຈະການ ການຄ້າ ລະຫວ່າງ ປະເທດໃນໂລກມີທ່າອ່ຽງກີດກັນການຄ້າຮຸນແຮງຂຶ້ນ ເຮັດໃຫ້ອາຊຽນໄດ້ຫັນມາເນັ້ນການຮ່ວມມືດ້ານເສດຖະກິດການຄ້າ ລະຫວ່າງກັນຫລາຍຂຶ້ນ. ຈຸດປະສົງຫລັກທີ່ກຳນົດໄວ້ໃນຄຳສັນຍາອາຊຽນ (The ASEAN Declaration) ປະກອບມີ 7 ປະການ ຄື:

1) ສົ່ງເສີມຄວາມຈະເລີນເຕີບໂຕທາງເສດຖະກິດ,ຄວາມກ້າວໜ້າທາງສັງຄົມ ແລະ ວັດທະນະທຳ
2) ສົ່ງເສີມການມີສະຖຽນນະພາບ, ສັນຕິພາບ ແລະ ຄວາມໝັ້ນຄົງຂອງພູມີພາກ
3) ສົ່ງເສີມຄວາມຮ່ວມມືທາງເສດຖະກິດ, ສັງຄົມ, ວັດທະນະທຳ,ວິຊາການ,ວິທະຍາສາດ ແລະ ດ້ານການບໍລິການ.
4) ສົ່ງເສີມຄວາມຮ່ວມມືຊຶ່ງກັນ ແລະ ກັນໃນການຝຶກອົບຮົມ ແລະ ການວິໄຈ
5) ສົ່ງເສີມຄວາມຮ່ວມມືໃນດ້ານການກະສິກຳ ແລະ ອຸດສາຫະກຳ, ການຄ້າ, ການຄົມມະນາຄົມ, ການສື່ສານ ແລະ ການປັບປຸງມາດຖານການດຳລົງຊີວິດ.
6) ສົ່ງເສີມການມີຫລັກສູດການສຶກສາເອເຊຍຕາເວັນອອກສຽງໃຕ້
7) ສົ່ງເສີມຄວາມຮ່ວມມືກັບອົງກອນລະດັບຂົງເຂດ ແລະ ອົງກອນລະຫວ່າງປະເທດ.

[68] ທີ່ມາ :http: // ປະຊາຊາດອາຊຽນ net

ນະໂຍບາຍການດຳເນີນງານຂອງອາຊຽນ ເປັນຜົນມາຈາກການປະຊຸມປຶກສາຫາລືກັນຂອງຜູ້ນຳຂອງປະເທດຕ່າງໆ ຕັ້ງແຕ່ໃນລະດັບຫົວໜ້າລັດຖະບານລົງມາຫາລັດຖະມົນຕີ ແລະ ເຈົ້າໜ້າທີ່ອາວຸໂສຂອງອາຊຽນ. ແນວທາງນະໂຍບາຍ ຂອງອາຊຽນຖືກກຳນົດມາຈາກຜູ້ນຳລະດັບສູງ ຂອງປະເທດສະມາຊິກອາຊຽນໃນລັກສະນະເປັນແບບພາບລວມ ເພື່ອເປີດໂອກາດໃຫ້ປະເທດສະມາຊິກນຳໄປກຳນົດເປັນແຜນງານເພື່ອປະຕິບັດໃນຮູບແບບຕ່າງໆ ເຊັ່ນ:

- ແຜນປະຕິບັດການ Action Plan
- ຖະແຫລງການຮ່ວມ Joint Declaration
- ຂໍ້ຕົກລົງ Agreement
- ອະນຸສັນຍາ Convention

ສ່ວນການປະຊຸມໃນລະດັບລັດຖະມົນຕີ ແລະ ເຈົ້າໜ້າທີ່ອາວຸໂສຈະເປັນການປະຊຸມເພື່ອພິຈາລະນາທັງນະໂຍບາຍໃນພາບລວມ ແລະ ນະໂຍບາຍສະເພາະດ້ານ ເຊັ່ນ:

**ກ. ດ້ານການເມືອງ ແລະຄວາມໝັ້ນຄົງ:**

ອາຊຽນ ໄດ້ຈັດທຳຫລັກການກຳນົດໃຫ້ອາຊີຕາເວັນອອກສຽງໃຕ້ ເປັນເຂດສັນຕິພາບເສລີພາບ ແລະ ຄວາມເປັນກາງ (Zone of Peace, Freedom and Neutrality-TAC) ໃນປີ 1966 ແລະ ເຮັດສົນທິສັນຍາເຂດປອດອາວຸດນິວຄະເຣຍໃນຂົງເຂດນີ້ (Treaty on the Southeast Asian Nuclear Weapon-Free Zone-SEANWFZ) ໃນປີ 1985. ພ້ອມນັ້ນຍັງໄດ້ລິເລີ້ມການປະຊຸມອາຊຽນວ່າດ້ວຍການຮ່ວມມືດ້ານການເມືອງ ແລະ ຄວາມໝັ້ນຄົງໃນພູມີພາກເອເຊຍແປຊິຟິກ (ASEAN Regional Forum-ARF) ຊຶ່ງມີໄທເປັນເຈົ້າພາບໃນການຈັດປະຊຸມລະດັບລັດຖະມົນຕີຄັ້ງທຳອິດໃນປີ 1984.

**ຂ. ດ້ານເສດຖະກິດ**

ອາຊຽນໄດ້ມີການລົງນາມຈັດຕັ້ງເຂດການຄ້າເສລີອາຊຽນໃນປີຄສ1993ເພື່ອລຸດຜ່ອນພາສີລະຫວ່າງກັນ ເພື່ອຊ່ວຍສົ່ງເສີມການຄ້າພາຍໃນອາຊຽນ ໃຫ້ມີປະລິມານເພີ່ມຂຶ້ນ, ຫລຸດຕົ້ນທຶນການຜະລິດສິນຄ້າ ແລະ ດຶງດູດການລົງທຶນຈາກຕ່າງປະເທດ. ພ້ອມທັງໄດ້ຂະຫຍາຍການຮ່ວມມືດ້ານເສດຖະກິດເພີ່ມເຕີມເພື່ອໃຫ້ການຮ່ວມມືທາງດ້ານສດຖະກິດມີຄວາມສົມບູນແບບ ແລະ ມີທິດທາງຢ່າງຊັດເຈນດ້ວຍການສ້າງຕັ້ງເຂດລົງທຶນອາຊຽນ.

**ຄ. ດ້ານສັງຄົມ:**

ອາຊຽນມີຄວາມຮ່ວມມືສະເພາະດ້ານ ເພື່ອໃຫ້ປະຊາຊົນມີສະຖານະພາບການເປັນຢູ່ທີ່ດີຂຶ້ນ ແລະ ມີການພັດທະນາໃນທຸກດ້ານ ເພື່ອຍົກລະດັບຄຸນະພາບຊີວິດ.

## 11.3 ການດຳເນີນ ແລະ ຂະຫຍາຍຕົວຂອງອາຊຽນ

ພາຍຫລັງທີ່ມີສະມາຊິກເພີ່ມຂຶ້ນນັບແຕ່ ປີ 1987 ມາສະມາຊິກອາຊຽນໄດ້ມີປະສົບການທັງໃນດ້ານການມີສະມາຊິກເພີ່ມຂຶ້ນ ລວມໄປເຖິງຄວາມພະຍາຍາມໃນການລວມກຸ່ມປະເທດໃຫ້ເປັນໜຶ່ງດຽວຂຶ້ນ ເຊັ່ນ ໃນປີ ຄສ 1990 ມາເລເຊຍໄດ້ສະເໜີໃຫ້ມີ "ຄວາມຮ່ວມມືທາງເຂດເສດຖະກິດເອເຊຍຕາເວັນອອກ" ຊຶ່ງປະກອບດ້ວຍກຸ່ມປະເທດສະມາຊິກອາຊຽນກັບ ສາທາລະນະລັດ ປະຊາຊົນຈີນ, ຍີ່ປຸ່ນ ແລະ ເກົາຫລີໃຕ້ ໂດຍມີຈຸດປະສົງ ເພື່ອຖ່ວງດຸນອິດທິພົນຂອງສະຫະລັດ ອະເມຣິກາທີ່ເພີ່ມພູນຫລາຍຂຶ້ນໃນການຮ່ວມມືທາງເສດຖະກິດເອເຊຍ-ປາຊີຟິກ "APEC". ແຕ່ວ່າຂໍ້ສະເໜີດັ່ງກ່າວໄດ້ຖືກຍົກເລີກໄປ ເພາະຖືກຍີ່ປຸ່ນ ແລະ ອະເມຣິກາຄັດຄ້ານ.

ໄປຄຽງຄູ່ກັບການຮ່ວມມືຊ່ວຍເຫລືອກັນເພື່ອພັດທະນາເສດຖະກິດຂອງປະເທດສະມາຊິກ ແລ້ວອາຊຽນຍັງມີເປົ້າໝາຍໃນການຮັກສາສັນຕິພາບ ແລະ ຄວາມໝັ້ນຄົງໃນຂົງເຂດ. ດັ່ງນັ້ນ, ມາຮອດວັນທີ 15 ທັນວາ 1995 ໄດ້ມີການລົງນາມຮ່ວມກັນໃນ "ສົນທິສັນຍາເຂດປອດອາວຸດນິວຄະເຣຍເອເຊຍຕາເວັນອອກສຽງໃຕ້" ເພື່ອໃຫ້ພູມີພາກເອເຊຍຕາເວັນອອກສຽງໃຕ້ ເປັນເຂດປອດອາວຸດ. ສົນທິສັນຍາດັ່ງກ່າວເລີ່ມມີຜົນບັງຄັບໃຊ້ໃນວັນທີ 28 ມີນາ 1997. ຈາກນັ້ນຕໍ່ມາປະເທດອາຊຽນກໍໄດ້ລົງນາມຮ່ວມກັນວ່າ ດ້ວຍທິດສະດີ ສັນຕິພາບ ປະຊາທິປະໄຕ ໃນປີ 2003 ໂດຍມີຈຸດປະສົງທີ່ວ່າຂະບວນການຕາມຫລັກປະຊາທິປະໄຕ ຈະເຮັດໃຫ້ເກີດສັນຕິພາບ ແລະ ສະເຖຍລະພາບໃນຂົງເຂດ. ຕໍ່ມາອາຊຽນກໍໄດ້ມີການເຄື່ອນໄຫວຮ່ວມກັບປະເທດອື່ນໆ ເຊັ່ນ:

- ອາຊຽນບວກສາມ ໂດຍມີຈຸດປະສົງເພື່ອຜູກມິດສ້າງຄວາມສຳພັນກັບຈີນ, ຍີ່ປຸ່ນ ແລະ ເກົາຫລີໃຕ້
- ຕາມມາດ້ວຍການປະຊຸມຮ່ວມເອເຊຍຕາເວັນອອກ ຊຶ່ງມີສາມປະເທດເຂົ້າຮ່ວມ ຄື: ອິນເດຍ, ອົດສະຕາລີ ແລະ ນິວຊີແລນ ຊຶ່ງກຸ່ມດັ່ງກ່າວມີແຜນເປັນຮາກຖານຂອງປະຊາຄົມເອເຊຍຕາເວັນອອກໃນອະນາຄົດ.

ຈາກນັ້ນຕໍ່ມາໃນວັນທີ 23 ກໍລະກົດ ປີ ຄສ2006 ມູແຊ ຣາມຸດ ອໍຕາ ນາຍົກລັດຖະມົນຕີຂອງຕີມໍແລັດສະເຕໄດ້ລົງນາມເຂົ້າຮ່ວມສະມັກເປັນສະມາຊິກຂອງກຸ່ມອາຊຽນ ໃນຖານະເປັນຜູ້ສັງເກດການ ເປັນເວລາຫ້າປີກ່ອນ ຈະໄດ້ຮັບເປັນສະມາຊິກສົມບູນຢ່າງເປັນທາງການ.

## 11.4 ການຮ່ວມມືໃນຂົງເຂດປະຊາຄົມອາຊຽນ

ພາຍຫລັງທີ່ປະຊາຊາດໃນອາຊີຕາເວັນອອກສຽງໃຕ້ ຮວມຕົວກັນກໍ່ຕັ້ງເປັນປະຊາຄົມອາຊຽນຂຶ້ນມາ ບັນດາຜູ້ນຳອາຊຽນກໍໄດ້ພ້ອມພາກັນເຄື່ອນໄຫວເພື່ອເຮັດໃຫ້ປະຊາຊາດອາຊຽນສາມັກຄີກັນເປັນໜຶ່ງດຽວ ໂດຍຈັດກອງປະຊຸມໃນລະດັບຕ່າງໆ ຂຶ້ນ. ເພື່ອຮ່ວມກັນປຶກສາຫາລື ແລະ ວາງແຜນພັດທະນາປະຊາຄົມອາຊຽນໄປສູ່ຄວາມສຳເລັດ. ຜົນງານທີ່ບົ່ງບອກເຖິງ ການເຄື່ອນໄຫວຂອງອາຊຽນນັບແຕ່ມື້ສ້າງຕັ້ງມາຮອດປັດຈຸບັນນີ້ ຊຶ່ງສະແດງອອກໃນຂໍ້ກຳນົດການປະຕິບັດກິດຈະກຳ ແລະ ພາລະກິດການເຄື່ອນໄຫວຕ່າງໆ ທີ່ບັນດາປະຊາຊາດອາຊຽນໄດ້ພ້ອມພາກັນປະຕິບັດ ໂດຍສະເພາະນັບແຕ່ກອງປະຊຸມສຸດຍອດຜູ້ນຳອາຊຽນຄັ້ງທີ 12 ໃນປີ 2007 ຜູ້ນຳອາຊຽນໄດ້ເລັ່ງລັດການຈັດຕັ້ງ ປະຊາຄົມອາຊຽນ ໃຫ້ໄວຂຶ້ນຄືປ່ຽນແປງຈາກປີ 2020 ມາເປັນ ປີ 2015 ຊຶ່ງປະກອບດ້ວຍ 3 ເສົາຫລັກຄື:

### ກ. ປະຊາຄົມການເມືອງ ແລະ ຄວາມໝັ້ນຄົງຂອງອາຊຽນ

ປະຊາຄົມການເມືອງ ແລະ ຄວາມໝັ້ນຄົງຂອງອາຊຽນ (ASEAN Political - Security Community: APSC) ມີເປົ້າໝາຍເພື່ອສົ່ງເສີມຄວາມຮ່ວມມືໃນດ້ານການເມືອງ ແລະ ຄວາມໝັ້ນຄົງເພື່ອເສີມສ້າງ ແລະ ດຳລົງໄວ້ຊຶ່ງສັນຕິພາບ ແລະ ຄວາມໝັ້ນຄົງຂອງພາກພື້ນ ເພື່ອໃຫ້ປະເທດໃນຂົງ ເຂດພູມີພາກແຫ່ງນີ້ຢູ່ຮ່ວມກັນຢ່າງສັນຕິສຸກ, ສາມາດແກ້ໄຂບັນຫາ ແລະ ຄວາມຂັດແຍ້ງໂດຍສັນຕິວິທີ ເພື່ອຮອງຮັບການເປັນປະຊາຄົມການເມືອງ ແລະ ຄວາມໝັ້ນຄົງອາຊຽນ. ປະເທດສະມາຊິກໄດ້ຮ່ວມກັນສ້າງແຜນງານການຈັດຕັ້ງປະຊາຄົມການເມືອງ ແລະ ຄວາມໝັ້ນຄົງອາຊຽນຄື:

- ການມີກົດເກນ ແລະ ຄ່ານິຍົມຮ່ວມກັນຄວບຄຸມເຖິງກິດຈະກຳຕ່າງໆ ທີ່ຈະສ້າງຄວາມເຂົ້າໃຈຮ່ວມກັນໃນລະບົບສັງຄົມວັດທະນະທຳ ແລະ ປະຫວັດສາດທີ່ແຕກຕ່າງກັນຂອງປະເທດສະມາຊິກ. ສົ່ງເສີມພັດທະນາການທາງດ້ານການເມືອງໄປໃນທິດທາງດຽວກັນ ເຊັ່ນ ຫລັກການປະຊາທິປະໄຕ, ການຄຸ້ມຄອງສິດທິມະນຸດ, ການສະໜັບສະໜູນການມີສ່ວນຮ່ວມຂອງປະຊາຊົນ, ການຕໍ່ຕ້ານການສໍ້ໂກງ, ການສົ່ງເສີມ ແລະ ຍຶດໝັ້ນໃນຫລັກນິຕິທຳ.

- ສົ່ງເສີມຄວາມໝັ້ນຄົງສໍາລັບປະຊາຊົນດ້ວຍການເສີມສ້າງມາດຕະການໃນຄວາມໄວ້ເນື້ອເຊື່ອໃຈຊຶ່ງກັນ ແລະ ກັນ, ບໍ່ມີຄວາມຫວາດລະແວງກັນ ແລະ ແກ້ໄຂຂໍ້ຂັດແຍ່ງ ຫລື ກໍລະນີຜິດພາດໂດຍສັນຕິເພື່ອປ້ອງກັນບໍ່ໃຫ້ສົງຄາມເກີດຂຶ້ນໃນພາກພື້ນແຫ່ງນີ້.

ນອກຈາກນີ້, ຍັງຂະຫຍາຍຄວາມຮ່ວມມືເພື່ອຕໍ່ຕ້ານໄພຄຸກຄາມຮູບແບບໃໝ່ ເຊັ່ນ ການຕໍ່ຕ້ານການກໍ່ການຮ້າຍອາດຊະຍາກໍາຂ້າມຊາດ, ຢາເສບຕິດ, ການຄ້າມະນຸດ ລວມໄປເຖິງການກຽມຄວາມພ້ອມເພື່ອປ້ອງກັນໄພພິບັດທາງທໍາມະຊາດ.

- ການສ້າງຄວາມສໍາພັນກັບໂລກພາຍນອກດ້ວຍການກໍານົດກິດຈະກໍາເພື່ອເສີມສ້າງບົດບາດຂອງປະຊາຄົມອາຊຽນໃນຄວາມຮ່ວມມືລະດັບພູມີພາກ ເຊັ່ນ: ເລີ່ມແຕ່ປີ ຄສ 1997 ເປັນຕົ້ນມາອາຊຽນໄດ້ມີການກໍ່ຕັ້ງອົງການຄວາມສໍາພັນທໍາອິດຂຶ້ນເອີ້ນວ່າ "ອາຊຽນບວກສາມ" ມີເປົ້າໝາຍເພື່ອສ້າງຄວາມສໍາພັນກັບຈີນ, ຍີ່ປຸ່ນ ແລະ ເກົາຫລີໃຕ້ ຕາມດ້ວຍການຈັດໃຫ້ມີການປະຊຸມສຸດຍອດເອເຊຍຕາເວັນອອກ ຊຶ່ງມີອີກສາມປະເທດເຂົ້າຮ່ວມຄື ອິນເດຍ, ອົດສະຕາລີ ແລະ ນິວຊີແລນ ຊຶ່ງກຸ່ມດັ່ງກ່າວນີ້ມີແຜນການທີ່ເປັນຮາກຖານຂອງປະຊາຄົມເອເຊຍຕາເວັນອອກໃນອະນາຄົດ.

## ຂ. ປະຊາຄົມເສດຖະກິດອາຊຽນ

ປະຊາຄົມເສດຖະກິດອາຊຽນ (ASEAN Economic Community: AEC) ມີເປົ້າໝາຍຄືປະຊາຄົມອາຊຽນມີຕະຫລາດ ແລະຖານການຜະລິດດຽວກັນ,ມີການເຄື່ອນຍ້າຍສິນຄ້າ ບໍລິການ, ການລົງທຶນ ແລະ ແຮງງານທີ່ມີຄວາມສາມາດ. ອາຊຽນໄດ້ຈັດວາງແຜນການຈັດຕັ້ງປະຊາຄົມເສດຖະກິດອາຊຽນ ຊຶ່ງເປັນແຜນກ່ຽວກັບເສດຖະກິດອາຊຽນ ໃນລັກສະນະ 4 ດ້ານ:

1) ການຕະຫລາດ ແລະຖານຜະລິດດຽວ ໂດຍຈະມີການເຄື່ອນຍ້າຍສິນຄ້າ, ບໍລິການ, ການລົງທຶນ ແລະ ສີມືແຮງງານຢ່າງເສລີ ຮວມທັງການເຄື່ອນຍ້າຍເງິນທຶນຢ່າງເສລີຫລາຍຂຶ້ນ. ກໍານົດເປົ້າໝາຍ ເວລາທີ່ຈະຄ່ອຍໆ ຫລຸດ ຫລື ຍົກເລີກມາດຕະການ ທີ່ບໍ່ແມ່ນພາສີສໍາລັບປະເທດສະມາຊິກເກົ່າ 6 ປະເທດ ແລະ ເປີດເສລີການລົງທຶນຫລາຍຂຶ້ນ ລວມທັງການສົ່ງເສີມການຮວມກຸ່ມສາຂາທີ່ສໍາຄັນ ຂອງອາຊຽນ ໃຫ້ເປັນຮູບປະທໍາ.

2) ການສ້າງຂີດຄວາມສາມາດໃນການແຂ່ງຂັນທາງເສດຖະກິດຂອງອາຊຽນ ໂດຍໃຫ້ຄວາມສໍາຄັນກັບປະເດັນດ້ານນະໂຍບາຍທີ່ຈະຊ່ວຍສົ່ງເສີມການຮວມກຸ່ມທາງເສດຖະກິດ ເຊັ່ນ: ຂອບນະໂຍບາຍການແຂ່ງຂັນຂອງອາຊຽນ, ພານິດເອເລັກໂທຣນິກ, ການມີສິດທິໃນຊັບສິນປັນຍາ, ການຄຸ້ມຄອງຜູ້ບໍລິໂພກ,ເທັກໂນໂລຊີການຂົນສົ່ງ, ສາລະສົນເທດ, ການພັດທະນາໂຄງລ່າງພື້ນຖານ, ພາສີ ແລະ ການເງິນ.

3) ການພັດທະນາເສດຖະກິດຢ່າງສະເໝີພາບ ໂດຍການສົ່ງເສີມຂີດຄວາມສາມາດໃນການພັດທະນາວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ (SMEs) ເພື່ອຫລຸດຊ່ອງວ່າງການພັດທະນາເສດຖະກິດລະຫວ່າງປະເທດສະມາຊິກ.

4) ການບູລະນາການເຂົ້າກັບເສດຖະກິດໂລກ ໂດຍເນັ້ນການປັບປຸງການປະສານງານດ້ານນະໂຍບາຍເສດຖະກິດຂອງອາຊຽນ ກັບປະເທດພາຍນອກພູມີພາກ ເພື່ອໃຫ້ເກີດການຮ່ວມມືທາງເສດຖະກິດເຊັ່ນ: ການຈັດທໍາເຂດການຄ້າເສລີ ຂອງອາຊຽນກັບປະເທດຄູ່ເຈລະຈາຕ່າງໆ; ສົ່ງເສີມການສ້າງເຄືອຂ່າຍໃນດ້ານການຜະລິດ ຈັດຈໍາໜ່າຍພາຍໃນພູມີພາກ ໃຫ້ເຊື່ອມໂຍງກັບເສດຖະກິດໂລກ.

ນອກຈາກນີ້ ການຮ່ວມມືດ້ານເສດຖະກິດຂອງອາຊຽນຍັງໃຫ້ຄວາມສໍາຄັນຕໍ່ການເສີມສ້າງສັກກະຍະພາບ ແລະ ການພັດທະນາຊັບພະຍາກອນມະນຸດ, ການຍອມຮັບຄຸນສົມບັດດ້ານວິຊາຊີບ

ຮ່ວມກັນ, ການສົ່ງເສີມໃຫ້ມີການຫາລືຮ່ວມກັນຢ່າງໃກ້ຊິດ ໃນການດຳເນີນນະໂຍບາຍດ້ານເສດຖະກິດ ແລະ ການເງິນ. ການພັດທະນາອຸດສາຫະກຳຂ້າມພູມິພາກ ເພື່ອເຊື່ອມໂຍງດ້ານໂຄງສ້າງ ແລະ ການຄົມມະນາຄົມຕິດຕໍ່ສື່ສານທາງສື່ເອເລັກໂທຣນິກ ເພື່ອສົ່ງເສີມຊັບພະຍາກອນຂອງພູມິພາກ ແລະ ການເພີ່ມບົດບາດການມີສ່ວນຮ່ວມຂອງພາກເອກະຊົນເພື່ອການສ້າງປະຊາຄົມເສດຖະກິດອາຊຽນ.

### ຄ. ປະຊາຄົມສັງຄົມ ແລະ ວັດທະນະທຳອາຊຽນ

ປະຊາຄົມສັງຄົມ ແລະ ວັດທະນະທຳອາຊຽນ (ASEAN Socio-Cultural Community: ASCC) ມີເປົ້າໝາຍຄືການສົ່ງເສີມຄຸນນະພາບຊີວິດຂອງປະຊາກອນໃນກຸ່ມປະເທດສະມາຊິກ, ມີການຢູ່ດີກິນດີ, ມີສິ່ງແວດລ້ອມທີ່ດີ, ມີຄວາມຮູ້ສຶກເປັນອັນໜຶ່ງອັນດຽວ, ມີການຈັດທຳແຜນງານການຈັດຕັ້ງປະຊາຄົມສັງຄົມ ແລະ ວັດທະນະທຳອາຊຽນໃນດ້ານຕ່າງໆ ໄດ້ແກ່:

- ການພັດທະນາຊັບພະຍາກອນມະນຸດ (Human Development)
- ການຄຸ້ມຄອງ ແລະ ສະວັດດີການສັງຄົມ (Social Welfare and Protection)
- ສິດທິ ແລະ ຄວາມຍຸຕິທຳທາງສັງຄົມ ( Social Justice and Rights)
- ຄວາມຍືນຍົງດ້ານສິ່ງແວດລ້ອມ ( Environmental Sustain abillity)
- ການສ້າງອັດຕະລັກອາຊຽນ (Building an ASEAN Identity)
- ການຫລຸດຊ່ອງວ່າງທາງການພັດທະນາ (Narrowing the Development Gap)

ຈຸດມຸ່ງ ໝາຍຂອງປະຊາຄົມນີ້ ແລະ ເພື່ອຮອງຮັບການເປັນປະຊາຄົມຈຶ່ງເນັ້ນໃນ 4 ດ້ານດັ່ງນີ້:

- ການສ້າງປະຊາຄົມແຫ່ງສັງຄົມທີ່ເອື້ອອາທອນ
- ແກ້ໄຂຜົນກະທົບຕໍ່ສັງຄົມອັນເນື່ອງມາຈາກການລວມຕົວທາງເສດຖະກິດ
- ສົ່ງເສີມຄວາມຍືນຍົງຂອງສິ່ງແວດລ້ອມ ແລະ ການຈັດການດູແລສິ່ງແວດລ້ອມຢ່າງຖືກຕ້ອງ
- ສົ່ງເສີມຄວາມເຂົ້າໃຈຂອງປະຊາຊົນທີ່ທຸກຍາກກັບການຮຽນຮູ້ປະຫວັດສາດ ແລະ ວັດທະນະທຳລວມທັງການຮັບຮູ້ຂ່າວສານທີ່ເປັນພື້ນຖານທີ່ຈະນຳໄປສູ່ການເປັນປະຊາຄົມອາຊຽນ.

## 11.5 ສປປ ລາວ ກັບປະຊາຄົມອາຊຽນ

ການເປັນປະຊາຄົມເສດຖະກິດອາຊຽນ ຈະເປັນການຊ່ວຍໃຫ້ ສປປ ລາວ ມີບົດບາດສຳຄັນໃນເວທີສາກົນເພີ່ມຂຶ້ນໃນດ້ານການຄ້າການລົງທຶນ ແລະ ການພັດທະນາ ລວມທັງການສ້າງຄວາມໝັ້ນໃຈໃຫ້ນັກລົງທຶນຕ່າງປະເທດ ແລະ ຄວາມເຂັ້ມແຂງໃນການຮວມກຸ່ມທາງເສດຖະກິດຂອງອາຊຽນ.

ນອກຈາກນີ້ ສປປ ລາວ ຍັງຄາດຫວັງວ່າ ປະຊາຄົມເສດຖະກິດອາຊຽນຈະເຮັດໃຫ້ລາວສາມາດເປີດກວ້າງຕໍ່ສັງຄົມພາຍນອກຫລາຍຂຶ້ນ. ການທ່ອງທ່ຽວ ແລະ ການສ້າງສາປະເພດຕ່າງໆກໍຈະຕາມມາຊຶ່ງໃນປັດຈຸບັນນີ້ລາວກໍມີການເຊື່ອມຕໍ່ໂຄງການຕ່າງໆ ຂອງປະຊາຄົມອາຊຽນ ເຊັ່ນ: ທາງລົດໄຟ, ຖະໜົນສາຍສຳຄັນ, ຂົວ ແລະ ເຂດເສດຖະກິດພິເສດ. ການເຂົ້າອອກລະຫວ່າງປະເທດສະມາຊິກອາຊຽນກໍຈະສະດວກສະບາຍຫລາຍຂຶ້ນເຮັດໃຫ້ຫລາຍສິ່ງຫລາຍຢ່າງຈະມີການປ່ຽນແປງ. ດັ່ງນັ້ນ, ທຸກພາກ ສ່ວນຂອງປະເທດລາວກໍຈະໄດ້ຮັບຜົນປະໂຫຍດ ບໍ່ວ່າຈະເປັນພາກລັດ, ທຸລະກິດ ແລະ ປະຊາຊົນ. ແຕ່ສິ່ງທີ່ໜ້າເປັນຫ່ວງ ແມ່ນການຂາດບຸກຄະລາກອນທີ່ເປັນນັກວິຊາການມືອາຊີບ ແລະ ແຮງງານ ທີ່ມີຄຸນນະພາບ.

ດັ່ງນັ້ນ, ສປປ ລາວ ຕ້ອງໄດ້ມີການຮຽນຮູ້ ແລະ ກຽມພ້ອມຮັບການປ່ຽນແປງທີ່ກຳລັງເກີດຂຶ້ນເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກໂອກາດທາງການຄ້າແລະການລົງທຶນຢ່າງເຕັມທີ່. ໃນຂະນະດຽວກັນຍັງຕ້ອງກຽມ ພ້ອມຮັບມືກັບຜົນກະທົບທີ່ຈະເກີດຂຶ້ນຈາກການແຂ່ງຂັນທີ່ສູງຂຶ້ນ ຊຶ່ງຈະເປັນແຮງກະຕຸ້ນໃຫ້ທຸກພາກສ່ວນພາຍໃນປະເທດຕ້ອງເລັ່ງປັບຕົວໃນການປັບປຸງປະສິດທິພາບໃນການເຮັດວຽກ ແລະ

ການຜະລິດໃຫ້ສູງຂຶ້ນ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນຂອງ ສປປ ລາວ ໃນຕະຫລາດລະຫວ່າງ ປະເທດ. ສິ່ງທີ່ຮີບດ່ວນຂອງ ສປປ ລາວ ໃນການກະກຽມຄວາມພ້ອມກ້າວໄປສູ່ປະຊາຄົມເສດຖະກິດອາຊຽນ ມີ 4 ບັນຫາຫລັກຄື:

1) ສ້າງບຸກຄະລາກອນ ເພື່ອຮອງຮັບ ລວມທັງພາກລັດ ແລະ ພາກທຸລະກິດ.
2) ສ້າງ ແລະ ປັບປຸງລະບຽບກົດໝາຍໃຫ້ສອດຄ່ອງກັບປະຊາຄົມເສດຖະກິດອາຊຽນ ເພື່ອເປັນບ່ອນອີງໃນການເປີດເສລີໃນຂະແໜງການຕ່າງໆ.
3) ຍາດແຍ່ງການຊ່ວຍເຫລືອ, ການຮ່ວມມືຈາກຕ່າງປະເທດກໍຄືສະຖາບັນສາກົນຕ່າງໆ.
4) ປະສານຢ່າງໃກ້ຊິດກັບບັນດາຫົວໜ່ວຍທຸລະກິດ ເພື່ອສົ່ງເສີມການຜະລິດໃຫ້ໄດ້ມາດຕະຖານເພື່ອການສົ່ງອອກ.

ເຖິງຢ່າງໃດກໍດີ ໂດຍພາບລວມແລ້ວ, ສຳລັບ ສປປ ລາວ ການທີ່ປະຊາຄົມອາຊຽນຮ່ວມກັນເປັນຕະຫລາດໜຶ່ງດຽວນັ້ນ ຈະໃຫ້ຜົນດີຕໍ່ລາວຫລາຍກວ່າຜົນເສຍ. ແຕ່ລາວຕ້ອງມີການກຽມຄວາມພ້ອມໃນການຍົກລະດັບບຸກຄະລາກອນ, ສີມືແຮງງານ ແລະ ໂຄງຮ່າງພື້ນຖານທາງດ້ານເສດຖະກິດ ຂອງລາວໃຫ້ດີກວ່າເກົ່າ. ບໍ່ດັ່ງນັ້ນ, ນັກລົງທຶນອາດເບິ່ງຂ້າມ ສປປ ລາວ ໄປລົງທຶນທີ່ຫວຽດນາມ, ໄທ ແລະ ກຳປູເຈຍຫລາຍກວ່າ, ບໍ່ເວົ້າເຖິງຈີນ ແລະ ອິນເດຍທີ່ເປັນແຫລ່ງລົງທຶນຂອງນັກລົງທຶນຕ່າງຊາດຢູ່ແລ້ວ ເພາະຊັບພະຍາກອນມະນຸດຂອງປະເທດເຫລົ່ານັ້ນມີຈຳນວນຫລາຍ. ສຸດທ້າຍ ສປປ ລາວ ກໍຈະກາຍເປັນ ທາງຜ່ານເໝືອນເດີມດັ່ງທີ່ເຄີຍເປັນມາ.

**ຄຳຖາມ:**

1. ອາຊຽນມີປະຫວັດຄວາມເປັນມາຄືແນວໃດ ?
2. ວິໄສທັດຂອງອາຊຽນສະແດງອອກແນວໃດ?
3. ສັນຍາລັກຂອງອາຊຽນປະກອບມີອັນໃດແດ່? ແຕ່ລະອົງປະກອບຂອງສັນຍາລັກນັ້ນບົ່ງບອກເຖິງອັນໃດ?
4. ຕາມທັດສະນະສ່ວນຕົວຂອງນັກສຶກສາ ຄິດວ່າ 3 ເສົາຫລັກຂອງປະຊາຄົມອາຊຽນນັ້ນມີຜົນດີ ແລະ ອ່ອນແນວໃດຕໍ່ກັບປະເທດລາວຂອງພວກເຮົາ?
5. ສປປ ລາວ ມີການກະກຽມຄວາມພ້ອມເພື່ອກ້າວໄປສູ່ປະຊາຄົມເສດຖະກິດອາຊຽນຄືແນວໃດ ?